# ສຶກສາການສ້າງແບບທົດສອບປະເມີນຜົນການຮຽນສໍາລັບເດັກກ່ອນ ໄວຮຽນຂອງຄູສອນສາຍອະນຸບານ,ຄູສອນໃນໂຮງ ຮຽນອະນຸບານສາທິດ  ວິທະຍາໄລຄູສາລະວັນ

## ສົກຮຽນ 2022 - 2023

ໂດຍ:  ນາງ ຄໍາມະລີ ແສງໂສພາ

ປທ  ນາງ ທວານໃຈ ບົວກາສີ

ປທ ນາງ ລິດສະໄໝ ດວງມາລາ

**ສົກປີ 2023**

# ສຶກສາການສ້າງແບບທົດສອບປະເມີນຜົນການຮຽນສໍາລັບເດັກກ່ອນ
# ໄວຮຽນຂອງຄູສອນສາຍອະນຸບານ,ຄູສອນໃນໂຮງ
# ຮຽນອະນຸບານສາທິດ  ວິທະຍາໄລຄູສາລະວັນ
# ສົກຮຽນ ສົກຮຽນ 2022 - 2023

ໂດຍ:  ນາງ ຄໍາມະລີ ແສງໂສພາ
ປທ  ນາງ ຫວານໃຈ ບົວກາສີ
ປທ ນາງ ລິດສະໄໝ ດວງມາລາ

ທີ່ປຶກສາ: ທ່ານ ອຈ ປທ ແສນຮັກ ບຸນມີ
ທ່ານ ຊອ ນາງ ຈັນສີມາ ຄັດທະວົງ

ສົກປີ 2023

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຆຆຆຆໝໝໝໝ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ 67 ສພ.ວສ

# ໃບຢັ້ງຢືນ

## ອະນຸມັດຜ່ານການຮັບຮອງການຄົ້ນຄວ້າວິໄຈ

**ຫົວຂໍ້ວິໄຈ: ສຶກສາການສ້າງແບບທົດສອບປະເມີນຜົນການຮຽນສໍາລັບເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ, ຄູສອນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ**

**ຜູ້ວິໄຈ**

**ປທ ນາງ ຫອມໃຈ ບົວກາສີ**

**ປທ ນາງ ລິດສະໄໝ ດວງມາລາ**

**ນາງ ຄໍາມະລີ ແສງໄຊພາ**

**ທີ່ປຶກສາຂຽນບົດ**

**ປທ ອຈ ປທ ແສນຮັກ ບຸນມີ**

..............................................

**ຊອ ນາງ ຈັນສີມາ ຄັດທະວົງ**

..............................................

**ກໍາມະການ**

**ປອ ສຸພັນ ເທບພະວົງສາ**

.............................. **( ປະທານ )**

**ອຈ ປທ ແສນຮັກ ບຸນມີ**

.............................. **( ກໍາມະການ )**

**ອຈ ນາງ ສະລິດໄໝ ສິດທິຈັກ**

.............................. **( ກໍາມະການ )**

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກໍາມະການເຫັນວ່າບົດຄົ້ນຄວ້າວິໄຈຫົວຂໍ້: ສຶກສາການສ້າງແບບທົດສອບປະເມີນຜົນການຮຽນສໍາລັບເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ, ຄູສອນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກໍານົດ ແລະ ສະພາວິທະຍາສາດຈິ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນໍາໃຊ້ເຂົ້າໃນກິດຈະກໍາການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

**ປະທານສະພາວິທະຍາສາດ**

ອຸດຕະມະ ແສງອາລຸນ

## ຫົວຂໍ້:

**ການສຶກສາບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022 - 2023**


**ຜູ້ວິໄຈ** ນາງ ຄຳມະລີ ແສງໂສພາ

ປທ ນາງ ຫວານໃຈ ບົວກາສີ

ປທ ນາງ ລິດສະໄໝ ດວງມາລາ

**ທີ່ປຶກສາ** ອຈ ປທ ແສນຮັກ ບຸນມີ

ຊອ ນາງ ຈັນສີມາ ລັດທະວົງ


## ບົດຄັດຫຍໍ້


ການສຶກສາຄົ້ນຄ້ວາຄັ້ງນີ້ເປັນການສຶກສາຫົວຂໍ້: ສຶກສາບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ **2022 - 2023**.ເຊິ່ງມີຈຸດປະສົງ 1) ເພື່ອສຶກສາບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ **2022 - 2023**. 2) ເພື່ອປຽບທຽບຄວາມຄິດເຫັນໃນການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ມີຄວາມຄິດເຫັນແຕກຕ່າງກັນຕາມເພດ,ອາຍຸ,ວຸດທິ ແລະ ປະສົບການໃນການສອນ. ກຸ່ມຕົວຢ່າງໃນການເຮັດວິໄຈຄັ້ງນີ້ແມ່ນຄູສອນໃນສາຍຄູອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ເຊິ່ງມີທັງໝົດຈຳນວນ 25 ຄົນ,ຍິງ 24 ຄົນ.ເຄື່ອງມືທີ່ໃຊ້ເປັນແບບສອບຖາມສຳລັບຄູສອນສາຍອະນຸບານ, ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ເຊິ່ງແບ່ງເນື້ອໃນແບບສອບຖາມເປັນ 3 ຕອນດັ່ງລາຍລະອຽດດັ່ງນີ້:

ຕອນທີ1 ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມສອບຖາມ

ຕອນທີ2: ຄວາມຄິດເຫັນກ່ຽວກັບຄວາມຮູ້,ຄວາມເຂົ້າໃຈ,ຄວາມສາມາດການສ້າງແບບທົດສອບວັດຜົນການຮຽນສຳລັບຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ເຊິ່ງການສ້າງແບບທົດສອບວັດຜົນການຮຽນລວມມີ ຈຳນວນ 4 ຂໍ້

ຕອນທີ3: ຄວາມຄິດເຫັນກ່ຽວກັບຄວາມຮູ້,ຄວາມສາມາດສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນສຳລັບຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ເຊິ່ງການສ້າງແບບທົດສອບສຳລັບເດັກກ່ອນໄວຮຽນລວມມີຈຳນວນ 11 ຂໍ້ ຜ່ານການສຶກສາຄົ້ນຄວ້າທີມງານຜູ້ວິໄຈສາມາດສະຫຼຸບຕາມຂັ້ນຕອນໄດ້ດັ່ງນີ້:

**ຜົນຂອງການວິໄຈ**

**ຕອນທີ1** ຜົນການວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມສອບຖາມກ່ຽວກັບການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2021 - 2022. ພົບວ່າສະພາບຂອງຜູ້ຕອບແບບສອບຖາມ ໂດຍແມ່ນກຸ່ມຕົວຢ່າງຈາກພະນັກງານຄູສອນສາຍອະນຸບານ ຈຳນວນ 25 ຄົນ. ຍິງ 24 ຄົນ ຄິດເປັນຮ້ອຍລະ100% ເພດຊາຍຈຳນວນ 1 ຄົນ ຄິດເປັນຮ້ອຍລະ 4% ເພດຍິງ 24 ຄົນ ຄິດເປັນຮ້ອຍລະ 96% ອາຍຸ 26-30 ປີ ມີຈຳນວນ 2 ຄົນ

ຄິດເປັນຮ້ອຍລະ 8%, ອາຍຸ 31 ປີ ມີຈຳນວນ 23 ຄົນ ຄິດເປັນຮ້ອຍລະ 92 % ວຸດທິການສຶກສາໃນລະດັບການສຶກສາຕ່ຳກວ່າປະລິນຍາຕີ ມີຈຳນວນ 11 ຄົນ, ຄິດເປັນຮ້ອຍລະ 44 %. ລະດັບປະລິນຍາຕີ ມີຈຳນວນ 9 ຄົນ ຄິດເປັນຮ້ອຍລະ 36 % ແລະ ລະດັບການສຶກສາປະລິຍາໂທ ມີຈຳນວນ 5 ຄົນ ຄິດເປັນຮ້ອຍລະ 20% ແລະ ລະດັບປະລິຍາເອກ 0 ຄົນ ຄິດເປັນຮ້ອຍລະ 0 %, ແລະ ປະສົບການໃນການສອນໜ້ອຍກວ່າ 5 ປີ ຈຳນວນ 0 ຄົນ. ປະສົບການສອນ 6-10 ປີ ມີຈຳນວນ 3 ຄົນ ຄິດເປັນຮ້ອຍລະ 12 % ປະສົບການສອນ 11 -15 ປີ ມີຈຳນວນ 8 ຄົນ ຄິດເປັນຮ້ອຍລະ 32% ປະສົບການສອນ 16- 20 ປີ ມີຈຳນວນ 9 ຄົນ ຄິດເປັນຮ້ອຍລະ36% ປະສົບການສອນ 21 ປີຂຶ້ນໄປ ມີຈຳນວນ 5 ຄົນ ຄິດເປັນຮ້ອຍລະ 20%

**ຕອນທີ2: ຄວາມຄິດເຫັນກ່ຽວກັບຄວາມຮູ້,ຄວາມເຂົ້າໃຈ,ຄວາມສາມາດການສ້າງແບບທົດສອບວັດຜົນການຮຽນສຳລັບຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2021 - 2022** ພົບວ່າ: ຄູ ອາຈານເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນຜົນຫຼາຍກວ່າ 3 ຄັ້ງ ມີຜູ້ເຂົ້າຮ່ວມຈຳນວນ 23 ຄົນ ໂດຍຄິດເປັນເປີເຊັນເທົ່າກັບ 92 %, ຄູ ອາຈານ ເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນ 2 ຄັ້ງ ມີຜູ້ເຂົ້າຮ່ວມຈຳນວນ 23 ຄົນຄິດເປັນເປີເຊັນເທົ່າກັບ 8 %

- ຄູ ອາຈານໄດ້ສ້າງແບບທົດສອບເພື່ອປະເມີນຜົນການຮຽນຂອງຜູ້ຮຽນໃນແຕ່ລະປີຜົນການວິເຄາະມີຈຳນວນທັງໝົດ 25 ຄົນ ຄິດເປັນເປີເຊັນເທົ່າກັບ 100 %
- ຄູ - ອາຈານມີຄວາມຮູ້,ຄວາມເຂົ້າໃຈ ຕໍ່ການສ້າງແບບທົດສອບປະເພດຕ່າງໆຢູ່ໃນລະດັບດີ ເຊິ່ງມີຄະແນນສະເລ່ຍເທົ່າກັບ 4,67.
- ຄູ - ອາຈານມີຄວາມສາມາດໃນການສ້າງແບບທົດສອບໃນແຕ່ລະປະເພດຜົນການວິເຄາະຢູ່ໃນລະດັບດີ ເຊິ່ງມີຄະແນນສະເລ່ຍເທົ່າກັບ 4,84.

**ຕອນທີ3: ຄວາມຄິດເຫັນກ່ຽວກັບຄວາມຮູ້,ຄວາມສາມາດສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນສຳລັບຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ** ພົບວ່າ:

- ຄູ ອາຈານໄດ້ເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນຂອງເດັກໃນລາຍວິຊາທີ່ຮຽນ ຫຼື ເຝິກອົບຮົມ ມີຈຳນວນ 25 ຄົນ ຄິດເປັນເປີເຊັນເທົ່າກັບ 100 %. ເມື່ອວິເຄາະຕາມລາຍຂໍ້ແລ້ວເຫັນວ່າຄູ ອາຈານໄດ້ເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນຂອງເດັກໃນລາຍວິຊາທີ່ຮຽນ ຫຼື ເຝິກອົບຮົມຫຼາຍກວ່າ 3 ຄັ້ງ ມີຈຳນວນ 22 ຄົນ ຄິດເປັນເປີເຊັນເທົ່າກັບ 88 % ແລະ ຄູ ອາຈານໄດ້ເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນຂອງເດັກໃນລາຍວິຊາທີ່ຮຽນ ຫຼື ເຝິກອົບຮົມ 3 ຄັ້ງ ມີຈຳນວນ 3 ຄົນ ຄິດເປັນເປີເຊັນເທົ່າກັບ 12 %
- ຄູ - ອາຈານສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກໃນແຕ່ລະປີ ມີຈຳນວນ 25 ຄົນ ຄິດເປັນເປີເຊັນເທົ່າກັບ 100 % ເມື່ອວິເຄາະຕາມລາຍຂໍ້ແລ້ວເຫັນວ່າຄູ ອາຈານໄດ້ສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກໃນແຕ່ລະປີຫຼາຍກວ່າ 3 ຄັ້ງ ມີຈຳນວນ 19 ຄົນ ຄິດເປັນເປີເຊັນເທົ່າກັບ 76%,ຄູ ອາຈານໄດ້ສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກໃນແຕ່ລະປີ 3 ຄັ້ງ ມີຈຳນວນ 6 ຄົນ ຄິດເປັນເປີເຊັນເທົ່າກັບ 24 %
- ຄູ - ອາຈານຄວາມຮູ້,ຄວາມສາມາດໃນການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກຢູ່ໃນລະດັບດີ ມີຄະແນນສະເລ່ຍເທົ່າກັບ 4,46.

- ຄູ - ອາຈານມີຄວາມສາມາດຂອງຄູໃນການສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກໄດ້ແຕ່ລະກິດຈະກຳຜົນການ ຢູ່ໃນລະດັບດີ ເຊິ່ງມີຄະແນນສະເລ່ຍເທົ່າກັບ 4,26

- ຄູ - ອາຈານມີການປະເມີນຜົນການຮຽນຮູ້ຂອງເດັກທີ່ນຳໃຊ້ໂດຍສ່ວນໃຫຍ່ຄູນຳໃຊ້ແບບສັງເກດພຶດຕິກຳແບບທົດສອບ,ແບບສອບຖາມ,ແບບສຳພາດ,ໃຊ້ແຟ້ມສະສົມຜົນງານເດັກ ຢູ່ໃນລະດັບດີ

- ແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກທີ່ສ້າງຂຶ້ນຄວນຄຳນຶງເຖິງຄວາມສາມາດຂອງເດັກແຕ່ລະສົ່ງອາຍຸ, ຕ້ອງມີຄວາມສຳພັນກັບເນື້ອໃນບົດຮຽນແຕ່ລະກິດຈະກຳ,ຫຼັກສູດຊັ້ນອະນຸບານ ຢູ່ໃນລະດັບປານກາງ

# Title:

Studying the problem of creating a test to evaluate the learning of pre-school children of kindergarten teachers, teachers in the kindergarten demonstration school, Salavan College, academic year **2022 - 2023**

Researcher Mrs. Kamali Sengsopha
Mrs.Vanchai Buakasi
Mrs. Lithsamai Duangmala
Councilor of the Department, Mr Sanrak Bunmi
Mrs. Chansima Chuthavong

## Abstract

This research study is a study on the topic: Studying the problem of creating a learning evaluation test for preschool teachers and teachers in the demonstration kindergarten of Ku Saravan University for the academic year 2022 - 2023. Which aims 1) to study the problem of creating a learning evaluation test for preschool teachers and teachers in the demonstration kindergarten of Ku Saravan University for the academic year 2022- 2023.2) to compare opinions in creating Pre-school children's learning evaluation test of kindergarten teachers and teachers in demonstration kindergartens have different opinions according to gender, age, qualification and experience in teaching. The sample group in this research is teachers in kindergarten, teachers in kindergarten demonstration school, Ku Saravan University, which has a total of 25 people, 24 women. The instrument used as a questionnaire for kindergarten teachers, teachers in kindergarten demonstration school, Ku Saravan University, which divides the content of the questionnaire into 3 parts as detailed as follows:

Section 1 General information of respondents to the questionnaire

Part 2: Opinions on knowledge, understanding, and ability to create a learning outcome test for kindergarten teachers and teachers in the Demonstration Kindergarten at Ku Salavan College, which includes 4 items in the learning outcome test

Section 3: Opinions on the knowledge, ability to create a learning evaluation test for preschoolers for kindergarten teachers, teachers in the demonstration kindergarten of Salavan College, which created a test for preschoolers including 11 items.

The results of the research

Episode 1 The results of the general data analysis of the respondents who inquired about the creation of a learning assessment test for pre-school teachers of kindergarten teachers and teachers in the demonstration kindergarten of Saravan University for the academic year 2021 - 2022. It was found that the condition of the respondents was a sample group of 25 kindergarten teachers. 24 women, 100%, 1 male, 4%, 24 women, 96%, 26-30 years old, 2 8%, 31 years old, 23 92%, 11 people with a bachelor's degree, 44%. There are 9 people with a bachelor's degree, 36% and 5 people with a master's degree, 20% and 0 people with a doctorate, and 0 people with less than 5 years of teaching experience. 6-10 years of teaching experience with 3 people, 12% of 11-15 years of teaching experience with 8 people, 32% of 16-20 years of teaching experience, 9 people with 36% of 21 years of teaching experience, 5 people with 20% of teaching experience

Section 2: Opinions on the knowledge, understanding, and ability to create a learning test for kindergarten teachers and teachers in the demonstration kindergarten at Kusalawan College for the 2021-2022 school year. It was found that: teachers participated in the instruction on creating a test to evaluate learning results more than 3 times. There were 23 participants with a percentage equal to 92%. Teachers participated in the instruction on creating a test to evaluate learning results 2 times. Think as a percentage equal to 8%

- The teacher created a test to evaluate the student's learning in each analysis, there are a total of 25 students, and the percentage is equal to 100%.
- Teachers have knowledge and understanding to create different types of tests at a good level with an average score equal to 4.67.
- Teachers have the ability to create tests in each type of analysis at a good level with an average score of 4.84.

Part 3: Opinions about knowledge, ability to create tests to evaluate children's learning Before the school age for kindergarten teachers, the teachers in the kindergarten demonstration school of Salavan Teachers College found that:

- The teacher participated in the introduction of the test to evaluate the child's learning in the subjects studied or trained. There are 25 people who think that the percentage is equal to 100%. When analyzing according to the article, it was found that teachers participated in the instruction on creating tests to evaluate the learning results of children in subjects studied or trained more than 3 times. There are 22 people who think the percentage is equal to 88%.
- Teachers - The teacher created a test to evaluate children's learning every year. There are 25 people who think it is a percentage equal to 100%. When analyzing according to the list, it is seen that the teacher created a test to evaluate children's learning every year more than 3 times. There are a number of 19 people who think it is a percentage equal to 76%.
- Teachers - knowledge, ability to create tests to evaluate children's learning at a good level with an average score equal to 4.46.
- Teacher - The teacher has the ability to create a test to evaluate the child's learning in each activity and the results are at a good level with an average score of 4.26
- Teachers - Teachers have evaluation of children's learning which is mostly used by teachers using behavior observation, test, questionnaire, interview, using children's work files at a good level.
- The children's learning evaluation test that is created should take into account the ability of children of each age,

There must be a relationship with the lesson content of each activity, the kindergarten curriculum is at the intermediate level

# ກຽດຕິຄຸນ

ຜູ້ວິໄຈຂໍຂອບໃຈມາຍັງຄູ - ອາຈານທີ່ໃຫ້ຄວາມຮ່ວມມືໃນການເຮັດງານວິໄຈໃນຄັ້ງນີ້ ແລະ ຂອບໃຈທ່ານ ອຈ ປທ ແສນຮັກ ບຸນມີ, ຊອ ນາງ ຈັນສີມາຄັດທະວົງ ທີ່ປຶກສາດຳເນີນການວິໄຈ ນອກຈາກນີ້ຂໍຂອບໃຈນຳຜູ້ປະສານງານການວິໄຈ ແລະ ຄູສອນໃນສາຍອະນຸບານ, ຜູ້ອຳນວຍການວິທະຍາໄລຄູສາລະວັນພ້ອມຄະນະສະພາວິທະຍາສາດທຸກທ່ານທີ່ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກໃນການດຳເນີນການວິໄຈ ຂອບໃຈມາຍັງບັນຄູໃນສາຍອະນຸບານ ແລະ ຄູ-ອາຈານສອນໃນໂຮງຮຽນອະນຸບານສາທິດວິທະຍາໄລຄສາລະວັນທີ່ໃຫ້ຄວາມຮ່ວມມື, ຮ່ວມປະຕິບັດກິດຈະກຳຈົນສຳເລັດໄປດ້ວຍດີ.

ຂ້າພະເຈົ້າໃນນາມທີມງານຜູ້ວິໄຈຂໍຂອບໃຈມານະໂອກາດນີ້ດ້ວຍ. ອວຍພອນໃຫ້ທ່ານ ແລະ ຄູ -ອາຈານສອນໃນໃນສາຍຄູອະນຸບານ ແລະໂຮງຮຽນອະນຸບານສາທິດ ຈົ່ງປະສົບແຕ່ຄວາມສຳເລັດໃນການດຳເນີນວຽກງານທຸກປະການ.

**ຜູ້ວິໄຈ**

ນາງ ຄຳມະລີ ແສງໂສພາ

ປທ ນາງ ຫວານໃຈ ບົວກາສີ

ປທ ນາງ ລິດສະໄໝ ດວງມາລາ

# ສາລະບານ


ໜ້າ

ບົດຄັດຫຍໍ້

ໃບກິດຕິຄຸນ

ສາລະບານ

**ບົດທີ 1 ບົດນຳ**

ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ................................................ 1

ຈຸດປະສົງຂອງການວິໄຈ ................................................................ 2

ຂອບເຂດການວິໄຈ ........................................................................ 2

ສົມມຸຖານ .................................................................................. 3

ຜົນປະໂຫຍດຄາດວ່າຈະໄດ້ຮັບ........................................................... 4

ນິຍາມສັບສະເພາະ.......................................................................... 4

ບົດທີ 2 ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ

1. ຄວາມຫມາຍຂອງແບບທົດສອບວັດຜົນສຳເລັດທາງການຮຽນ......................... 5
2. ຄຸນລັກສະນະທີ່ດີຂອງແບບທົດສອບ...................................................... 5
3. ຂະບວນການສ້າງແບບທົດສອບ........................................................... 7
4. ແບບທົດສອບ.............................................................................. 13
5. ແບບທົດອັດຕະໄນ ........................................................................ 17
6. ການປະເມີນຜົນ ແລະ ແບບທົດສອບອີງເກນ........................................... 28
7. ແບບທົດສອບອີງເກນ ..................................................................... 29
8. ການວັດ ແລະ ປະເມີນຜົນການຮຽນ.................................................... 39
9. ຄວາມໝາຍຂອງການວັດ ແລະ ການປະເມີນ............................................. 40
10. ເຄື່ອງມືໃນການວັດຜົນການຮຽນ - ຫຼິ້ນຂອງເດັກ ...................................... 47
11. ການປະເມີນຜົນໂດຍໃຊ້ແຟ້ມຜົນງານ .................................................. 48
12. ການປະເມີນຜົນພັດທະນາການດ້ານສະຕິປັນຍາ ....................................... 49
13. ຄັງຂໍ້ສອບ ................................................................................. 50
14. ຄວາມສຳຄັນຂອງແບບທົດສອບ.......................................................... 53
15. ປະເພດຂອງແບບທົດສອບ ............................................................... 54
16. ຜົນສຳເລັດທາງການຮຽນ ................................................................ 59
17. ແບບທົດສອບວັດຜົນສຳເລັດທາງການຮຽນ............................................. 61
18. ຫຼັກເກນໃນການສ້າງແບບທົດສອບວັດຜົນສຳເລັດທາງການຮຽນ...................... 63
19. ຊະນິດຂອງແບບທົດສອບວັດຜົນສຳເລັດທາງການຮຽນ................................. 63
20. ລັກສະນະຂອງແບບທົດສອບຜົນສຳເລັດທີ່ດີ............................................ 64
21. ທິດສະດີກ່ຽວກັບຜົນສຳເລັດທາງການຮຽນ............................................. 65
22. ທິດສະດີກ່ຽວກັບການຮຽນຮູ້ຂອງເດັກ .................................................. 66
23. ຫຼັກການຮຽນຮູ້ (Principles of learning) ............................................ 69

( ສາລະບານຕໍ່ )


24. ການປະເມີນພັດທະນາການ ແລະ ການຮຽນຮູ້ເດັກກ່ອນໄວຮຽນ ........................................... 70

25. ແນວທາງການປະເມີນພັດທະນາການ ແລະ ການຮຽນຮູ້ຂອງເດັກກ່ອນໄວຮຽນຕາມສະພາບຈິງ.......... 71

26. ວິທີການປະເມີນພັດທະນາການ ແລະ ການຮຽນຮູ້ຂອງເດັກກ່ອນໄວຮຽນ....................................... 72

27. ແນວຄິດການປະເມີນພັດທະນາການເດັກກ່ອນໄວຮຽນ........................................................... 74

2.2 ງານວິໄຈທີ່ກ່ຽວຂ້ອງ.................................................................................................. 76

ບົດທີ3 ວິທີດຳເນີນການວິໄຈ

1. ປະຊາກອນ ແລະ ກຸ່ມຕົວຢ່າງ………………………..………......…....……………… 85
2. ເຄື່ອງມືແກ້ບັນຫາ/ວິທີການ ຫຼື ແນວທາງການແກ້ບັນຫາ………...……...…..…..…..………. 85
3. ເກນໃນການແປຄວາມໝາຍ………………………………………..….………….….... 86
4. ວິທີລວມຂໍ້ມູນ ………….………………………....……...…....……….………..……. 87
5. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ………….……...………….…...……..……...……….. 87

ບົດທີ4 ວິຜົນວິເຄາະຂໍ້ມູນ

1. ການແປຜົນ ........................................................................................................... 89
2. ສັນຍາລັກ ແລະ ອັກສອນຫຍໍ້ທີ່ໃຊ້ສື່ຄວາມໝາຍໃນການວິໄຈ.................................................. 89
3. ຜົນການວິເຄາະ...................................................................................................... 89

ບົດທີ5 ສະຫຼຸບ,ອະພິປາຍ ແລະ ຂໍ້ສະເໜີແນະ

1. ສະຫຼຸບຜົນການວິໄຈ…………......……………………..………..……..……..……….... 96
2. ອະພິປາຍຜົນການວິໄຈ…..……….......……….................…………..………………..…...… 100
3. ຂໍ້ສະເໜີແນະ ……..……….…….........………….……..………………………..…….. 103

ຂໍ້ສະເໜີສຳຫຼັບຜົນການວິໄຈໄປໃຊ້…..……….……………….…….....…..……….…..... 103

ຂໍ້ສະເໜີແນະສຳລັບການວິໄຈຄັ້ງວິໄຈຄັ້ງຕໍ່ໄປ…...…………………..………...……......…… 103

ເອກະສານອ້າງອີງ…….…………………...……………….………………………...……… 104

ພາກພະນວກ ................................................................................................................ 106

ປະຫວັດຜູ້ວິໄຈ…………………………...……………………………………………..…… 123

**ຄຳນຳ**

ການຄົ້ນຄ້ວາເລື່ອງ ການສຶກສາບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022 - 2023

ມີຈຸດປະສົງ ເພື່ອສຶກສາບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022-2023 ແລະ ເພື່ອປຽບທຽບຄວາມຄິດເຫັນໃນການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ມີຄວາມຄິດເຫັນແຕກຕ່າງກັນຕາມເພດ,ອາຍຸ,ວຸດທິ ແລະ ປະສົບການໃນການສອນ.ຜູ້ວິໄຈໄດ້ສ້າງແບບສອບຖາມເຊິ່ງໄດ້ແບ່ງເນື້ອໃນແບບສອບຖາມເປັນ 3 ຕອນຄື: ສອບຖາມກ່ຽວກັບຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ,ກ່ຽວກັບຄວາມຮູ້,ຄວາມເຂົ້າໃຈ,ຄວາມສາມາດການສ້າງແບບທົດສອບວັດຜົນການຮຽນ,ຄວາມຄິດເຫັນກ່ຽວກັບຄວາມຮູ້,ຄວາມສາມາດສ້າງແບບທົດສອບປະເມີນຜົນການຮຽນຂອງເດັກ

ກ່ອນໄວຮຽນ ແລະ ນຳໃຊ້ກັບກຸ່ມເປົ້າໝາຍ ເພື່ອກຽມຄວາມພ້ອມ ແລະ ປັບປຸງແກ້ໄຂດ້ານການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນໃຫ້ມີປະສິດທິພາບສູງຂຶ້ນ.

ທັງນີ້ຜູ້ວິໄຈໄດ້ລວບລວມຂໍ້ມູນທາງດ້ານການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນທີ່ເກີດຂຶ້ນໃນເວລາຄູສອນແຕ່ລະກິດຈະກຳກັບເດັກອະນຸບານພ້ອມທັງໃຫ້ການແນະນຳນັກສຶກສາຄູໃນການສ້າງແບບທົດສອບໃນແຕ່ລະກິດຈະກຳ ເພື່ອແກ້ບັນຫາໃນການສອນຂອງຄູ ອາຈານໃຫ້ຖືກຈຸດ ແລະ ນຳເອົາບັນຫາທີ່ເກີດຂຶ້ນຈິງມາແກ້ໄຂ.

ຜູ້ວິໄຈຫວັງຢ່າງຍິ່ງວ່າການສຶກສາຄົ້ນຄ້ວາວິໄຈໃນຄັ້ງນີ້ຈະສາມາດນຳໄປປະຫຍຸກໃຊ້ ແລະ ໄດ້ຮັບພັດທະນາໃນການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນໃນອະນາຄົດ.

ນາງ ຄຳມະລີ ແສງໂສພາ
ປທ ນາງ ຫວານໃຈ ບົວກາສີ
ປທ ນາງ ລິດສະໄໝ ດວງມາລາ

# ບົດທີ1

# ບົດນຳ

## 1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ

ກະຊວງສຶກສາທິການ ແລະ ກິລາກຳນົດວິໄສທັດໄວ້ວ່າ: “ ຮອດປີ2030 ພົນລະເມືອງລາວທຸກຄົນໄດ້ຮັບການສຶກສາທີ່ມີຄຸນນະພາບຢ່າງສະເໝີພາບ ແລະເທົ່າທຽມກັນເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງກາຍເປັນພົນລະເມືອງດີຂອງຊາດ,ມີຄຸນສົມບັດ,ມີສຸຂະພາບເຂັ້ມແຂງ, ມີຄວາມຮູ້, ຄວາມສາມາດສູງ, ມີຄວາມເປັນມືອາຊີບເພື່ອພັດທະນາປະເທດຊາດໃຫ້ສີວິໄລຍິ່ນຍົງສາມາດເຊື່ອມໂຍງ, ແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້ ”

ທິດທາງຂອງວິໄສທັດກຳນົດວ່າ: ພັດທະນາຊັບພະຍາກອນມະນຸດໃຫ້ໄດ້ຕາມ 3 ລັກສະນະ ແລະ 5 ຫຼັກມູນການສຶກສາພອ້ມທັງຮັບປະກັນໃຫ້ມີທັກສະ ແລະ ຄວາມຮູ້ຄວາມສາມາດນຳໃຊ້ວິທະຍາສາດເຕັກນິກ, ເຕັກໂນໂລຊີ, ຂໍ້ມູນຂ່າວສານ, ການສື່ສານ ແລະ ພາສາຕ່າງປະເທດຢ່າງເປັນຮູບປະທຳ. ພັດທະນາການສຶກສາ ແລະ ກິລາຕອ້ງເປັນວຽກງານໃຈກາງຂອງການພັດ ທະນາຊັບພະຍາກອນມະນຸດໃຫ້ໄດ້ຮັບການຂະຫຍາຍຕົວຮອບດ້ານ, ມີຄຸນນະພາບດີຂຶ້ນ ແລະ ມີໂອກາດຮຽນຮູ້ຕະຫຼອດຊີວິດ ເພື່ອພັດທະນາເສດຖະກິດ - ສັງຄົມໃຫ້ຍືນຍົງ. ສຸມໃສ່ເຮັດໃຫ້ການພັດທະນາຊັບພະຍາກອນມະນຸດມີຄຸນນະພາບ,ມີສີມືແລະມີຄວາມຊຳນິຊຳນານ ເພື່ອສາມາດຕອບສະໜອງໄດ້ຕາມຄວາມຕອ້ງການຂອງຜູ້ປະກອບການໃນແຕ່ລະໄລຍະທັງດ້ານປະລິມານ ແລະ ຄຸນນະພາບ.

ການສຶກສາແມ່ນປະກົດການໜຶ່ງຂອງສັງຄົມມີພາລະບົດບາດໃນການພັດທະນາບຸກຄະລາກອນຕາມຄວາມຕ້ອງການ ແລະ ຄວາມສາມາດຂອງຄົນຍຸກໃໝ່ຕາມ 3 ພາລະບົດບາດຄື: ພາລະບົດບາດດ້ານເສດຖະກິດ ແລະ ການຜະລິດ, ພາລະບົດບາດທາງດ້ານການເມືອງ ແລະ ສັງຄົມ, ພາລະບົດບາດທາງດ້ານແນວຄິດ ແລະ ວັດທະນະທຳ.

ການພັດທະນາຊັບພະຍາກອນມະນຸດແມ່ນເປົ້າໝາຍທີ່ສຳຄັນຂອງການພັດທະນາປະເທດຊາດ,ການສຶກສາອົບຮົມເດັກກ່ອນໄວຮຽນເປັນວຽກງານທີ່ສຳຄັນຂອງການຈັດການສຶກສາໃຫ້ແກ່ໝົດທຸກຄົນ ເພື່ອໃຫ້ເກີດຄວາມສອດຄ່ອງ ແລະ ປະຕິບັດນະໂຍບາຍດັ່ງກ່າວ ແຜນການສຶກສາ ເພື່ອໝົດທຸກຄົນຂອງກະຊວງສຶກສາທິການ ແຫ່ງ ສ.ປ.ປ.ລາວ ໄດ້ຖືເອົາການສຶກສາ ແລະ ພັດທະນາເດັກກ່ອນໄວຮຽນເປັນໜຶ່ງໃນບຸລິມະສິດຂອງການສຶກສາຂັ້ນພື້ນຖານ ເນື່ອງຈາກໄດ້ຜ່ານການກຽມຄວາມພ້ອມທາງດ້ານການຮຽນຮູ້ຂັ້ນຕົ້ນໃນຊັ້ນອະນຸບານຈະໄດ້ຮັບຜົນກະທົບທີ່ດີດ້ານການຮຽນໃນການທີ່ຈະໄປຮຽນໃນຊັ້ນປະຖົມສຶກສາ ແລະ ຊັ້ນຕໍ່ໄປ.

ໃນປັດຈຸບັນນີ້ຄຸນນະພາບການສຶກສາເດັກກ່ອນໄວຮຽນຍັງບໍ່ທັນພຽງພໍເທື່ອຈຶ່ງມີຄວາມຈຳເປັນຕ້ອງພັດທະນາມາດຕະຖານການສອນ ແລະ ມາດຕະຖານຂັ້ນພື້ນຖານຄຸນນະພາບການສຶກສາສຳລັບການສຶກສາເດັກກ່ອນໄວຮຽນເພື່ອປັບປຸງຄຸນນະພາບໄປພ້ອມໆກັບຄູສຶກສານິເທດສຳລັບການສຶກສາເດັກກ່ອນໄວຮຽນໃນແຕ່ລະເມືອງ. ການຂະຫຍາຍຕາໜ່າງການສຶກສາເດັກກ່ອນໄວຮຽນແຫ່ງໃໝ່ຕ້ອງຢູ່ໃນຮູບແບບທີ່ມີຄ່າໃຊ້ຈ່າຍຕ່ຳ

ການຈັດການຮຽນ - ການສອນຂອງຄູກ່ອນໄວຮຽນເປັນສ່ວນໜຶ່ງຂອງວິທະຍາໄລຄູສາລະວັນທີ່ເນັ້ນໃນການຈັດການສຶກສາໄປສູ່ສູນແຫ່ງການພັດທະນາ ເພື່ອພັດທະນາຄູໃຫ້ມີຄຸນນະພາບຕາມມາດຕະຖານການສຶກສາແຫ່ງຊາດ. ແຕ່ຜົນຈາກການສຳຫຼວດຕົວຈິງແລ້ວຍັງມີບັນຫາຢ່າງຫຼວງຫຼາຍທີ່ຈະຕ້ອງປັບປຸງ ແລະ ພັດທະນາໃຫ້ມີ

ປະສິດທິພາບເພີ່ມຂຶ້ນອີກ. ຜົນຈາກການເກັບກຳສະພາບການຈັດການຮຽນ - ການສອນຂອງຄູສອນໃນວິທະຍາໄລຄູ ແລະ ຄູສອນໃນໂຮງຮຽນອະນຸບານແລ້ວ ພົບວ່າ: ປະສິດທິພາບດ້ານການສິດສອນຂອງຄູ-ອາຈານຍັງມີຫຼາຍບັນຫາທີ່ຍັງຕ້ອງປັບປຸງແກ້ໄຂໃຫ້ດີຂຶ້ນໂດຍສະເພາະແມ່ນການສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກກ່ອນໄວຮຽນ ຂອງຄູ - ອາຈານສອນທີ່ສອນໃນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດວິທະຍາໄລຄູສາລະວັນ ຍັງມີບັນຫາບໍ່ລົງຕົວເທົ່າທີ່ຄວນ.ຄູ - ອາຈານສອນໃນສາຍຄູອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານຍັງບໍ່ທັນເຂົ້າໃຈຈະແຈ້ງຕໍ່ການສ້າງຂໍ້ສອບເພື່ອປະເມີນຜົນການຮຽນຂອງເດັກ,ຄູສອນບາງຄົນຂາດການຄົ້ນຄ້ວາເລິກເຊິ່ງໃນການສ້າງແບບທົດສອບ ຫຼື ບາງກິດຈະກຳກໍ່ບໍ່ຖືກປະເມີນ,ເຮັດໃຫ້ຂະບວນການຈັດກິດຈະກຳຮຽນ - ການສອນເດັກກ່ອນໄວຮຽນບໍ່ມີກິດຈະກຳທີ່ຫຼາກຫຼາຍ, ການວັດ ແລະ ປະເມີນຜົນການຮຽນຂອງນັກຮຽນຍັງບໍ່ທັນຕໍ່ເນື່ອງ,ການປະເມີນຜົນການຮຽນຂອງເດັກບໍ່ຫຼາກຫຼາຍຮູບແບບ,ຄູ - ອາຈານສອນບາງຄົນຍັງບໍ່ທັນເຂົ້າໃຈດີເທົ່າທີ່ຄວນໃນການສ້າງແບບທົດສອບສຳລັບກິດຈະກຳການຮຽນຂອງເດັກ, ເຮັດໃຫ້ເດັກຈຳນວນຫຼາຍບໍ່ສາມາດຈື່ຈຳບົດຮຽນ,ພັດທະນາການທາງດ້ານການຮຽນບໍ່ຄ່ອຍດີ.

ດ້ວຍຄວາມຕື່ນຕົວ, ຄວາມສຳນຶກເຖິງຄວາມສຳຄັນ ແລະ ບັນຫາທີ່ກ່າວມາຂ້າເທິງນັ້ນຈຶ່ງມີການວິໄຈກ່ຽວກັບສຶກສາ ການສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກກ່ອນໄວຮຽນສຳລັບຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ໂດຍໃຊ້ຫຼັກການ ແລະ ແນວຄິດ, ທິດສະດີ, ການສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກກ່ອນໄວຮຽນສຳລັບຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນເພື່ອສ້າງໃຫ້ຄູ-ອາຈານໃນວິທະຍາໄລຄູສາລະວັນ ແລະ ຄູສອນໃນໂຮງຮຽນອະນຸບານ ມີຄວາມຮູ້,ມີຄວາມເຂົ້າໃຈ,ມີຄວາມສາມາດສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກກ່ອນໄວຮຽນໃຫ້ມີຄວາມຖືກຕ້ອງຕາມທິດທາງດຽວກັນ, ເຮັດໃຫ້ຄູມີຄວາມດຸໝັ່ນໃນການຄົ້ນຄວ້າເອກະສານການຮຽນຮູ້, ສາມາດສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກກ່ອນໄວຮຽນທັງປັບປຸງຄຸນນະພາບການຈັດການຮຽນ-ການສອນໃນສາຍ ແລະ ໃນໂຮງຮຽນອະນຸບານ ປັບປຸງດ້ານການວິໄຈໃນຫ້ອງຮຽນ ແລະ ການສຶກສາການສອນໃນສະຖາບັນສ້າງຄູເພື່ອດຳເນີນການຄົ້ນຄວ້າວິໄຈໃນຫ້ອງຮຽນ ແລະ ຊຸກຍູ້ໃຫ້ຄູໃນສະຖານບັນມີຄວາມກະຕືລືລົ້ນໃນການເວົ້າ, ການຂຽນ, ການບໍລິຫານ ແລະ ເປັນເງື່ອນໄຂໃນການຂໍຕຳແໜ່ງທາງວິຊາການຫຼາຍຂຶ້ນ, ໂດຍປະຕິບັດຕາມການກຳນົດຂອງກະຊວງສຶກສາທິການແລະກິລາ(ວິໄສທັດຮອດປີ2030 ຍຸດທະສາດຮອດປີ2025 ແລະ ແຜນພັດທະນາຂະແໜງການສຶກສາແລະກິລາ 5 ປີຄັ້ງທີ VIII (2016-2020) ເປັນຂອບແນວຄວາມຄິດທີ່ສຳຄັນໃນການວິໄຈ ເພື່ອເປັນຂໍ້ມູນພື້ນຖານໃນການປັບປຸງແລະ ພັດທະນາການຈັດກິດຈະກຳການຮຽນຮູ້ສຳລັບເດັກ,ການສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກກ່ອນໄວຮຽນແຕ່ລະກິດຈະກຳໃນຊັ້ນອະນຸບານໃຫ້ມີປະສິດທິພາບຍິ່ງຂຶ້ນ.

## 1.2 ຈຸດປະສົງ.

- ເພື່ອສຶກສາບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022-2023
- ເພື່ອປຽບທຽບຄວາມຄິດເຫັນໃນການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ມີຄວາມຄິດເຫັນແຕກຕ່າງກັນຕາມເພດ,ອາຍຸ, ວຸດທິ ແລະ ປະສົບການໃນການສອນ.

## 1.3 ຂອບເຂດຂອງການວິໄຈ

**1. ດ້ານເນື້ອໃນ**

ສຳລັບການວິໄຈໃນຫົວຂໍ້ ສຶກສາບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດວິທະຍາໄລຄູສາລະວັນ ສົກຮຽນ 2022-2023.

**2. ປະຊາກອນ ແລະ ກຸ່ມຕົວຢ່າງ**

ປະຊາກອນ ແລະ ກຸ່ມຕົວຢ່າງສຳລັບການວິໄຈເລື່ອງ ສຶກສາບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນສຳລັບຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022-2023.ຈຳນວນ 30 ຄົນ ຍິງ 28 ຄົນ

**ກຸ່ມຕົວຢ່າງ:** ຜູ້ວິໄຈໄດ້ກຳນົດເອົາຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດເຊິ່ງມີຈຳນວນ 28 ຄົນ,ຍິງ 27 ຄົນ. ໂດຍການກຳນົດຫາຂະໜາດກຸ່ມຕົວຢ່າງດ້ວຍການໃຊ້ຕາຕະລາງຂອງເຄນຊີ ແລະ ມໍແກນ ( Krejcie and Morgan, 1970: 607- 610 )

**3. ຂອບເຂດດ້ານເວລາ**

ການວິໄຈໃນຫົວສຶກສາບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022-2023.ແມ່ນເລີ່ມລົງມືດຳເນີນການວິໄຈໃນພາກຮຽນ2 ນັບແຕ່ເດືອນພຶດສະພາ 2023 ຫາຕົ້ນເດືອນຕຸລາ 2023.

**4. ຂອບເຂດສະຖານທີ່**

ການວິໄຈໃນຫົວຂໍ້ ສຶກສາບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດວິທະຍາໄລຄູສາລະວັນ ເມືອງແລະແຂວງ ສາລະວັນ.

## 1.4 ກອບແນວຄິດຂອງການວິໄຈ

| ຕົວປ່ຽນຕົ້ນ | | ຕົວປ່ຽນຕາມ |
|---|---|---|
| 1) ເພດ<br>2) ອາຍຸ<br>3) ວຸດທິ<br>4) ປະສົບການໃນການສອນ. | → | - **ຄວາມຮູ້,ຄວາມເຂົ້າໃຈໃນການສ້າງແບບທົດສອບວັດຜົນການຮຽນຂອງເດັກກ່ອນໄວຮຽນ**<br>- **ຄວາມຮູ້,ຄວາມສາມາດໃນການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນ**<br>- **ຄວາມຄິດເຫັນໃນການສ້າງແບບທົດສອບປະເມີນຜົນການຮຽນຂອງຄູສອນໃນສາຍ ແລະ ຄູສອນໃນໂຮງຮຽນອະນຸບານ** |

## 1.5 ສົມມຸດຖານການວິໄຈ

- ຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດມີຈະຄວາມຮູ້,ຄວາມສາມາດໃນການສ້າງແບບ

ທົດສອບ ແລະ ນຳໃຊ້ແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນ

- ຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດມີຄວາມຄິດເຫັນໃນການສ້າງແບບທົດສອບແຕກຕ່າງກັນຕາມເພດ,ອາຍຸ,ວຸດທິ ແລະ ປະສົບການໃນການສອນ.

## 1.6 ປະໂຫຍດຄາດວ່າຈະໄດ້ຮັບ

1) ເປັນແນວທາງໃນການຈັດກິດຈະກຳການຮຽນ - ການສອນໃຫ້ແກ່ຄູ-ອາຈານສອນໃນສາຍຄູອະນຸບານ ແລະ
2) ຄູສອນໃນໂຮງຮຽນສາທິດ ກ່ຽວກັບການຈັດກິດຈະກຳການຮຽນ-ການສອນໃນຊັ້ນອະນຸບານ .
3) ຄູ - ອາຈານໃນສາຍຄູອະນຸບານຈະໄດ້ມີຄວາມຮູ້, ມີປະສົບການໃນການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກອະນຸບານຫຼາຍຂື້ນ.
4) ຄູ ຈະໄດ້ແລກປ່ຽນດ້ານປະສົກການໃນສ້າງແບບທົດສອບປະເມີນຜົນການຮຽນ ແລະ ປະເມີນຜົນພັດທະນາການຂອງເດັກອະນຸບານເພື່ອໝູນໃຊ້ໃນການປະຕິບັດໜ້າທີ່ຕົວຈິງໃນອະນາຄົດ.
5) ຄູ ສາມາດສ້າງແບບທົດສອບເພື່ອປະເມີນຜົນການຮຽນຂອງເດັກໄດ້ທຸກກິດຈະກຳຢ່າງຄ່ອງແຄ້ວຂື້ນ.

## 1.7 ນິຍາມຄຳສັບສະເພາະ

1) ແບບທົດສອບໝາຍເຖິງຊຸດຂອງຄຳຖາມທີ່ໃຊ້ໃນການວັດຄວາມຮູ້ຂອງຜູ້ຮຽນທີ່ໄດ້ຮຽນມາ.
2) ການປະເມີນໝາຍເຖິງຂະບວນການທີເຮັດຕໍ່ຈາກການວັດຜົນ
3) ຜົນການຮຽນຮູ້ໝາຍເຖິງຄວາມສຳເລັດທາງການຮຽນຮູ້ຂອງຜູ້ຮຽນ
4) ເດັກກ່ອນໄວຮຽນໝາຍເຖິງຜູ້ຮຽນທີ່ມີອາຍຸແຕ່ 3 ປີຫາ 6 ປີ.

# ບົດທີ2

# ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ

ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງກັບການວິໄຈເລື່ອງ ສຶກສາບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2021 – 2022 ຜູ້ວິໄຈໄດ້ສະເໜີລາຍລະອຽດຂອງເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງຕ່າງໆຕາມລຳດັບດັ່ງນີ້:

## 2.1. ເອກະສານທີ່ກ່ຽວຂ້ອງ

### 1. ຄວາມໝາຍຂອງແບບທົດສອບວັດຜົນສຳເລັດທາງການຮຽນ

ແບບທົດສອບ ໝາຍເຖິງ ຊຸດຂອງຄຳຖາມ ຫຼື ກຸ່ມງານທີ່ໃຊ້ເປັນສິ່ງທີ່ດຶງດູດໃນການວັດຄຸນສົມບັດໃດຄຸນສົມບັດໜຶ່ງຂອງບຸກຄົນ ໂດຍທີ່ບຸກຄົນນັ້ນເມື່ອໄດ້ຮັບສິ່ງເຮົ້າຈະສະແດງພຶດຕິກຳສນອງທີ່ສາມາດວັດໄດ້ສັງເກດໄດ້ ຊຶ່ງຈະນຳໄປສູ່ການແປຄວາມໝາຍຂອງຜົນໄດ້ ຈຶ່ງອາດກ່າວໄດ້ວ່າແບບທົດສອບວັດຜົນສຳເລັດທາງການຮຽນໝາຍເຖິງ ຊຸດຂອງຄຳຖາມທີ່ມີຈຸດປະສົງວັດຄວາມຮູ້ຄວາມສາມາດ ທັກສະ ແລະ ສະມັດຖະພາບທາງສະໝອງດ້ານຕ່າງໆ ຂອງຜູ້ຮຽນຫຼັງເກີດການຮຽນຮູ້

### 2. ຄຸນລັກສະນະທີ່ດີຂອງແບບທົດສອບ

ໃນການສອບວັດເທື່ອໜຶ່ງໆ ນັ້ນ ຂໍ້ສອບຈຳເປັນຈະຕ້ອງໃຫ້ມີລັກສະນະເປັນຕົວແທນທີ່ດີຂອງເນື້ອໃນບົດຮຽນ ແລະ ຄວາມຮູ້ຕ່າງໆ ຂອງຜູ້ຮຽນ ເພາະການໃຊ້ຂໍ້ສອບວັດຄວາມຮູ້, ຄວາມສາມາດຂອງຜູ້ຮຽນນັ້ນ ເປັນພຽງຕົວແທນຂອງເນື້ອໃນບົດຮຽນທີ່ຜູ້ຮຽນໄດ້ຮຽນໄປແລ້ວເທົ່ານັ້ນ ຂໍ້ສອບຈຶ່ງຕ້ອງເປັນຕົວແທນທີ່ດີເພາະຜົນການສອບວັດເປັນການສະຫຼຸບເຖິງຄວາມສາມາດໂດຍສ່ວນທັງໝົດຂອງຜູ້ຮຽນໃນວິຊານັ້ນໆ

ພວງລັດ ທະວີຣັດ (2530 : 41-45) ໄດ້ກ່າວເຖິງລັກສະນະຂອງແບບທົດສອບທີ່ດີດັ່ງນີ້

1. ມີຄຸນນະພາບດ້ານຄວາມທ່ຽງກົງ ( Validity ) ໝາຍເຖິງ ແບບທົດສອບສາມາດວັດໄດ້ກົງຕາມຈຸດປະສົງທີ່ຕ້ອງການ ຄວາມທ່ຽງກົງແບ່ງເປັນ 4 ລັກສະນະ ຄື

1.1 ຄວາມທ່ຽງກົງຕາມເນື້ອໃນບົດຮຽນ (Content Validity) ໝາຍເຖິງແບບທົດສອບທີ່ສາມາດວັດໄດ້ສອດຄ່ອງ ແລະ ຄວບຄຸມເນື້ອໃນບົດຮຽນທີ່ຕ້ອງການຈະວັດ ຂໍ້ສອບທີ່ມີຄວາມທ່ຽງກົງຕາມເນື້ອໃນບົດຮຽນໝາຍຄວາມວ່າ ຂໍ້ສອບນັ້ນປະກອບດ້ວຍຂໍ້ຄຳຖາມທີ່ຖາມເນື້ອໃນບົດຮຽນ ໄດ້ກົງຕາມທີ່ລະບຸໄວ້ໃນຕາຕະລາງວິເຄາະຫຼັກສູດຢ່າງຄົບຖ້ວນ

1.2 ຄວາມທ່ຽງກົງຕາມໂຄງສ້າງ ( Construct Validity ) ໝາຍເຖິງ ຄຸນສົມບັດຂອງແບບທົດສອບທີ່ສາມາດວັດໄດ້ສອດຄ່ອງກົງຕາມທີ່ກຳນົດໄວ້ໃນທິດສະດີ ໃນກໍລະນີທີ່ເປັນຂໍ້ສອບ ໝາຍເຖິງຂໍ້ສອບທີ່ສ້າງໄດ້ຄວບຄຸມພຶດຕິກຳ ຕາມທີ່ວິເຄາະໄດ້ໃນຕາຕະລາງວິເຄາະຫຼັກສູດຂອງລາຍວິຊານັ້ນໆ ຖ້າພິຈາລະນາຈາກຈຸດປະສົງໝາຍເຖິງພຶດຕິກຳກໍຄື ເບິ່ງຈາກພຶດຕິກຳທີ່ຄາດຫວັງ ແລະ ເກນ

1.3 ຄວາມທ່ຽງກົງຕາມສະພາບ ( Concurrent Validity) ໝາຍເຖິງ ຄຸນສົມບັດຂອງແບບທົດ

ສອບທີ່ໃຫ້ຜົນການວັດສອດຄ່ອງກັບສະພາບທີ່ເປັນຈິງໃນຂະນະນັ້ນຂອງຜູ້ສອບ ເຊິ່ງເຫັນໄດ້ຈາກການສັງເກດ ຫຼື ການສອບພາກປະຕິບັດ

1.4 ຄວາມທ່ຽງກົງເຊີງພະຍາກອນ (Predictive Validity) ໝາຍເຖິງ ຄຸນສົມບັດຂອງແບບທົດສອບທີ່ໃຫ້ຊ່ວຍໃຫ້ສາມາດທຳນວາຍຜົນໃນອະນາຄົດໄດ້ຖືກຕ້ອງ ແບທົດສອບທີ່ມີຄວາມທ່ຽງກົງເຊີງພະຍາກອນສູງຄື ມີຄະແນນຈາກແບບທົດສອບທັງສະບັບນັ້ນສອດຄ່ອງກັບຄະແນນຜົນການຮຽນໃນອະນາຄົດການທີ່ຈະສ້າງແບບທົດສອບໃຫ້ມີຄວາມທ່ຽງກົງ ຄື ແບບທົດສອບນັ້ນຈະຕ້ອງໃຫ້ຄວບຄຸມ (Comprehensive) ຫຼັກສູດທີ່ກຳນົດໄວ້ ເຊິ່ງມີລັກສະນະດັ່ງນີ້

2. ຖາມທຸກເລື່ອງ ທຸກເນື້ອໃນບົດຮຽນທີ່ມີໃນຫຼັກສູດ

1. ຖາມພຶດຕິກຳການຮຽນຮູ້ຄົບຖ້ວນຕາມຈຸດໝາຍຂອງຫຼັກສູດ

2. ຖາມແຕ່ລະເນື້ອໃນບົດຮຽນ ແລະ ພຶດຕິກຳຢ່າງໄດ້ສັດສ່ວນກັນ ພຶດຕິກຳໃດມີຄວາມສຳຄັນຫຼາຍເນັ້ນຫຼາຍ ກໍຄວນຖາມຫຼາຍຂໍ້ ຖ້າສຳຄັນນ້ອຍກໍຖາມຂໍ້ນ້ອຍ

3. ມີຄຸນນະພາບດ້ານຄວາມເຊື່ອໝັ້ນ (Reliability) ໝາຍເຖິງ ແບບທົດສອບທີ່ສາມາດໃຫ້ຜົນການວັດໄດ້ຄົງທີ່ ບໍ່ວ່າຈະນຳເຄື່ອງມືນັ້ນໄປສອບວັດຈັກເທື່ອກໍຕາມ ແບບທົດສອບທີ່ມີຄວາມເຊື່ອໝັ້ນ ໝາຍເຖິງແບບທົດສອບທີ່ໃຫ້ຜົນການວັດໃນແຕ່ລະເທື່ອສອດຄ່ອງກັນ ເຊັ່ນ ໃນການສອບວັດ 2 ເທື່ອ ຄົນທີ່ໄດ້ຄະແນນສູງໃນເທື່ອທຳອິດຈະໄດ້ຄະແນນສູງໃນເທື່ອທີ່ສອງ ຄົນທີ່ໄດ້ຄະແນນຕ່ຳໃນເທື່ອທຳອິດກໍຈະໄດ້ຄະແນນຕ່ຳໃນເທື່ອທີ່ສອງເຊັ່ນກັນການສ້າງແບບທົດສອບໃຫ້ມີຄວາມເຊື່ອໝັ້ນສູງກໍຄື ຂໍ້ຄຳຖາມຂອງແບບທົດສອບນັ້ນຈະຕ້ອງຖາມໃນສິ່ງທີ່ຄວນຖາມຄື ຖາມພຶດຕິກຳຂັ້ນສູງ ແລະ ມີຈຳນວນຫລາຍພໍທີ່ຈະຄວບຄຸມເນື້ອໃນບົດຮຽນໃນວິຊານັ້ນ ໆ

3. ມີຄວາມເປັນປາລະໄນ (Objectivity) ຄືມີລັກສະນະ 3 ປະການ ໄດ້ແກ່

3.1 ຄຳຖາມມີຄວາມແຈ່ມແຈ້ງຊັດເຈນ

3.2 ການກວດໃຫ້ຄະແນນຊັດເຈນເຮັດໃຫ້ຜູ້ກວດບໍ່ວ່າໃຜກໍຕາມກວດໃຫ້ຄະແນນໄດ້ກົງກັນ

3.3 ການແປຄວາມຫມາຍຂອງຄະແນນກົງກັນ ກລ່າວຄື ຄະແນນທີ່ໄດ້ ບອກສະຖານພາບຂອງຜູ້ສອບໄດ້ກົງກັນແບບທົດສອບປາລະໄນ ຫລື ອັດຕະໄນ ເຊັ່ນ ຂໍ້ສອບລຽງຄວາມສາມາດສ້າງໃຫ້ມີເຈົ້າລັກສະນະ ທັງ 3 ປະການດັ່ງກ່າວ ແບບທົດສອບນັ້ນກໍຈະມີຄວາມເປັນປາລະໄນໄດ້ເທົ່າທຽມກັນ

4. ມີການຖາມເລິກ (Searching) ໝາຍເຖິງ ບໍ່ຖາມພຽງແຕ່ພຶດຕິກຳຂັ້ນຄວາມຮູ້ຄວາມຈຳ ຖາມຕາມຕຳລາຫຼືຖາມຕາມທີ່ຄູສອນ ແຕ່ຕ້ອງພະຍາຍາມຖາມພຶດຕິກຳຂັ້ນສູງກວ່າຄວາມຮູ້ຄວາມຈຳ ໄດ້ແກ່ຖາມພຶດຕິກຳຄວາມເຂົ້າໃຈ ການນຳໄປໃຊ້ ການວິເຄາະ ການສັງເຄາະ ແລະ ການປະເມີນຄ່າ ແຕ່ຖ້າຈຳເປັນຕ້ອງຖາມຄວາມຮູ້,ຄວາມຈຳກໍຄວນຖາມສິ່ງທີ່ເປັນຄວາມຄິດລວມຍອດ ຖ້າຂໍ້ຄຳຖາມສາມາດວັດພຶດຕິກຳຂັ້ນສູງໄດ້ຫຼາຍເທົ່າໃດ ແບບທົດສອບນັ້ນກໍຈະມີຄຸນຄ່າຫຼາຍຂຶ້ນເທົ່ານັ້ນ ເພາະສາມາດນຳຜົນການສອບມາໃຊ້ໃນການພັດທະນາສະມັດຖະພາບທາງສະໝອງຂອງຜູ້ຮຽນໃຫ້ກ້າວໜ້າກວ່າເດີມໄດ້ດີ

5. ມີຄວາມຍຸດຕິທຳ ( Fair) ໝາຍເຖິງ ຂໍ້ຄຳຖາມຂອງແບບທົດສອບນັ້ນຈະຕ້ອງບໍ່ມີຊ່ອງທາງແນະນຳໃຫ້ເດັກສະຫຼາດໃຊ້ສະຕິປັນຍາໃນການເດົາໄດ້ຖືກ ບໍ່ເປີດໂອກາດໃຫ້ຄົນກຽດຄ້ານທີ່ເບິ່ງຕຳລາລວາໆ ຕອບໄດ້ຄື ຕ້ອງເປັນແບບທົດສອບທີ່ບໍ່ລຳອຽງຕິດກຸ່ມໜຶ່ງກຸ່ມໃດໂດຍສະເພາະ ການທີ່ຈະໃຫ້ແບບທົດສອບມີຄວາມຍຸດຕິທຳ ຫຼື

ຄວາມສະເໝີພາບໄດ້ ຂໍ້ສອບນັ້ນຈະຕ້ອງຖາມໃຫ້ຄວບຄຸມເນື້ອໃນຄວາມຮູ້ ແລະ ພຶດຕິກຳທຸກປະເພດຂອງວິຊານັ້ນໆ

6. ມີລັກສະນະຍົວະໃຫ້ຮ້າຍເປັນຢ່າງຢ່າງໃນທາງດີ ( Examplary ) ໝາຍເຖິງແບບທົດສອບນັ້ນຈະຕ້ອງປະກອບດ້ວຍຄຳຖາມທີ່ຈະສ້າງແບບຢ່າງທີ່ດີໃຫ້ແກ່ຜູ້ຮຽນ ບໍ່ຄວນຖາມສິ່ງທີ່ເປັນຕົວຢ່າງທີ່ບໍ່ເໝາະສົມບໍ່ຄວນປະຕິບັດຕາມ ເພາະໃນຊ່ວງເວລາຂອງການສອບນັ້ນ ຜູ້ສອບມີໂອກາດທີ່ຈະຮຽນຮູ້ຈາກຂໍ້ສອບໄດ້ຈຶ່ງຄວນຖາມແຕ່ສິ່ງທີ່ຈະນຳໄປເປັນແບບອບ່າງທີ່ດີງາມຈຶ່ງຈະເປັນການດີ ເຊັ່ນ:

ຄຳຖາມ 1 " ສິ່ງໃດທີ່ສູບໄດ້ໂດຍບໍ່ຜິດກົດໝາຍ " ( ຢາສູບ, ກັນຊາ, ຝິ່ນ )

ຄຳຖາມ 2 " ການສູບຢາໃຫ້ໂທດຢ່າງໃດ "

ຄຳຖາມ 1 ເປັນຄຳຖາມທີ່ບໍ່ຄວນຖາມ ຄວນລ້ຽງໄປຖາມຄຳຖາມ 2 ຈະເໝາະສົມກວ່າເປັນຕົ້ນ

7. ມີອຳນາດຈຳແນກ ( Discrimination) ໝາຍເຖິງ ແບບທົດສອບນັ້ນຈະຕ້ອງປະກອບດ້ວຍຄຳຖາມທີ່ສາມາດຈຳແນກຜູ້ສອບອອກເປັນປະເພດໆ ໄດ້ທຸກລະດັບຢ່າງຖີ່ຖ້ວນ ຕັ້ງແຕ່ອ່ອນສຸດຈົນເຖິງເກັ່ງສຸດ

8. ມີຄວາມຍາກພໍເໝາະ ( Difficulty ) ໝາຍເຖິງແບບທົດສອບນັ້ນຈະຕ້ອງບໍ່ຍາກເກີນໄປ ແລະ ງ່າຍເກີນໄປ ຜົນການສອບໂດຍສະເລ່ຍຄວນເທົ່າກັບ ຫຼື ສູງກວ່າ 50 % ຂອງຄະແນນເຕັມນ້ອຍໆ ນັ້ນຄື ຂໍ້ສອບທີ່ຍາກຫຼາຍຖືວ່າບໍ່ມີປະໂຫຍດ ເພາະບໍ່ສາມາດດຶງດູດຜູ້ສອບໃຫ້ສະແດງລັກສະນະທີ່ຕ້ອງການວັດອອກມາໄດ້ ເພາະຄົນເກັ່ງກໍຍັງບໍ່ສາມາດເຮັດໄດ້ ໃນທຳນອງດຽວກັນ ແບບສອບທີ່ງ່າຍຫຼາຍກໍຖືວ່າບໍ່ມີປະໂຫຍດ ເພາະທັງຄົນເກັ່ງຄົນອ່ອນສາມາດເຮັດໄດ້ຄືກັນໝົດ ເຮັດໃຫ້ບໍ່ມີອຳນາດຈຳແນກ ດັ່ງນັ້ນແບບທົດສອບຈຶ່ງຄວນມີຄວາມຍາກພໍເໝາະໃນແຕ່ລະຂໍ້ຄຳຖາມ ແລະ ໂດຍສ່ວນທັງໝົດທັງສະບັບ

9. ມີຄວາມສະເພາະເຈາະຈົ່ງ ( Difinite ) ໝາຍເຖິງ ແບບທົດສອບນັ້ນຈະຕ້ອງປະກອບດ້ວຍຄຳຖາມທີ່ມີຄວາມຊັດເຈນ ບໍ່ຄຸມເຄືອຈົນຜູ້ສອບຕີຄວາມໝາຍໄປຄົນລະຢ່າງ ຄຳຖາມປະເພດວົນສອງແງ່ສອງມຸມບໍ່ຄວນໃຊ້ຄຳຖາມນັ້ນ ແຕ່ຈະຕ້ອງໃຫ້ຜູ້ສອບເຂົ້າໃຈຢ່າງແຈ່ມແຈ້ງວ່າຕ້ອງການຖາມໃນແງ່ມຸມໃດ ເພື່ອຜູ້ສອບທີ່ມີຄວາມສາມາດໃນເລື່ອງນັ້ນຢ່າງແທ້ຈິງຈະຕ້ອງຕອບໄດ້ຖືກ

10. ມີປະສິດທິພາບ ( Efficiency ) ໝາຍເຖິງ ແບບທົດສອບນັ້ນຈະຕ້ອງໃຫ້ຜົນການວັດທີ່ທ່ຽງກົງ ແລະ ເຊື່ອຖືໄດ້ຫຼາຍທີ່ສຸດໃນຂະນະທີ່ໃຊ້ເວລາ ແຮງງານ ແລະ ເງິນທຶນໃນການສ້າງຢ່າງປະຢັດທີ່ສຸດການສ້າງຂໍ້ສອບໃຫ້ມີປະສິດທິພາບຄວນຄຳນຶງເຖິງໃນເລື່ອງຕໍ່ໄປນີ້

10.1 ລັກສະນະຄຳຖາມ ຄວນເປັນຄຳຖາມທີ່ຖາມພຶດຕິກຳຂັ້ນສູງໃຫ້ຫຼາຍຂໍ້ ຕະຫຼອດຈົນຖາມແຕ່ສິ່ງທີ່ມີຄວາມສຳຄັນທີ່ຈະເປັນຕົວແທນຂອງມວນຄວາມຮູ້ໃນວິຊານັ້ນໆ

10.2 ຄວາມເໝາະສົມຂອງຈຳນວນຂໍ້ກັບເວລາ ແບບທົດສອບນັ້ນບໍ່ຄວນໃຫ້ມີຈຳນວນຂໍ້ຫຼາຍໄປ ຄວນມີຈຳນວນຂໍ້ພໍເໝາະແຕ່ມີຄວາມຄວບຄຸມໃນຊິ້ນຫາຂອງວິຊານັ້ນໆ ແລະ ເວລາທີ່ໃຫ້ເຮັດກໍເໝາະສົມບໍ່ຫຼາຍຈົນເກີນໄປ

10.3 ຄວາມຖືກຕ້ອງຮຽບຮ້ອຍຂອງຕົວຂໍ້ສອບຄືເປັນແບບທົດສອບທີ່ພິມຖືກຕ້ອງຊັດເຈນບໍ່ມີໜ້າຫວ່າງເຊິ່ງສິ່ງເຫຼົ່ານີ້ຖ້າມີຄວາມບົກຜ່ອງຈະມີຜົນເຮັດໃຫ້ແບບທົດສອບຂາດປະສິດທິພາບໄດ້

## 3. ຂະບວນການສ້າງແບບທົດສອບ

ໃນການສ້າງແບບທົດສອບໃຫ້ມີປະສິດທິພາບນັ້ນ ພວງລັດ ທະວີຣັດ (2530 : 47-56) ໄດ້ກ່າວເຖິງຂັ້ນຕອນໃນການສ້າງແບບທົດສອບໄວ້ວ່າມີ 6 ຂັ້ນທີ່ສຳຄັນຄື:

1. ຂັ້ນວາງແຜນ
2. ຂັ້ນຕຽມງານ
3. ຂັ້ນລົງມືປະຕິບັດ
4. ຂັ້ນປະເມີນຫລືກວດສອບຄຸນນະພາບ
5. ຂັ້ນຈັດພິມ
6. ການຈັດເຮັດຄູ່ມືການໃຊ້

1. ຂັ້ນວາງແຜນ

ໂດຍທົ່ວໄປໃນການສ້າງແບບທົດສອບຈະຕ້ອງມີການວາງແຜນລ່ວງໜ້າສະເໝີ ເຊິ່ງໃນຂັ້ນຂອງການວາງແຜນນັ້ນຄວນປະຕິບັດດັ່ງນີ້:

1.1 ກຳນົດຈຸດໝາຍໃນການສ້າງແບບທົດສອບທຸກເທື່ອຈະຕ້ອງກຳນົດຈຸດໝາຍໃຫ້ຊັດເຈນ ແລະ ແນ່ນອນວ່າເພື່ອວັດຖຸປະສົງໃດເຊັ່ນ:

- ເພື່ອວັດຄວາມຈະເລີນງອກງາມໃນການຮຽນຮູ້ຂອງນັກຮຽນໃນແຕ່ລະເນື້ອໃນ ຫຼື ບົດຮຽນ
- ເພື່ອຫາຂໍ້ບົກຜ່ອງໃນການຮຽນຄືການສອນເພື່ອພິຈາລະນາ
- ເພື່ອນຳຜົນມາໃຊ້ໃນການລຳດັບຄວາມສາມາດຂອງນັກຮຽນ ເປັນຕົ້ນ

ການຮູ້ຈຸດໝາຍໃນການສອບວັດຈະເຮັດໃຫ້ຮູ້ເຖິງລັກສະນະຂອງຂໍ້ສອບທີ່ຈະນຳໄປໃຊ້ເຊັ່ນ:

- ໃນກໍລະນີທີ່ຕ້ອງກວດສອບຄວາມຮູ້ເດີມ ຫຼື ຄວາມຮູ້ພື້ນຖານຂອງຜູ້ຮຽນ ຂໍ້ສອບທີ່ສ້າງກໍຄວນອອກສະເພາະເນື້ອໃນທີ່ເປັນພື້ນຖານຈຳເປັນຂອງວິຊານັ້ນເທົ່ານັ້ນ ແລະ ບໍ່ຄວນເປັນຂໍ້ສອບທີ່ຍາກເກີນໄປ ອາດມີຄວາມຍາກຢູ່ປະມານ 60-70 % ເປັນຕົ້ນ

- ໃນກໍລະນີທີ່ຕ້ອງການຄົ້ນຫາຂໍ້ບົກຜ່ອງທາງການຮຽນຂອງຜູ້ຮຽນ ແບບທົດສອບທີ່ສ້າງຈະແບ່ງອອກຕາມເນື້ອໃນບົດຮຽນເປັນຕອນໆເຊິ່ງແຕ່ລະຕອນຈະມີຈຳນວນຂໍ້ຄຳຖາມຫຼາຍຂໍ້ເພື່ອວັດຢ່າງລະອຽດແລະຄວນເປັນແບບທົດສອບທີ່ຄ່ອນຂ້າງງ່າຍ

- ໃນກໍລະນີທີ່ເປັນຂໍ້ສອບຄັດເລືອກ ກໍຄວນເປັນຂໍ້ສອບທີ່ຄ່ອນຂ້າງຍາກ ເປັນຕົ້ນ

1.2 ກຳນົດດນື້ອໃນ ແລະ ພຶດຕິກຳທີ່ຕ້ອງການວັດ ຂັ້ນນີ້ເປັນການກຳນົດລາຍລະອຽດຂອງຫົວຂໍ້ເນື້ອບົດຮຽນ ແລະ ພຶດຕິກຳທີ່ຕ້ອງການວັດ ເຊິ່ງຖ້າສາມາດກຳນົດຂອບເຂດຂອງເນື້ອໃນບົດຮຽນ ແລະ ພຶດຕິກຳທີ່ຈະອອກຂໍ້ສອບໄດ້ເໝາະສົມກໍຈະຊ່ວຍໃຫ້ໄດ້ຂໍ້ສອບທີ່ມີຄວາມທ່ຽງກົງ ການທີ່ຈະສາມາດກຳນົດຂອບເຂດຂອງເນື້ອໃນ ແລະ ພຶດຕິກຳທີ່ຕ້ອງການວັດໄດ້ເປັນຢ່າງດີນັ້ນຕ້ອງອາໄສການສຶກສາຫຼັກສູດ ແລະການສ້າງຕາລາງວິເຄາະຫຼັກສູດ

1.3 ກຳນົດຊະນິດ ແລະ ຮູບແບບຂໍ້ສອບ ເນື່ອງຈາກການສອບວັດ ຫຼື ປະເມີນຜົນຜູ້ຮຽນນັ້ນສາມາດໃຊ້ເຄື່ອງມືໄດ້ຫຼາຍຊະນິດ ເຊິ່ງແຕ່ລະຊະນິດແຕ່ລະຮູບແບບກໍເໝາະທີ່ຈະໃຊ້ວັດພຶດຕິກຳທີ່ແຕກຕ່າງກັນ ໃນການສອບວັດຈຶ່ງຕ້ອງລະມັດລະວັງໃນການເລືອກໃຊ້ຊະນິດ ແລະ ຮູບແບບຂອງແບບທົດສອບໃຫ້ເໝາະສົມ

1.4 ກຳນົດສ່ວນປະກອບອື່ນໆ ທີ່ຈຳເປັນໃນການອອກຂໍ້ສອບ ແລະ ໃນການສອບໄດ້ແກ່: ການກຳນົດເວລາໃນການອອກຂໍ້ສອບ ບຸກລາກອນໃນການອອກຂໍ້ສອບ ເວລາໃນການສອບ, ວິທີການສອບ,ເຈ້ຍຄຳຕອບ,ວິທີການກວດໃຫ້ຄະແນນ, ວິທີກວດສອບຄຸນນະພາບຂອງຂໍ້ສອບ ແລະ ວິທີລາຍງານຜົນການສອບ ເປັນຕົ້ນ

2. ຂັ້ນຕຽມງານ

ຂັ້ນນີ້ເປັນການຕຽມສິ່ງຂອງຕ່າງໆ ທີ່ຈະຕ້ອງໃຊ້ ແລະ ເອື້ອອຳນວຍຕໍ່ການສ້າງແບບທົດສອບ ໄດ້ແກ່:

2.1 ຫຼັກສູດ ປື້ມແບບຮຽນ, ແຜນການສອນ, ຄູ່ມືຄູ.

2.2 ກໍ່ການວິເຄາະຫຼັກສູດລາຍວິຊາທີ່ຈະອອກຂໍ້ສອບ ພ້ອມກັບບັນທຶກຜົນໃນຕາຕະລາງວິເຄາະຫຼັກສູດ

2.3 ອຸປະກອນຕ່າງໆ ສຳລັບການພິມ ການອັດສຳເນົາ

2.4 ເຈ້ຍຄຳຕອບ ແລະ ອື່ນໆ

3. ຂັ້ນລົງມືປະຕິບັດ

ຂັ້ນນີ້ເປັນຂັ້ນລົງມືຂຽນຂໍ້ສອບຊຶ່ງມີຫຼັກປະຕິບັດດັ່ງນີ້

3.1 ຜູ້ຂຽນຂໍ້ສອບຄວນຈະຮູ້ຄຸນລັກສະນະຂອງແບບທົດສອບທີ່ດີ ຄຸນລັກສະນະທີ່ຈຳເປັນສຳລັບຜູ້ຂຽນຂໍ້ສອບ ແລະ ເທັກນິກການຂຽນຂໍ້ສອບຊະນິດຕ່າງໆ ເທັກນິກການຂຽນຂໍ້ສອບວັດພຶດຕິກຳດ້ານຄວາມຮູ້ແລະຄວາມຄິດ

3.2 ການຂຽນຂໍ້ສອບຈະຕ້ອງຍຶດຜົນວິເຄາະໃນຕາຕະລາງວິເຄາະຫຼັກສູດເປັນຫຼັກ

3.3 ຫາກມີບັນຫາດ້ານເນື້ອໃນ ຫຼື ດ້ານເທັກນິກວິທີການຂຽນຂໍ້ສອບ ຫາກຂຽນໃນຮູບຂອງຄະນະກຳມະການກໍຄວນມີການປະຊຸມຕົກລົງກັນ ຫາກຂຽນຂໍ້ສອບຄົນດຽວກໍຄວນປຶກສາຜູ້ຮູ້ ແລະ ຜູ້ຊ່ຽວຊານໃນການຂຽນຂໍ້ສອບຫຼືນັກວັດຜົນ

4. ຂັ້ນປະເມີນ ຫຼື ກວດສອບຄຸນນະພາບ

ຂັ້ນນີ້ມີວັດຖຸປະສົງເພື່ອນຳຜົນໄປປັບປຸງຂໍ້ສອບ ເຊິ່ງແຍກເປັນຂັ້ນໆ ດັ່ງນີ້

4.1 ຂັ້ນປະເມີນເບື້ອງຕົ້ນ ເປັນຂັ້ນຂອງການວິຈານຂໍ້ສອບ ໂດຍອາດຈະໃຫ້ບຸກຄົນອື່ນ ຫຼື ຜູ້ຊ່ຽວຊານເປັນຜູ້ພິຈາລະນາ ຊຶ່ງເປັນສິ່ງຈຳເປັນໂດຍສະເພາະຂໍ້ສອບແບບປາລະໄນເລືອກຕອບ ເປັນການພິຈາລະນາປັບປຸງຂໍ້ຄຳຖາມ ຫຼື ຕົວເລືອກໃຫ້ດີຂຶ້ນ ການວິຈານຂໍ້ສອບເປັນການພິຈາລະນາໃນເລື່ອງຕໍ່ໄປນີ້

1) ຂໍ້ຄຳຖາມວັດໃນສິ່ງທີ່ຕ້ອງການວັດ ຫຼື ບໍ່

2) ຂໍ້ຄຳຖາມຊັດເຈນເຂົ້າໃຈກົງກັນ ຫຼື ບໍ່

3) ຂໍ້ຄຳຖາມໃຊ້ພາສາເໝາະສົມກັບລະດັບຊັ້ນຂອງນັກຮຽນ ຫຼື ບໍ່

4) ໃນກໍລະນີທີ່ເປັນຂໍ້ສອບເລືອກຕອບ ຄວນພິຈາລະນາສິ່ງຕໍ່ໄປນີ້ດ້ວຍ

- ຕົວລວງເໝາະສົມ ຫຼື ບໍ່

- ການລຽງຄຳຖາມ ລຽງຖືກຕ້ອງຕາມຫຼັກ ຫຼື ບໍ່ ເຊັ່ນ ລຽງຕາມລຳດັບເນື້ອໃນ ລຽງຈາກງ່າຍໄປຫາຍາກ ເປັນຕົ້ນ

- ການລຽງຕົວເລືອກໃນແຕ່ລະຂໍ້ຮຽງເໝາະສົມສວຍງາມ ຫຼື ບໍ່

ຂໍ້ສອບທີ່ຜ່ານການພິຈາລະນາ ຜູ້ຂຽນຂໍ້ສອບຈະຕ້ອງນຳໄປປັບປຸງແກ້ໄຂ ເພື່ໃຫ້ໄດ້ຂໍ້ສອບທີ່ມີຄຸນນະພາບໃນເບື້ອງຕົ້ນກ່ອນຈະນຳໄປທົດລອງຈິງ

4.2 ຂັ້ນກວດສອບຄຸນນະພາບຫຼັງການທົດລອງ ຂ້ອສອບທີ່ຜ່ານການພິຈາລະນາ ແລະ ນຳໄປປັບປຸງແກ້ໄຂຮຽບຮ້ອຍແລ້ວຈະນຳໄປຈັດພິມເພື່ອນຳໄປທົດລອງ (Try out) ແລະເມື່ອນຳໄປທົດລອງແລ້ວຈະຕ້ອງນຳມາກວດຄະແນນ ແລະ ກໍ່ການກວດສອບຄຸນນະພາບ ເຊິ່ງເປັນການພິຈາລະນາໃນເລື່ອງຕໍ່ໄປນີ້

1) ຄວາມຍາກງ່າຍ (Difficulty)

2) ອຳນາດຈຳແນກ (Discrimination)

ການວິເຄາະຂໍ້ສອບ ( Item analysis) ຜົນການກວດສອບຈະເຮັດໃຫ້ຮູ້ວ່າຂໍ້ສອບໃດຍາກ ຫຼື ງ່າຍເກີນໄປຂໍ້ສອບຂໍ້ໃດຈຳແນກເດັກເກັ່ງເດັກອ່ອນອອກຈາກກັນໄດ້ ຫຼື ບໍ່ ແລະ ເຮັດໃຫ້ຮູ້ວ່າຂໍ້ສອບຂໍ້ໃດຕົວເລືອກດີ ຫຼື ບໍ່ດີຊຶ່ງຈະຊ່ວຍໃຫ້ປັບປຸງຂໍ້ສອບໄດ້ກົງຈຸດ

3) ຄ່າດຖິຕິພື້ນຖານຂອງຂໍ້ສອບ ໄດ້ແກ່ ຄະແນນສະເລ່ຍ ແລະ ຄວາມປັ່ນປ່ວນ ຄະແນນສະເລ່ຍຈະເຮັດໃຫ້ຮູ້ວ່າ ຂໍ້ສອບທັງສະບັບມີຄວາມຍາກງ່າຍຢູ່ໃນລະດັບໃດ ສ່ວນຄ່າຄວາມປັ່ນປ່ວນຈະເຮັດໃຫ້ຮູ້ວ່າກລຸ່ມທີ່ໃຊ້ໃນການທົດລອງຂໍ້ສອບນັ້ນມີຄວາມສາມາດແຕກຕ່າງກັນ ຫຼື ກະຈາຍກັນຫຼາຍນ້ອຍພຽງໃດ ເຊິ່ງຈະເປັນປະໂຫຍດໃນການປັບປຸງຂໍ້ສອບໃນການກວດສອບຄຸນນະພາບຫຼັງການທົດລອງ ອາດມີການກວດສອບຫຼາຍກວ່າ 1 ເທື່ອ ຫາກຜົນການທົດລອງເທື່ອທຳອິດ ຜົນການວິເຄາະລາຍຂໍ້ ແລະ ລາຍຕົວເລືອກບໍ່ໄດ້ຕາມເກນທີ່ກຳນົດໄວ້ກໍຈະຕ້ອງນຳຂໍ້ສອບນັ້ນມາປັບປຸງ ແລະ ນຳໄປທົດລອງໃໝ່ຈົນກວ່າຈະໄດ້ຄຸນນະພາບຕາມເກນທີ່ກຳນົດ

4.3 ຂັ້ນກວດສອບຂັ້ນສຸດທ້າຍ ຂ້ອສອບທີ່ຜ່ານການປັບປຸງແກ້ໄຂຈົນໄດ້ຄຸນນະພາບຂອງຂໍ້ສອບໃນເລື່ອງຂອງຄວາມຍາກ ແລະ ອຳນາດຈຳແນກຕາມເກນທີ່ກຳນົດໄວ້ຮຽບຮ້ອຍແລ້ວ ຈະຕ້ອງນຳຂໍ້ສອບນັ້ນໄປທົດສອບກັບຄົນກຸ່ມໃຫຍ່ທີ່ຄວບຄຸມຄວາມສາມາດທັງເກັ່ງ ປານກາງ ແລະ ອ່ອນກະຈາຍກັນ ແລ້ວກໍ່ການປະເມີນຄຸນນະພາບເທື່ອສຸດທ້າຍ ແລະ ສ້າງເກນປົກກະຕິ ການປະເມີນຄຸນນະພາບເທື່ອສຸດທ້າຍເປັນການຫາຄ່າຕໍ່ໄປນີ້

1) ຄວາມເຊື່ອໝັ້ນ ແລະ ຄວາມຄາດເຄື່ອນມາດຕະຖານໃນການວັດຂອງແບບທົດສອບທັງສະບັບ

2) ຄ່າດຖິຕິພື້ນຖານທັງສະບັບ

5. ຂັ້ນຈັດພິມ

ການຈັດພິມກະທຳພາຍຫຼັງການປະເມີນຄຸນນະພາບຂອງຂໍ້ສອບແບ່ງເປັນຂັ້ນຍ່ອຍໆ ດັ່ງນີ້:

5.1 ການຈັດພິມຂັ້ນຕົ້ນ ກະທຳພາຍຫຼັງການວິຈານຂໍ້ສອບ ແລະ ປັບປຸງແກ້ໄຂຂັ້ນຕົ້ນເພື່ອທີ່ຈະນຳໄປທົດລອງໃຊ້ (Try out ) ເທື່ອທຳອິດ ໃນການຕຽມຕົ້ນສະບັບເພື່ອຈັດພິມງານທີ່ຕ້ອງກະທຳຄື:

1) ການລຽງຂໍ້ສອບອາດຈະລຽງລຳດັບຕາມຊື້ນຫາ ຫຼື ລຽງຈາກງ່າຍໄປຍາກ

2) ການວາງຮູບແບບຂໍ້ສອບໃຫ້ພໍເໝາະກັບໜ້າເຈ້ຍ

3) ການຂຽນຄຳຊີ້ແຈງໃນການດຳເນີນການສອບທັງໝົດເຖິງການລະບຸຈຳນວນຂໍ້ສອບ ເວລາໃນການເຮັດ ແລະການນັບຫົວເຈ້ຍຄຳຕອບ

4) ຄວາມຊັດເຈນໃນການພິມ ແລະ ຄວາມສະອາດຮຽບຮ້ອຍ

5) ການພິສູດອັກສອນຕ້ອງກະທຳຢ່າງອ້ອມຄອບຢ່າໃຫ້ມີທີ່ຜິດ

6) ການອັດສຳເນົາຕ້ອງຊັດເຈນ ແລະ ສະອາດ

5.2 ການຈັດພິມພາຍຫຼັງການທົດລອງ ກະທຳພາຍຫຼັງການນຳຂໍ້ສອບໄປທົດລອງໃນແຕ່ລະເທື່ອ ແລະ ໄດ້ຫາຄຸນນະພາບຂອງຂໍ້ສອບ ແລະ ປັບປຸງຂໍ້ສອບເປັນທີ່ຮຽບຮ້ອຍແລ້ວ ຈະຕ້ອງນຳຂໍ້ສອບນັ້ນມາເຮັດຕົ້ນສະບັບ ເພື່ອຈັດພິມໃໝ່ ໃນຂັ້ນນີ້ຈະຕ້ອງພິຈາລະນາເລື່ອງຕໍ່ໄປນີ້

1) ຈັດລຽງຂໍ້ສອບໃໝ່ ໂດຍລຽງລຳດັບເນື້ອໃນບົດຮຽນ ແລະ ໃນແຕ່ລະເນື້ອໃນລຽງຕາມພຶນການວິເຄາະຈາກຂໍ້ງ່າຍໄປຫາຂໍ້ຍາກ (ສຳລັບຂໍ້ສອບປາລະໄນຊະນິດເລືອກຕອບ)

2) ລຽງຕົວເລືອກໃຫ້ສວຍງາມ ອາດລຽງຈາກຂໍ້ຄວາມສັ້ນໄປຫາຂໍ້ຄວາມຍາວ (ສຳລັບຂໍ້ສອບປາລະໄນຊະນິດເລືອກຕອບ)

3) ກວດສອບສຳນວນພາສາໃຫ້ເໝາະສົມ

4) ກວດສອບຄວາມຊັດເຈນໃນການພິມ ແລະ ຄວາມສະອາດຮຽບຮ້ອຍ

5) ກໍ່ການພິສູດອັກສອນຢ່າງຮອບຄອບ ໃຫ້ມີຄວາມຖືກຕ້ອງ

6) ການອັດສຳເນົາຕ້ອງຊັດເຈນ ແລະ ສະອາດ

5.3 ການຈັດພິມແບບທົດສອບສະບັບສົມບູນ ເປັນການພິມເທື່ອສຸດທ້າຍຫຼັງຈາກການຫາຄຸນນະພາບ ແລະ ປັບປຸງແບບທົດສອບເປັນທີ່ຮຽບຮ້ອຍແລ້ວ ໃນຂັ້ນນີ້ຄວນພິຈາລະນາເພີ່ມຈາກ 2 ຂັ້ນທຳອິດດັ່ງນີ້:

1) ກວດສອບຈຳນວນຂໍ້ສອບໃຫ້ຄົບຖ້ວນຕາມກຳນົດ

2) ສຳຣວດການລຽງຂໍ້ສອບໃໝ່

3) ກວດສອບການຈັດວາງຂໍ້ຄວາມຮູບພາບໃຫ້ເໝາະສົມກັບໜ້າເຈ້ຍ

4) ກວດສອບຄຳຊີ້ແຈງການເຮັດຂໍ້ສອບອີກເທື່ອໃຫ້ມີຫົວຂໍ້ຕ່າງໆ ຄົບຖ້ວນ ໄດ້ແກ່: ຊື່ວິຊາທີ່ສອບ, ວິທີການສອບ, ວິທີຄິດຂໍ້ສອບ ເຊິ່ງຄວນມີຕົວຢ່າງປະກອບການນັບຫົວເຈ້ຍຄຳຕອບຈຳນວນຂໍ້ ແລະ ເວລາທີ່ໃຫ້ເຮັດ

## 6. ການຈັດເຮັດຄູ່ມືການໃຊ້

ການຂຽນຄູ່ມືການໃຊ້ (Test Manual) ປະກອບດ້ວຍການໃຫ້ລາຍລະອຽດຂອງຫົວຂໍ້ສຳຄັນຕໍ່ໄປນີ້

1) ວັດຖຸປະສົງຂອງແບບທົດສອບ

2) ວິທີການໃຊ້ ແລະ ວິທີດຳເນີນການສອບ

3) ວິທີການກວດໃຫ້ຄະແນນ

4) ການແປຄວາມໝາຍຄະແນນເກນປົກກະຕິ ຈຸດໝາຍຂອງການໃຊ້ແບບທົດສອບວັດຜົນສຳເລັດທາງການຮຽນໃນການວັດຜົນສຳເລັດທາງການຮຽນນັ້ນ ນິຍົມວັດກັນໃນ 2 ອີງປະກອບຄື ວັດຕາມຈຸດປະສົງ ແລະ ຕາມລັກສະນະເນື້ອໃນບົດຮຽນໃນລາຍວິຊາຮຽນ ເຊິ່ງມີລາຍລະອຽດດັ່ງນີ້:

1, ການວັດດ້ານການປະຕິບັດ ເປັນການກວດສອບຄວາມຮູ້ຄວາມສາມາດຂອງຜູ້ຮຽນໂດຍໃຫ້ລົງມືປະຕິບັດ ຈິງປາກົດເປັນຜົນງານອອກມາໃຫ້ວັດ ແລະ ສັງເກດໄດ້ ການປະເມີນຜົນຈະພິຈາລະນາທີ່ຂະບວນການປະຕິບັດ ແລະ ຜົນງານເຊັ່ນ: ງານການຊ່າງ, ການປະກອບອາຫານ, ພົນລະເມືອງສຶກສາ, ສິລະປະສຶກສາ ລັກສະນະຂອງຂໍ້ສອບທີ່ໃຊ້ ວັດດ້ານການປະຕິບັດເປັນຂໍ້ສອບທີ່ຮຽກວ່າ ແບບວັດທັກສະປະຕິບັດ

2, ການວັດດ້ານເນື້ອໃນ ເປັນການກວດສອບຄວາມຮູ້,ຄວາມສາມາດຂອງຜູ້ຮຽນໃນດ້ານເນື້ອໃນລາຍວິຊາ ແລະພຶດຕິກຳຄວາມຮູ້,ຄວາມສາມາດອື່ນໆ ເຊິ່ງເປັນຜົນມາຈາກການຮຽນ ການສອນ ສາມາດວັດໄດ້ໂດຍການສອບ ປາກເປົ່າ ແລະ ໃຫ້ຂຽນຄຳຕອບ

2,1 ການສອບປາກເປົ່າ ເປັນການສອບເພື່ອພິຈາລະນາຜົນສະເພາະຢ່າງທີ່ເກີດຂຶ້ນເອງແຕ່ລະບຸກຄົນເຊັ່ນ: ການສອບຟັງ, ເວົ້າ ແລະ ອ່ານ ເຊິ່ງຕ້ອງການພິຈາລະນາການໃຊ້ຖ້ອຍຄຳ ການສະແດງຄວາມຄິດເຫັນຕະຫຼອດຈົນ ບຸກຄະລິກກະພາບຂອງຜູ້ສອບ ການສອບປາກເປົ່າສາມາດສອບວັດໄດ້ລະອຽດເລິກເຊິ່ງ ໂດຍສາມາດເພີ່ມເຕີມ ແລະ ປ່ຽນແປງຄຳຖາມໄດ້ຕະຫຼອດເວລາ

2,2 ການສອບແບບໃຫ້ຂຽນຕອບ ເປັນການສອບວັດທີ່ໃຫ້ຜູ້ເຂົ້າສອບຂຽນຕອບເປັນລາຍລັກ, ອັກສອນ ເຊິ່ງມີຮູບແບບການຂຽນຕອບຢູ່ 2 ຮູບແບບຄື:

2,2,1 ແບບຈຳກັດຄຳຕອບ ເປັນການສອບວັດທີ່ກຳນົດຄຳຕອບມາໃຫ້ຕອບ ເຊິ່ງໄດ້ແກ່: ການສອບ ວັດໂດຍໃຊ້ຂໍ້ສອບປາລະໄນນັ້ນເອງ

2,2,2 ແບບບໍ່ຈຳກັດຄຳຕອບ ເປັນການສອບວັດທີ່ຜູ້ເຂົ້າສອບສາມາດຂຽນຄຳຕອບໄດ້ໂດຍເສລີ ເຊິ່ງ ໄດ້ແກ່: ການສອບວັດໂດຍໃຊ້ຂໍ້ສອບອັດຕະໄນ

ການວັດຜົນສຳເລັດດ້ານເນື້ອໃນໂດຍການຂຽນຕອບທີ່ນິຍົມໃຊ້ກັນຢ່າງແຜ່ຫຼາຍ ເຄື່ອງມືທີ່ໃຊ້ໃນການ ສອບວັດນັ້ນຮຽກວ່າ “ແບບທົດສອບວັດຜົນສຳເລັດ” ດັ່ງນັ້ນ ແບບທົດສອບວັດຜົນສຳເລັດຈຶ່ງເປັນເຄື່ອງມືຢ່າງໜຶ່ງ ທີ່ໃຊ້ປະເມີນຜົນການຮຽນ ການສອນ ໂດຍສະເພາະວັດສະມັດຖະພາບທາງສະໝອງເປັນສຳຄັນ ຈຸດປະສົງຂອງການ ໃຊ້ແບບທົດສອບວັດຜົນສຳເລັດທາງການຮຽນສະຫຼຸບໄດ້ດັ່ງນີ້:

1) ເພື່ອຈັດຕຳແໜ່ງ ຜູ້ຮຽນ ຈຸດປະສົງຂອງການໃຊ້ແບບທົດສອບວັດຜົນສຳເລັດທາງການຮຽນ ວັດ ແລະ ປະເມີນຜົນຜູ້ຮຽນ ເພື່ອຈັດຕຳແໜ່ງນັ້ນ ຈະດຳເນີນການກ່ອນຈະມີການຮຽນ ການສອນເກີດຂຶ້ນ ເພື່ອຈັດຜູ້ຮຽນ ອອກເປັນກຸ່ມໆ ຕາມຂີດຄວາມສາມາດ ຄື ຜູ້ຮຽນທີ່ມີຄວາມສາມາດໃກ້ຄຽງກັນໄວ້ນຳກັນ ຈັດການຮຽນ ການ ສອນໄດ້ເໝາະສົມ ແລະ ສອດຄ່ອງກັບຜູ້ຮຽນແຕ່ລະກຸ່ມໃນທາງການສຶກສາ ຈຸດປະສົງການໃຊ້ແບບທົດສອບວັດ ຜົນສຳເລັດທາງການຮຽນເພື່ອຈັດຕຳແໜ່ງນິຍົມໃຊ້ກັນໃນ 2 ລັກສະນະ ຄື ເພື່ອການຈັດຈຳແນກ ເຊັ່ນ ແຍກຜູ້ຮຽນ ອອກເປັນປະເພດຕາມລະດັບຄະແນນ ແລະ ເພື່ອການຄັດເລືອກ

2) ເພື່ອກວດສອບຄວາມກ້າວໜ້າຂອງຜູ້ຮຽນ ຈຸດປະສົງຂອງການໃຊ້ແບບທົດສອບວັດຜົນສຳເລັດທາງ ການຮຽນ ວັດ ແລະ ປະເມີນຜູ້ຮຽນ ເພື່ອກວດສອບຄວາມກ້າວໜ້າຂອງຜູ້ຮຽນນັ້ນ ເພື່ອຊ່ວຍໃຫ້ຜູ້ຮຽນມີການ ພັດທະນາ ຄວາມຈະເລີນທັງທາງດ້ານຄວາມຮູ້,ຄວາມສາມາດ, ລັກສະນະນິໄສ ແລະ ທັກສະຕ່າງໆໃຫ້ເປັນໄປຕາມ ຈຸດປະສົງທີ່ກຳນົດໄວ້ ດັ່ງນັ້ນ ການກວດສອບຄວາມກ້າວໜ້າ ນອກຈາກຈະເຮັດໃຫ້ຜູ້ຮຽນຮູ້ສັກກາຍຍະພາບຂອງ ຕົນເອງຂະນະນັ້ນໆ ຍັງສາມາດໃຊ້ເປັນແນວທາງໃຫ້ຜູ້ຮຽນພັດທະນາພຶດຕິກຳຕ່າງໆ ຂອງຕົນເອງໃຫ້ເປັນໄປຕາມທີ່ ພຶງປະສົງໄດ້ ນັ້ນກໍຄື ການໃຊ້ແບບທົດສອບວັດຜົນສຳເລັດທາງການຮຽນທີ່ມີຈຸດປະສົງເພື່ອການປຽບທຽບ

3) ເພື່ອປັບປຸງການຮຽນ ການສອນ ຈຸດປະສົງຂອງການໃຊ້ແບບທົດສອບວັດຜົນສຳເລັດທາງການຮຽນ ວັດແລະ ປະເມີນຜົນຜູ້ຮຽນ ເພື່ອການປັບປຸງການຮຽນ ການສອນຄວນເຮັດຢ່າງຕໍ່ເນື່ອງອາດໃຊ້ເມື່ອສິ້ນສຸດການສອນໃນແຕ່ລະໜ່ວຍຍ່ອຍ ເຊິ່ງເມື່ອພົບວ່າຜູ້ຮຽນຄົນໃດບໍ່ມີຄວາມສາມາດບໍ່ຜ່ານເກນຂອງແຕ່ລະຈຸດປະສົງການຮຽນຮູ້ ຜູ້ສອນກໍຄວນຈະໄດ້ສຶກສາວ່າຜູ້ຮຽນມີຂໍ້ບົກຜ່ອງ ຫຼື ຈຸດອ່ອນໃນເລື່ອງໃດ ຈະໄດ້ກໍ່ການແກ້ໄຂຂໍ້ບົກຜ່ອງນັ້ນ ຈາກນັ້ນ ຈຶ່ງປະເມີນຜົນອີກເທື່ອໜຶ່ງສຳລັບຈຸດປະສົງຂອງການໃຊ້ແບບທົດສອບວັດຜົນສຳເລັດທາງການຮຽນເພື່ອການປັບປຸງການຮຽນ ການສອນ ອາດຈຳແນກຕາມໄລຍະເວລາຂອງການວັດ ແລະ ການປະເມີນໄດ້ 3 ໄລຍະດັ່ງນີ້:

1, ການວັດ ແລະ ການປະເມີນຜົນກ່ອນການຮຽນ ການສອນ

2, ການວັດ ແລະ ການປະເມີນຜົນລະຫວ່າງການຮຽນ ການສອນ

3, ການວັດ ແລະ ການປະເມີນຜົນເມື່ອສິ້ນສຸດການຮຽນ ການສອນ

4) ເພື່ອໃຫ້ຄຳປຶກສາ ແລະ ແນະແນວ ຈຸດປະສົງຂອງການໃຊ້ແບບທົດສອບວັດຜົນສຳເລັດທາງການຮຽນເພື່ອຊ່ວຍໃຫ້ຄູແນະແນວມີຂໍ້ມູນທີ່ເປັນຄວາມສາມາດຂອງຜູ້ຮຽນໃນດ້ານການຮຽນ ເຊິ່ງເປັນປະໂຫຍດສຳລັບການວາງແຜນການສຶກສາຕໍ່ ແລະ ການປະກອບອາຊີບ ໂດຍຈະສົ່ງຜົນໃຫ້ຜູ້ຮຽນປະສົບຄວາມສຳເລັດໄດ້ ນັ້ນກໍຄືການໃຊ້ແບບທົດສອບວັດຜົນສຳເລັດທາງການຮຽນທີ່ມີຈຸດປະສົງເພື່ອການພະຍາກອນ ນັ້ນເອງ

5) ເພື່ອສະຫຼຸບຜົນການຮຽນ ຈຸດປະສົງຂອງການໃຊ້ແບບທົດສອບວັດຜົນສຳເລັດທາງການຮຽນ ການສອນ ດຳເນີນການເມື່ອສິ້ນສຸດການຮຽນ ການສອນ ເພື່ອສະຫຼຸບຜົນການຮຽນຮູ້ຂອງຜູ້ຮຽນທັງລະບົບ ແລະ ຕັດສິນຜົນຄະແນນໄດ້-ຕົກ ລັກສະນະຂອງຂໍ້ສອບຄວນມີຕັ້ງແຕ່ງ່າຍໄປຈົນເຖິງຍາກ ໂດຍຕ້ອງວັດໃຫ້ຄອບຄຸມທຸກຈຸດປະສົງການຮຽນຮູ້ ແລະ ທຸກເນື້ອໃນຂອງຫຼັກສູດ

## 4. ແບບທົດສອບ

### 4.1 ຄວາມໝາຍຂອງແບບທົດສອບ

ແບບທົດສອບຄື ຊຸດຂອງຄຳຖາມ ຫຼື ກຸ່ມງານທີ່ສ້າງຂຶ້ນເພື່ອວັດຄຸນລັກສະນະຢ່າງໃດຢ່າງໜຶ່ງຂອງບຸກຄົນ ໂດຍທີ່ບຸກຄົນນັ້ນເມື່ອໄດ້ຮັບສິ່ງກະຕຸ້ນຈະສະແດງພຶດຕິກຳທີ່ສາມາດວັດໄດ້ ສັງເກດໄດ້ ເຊິ່ງຈະນຳໄປສູ່ການແປຄວາມໝາຍຂອງຜົນໄດ້ຈິງອາດກ່າວໄດ້ວ່າແບບທົດສອບວັດຜົນສຳເລັດທາງການຮຽນໝາຍເຖິງຊຸດຂອງຄຳຖາມທີ່ມຸ້ງວັດຄວາມຮູ້,ຄວາມສາມາດ,ທັກສະ ແລະ ສະມັດຖະພາບທາງສະໝອງດ້ານຕ່າງໆຂອງຜູ້ຮຽນຫຼັງເກີດການຮຽນຮູ້

ແບບທົດສອບຄື ຊຸດຂອງຄຳຖາມ ປັນຫາ ສະຖານະການ ກຸ່ມຂອງງານ ຫຼື ກິດຈະກຳຢ່າງໃດຢ່າງໜຶ່ງທີ່ໃຊ້ເປັນສິ່ງກະຕຸ້ນ ຫຼື ຊັກຊວນຜູ້ທີ່ຖືກທົດສອບສະແດງພຶດຕິກຳ ຫຼື ປະຕິກິລິຍາຕອບສະໜອງຕາມແນວທາງທີ່ຕ້ອງການ ແບບທົດສອບເປັນເຄື່ອງມືວັດສະມັດຕະພາບທາງສະໝອງໄດ້ດີທີ່ສຸດ

### 4.2 ຄວາມສຳຄັນຂອງແບບທົດສອບ

ແບບທົດສອບ (Test ) ເປັນເຄື່ອງມືທີ່ໃຊ້ໃນການວັດຜົນຊະນິດໜຶ່ງທີ່ໃຊ້ສຳລັບວັດຄວາມຮູ້ ດ້ານພຶດທິດພິໄສ ແບບທົດສອບວັດຜົນສຳເລັດທາງການຮຽນ ເປັນແບບທົດສອບທີ່ວັດສະມັດຖະພາບດ້ານຕ່າງໆ ທີ່ນັກຮຽນໄດ້ຮັບການຮຽນຮູ້ມາແລ້ວວ່າມີອຢູ່ຫຼາຍນ້ອຍພຽງໃດ ແບບທົດສອບປະເພດນີ້ແບ່ງໄດ້ ເປັນ 2 ຊະນິດຄື: ແບບທີ່ຄູສ້າງຂຶ້ນ ແລະ ແບບມາດຕະຖານແບບທົດສອບທີ່ດີຕ້ອງມີ ຄວາມທ່ຽງກົງ, ຄວາມເຊື່ອໝັ້ນ, ຄວາມຍຸດຕິທຳ,

ຄວາມເລິກຂອງຄຳຖາມ, ຄວາມຍືດຢຸ່ນ ຄວາມຈຳເພາະເຈາະຈົ່ງ, ຄວາມເປັນປາລະໄນ, ມີປະສິດທິພາບ, ມີອຳນາດຈຳແນກ, ມີຄວາມຍາກ ເຊິ່ງມີນັກການສຶກສາຫຼາຍທ່ານໄດ້ໃຫ້ຄວາມໝາຍໄວ້ ດັ່ງນີ້:

ບຸຍທຳ ກິດປະຣິດາບໍລິສຸດ (2542 : 72) ໃຫ້ຄວາມຫມາຍແບບທົດສອບວ່າ ເປັນວິທີການເຊີງລະບົບທີ່ໃຊ້ໃນການປຽບທຽບພຶດຕິກຳຂອງບຸກຄົນຕັ້ງແຕ່ສອງຄົນຂຶ້ນໄປ ຫຼື ຂອງບຸກຄົນດຽວ ຫຼື ຫຼາຍຄົນໃນເວລາຕ່າງກັນ

ສົມນຶກ ພັດທິຍທນີ (2546 : 72) ໄດ້ໃຫ້ຄວາມໝາຍຂອງແບບທົດສອບວ່າ ເປັນເຄື່ອງມືວັດພຶດຕິກຳດ້ານພຸດທິພິໄສ  ແບບທົດສອບເປັນເຄື່ອງມືທີ່ມີລັກສະນະດີຫຼາຍປະການ ແຕ່ຄວນໃຊ້ຄູ່ກັບເຄື່ອງມືຊະນິດອື່ນໆ

ໄພສານ ວະລິກາ (2554 : 233) ໄດ້ໃຫ້ຄວາມຫມາຍຂອງແບບທົດສອບວ່າ ເປັນຊຸດຂອງຄຳຖາມທີ່ໃຊ້ວັດຄ່າຂອງຕົວແປໃດຕົວແປໜຶ່ງ ໂດຍມີການຕອບທີ່ຖືກຕ້ອງແນ່ນອນ ແລະ ມີກດເກນໃນການກວດໃຫ້ຄະແນນຢ່າງສົມເຫດສົມຜົນ

Brown (1998 : 90) ໃຫ້ຄວາມຫມາຍແບບທົດສອບວາເປັນວິທີການເຊີງລະບົບທີ່ໃຊ້ສຳລັບບວັດຕົວຢ່າງພຶດຕິກຳ ຕາມຄວາມໝາຍແບບທົດສອບຈະມີລັກສະນະ  3 ປະການ:

1. ແບບທົດສອບເປັນວິທີເຊີງລະບົບ (Systematic Procedure) ໝາຍຄວາມວາ ແບບທົດສອບນັ້ນຈະຕ້ອງມີກົດເກນແນ່ນອນ ການບໍລິຫານຈັດການ ແລະ ໃຫ້ຄະແນນ

2. ແບບທົດສອບເປັນການວັດພຶດຕິກຳ (Behaviors) ເຊິ່ງຈະວັດສະເພາະພຶດຕິກຳທີ່ວັດໄດ້ ເທົ່ານັ້ນໂດຍຜູ້ຕອບສະໜອງຕອບຕໍ່ຄຳຖາມທີ່ກຳໜົດໃຫ້ໂດຍບໍ່ແມ່ນເປັນການວັດໂດຍກົງ

3. ແບບທົດສອບເປັນພຽງສ່ວນໜຶ່ງຂອງພຶດຕິກຳທີ່ຕ້ອງການວັດທັງໝົດ (Sample of all possible items) ຕາມຄວາມເປັນຈິງ ບໍ່ມີແບບທົດສອບຊຸດໃດທີ່ຈະມີຄຳຖາມວັດພຶດຕິກຳ ທີ່ຕ້ອງການໄດ້ທັງໝົດ ສະນັ້ນຈຶ່ງຕ້ອງກຳລົງວາງຂອບເຂດຄຳຖາມໃນແບບທົດສອບເປັນຕົວແທນຂອງຄຳຖາມ ທັງໝົດທີ່ໃຊ້ວັດພຶດຕິກຳນັ້ນ ແລະຖ້າຜູ້ຕ້ອງຕອບຂໍ້ຄຳຖາມໃດຄຳຖາມໜຶ່ງຖືກຕ້ອງໃຫ້ຄະແນນເທົ່າກັນ ແບບທົດສອບວັດຜົນສຳເລັດທາງການຮຽນປະເພດທີ່ຄູສ້າງມີຫຼາຍຮູບແບບ ແຕ່ທີ່ນິຍົມໃຊ້ ມີ 6 ແບບ ຄື ແບບກາຖືກຜິດ, ແບບເຕີມຄຳ, ແບບຕອບສັ້ນໆ, ແບບຈັບຄູ່, ແບບເລືອກຕອບ ແລະ ແບບອັດໄນ ຫຼື ຄວາມສຽງ ສະຫຼຸບໄດ້ວ່າ ແບບທົດສອບ ໝາຍເຖິງ ຊຸດຂອງຄຳຖາມ ເງື່ອນໄຂ ບັນຫາ ສະຖານນະການ ທີ່ໃຊ້ວັດຕົວແປໃດຕົວແປໜຶ່ງ ທີ່ສ້າງຄວາມສົນໃຈໃຫ້ຜູ້ຖືກທົດສອບໄດ້ສະແດງຄວາມຮູ້ຄວາມເຂົ້າໃຈໃນເນື້ອໃນຄວາມຮູ້  ເຊິ່ເປັນເຄື່ອງມືທີ່ໃຊ້ໃນການປະເມີນ ປຽບທຽບ ວັດພຶດຕິກຳດ້ານພຸດທິພິໄສ ຢາງເປັນລະບົບຜ່ານຂະບວນການຄຸນນະພາບ ແລະ ມີກົດເກນໃນການກວດໃຫ້ຄະແນນຢ່າງສົມເຫດສົມຜົນ ແລະແນ່ນອນ ປະເພດຂອງແບບທົດສອບ ແບບທົດສອບມີການແບ່ງອອກເປັນຫຼາຍປະເພດຕາມເກນຫຼື ຮູບແບບ ຫຼື ວັດຖຸປະສົງໃນການໃຊ້ ໂດຍສາມາດແບ່ງປະເພດຂອງແບບທົດສອບໄດ້ດັ່ງຕໍ່ໄປນີ້ (ບຸຍທຳ ກິດປຣິດາບໍລິສຸດ, 2542 : 33-34) ແບ່ງຕາມລັກສະນະທາງຈິດວິທະຍາທີ່ໃຊ້ວັດ ແບ່ງເປັນ 3 ປະເພດໄດ້ແກ່:

1, ແບບທົດສອບຜົນສຳເລັດ (Achievement Test) ເປັນແບບທົດສອບທີ່ໃຊ້ວັດ ຄວາມຮູ້, ຄວາມເຂົ້າໃຈຕາມພຸດທິພິໄສ (Cognitive domain) ເຊິ່ງເກີດຂຶ້ນຈາກການຮຽນຮູ້ ແບບທົດສອບ ປະເພດນີ້ແບ່ງອອກເປັນ 2 ຊະນິດ ຄື:

2, ແບບທົດສອບທີ່ຄູສ້າງເອງ (Teacher – Made Test) ເປັນແບບທົດສອບ ທີ່ສ້າງຂຶ້ນໂດຍທົ່ວໄປ ເມື່ອຕ້ອງການໃຊ້ກໍ່ສ້າງຂຶ້ນ ໃຊ້ແລ້ວກໍເລີກໃຊ້ ຖ້ານຳໄປໃຊ້ອີກກໍ່ຕ້ອງດັດແປງ ປັບປຸງແກ້ໄຂ ເພາະເປັນແບບທົດສອບທີ່ສ້າງຂຶ້ນໃຊ້ສະເພາະເທື່ອ ອາດຍັງບໍ່ມີການວິເຄາະຄຸນນະພາບ

3, ແບບທົດສອບມາດຕະຖານ ( Standardized Test ) ເປັນແບບທົດສອບ ທີ່ໄດ້ມີການພັດທະນາດ້ວຍການວິເຄາະທາງສະຖິຕິມາແລ້ວຫຼາຍເທື່ອຫຼາຍທີ ຈົນມີຄຸນນະພາບສົມບູນທັງດ້ານ ຄວາມກົງ ຄວາມທ່ຽງ ຄວາມຍາກງ່າຍ ອຳນາດຈຳແນກ ຄວາມເປັນປາລະໄນ  ແລະ  ມີເກນປົກກະຕິ ( Norm ) ໄວ້ ປຽບທຽບດ້ວຍທັງໝົດຄວາມເປັນຈິງຕ້ອງມີມາດຕະຖານທັງດ້ານການດຳເນີນການສອບ ແລະ ແປຜົນຄະແນນທີ່ໄດ້

3,1 ແບບທົດສອບຄວາມຖະໜັດ ( Aptitude Test ) ເປັນແບບທົດສອບທີ່ໃຊ້ວັດ ສະມັດຖະພາບທາງສະໝອງຂອງຄົນວ່າ ມີຄວາມຮູ້ ຄວາມສາມາດຫຼາຍນ້ອຍພຽງໃດ ແລະ ມີຄວາມສາມາດ ທາງດ້ານໃດເປັນພິເສດ ແບບທົດສອບປະເພດນີ້ແບ່ງອອກເປັນ 2 ຊະນິດ ຄື:

3,2 ແບບທົດສອບຄວາມຖະໜັດທາງການຮຽນ ( Scholastic Aptitude Test ) ເປັນ ແບບທົດສອບຄວາມຖະໜັດທີ່ວັດຄວາມສາມາດທາງວິຊາການວ່າມີຄວາມຖະໜັດໃນວິຊາຫຍັງ ເຊິ່ງຈະສະແດງເຖິງຄວາມສາມາດໃນການຮຽນຕໍ່ຂະແໜງວິຊານັ້ນ ແລະ ຈະສາມາດຮຽນໄປໄດ້ຫຼາຍນ້ອຍພຽງໃດ

3,3 ແບບທົດສອບຄວາມຖະໜັດພິເສດ ( Specific Aptitude Test ) ເປັນ ແບບທົດສອບທີ່ໃຊ້ວັດຄວາມສາມາດພິເສດຂອງບຸກຄົນເຊັ່ນ: ຄວາມຖະໜັດທາງດົນຕີ, ທາງການແພດ,ທາງສິລະປະ ເປັນຕົ້ນ ໃຊ້ສຳລັບການແນະແນວການເລືອກອາຊີບເຊັ່ນ: ແບບທົດສອບວັດຄວາມຖະໜັດ ທາງສິລະປະ   ຖ້າແບ່ງຕາມຮູບແບບຂອງການຖາມການຕອບ ຈະແບ່ງເປັນ 2 ປະເພດຄື:

1) ແບບວັດຄວາມລຽງ (Essay Test) ແບບນີ້ຈະກຳນົດຄຳຖາມໃຫ້ຜູ້ຕອບຈະຕ້ອງຮຽບ ລຽງຄຳຕອບເອງການວັດຄວາມຮູ້ດ້ວຍຄຳຖາມແບບຄວາມລຽງ ຫຼື ທີ່ຮູ້ຈັກວ່າ ເປັນແບບອັດຕະໄນ  ຮູບແບບນີ້ຈະມີສະເພາະຕົວຄຳຖາມເທົ່ານັ້ນ ສ່ວນຄຳຕອບຈະເວັ້ນທີ່ວາງ ຫຼື ກຳນົດເຈ້ຍຄຳຕອບໃຫ້ໄວ້ເປັນ ພິເສດ ສຳລັບໃຫ້ຜູ້ຕອບຂຽນຄໍ າຕອບລົງໄປເອງ  ຜູ້ຕອບມີອິດສະຫຼະໃນການຕອບຄຳຖາມແບບນີ້ຈະມີບັນຫາ ໃນການກວດໃຫ້ຄະແນນທັງຄວາມເປັນທຳ ແລະ  ຄວາມສະດວກວ່ອງໄວ ສະນັ້ນຈຶ່ງບໍ່ນິຍົມໄປໃຊ້ເປັນເຄື່ອງມືໃນການເກັບລວບລວມຂໍ້ມູນ

2) ແບບທົດສອບສັ້ນ ແລະ ເລືອກຕອບ (Short Answer and Multiple Choice Test) ຫຼື ທີ່ຮູ້ຈັກກັນທົ່ວໄປຄື: ແບບປາລະໄນ (Objective Test) ແບບນີ້ຈະກຳນົດຄຳຖາມໃຫ້  ແລະ ກຳໜົດໃຫ້ຕອບສັ້ນໆ ຫຼື ກຳນົດຄຳຕອບມາໃຫ້ເລືອກຕອບ

2.3 ແບບເລືອກຕອບ (Multiple Choice Item) ຮູບແບບທົ່ວໄປຂອງແບບວັດຊະນິດ ເລືອກຕອບຈະມີຕົວຄຳຖາມເຊິ່ງເປັນປະໂຍກສົມບູນ  ແລະ  ມີຕົວເລືອກຕອບ ກຳນົດໄວ້ໃຫ້ເລືອກຕອບ ອາດຈະມີ 3 4 5 ຫຼື 6 ຕົວເລືອກໃນສ່ວນທີ່ເປັນຕົວເລືອກຕອບປະກອບດ້ວຍຕົວຖືກ ແລະ ຕົວລວງ  ຄຳຖາມແບບເລືອກຕອບມີຫຼາຍຊະນິດ

2.4 ແບບທົດສອບອັດຕະໄນຄື: ແບບທົດສອບທີ່ມີລັກສະນະ ຜູ້ຕອບຕ້ອງຂຽນບັນລະຍາຍຕອບ ຜູ້ຕອບມີສິດທີຈະຂຽນຕອບຢ່າງເສລີ ອາດຈະມີຄຳຕອບຖືກຫຼາຍໆ ທາງ ຄຳຕອບຂອງຂໍ້ສອບດຽວກັນອາດຈະມີຄວາມແຕກຕ່າງທັງໃນດ້ານຄຸນນະພາບ ແລະ ຄວາມຖືກຕ້ອງ ແບບທົດສອບວັດຜົນສຳເລັດທາງການຮຽນປະເພດທີ່ຄູສ້າງມີຫຼາຍຮູບແບບ ແຕ່ທີ່ນິຍົມໃຊ້ມີ 6 ແບບຄື: ແບບຖືກຜິດ, ແບບຕອບສັ້ນໆ ແບບຈັບຄູ່, ແບບເລືອກຕອບ ແລະ ແບບອັດຕະໄນ ຫຼື ລຽງຄວາມ

**4.3 ຄຸນລັກສະນະທີ່ດີຂອງແບບທົດສອບ**

ໃນການວັດຄັ້ງໜຶ່ງໆນັ້ນຂໍ້ສອບຈຳເປັນຈະຕ້ອງໃຫ້ມີລັກສະນະເປັນຕົວແທນທີ່ດີຂອງເນື້ອຫາແລະອີງຄວາມຮູ້ຕ່າງໆຂອງຜູ້ຮຽນເພາະການໃຊ້ຂໍ້ສອບວັດຄວາມຮູ້ ຄວາມສາມາດຂອງຜູ້ຮຽນນັ້ນເປັນພຽງຕົວແທນຂອງເນື້ອຫາທີ່ຜູ້ຮຽນໄດ້ຮຽນໄດ້ຍິນໄປແລ້ວເທົ່ານັ້ນຂໍ້ສອບຈຶ່ງຕ້ອງເປັນຕົວແທນທີ່ດີເພາະຜົນການສອບວັດເປັນການສະຫຼຸບເຖິງຄວາມສາມາດໂດຍສ່ວນລວມຂອງຜູ້ຮຽນໃນວິຊານັ້ນໆ

ພວງຣັດ ທະວີຣັດ ( 2530 ) ໄດ້ກ່າວເຖິງລັກສະນະຂອງແບບທົດສອບທີ່ດີດັ່ງນີ້:

1. **ມີຄຸນນະພາບດ້ານຄວາມທ່ຽງ (Validity)** ໝາຍເຖິງແບບທົດສອບສາມາດວັດໄດ້ຕົງຕາມຈຸດປະສົງທີ່ຕ້ອງການຄວາມທ່ຽງຕົງແບ່ງເປັນ 4 ລັກສະນະຄື:

1.1 ຄວາມທ່ຽງຕົງທາງເນື້ອໃນ (Content Validity) ໝາຍເຖິງແບບທົດສອບທີ່ສາມາດວັດໄດ້ສອດຄ່ອງ ແລະ ຄວບຄຸມເນື້ອຫາທີ່ຕ້ອງການຈະວັດຂໍ້ສອບທີ່ມີຄວາມທ່ຽງຕົງຕາມເນື້ອໃນໝາຍຄວາມວ່າຂໍ້ສອບນັ້ນປະກອບດ້ວຍຂໍ້ຄຳຖາມທີ່ຖາມເນື້ອຫາໄດ້ຕົງຕາມທີ່ລະບຸໄວ້ໃນຕາຕະລາງວິເຄາະຫຼັກສູດຢ່າງຄົບຖ້ວນ

1.2 ຄວາມທ່ຽງຕົງຕາມໂຄ້ງສ້າງ (Construct Validity) ໝາຍເຖິງຄຸນສົມບັດຂອງແບບທົດສອບທີ່ສາມາດວັດໄດ້ສອດຄ້ອງຕົງຕາມທີ່ກຳນົດໄວ້ໃນກໍລະນີທີ່ເປັນຂໍ້ສອບໝາຍເຖິງຂໍ້ສອບທີ່ສ້າງໄດ້ຄວບຄຸມພຶດຕິກຳທີ່ວິເຄາະໄດ້ໃນຕາຕະລາວຂອງລາຍວິຊານັ້ນໆຖ້າພິາລະນາຈາກຈຸດມຸ້ງໝາຍເຊີງພຶດຕິກຳກໍ່ຄືເບິ່ງຈາກພຶດຕິກຳທີ່ຄາດຫວັງ ແລະ ເກນ

1.3 ຄວາມທ່ຽງຕົງຕາມສະພາບ (Concurrent Validity) ໝາຍເຖິງຄຸນສົມບັດຂອງແບບທົດສອບທີ່ໃຫ້ຜົນກາວັດສອດຄ້ອງກັບສະພາບທີ່ເປັນຈິງໃນຂະນະນັ້ນຂອງຜູ້ສອບເຊິ່ງເຫັນໄດ້ຈາກການສັເກດ ຫຼື ການປະຕິບັດ

1.4 ຄວາມທ່ຽງຕົງເຊີງພະຍາກອນ (Predictive Validity)ໝາຍເຖິງຄຸນສົມບັດຂອງແບບທົດສອບທີ່ຊ່ວຍໃຫ້ສາມາດທຳນາຍຜົນໃນອະນາຄົດໄດ້ຖືກຕ້ອງແບບທົດສອບທີ່ມີຄວາມທ່ຽງຕົງເຊີງພະຍາກອນສູງຄືມີຄະແນນຈາກແບບທົດສອບທັງສະບັບນັ້ນສອດຄ່ອງກັບຄະແນນຜົນການຮຽນໃນອະນາຄົດການທີ່ຈະສ້າງແບບທົດສອບໃຫ້ມີຄວາມທ່ຽງຕົງຄືແບບທົດສອບນັ້ນຈະຕ້ອງຖາມໃຫ້ຄວບຄຸມ (Comprehensive) ຫຼັກສູດທີ່ກຳນົດເຊິ່ງມີລັກສະນະດັ່ງນີ້:

1. ຖາມທຸກເລື່ອງທຸກເນື້ອໃນທີ່ມີໃນຫຼັກສູດ
2. ຖາມພຶດຕິກຳການຮຽນຮູ້ຄົບຖ້ວນຕາມຈຸດປະສົງຂອງຫຼັກສູດ
3. ຖາມແຕ່ລະເນື້ອໃນ ແລະ ພຶດຕິກຳຢ່າງໄດ້ສັດສ່ວນກັນ ພຶດຕິກຳໃດມີຄວາມສຳຄັນຫຼາຍເນັ້ນຫຼາຍກໍ່

ຄວນຖາມຫຼາຍຂໍ້ຖ້າສຳຄັນໜ້ອຍມີຄຸນນະພາບດ້ານຄວາມເຊື່ອໝັ້ນ (Reliability) ໝາຍເຖິງແບບທົດສອບທີ່ສາມາດໃຫ້ຜົນການວັດໄດ້ຄົງທີ່ບໍ່ວ່າຈະນຳນຳເຄື່ອງມືນັ້ນໄປສອບວັດເທົ່າໃດຄັ້ງກໍ່ຕາມແບບທົດສອບທີ່ມີຄວາມເຊື່ອໝັ້ນໝາຍເຖິງແບບທົດສອບທີຫ້ຜົນການວັດໃນແຕ່ລະຄັ້ງສອດຄ່ອງກັນເຊັ່ນໃນການສອບວັດ ຄັ້ງຄົນທີ່ໄດ້ຄະແນນສູງໃນຄັ້ງແລກຈະໄດ້ຄະແນນໃນຄັ້ງທີ່ສອງຄົນທີ່ໄດ້ຄະແນນຕ່ຳໃນຄັ້ງແລກກໍ່ຈະໄດ້ຄະແນນຕ່ຳໃນຄັ້ງທີ່ສອງເຊັ່ນກັນ

ການສ້າງແບບທົດສອບໃຫ້ມີຄວາມເຊື່ອໝັ້ນສູງກໍ່ຄືຂໍ້ຄຳຖາມຂອງແບບທົດສອບນັ້ນຈະຕ້ອງຖາມໃນສິ່ງທີ່ຄວນຖາມພຶດຕິກຳຂັ້ນສູງ ແລະ ມີຈຳນວນຫຼາຍພໍທີ່ຈະຄວບຄຸມເນື້ອໃນໃນລາຍວິຊານັ້ນໆ.

4. ມີຄວາມເປັນປາລະໄນ (Objectivity) ຄືມີລັກສະນະ 3 ປະການໄດ້ແກ່

4.1 ຄຳຖາມມີຄວາມຈະແຈ້ງຊັດເຈນ

4.2 ການກວດໃຫ້ຄະແນນຊັດເຈນເຮັດໃຫ້ຜູ້ກວດບໍ່ວ່າໃຜກໍ່ຕາມກວດໃຫ້ຄະແນນໄດ້ຕົງກັນ

4.3 ການແປຄວາມໝາຍຂອງຄະແນນຕົງກັນກ່າວຄືຄະແນນທີ່ໄດ້ບອກສະຖານະພາບຂອງຜູ້ສອບໄດ້ຕົງກັນ

ແບບທົດສອບປາລະໄນ ຫຼື ອັດຕາໄນເຊັ່ນຂໍ້ສອບລຽງຄວາມສາມາດສ້າງໃຫ້ມີຄຸນລັກສະນະທັງ 3 ປະການດັ່ງກ່າວແບບທົດສອບນັ້ນກໍ່ຈະມີຄວາມເປັນປາລະໄນໄດ້ເທົ່າທຽມກັນ

5. ມີການຖາມເລິກ (Searching) ໝາຍເຖິງບໍ່ຖາມພຽງແຕ່ພຶດຕິກຳຂັ້ນຄວາມຮູ້ຄວາມຈຳຖາມຕາມຕຳລາ ຫຼື ຖາມຕາມທີ່ຄູສອນແຕ່ຕ້ອງພະຍາຍາມຖາມພຶດຕິກຳຂັ້ນສູງກວ່າຄວາມຮູ້ຄວາມຈຳໄດ້ແກ່ຖາມພຶດຕິກຳຄວາມເຈົ້າໃຈການນຳໄປໃຊ້ການວິເຄາະ ການສັງເຄາະ ແລະ ການປະເມີນຄ່າແຕ່ຖ້າຈຳເປັນຕ້ອງຖາມຄວາມຮູ້ ຄວາມຈຳກໍ່ຄວນຖາມສິ່ງທີ່ເປັນຄວາມຄິດລວບຍອດຖ້າຂໍ້ຄຳຖາມສາມາດວັດພຶດຕິກຳຂັ້ນສູງໄດ້ຫຼາຍເທົ່າໃດແບບທົດສອບນັ້ນກໍ່ຈະມີຄຸນຄ່າຫຼາຍຂຶ້ນເທົ່ານັ້ນເພາະສາມາດນຳຜົນການສອບມາໃຊ້ໃນການພັດທະນາສະມັດຕະພາບທາງສະໝອງຂອງຜູ້ຮຽນໃຫ້ກ້າວໜ້າກວ່າເດີມໄດ້ດີ.

6. ມີຄວາມຍຸດຕິທຳ (Fair) ໝາຍເຖິງຂໍ້ຄຳຖາມຂອງແບບທົດສອບນັ້ນຈະຕ້ອງບໍ່ເປັນຊ່ອງທາງແນະໃຫ້ເດັກສະຫຼາດໃຊ້ໄຫວພິກໃນການເດົາໄດ້ຖືກບໍ່ເປີດໂອກາດໃຫ້ຄົນກຽດຄ້ານທີ່ເບິ່ງຕຳລາຕອບຄືຕ້ອງເປັນແບບທົດສອບທີ່ບໍ່ລຳອຽງຕໍ່ກຸ່ມໃດໂດຍສະເພາະການທີ່ຈະໃຫ້ແບບທົດສອບມີຄວາມຍຸດຕິທຳ ຫຼື ຄວາມສະເໝີພາບໄດ້ຂໍ້ສອບນັ້ນຈະຕ້ອງຖາມໃຫ້ຄວບຄຸມເນື້ອໃນ ແລະ ພຶດຕິກຳທຸກປະເພດຂອງລາຍວິຊານັ້ນໆ.

7. ມີລັກສະນະຍົ່ວຍູເປັນແບບຢ່າງທີ່ດີ (Examplary) ໝາຍເຖິງແບບທົດສອບນັ້ນຈະຕ້ອງປະກອບດ້ວຍຖາມທີ່ຈະສ້າງແບບຢ່າງທີ່ດີໃຫ້ແກ່ຜູ້ຮຽນບໍ່ຄວນຖາມສິ່ງທີ່ເປັນຕົວຢ່າງທີ່ບໍ່ເໝາະສົມບໍ່ຄວນປະຕິບັດຕາມເພາະໃນຊ່ວງເວລາຂອງການສອບມີໂອກາດທີ່ຈະຮຽນຮູ້ຈາກຂໍ້ສອບໄດ້ຈຶ່ງຄວນຖາມແຕ່ສິ່ງທີ່ຈະນຳໄປເປັນແບບຢ່າງທີ່ດີງາມຈຶ່ງຈະເປັນການດີເຊັ່ນ: ຄຳຖາມ1 ສິ່ງໃດທີ່ສູບໄດ້ໂດຍບໍ່ຜິດກົດໝາຍ (ຢາສູບ,ກັນຊາ,ຝິ່ນ) ຄຳຖາມ 2 ການສູບຢາໃຫ້ໂທດຄືແນວໃດ? ຄຳຖາມ1 ເປັນຄຳຖາມຄວນລຽງໄປຖາມ, ຄຳຖາມ 2 ຈະເໝາະສົມກວ່າເປັນຕົ້ນ

8. ມີອຳນາດຈຳແນກ (Discrimination) ໝາຍເຖິງແບບທົດສອບນັ້ນຈະຕ້ອງປະກອບດ້ວຍຄຳຖາມທີ່ສາມາດຈຳແນກຜູ້ສອບອອກເປັນປະເພດໄດ້ທຸກລະດັບຢ່າງຖີ່ຖ້ວນຕັ້ງແຕ່ອ່ອນສຸດຈົນເຖິງເກັ່ງສຸດ.

9. ມີຄວາມຍາກງ່າຍໆ (Difficulty) ໝາຍເຖິງແບບທົດສອບນັ້ນຈະຕ້ອງບໍ່ຍາກເກີນໄປ ແລະ ງ່າຍເກີນໄປຜົນການສອບໂດຍສະເລ່ຍຄວນເທົ່າກັບ ຫຼື ສູງກວ່າ 50% ຂອງຄະແນນເຕັມເລັກນ້ອຍນັ້ນຄືຂໍ້ສອບທີ່ຍາກທີ່ຍາກຫຼາຍຖືວ່າບໍ່ມີປະໂຫຍດເພາະບໍ່ສາມາດດຶງຜູ້ສອບໃຫ້ສະແດງຄຸນລັກສະນະທີ່ຕ້ອງການວັດອອກມາໄດ້ເພາະຄົນເກັ່ງກໍ່ຍັງບໍ່ສາມາດເຮັດໄດ້ໃນທຳນອງດຽວກັນແບບສອບທີ່ງ່າຍຫຼາຍກໍ່ຖືວ່າບໍ່ມີປະໂຫຍດເພາະທັງຄົນເກັ່ງ ຄົນອ່ອນສາມາດເຮັດໄດ້ເໝືອກັນໝົດເຮັດໃຫ້ບໍ່ມີອຳນາດຈຳແນກດັ່ງນັ້ນແບບທົດສອບຈຶ່ງຄວນມີຄວາມຍາພໍເໝາະໃນແຕ່ລະຂໍ້ຄຳຖາມ ແລະ ໂດຍສ່ວນຮວມທັງສະບັບ.

10. ມີຄວາມສະເພາະເຈາະຈົງມີ (Difinite) ໝາຍເຖິງແບບທົດສອບນັ້ນຈະປະກອບດ້ວຍຄຳຖາມທີ່ມີຄວາມຊັດເຈນບໍ່ຄຸມເຄືອຜູ້ສອບຕີຄວາມໝາຍໄປຄົນລະຢ່າງຄຳຖາມປະເພດກອນສອງແງ່ສອງມຸມບໍ່ຄວນໃຊ້ຄຳຖາມນັ້ນແຕ່ຈະຕ້ອງໃຫ້ຜູ້ສອບເຂົ້າໃຈຢ່າງແຈ່ມແຈ້ງວ່າຕ້ອງການຖາມໃນແງ່ມຸມໃດເພື່ອຜູ້ສອບທີ່ມີຄວາມສາມາດໃນເລື່ອງນັ້ນຢ່າງແທ້ຈິງຈະຕ້ອງຕອບຖືກ

11. ມີປະສິດທິພາບ (Efficiency) ໝາຍເຖິງແບບທົດສອບນັ້ນຈະຕ້ອງໃຫ້ຜົນການວັດທີ່ທ່ຽງຕົງ ແລະ ເຊື່ອຖືໄດ້ຫຼາຍທີ່ສຸດໃນຂະນະທີ່ໃຊ້ເວລາແຮງງານ ແລະ ເງິນທຸນໃນການສ້າງຢ່າງປະຫຍັດທີ່ສຸດການສ້າງຂໍ້ສອບໃຫ້ມີປະສິດທິພາບຄວນຄຳນຶງເຖິງໃນເລື່ອງຕໍ່ໄປນີ້

11.1 ລັກສະນະຄຳຖາມຄວນເປັນຄຳຖາມທີ່ຄາມພຶດຕິກຳລວມຂັ້ນສູງໃຫ້ຫຼາຍຂໍ້ຕະຫຼອດຈົນຖາມແຕ່ສິ່ງທີ່ມີຄວມສຳຄັນທີ່ຈະເປັນຕົວແທນຂອງມວນຄວາມຮູ້ໃນວິຊານັ້ນໆ

11.2 ຄວາມເໝາະສົມຂອງຈຳນວນຂໍ້ກັບເວລາແບບທົດສອບນັ້ນບໍ່ຄວນໃຫ້ມີຈຳນວນຂໍ້ຫຼາຍໄປຄວນມີຈຳນວນຂໍ້ພໍເໝາະແຕ່ມີຄວາມຄອບຄຸມໃນເນື້ອຫາຂອງວິຊານັ້ນໆ ແລະ ເວລາທີ່ໃຫ້ເຮັດກໍ່ເໝາະສົມບໍ່ຫຼາຍຈົນເກີນໄປ

11.3 ຄວາມຖືກຕ້ອງຮຽບຮ້ອຍຂອງຕົວຂໍ້ສອບຄືເປັນແບບທົດສອບທີ່ພິມຖືກຕ້ອງຊັດເຈນບໍ່ມີໜ້າຫວ່າງເຊິ່ງສິ່ງເຫຼົ່ານີ້ຖ້າມີຄວາມບົກພ່ອງຈະມີຜົນເຮັດໃຫ້ແບບທົດສອບຂາດປະສິດທິພາບໄດ້

## 5. ແບບທົດອັດຕະໄນ

### 5.1 ຄວາມໝາຍຂອງແບບທົດສອບອັດຕະໄນ

ມີນັກວິຊາການຫຼາຍທ່ານໄດ້ໃຫ້ຄວາມໝາຍຂອງແບບທົດສອບອັດຕະໄນໄວ້ຫຼາຍທັດສະນະ ດັ່ງນີ້:

ຊາຍໄຊ ຍິມດີສະ (2548 : 34-38) ໄດ້ກ່າວເຖິງຄວາມໝາຍຂອງແບບທົດສອບອັດຕະໄນໄວ້ວ່າເປັນແບບທົດສອບທີ່ໃຫ້ຜູ້ຕອບໄດ້ສະແດງຄວາມຄິດເຫັນເໝາະສຳລັບການວັດຄວາມຮູ້ຂັ້ນສູງກວ່າຄວາມຈຳ ແລະ ຄວາມເຂົ້າໃຈ

Mehrens and Lehmann (1969 : 206-227) ໄດ້ກ່າວເຖິງຄວາມໝາຍຂອງແບບທົດສອບ ອັດຕະໄນໄວ້ວ່າ ເປັນລັກສະນະຂອງຄຳຖາມທີ່ແຕກຕ່າງຈາກຄຳຖາມຊະນິດອື່ນດັ່ງນີ້:

1. ບໍ່ມີຄຳຕອບພຽງຄຳຕອບດຽວທີ່ສົມບູນ ແລະ ຖືກຕ້ອງ
2. ຜູ້ສອບໄດ້ຕອບຢ່າງອິດສະຫຼະ
3. ຄຸນນະພາບຂອງຄຳຕອບມີລະດັບຕ່າງກັນ

Hopkins and Antes (1990 : 231-232) ໄດ້ກ່າວເຖິງຄວາມໝາຍຂອງແບບທົດສອບອັດຕະໄນໄວ້ວ່າ ຂໍ້ສອບທີ່ເປັນສິ່ງທີ່ຕ້ອງການຄຳຕອບທີ່ເປັນປະໂຫຍກຫຼາຍປະໂຫຍກຕໍ່ເນື່ອງກັນ ເຊິ່ງສະແດງຄວາມສົມເຫດສົມຜົນ ຖືກຕ້ອງ ແລະ ຄຸນນະພາບຂອງຂໍ້ສອບແບບນີ້ ຕ້ອງເປັນຜູ້ທີ່ມີຄວາມຮູ້ໃນວິຊາທີ່ສອບ ສະຫຼຸບໄດ້ວ່າ ແບບທົດສອບອັດຕະໄນຄື ແບບທົດສອບທີ່ໃຫ້ຜູ້ຕອບໄດ້ສະແດງຄວາມຄິດເຫັນ ສະແດງສະຖານນະການບັນຫາຕ່າງໆແບບຕໍ່ເນື່ອງ ໂດຍຜູ້ຕອບໄດ້ຕອບຢາງອິດສະຫຼະ ບໍ່ມີພຽງຄຳຕອບດຽວ ສະແດງຄວາມສົມເຫດສົມຜົນຂອງຄຳຕອບ ເຊິ່ງເໝາະສຳລັບການວັດຄວາມຮູ້ຂັ້ນສູງກວ່າຄວາມຈຳ ແລະ ຄວາມເຂົ້າໃຈບໍ່ມີຂໍ້ກຳນົດໃນການຂຽນຄຳຕອບ ປະເພດຂອງແບບທົດສອບອັດຕະໄນ ມີນັກການສຶກສາຫຼາຍທ່ານໄດ້ແບ່ງປະເພດຂອງແບບທົດສອບອັດຕະໄນໄວ້ດັ່ງນີ້:

ຊາຍໄຊ ຍິມດີສະ (2548 : 34-38) ໄດ້ແບ່ງປະເພດຂອງແບບທົດສອບ ເປັນ 2 ແບບຄື ແບບບໍ່ຈຳຄຳຕອບ ( Extended response) ແລະ ແບບຈຳຄຳຕອບ ( Restricted response) ເຊິ່ງ ຂຶ້ນຢູ່ກັບການໃຫ້ອິດສະຫຼະແກ່ນັກຮຽນໃນການຕອບ ຈາກການສຶກສາພົບວ່າເດັກລະດັບປະຖົມສຶກສາ ຂຽນຕອບແບບກຳນົດໂຄງສ້າງໃຫ້ຕອບໄດ້ດີ ສ່ວນນັກຮຽນໃນລະດັບສູງຂຽນຕອບແບບ ບໍ່ກຳນົດໂຄງສ້າງໃຫ້ຕອບໄດ້ດີ

1. ແບບບໍ່ຈຳຄຳຕອບ ( Extended response) ຂໍ້ສອບແບບອັດຕະໄນແບບບໍ່ຈຳກຄຳຕອບນີ້ໃຫ້ອິສິນເສລີແກ່ນັກຮຽນຢາງເຕັມທີ່ໃນການອະພິປາຍສະແດງຄວາມຄິດເຫັນ ແລະ ລວບລວມຂໍ້ມູນເທັດຈິງຕ່າງໆ ມາໃຊ້ໃນການສອນ ໂດຍທົ່ວໄປຂໍ້ສອບແບບນີ້ຈະໃຫ້ນັກຮຽນສະແດງຄວາມສາມາດ ເຊິ່ງຈຳເປັນຕ້ອງອາໄສການສັງເຄາະ ແລະ ການປະເມີນຜົນ ຂໍ້ສອບນີ້ນັບວ່າມີຄງາມສຳຄັນຢາງຍິ່ງໃນການວັດຂະບວນການທາງສະໝອງທີ່ສູງຂຶ້ນຕາມຂັ້ນຕອນດັ່ງນີ້:

ຂັ້ນທີ 1 ຄຳນຶງເຖິງຄວາມຮູ້ທີ່ຮຽນໄປເຊັ່ນ: ຈົ່ງອະທິບາຍທິດສະດີກຳເນີດຂອງມະນຸດ 1 ທິດສະດີ ຈົ່ງອະທິບາຍການສອນແບບບັນຍາຍ, ການສອນແບບສືບສວນ ໂດຍໃຫ້ບອກເຖິງຫຼັກສຳຄັນທີ່ໃຊ້ໃນການສອນແຕ່ລະວິທີ ແລະ ຂໍ້ດີ –ຂໍ້ເສຍ ຂອງການສອນທັງສອງແບບ

ຂັ້ນທີ2 ປະເມີນຄ່າຄວາມຮູ້ທີ່ເຮັດໄດ້ເຊັ່ນ: ຈົ່ງປຽບທຽບຂໍ້ດີ ແລະ ຂໍ້ເສຍຂອງການ ປະເມີນຜົນແບບອີງເກນ ແລະ ແບບອີງກລຸ່ມມາຢ່າງລະອຽດ ເພາະເຫດໃດເອດີສັນຈິ່ງໄດ້ຮັບການ ຍົກຍອງເປັນຢ່າງຫຼາຍຈາກການທົດລອງເລື່ອງອາກາດມີໄອນ້ຳ

ຂັ້ນທີ3 ລວບລວມຄວາມຮູ້ ແລະ ຄວາມຄິດໃຫ້ເປັນລະບົບເຊັ່ນ: ຈົ່ງກ່າວເຖິງຄວາມຄ້າຍຄືຄົນໃນສະຫະລັດອາເມຣິກາເຂົ້າໄປມີສ່ວນພົວພັນກັບຄວາມຂັດແຍ້ງໃນປະເທດເກົາຫຼີ ແລະວຽດນາມມາ 3 ປະເພດ

ຂັ້ນທີ 4 ສະແດງຄວາມຄິດເຫັນຢ່າງມີເຫດຜົນເຊັ່ນ: ຈົ່ງປຽບທຽບ ແລະ ອະທິບາຍ ເຫດຜົນການປົກຄອງລະບອບປະຊາທິປະໄຕຂອງອັງກິດ ແລະ ສະຫະລັດອເມລິກາຂໍ້ເສຍຂອງຂໍ້ສອບປະເພດນີ້ຄື: ມີຄວາມເຊື່ອໝັ້ນຄອ້ນຂ້າງຕ່ຳ ແຕ່ມີຂໍ້ດີຄືນັກຮຽນມີ ໂອກາດສະແດງຄວາມຄິດເຫັນໄດ້ຢາງເສລີ

2. ແບບຈຳຄຳຕອບ ( Restricted response) ຂໍ້ສອບແບບນີ້ມັກຈະກຳນົດຂອບເຂດ ແບບຟໍຣົມ ແລະ ເນື້ອໃນທີ່ສະເພາະໃຫ້ນັກຮຽນບໍ່ມີອິດສະຫຼະໃນການຕອບເທົ່າໃດ ແບບທົດສອບນີ້ໃຫ້ຕອບສັ້ນກວ່າແບບທຳອິດຄຳຕອບອຢູ່ພາຍໃນຂອບເຂດທີ່ກຳນົດໄວ້ໃນຂອບເຂດກຳນົດ ໂດຍທົ່ວໄປແລ້ວຈະກຳນົດ ຂອບເຂດ ແລະ ຄວາມຍາວໃນການຕອບໄວ້ດ້ວຍ ຕົວຢ່າງເຊັ່ນ ລັກສະນະພູມມີອາກາດ, ການປົກຄອງ ອາຊີບ ຂອງພົນລະເມືອງ ຈົ່ງອະທິບາຍສາເຫດຂອງການເກີດສົງຄາມໂລກເທື່ອທີ່ 2 ມາ 3 ປະການ ຈົ່ງຍົກຕົວຢ່າງການກະທຳທີ່ສະແດງເຖິງຄວາມຮັກຊາດມາ 5 ຂໍ້

Mehrens and Lehmann.(1969 : 206-277) ໄດ້ແບ່ງປະເພດຂອງແບບທົດສອບເປັນ 2 ປະເພດ ຕາມລັກສະນະຂອງຄວາມມີອິດສະຫຼະໃນການຕອບດັ່ງນີ້:

1. ແບບຕອບຂະຫຍາຍ ( Extended Response ) ຫຼື ແບບບໍ່ຈຳຄຳຕອບ ( Unrestriced Response ) ຂໍ້ສອບແບບນີ້ຈະຖາມຄວາມຮູ້,ຄວາມສາມາດຕ່າງໆ ໂດຍໃຫ້ອິດສະຫຼະໃນການຕອບແກ່ ນັກຮຽນ ຫຼື ຜູ້ສອບຫຼາຍເປີດໂອກາດໃຫ້ຂຽນສະແດງຄວາມຄິດເຫັນ ອະທິບາຍ ອະພິປາຍໄດ້ຢາງເຕັມທີ່ທຸກແງ່ທຸກມຸມຕາມທີ່ຕ້ອງການບໍ່ຈຳກັດ ລັກສະນະຄຳຖາມຈຶ່ງກວ້າງຂວາງ ເໝາະກັບການວັດຄວາມສາມາດດ້ານຄວາມຄິດລິເລີ່ມສ້າງສັນ ທັດສະນະ

ຄະຕິ ແລະ ການປະເມີນຄ່າ (Evaluation) ເພາະຂໍ້ສອບແບບນີ້ ສົ່ງເສີມໃຫ້ນັກຮຽນຮູ້ຈັກລວບລວມຄວາມຄິດຕ່າງໆ ການປະເມີນຄຸນຄ່າຂອງສິ່ງເຫຼົ່ານັ້ນ ແລະ ການໃຊ້ວິທີການຕ່າງໆ ໃນການແກ້ບັນຫາດ້ວຍເຫດຜົນນີ້ປະລິມານຄໍາຕອບຂອງຂໍ້ສອບແບບນີ້ຈຶ່ງຂຶ້ນຢູ່ກັບ ຄໍາຖາມ ແລະ ຄວາມຮູ້ທີ່ສະສົມໄວ້ວ່າມີຫຼາຍນ້ອຍພຽງໃດ ປະກອບກັບຄວາມສາມາດໃນການຈັດລະບົບ ການຕອບ ແລະ ຄວາມສາມາດໃນການໃຊ້ພາສາຂອງນັກຮຽນແຕ່ລະຄົນເປັນຄໍາສັບ ຈຸດອ່ອນຂອງການຖາມແບບນີ້ຢູ່ທີ່ ການໃຫ້ຄະແນນ ເພາະຍາກທີ່ຈະຫາເກນໃນການໃຫ້ຄະແນນທີ່ຖືກຕ້ອງທ່ຽງກົງໄດ້ ຄໍາຖາມທີ່ໃຊ້ມັກຈະເປັນຄໍາຖາມປະເພດ “ ຈົ່ງອະພິປາຍ, ປຽບທຽບ ,ສະແດງຄວາມຄິດເຫັນ” ເປັນຕົ້ນ

2. ແບບທົດສອບຈໍາກັດ ( Restricted Response ຫລື Short – Essay Item) ຂໍ້ສອບນີ້ ສາມາດອຸດຈຸດອ່ອນຂອງຄໍາຖາມແບບທໍາອິດໄດ້ ທັງນີ້ເນື່ອງຈາກຂໍ້ສອບແບບຂະຫຍາຍຄໍາຕອບເປັນ ແບບທົດສອບທີ່ໃຫ້ອິດສະຫຼະໃນການຕອບໂດຍບໍ່ຈໍາກັດ ທໍາໃຫ້ໄດ້ຄໍາຕອບທີ່ແຕກຕ່າງກັນຫຼາຍ ຈຶ່ງມັກມີບັນຫາໃນການກວດຄະແນນໂດຍສະເພາະໃນແງ່ຂອງການປຽບທຽບກັນໃນກຸ່ມ ຂໍ້ສອບແບບນີ້ ຈຶ່ງຖາມແບບເຈາະຈົງ ຜູ້ຂຽນຂໍ້ຈະກໍານົດຂອບເຂດ ລັກສະນະການຕອບຕະຫຼອດຈົນເນື້ອໃນ ທິດທາງການຕອບ ແລະ ຄວາມຍາວໃນການຕອບໄວ້ດ້ວຍຄໍາຕອບຈຶ່ງສັ້ນ ແລະ ຢູ່ພາຍໃຕ້ຂອບເຂດທີ່ກໍານົດໄວ້ ຜູ້ຕອບ ຕ້ອງຈັດຮຽບຮຽງຄວາມຄິດເຫັນໃຫ້ເປັນລະບຽບແລ້ວຕອບໃຫ້ກົງປະເດັນຂອງຄໍາຖາມພຽງສັ້ນໆ ໂດຍບໍ່ມີໂອກາດອະພິປາຍສະແດງຄວາມຄິດເຫັນນອກເໜືອທີ່ກໍານົດໄວ້ໃຫ້ຂໍ້ສອບແບບນີ້ຈຶ່ງມີຄວາມສະດວກໃນການໃຫ້ຄະແນນຫຼາຍກວ່າແບບທໍາອິດ ເພາະມີເກນຕ່າງໆ ທີ່ຈະຕັດສິນໃຈໃຫ້ຄະແນນຫຼາຍຂຶ້ນ ຜູ້ຂຽນຂໍ້ສອບຈຶ່ງຈໍາເປັນຕ້ອງລະມັດລະວັງໃນເລື່ອງຄໍາສັ່ງໂຈດ, ຂອບເຂດເນື້ອໃນ ແລະ ເວລາທີ່ ກໍານົດໃຫ້ນັກຮຽນຕອບຄໍາຖາມທີ່ໃຊ້ມັກຢູ່ໃນ ຮູບ “ຈົ່ງນິຍາມ, ຕອບສັ້ນໆ , ອະທິບາຍສັ້ນໆ ” ຢ່າງໃດກໍດີ ຂໍ້ສອບແບບນີ້ໃຫ້ໂອກາດແກ່ນັກຮຽນນ້ອຍ - ຫຼາຍໃນການສະແດງຄວາມສາມາດເດັກຢູ່ກັບການຈັດການລວບລວມການສະແດງຄວາມຄິດເຫັນ ແລະ ການຈັດຫາສິ່ງຕ່າງໆ ທີ່ຈໍາເປັນເດັກຢູ່ກັບການຕອບ ຈຶ່ງມີ ປະໂຫຍດສໍາລັບການວັດຜົນການຮຽນຮູ້ລະດັບຄວາມເຂົ້າໃຈ ການນໍາໄປໃຊ້ ແລະ ການວິເຄາະ ແຕ່ຈະມີຄຸນຄ່ານ້ອຍ - ຫຼາຍຖ້າຈະນໍາໄປໃຊ້ໃນລະດັບການສັງເຄາະ ແລະ ການປະເມີນຄ່າ

Hopkins and Antes (1990 : 231-232 )ໄດ້ແບ່ງປະເພດຂອງແບບທົດສອບ ເປັນ 2 ປະເພດຄື:1.ແບບທີ່ມີຂອບເຂດກວ້າງແຕ່ໃຫ້ເວລາກໍານົດ ( Extended-Response ) ຂໍ້ສອບລັກສະນະນີ້ ຈະທົດສອບທັກສະຂອງຜູ້ຂຽນໃນການເລືອກວ່າຂຽນຫຍັງ ແລະ ຈະຂຽນຫຼາຍ - ນ້ອຍ ແຕ່ໃດໃນແຕ່ລະສ່ວນທັງໝົດທັງຄວາມສາມາດໃນການຈັດລະບຽບ ແລະ ສະແດງຄວາມຄິດເຫັນເຊັ່ງກັນ ຂໍ້ສອບຂຽນ ບັນລະຍາຍ ແບບຂະຫຍາຍຄວາມນີ້ເປັນຂໍ້ສອບປະເພດປາຍເປີດ (Open-Ended) ແລະ ບໍ່ໄດ້ຈໍາກັດຄວາມຄິດຂອງນັກຮຽນ ຂໍ້ສອບແບບນີ້ມີປະໂຫຍດໃນການປະເມີນການຂຽນ ໂດຍສະເພາະສິລະປະຢູ່ກັບການໃຊ້ພາສາ

2. ແບບຈໍາກັດຄໍາຕອບ ( Limited-Response ) ຈະມີຂອບເຂດກວ້າງ ຫຼື ແຄບກໍໄດ້ ແຕ່ນັກຮຽນຄວນຈະຮູ້ຢ່າງຈະແຈ້ງວ່າຂີດຈໍາກັດນັ້ນຄືຫຍັງຂໍ້ສອບນີ້ຈະໃຫ້ຂີດຈໍາກັດທີ່ລະບຸໄດ້ຢ່າງຊັດເຈນ ເພື່ອສ້າງຂອບເຂດໃນການຕອບໃຫ້ນັກຮຽນ ກ່າວຄືນັກຮຽນຕ້ອງຕອບໃນກອບເນື້ອໃນທີ່ກໍານົດຂໍ້ສອບແບບນີ້ມີປະໂຫຍດຕໍ່ຄູຜູ້ສອນທີ່ຕ້ອງການທົດສອບຜົນສໍາເລັດທາງການຮຽນເຊິ່ງຕ່າງ ຈາກແບບທົດສອບອັດຕະໄນແບບທີ່ມີຂອບເຂດກວ້າງທີ່ຕ້ອງການ

ວັດດ້ານທັກສະການຂຽນຜູ້ອອກຂໍ້ສອບ ຄວນພິຈາລະນາເຖິງຈຸດປະສົງໃນການວັດຜົນກ່ອນຕັດສິນໃຈເລືອກວ່າຈະໃຊ້ຮູບແບບໃດ  ສະຫຼຸບໄດ້ວ່າ ປະເພດຂອງແບບທົດສອບອັດຕະໄນມີ 2 ປະເພດ ຄື:

1. ແບບບໍ່ຈຳກັດຄຳຕອບເປັນແບບທົດສອບທີ່ນັກຮຽນໄດ້ສະແດງຄວາມເຂົ້າໃຈ ການຈັດລະບຽບທາງຄວາມຄິດໃຫ້ອິດສະຫຼະ ໃນການຕອບ ອະທິບາຍໄດ້ຢ່າງເຕັມທີ່

2. ແບບຈຳກັດຄຳຕອບ ເປັນແບບທົດສອບທີ່ນັກຮຽນໄດ້ສະແດງ ຄວາມເຂົ້າໃຈຕາມກອບເນື້ອໃນທີ່ກຳນົດໄວ້ຖາມແບບເຈາະຈົ່ງໂດຍມີກຳນົດທິດທາງຂອງການຕອບຄຳຖາມ ຫຼັກສຳຄັນໃນການສ້າງຂໍ້ຄຳຖາມແບບອັດຕະໄນແບບທົດສອບອັດຕະໄນ ເປັນແບບທົດສອບທີ່ກຳນົດບັນຫາ ຫຼືເລື່ອງລາວໃຫ້ ໂດຍໃຫ້ຜູ້ຕອບ ອະທິບາຍ ຫຼື ບັນລະຍາຍສະແດງຄວາມຄິດເຫັນ ຫຼື ວິພາກ, ວິຈານຢ່າງອິດສະຫຼະໃນເວລາທີ່ກຳນົດໃຫ້ ໃນການສ້າງຂໍ້ຄຳຖາມແບບອັດຕະໄນຕ້ອງພິຈາລະນາຫຼາຍສິ່ງຢ່າງເພື່ອກົງຕາມຈຸດປະສົງ ເນື້ອຫາ ແລະ ການວັດປະເມີນຜົນໃຫ້ສອດຄ່ອງກັນທັງລະບົບ ໂດຍມີຫຼັກສຳຄັນໃນການສ້າງຂໍ້ຄຳຖາມ ດັ່ງຕໍ່ໄປນີ້:

1. ຕ້ອງເບິ່ງຈຸດປະສົງຂອງການສອບກ່ອນ ແລ້ວຈຶ່ງຂຽນຂໍ້ຄຳຖາມ ເພື່ອໃຫ້ກົງຈຸດປະສົງການຮຽນຮູ້ທີ່ຕ້ອງການວັດ

2. ຄວນໃຊ້ຄຳຖາມທີ່ມີຄວາມກະຈ່າງແຈ້ງ ດ້ວຍຫຼັກການຖາມ ແລະ ຫຼັກພາສາ

3. ຄຳຖາມໜຶ່ງໆ ຄວນເປັນເລື່ອງດຽວ ເພື່ອໃຫ້ຜູ້ຕອບຕອບໄດ້ກົງເປົ້າໝາຍທີ່ຜູ້ຖາມ ຕ້ອງການ

4. ຄຳຖາມຄວນຄຳນຶງເຖິງເວລາທີ່ໃຫ້ຜູ້ຕອບເຮັດການຕອບ

5. ຄຳຖາມທຸກຄຳຖາມຜູ້ສອບຄວນຮູ້ໄວ້ ແລະ ວາງແຜນການໃຫ້ຄະແນນ ແຕ່ລະສ່ວນວ່າເປັ ນເທົ່າໃດ ເພື່ອປຽບທຽບ ນອກຈາກນັ້ນຕ້ອງພິຈາລະນາຄຳຕອບທີ່ມີໂອກາດເປັນໄປໄດ້ທີ່ບໍ່ຈຳເປັນ ຈະຕ້ອງກົງກັບຄຳຕອບທຸກຕົວແຕ່ກໍຈະຖືກສາມາດໄດ້ຄະແນນໄດ້ດ້ວຍລັກສະນະຂອງແບບທົດສອບອັດຕະໄນການກວດໃຫ້ຄະແນນແບບທົດສອບອັດຕະໄນ ນັກວັດຜົນການສຶກສາຫຼາຍທ່ານໄດ້ໃຫ້ຄວາມໝາຍ ແລະ ວິທີການກວດໃຫ້ຄະແນນ ແບບທົດສອບອັດຕະໄນ ວິທີວິເຄາະ ແລະ ວິທີປະເມີນທັງໝົດໄວ້ຫຼວງຫຼາຍ ເຊັ່ນ Ebel (1972 : 149-152) ໄດ້ໃຫ້ຂໍ້ສະເໜີແນະສຳລັບການກວດໃຫ້ຄະແນນໄວ້ 2 ຮູບແບບຄື: ການໃຫ້ຄະແນນດ້ວຍວິທີວິເຄາະ ແລະ ວິທີປະເມີນຄຸນນະພາບໂດຍທັງໝົດ (Analytic Scoring or Global-quality Scaling)

1. ວິທີວິເຄາະ ວິທີນີ້ສ່ວນປະກອບທີ່ສຳຄັນຕ່າງໆ ຂອງຄຳຕອບຈະເປັນຕົວກຳນົດການໃຫ້ຄະແນນຫຼາຍນ້ອຍຢ່າງອິດສະຫຼະ ການພິຈາລະນາຈະພິຈາລະນາທັງສ່ວນປະກອບທີ່ສຳຄັນຂອງຄຳຕອບ ແລະ ຄວາມສຳພັນລະຫ່ວາງສ່ວນປະກອບເຫຼົ່ານັ້ນດ້ວຍວ່າເປັນອົງປະກອບດຽວກັນຂອງຄຳຕອບ ຫຼື ບໍ່ ແຕ່ຖ້າຄວາມສຳພັນນັ້ນຊັບຊ້ອນ ແລະເຂົ້າໃຈຍາກວິທີການທຽບເກນກໍອາດຈຳໄດ້ບໍ່ສະດວກ ແລະໃຊ້ເວລາດົນ

2. ວິທີປະເມີນຄຸນນະພາບໂດຍທັງໝົດ ວິທີນີ້ຜູ້ກວດໃຫ້ຄະແນນຈະອ່ານຄຳຕອບໂດຍທັງໝົດແລະ ພິຈາລະນາຄວາມປະທັບໃຈ ແລ້ວຈຶ່ງປ່ຽນຄວາມປະທັບໃຈນັ້ນເປັນລະດັບຄະແນນບັນທຶກໄວ້ ເຮັດແບບນີ້ທຸກໆຂໍ້ເປັນວິທີການທີ່ດີກວ່າ ເພື່ອຄວບຄຸມຄວາມສະເໝີ ຫຼື ມາດຕະຖານໃນການກວດເຈ້ຍຄຳຕອບທີ່ຕ່າງກັນຄື: ການແບ່ງກຸ່ມຄຳຕອບເປັນຄ້າຍໆ ກັນ ເມື່ອແບ່ງກຸ່ມແລ້ວ ຜູ້ກວດ ໃຫ້ຄະແນນຈຶ່ງມາພິຈາລະນາຕັດສິນໃຈໃໝ່ອີກເທື່ອວ່າແຕ່ລະກອງເໝາະສົມ ຫຼື ຍັງ ຜູ້ໃຫ້ຄະແນນຈະກຳນົດຂະໜາດຂອງແຕ່ລະກອງໄວ້ລ່ວງໜ້າ ແລະ ພະຍາຍາມແບ່ງໃຫ້ມີ ການແຈກ ແຈງໃກ້ຄຽງກັບທີ່ກຳໜົດໄວ້ ໃນການແບ່ງກຸ່ມນັ້ນອາດແບ່ງໄດ້ດັ່ງນີ້:

1. ແບ່ງເປັນ 3 ກອງ ລະດັບຕ່ຳ, ລະດັບປານກາງ, ລະດັບສູງ 25% 50% 25% ຕ່ຳທີ່ສຸດ, ຕ່ຳກວ່າປານກາງ, ສູງກວ່າ, ສູງທີ່ສຸດ 5% 25% 40% 25% 5%

2. ກວດໃຫ້ຄະແນນຄຳຕອບແບບຄຳຖາມຕໍ່ຄຳຖາມ ຫຼາຍກ່ວາ

3. ຖ້າເປັນໄປໄດ້ ຄວນປົດບັງຊື່ຂອງນັກຮຽນທີ່ກຳນົດຂໍ້ສອບບໍ່ໃຫ້ຜູ້ກວດໃຫ້ຄະແນນຮູ້

4. ຖ້າເປັນໄປໄດ້ ຄວນຈັດໃຫ້ມີການກວດໃຫ້ຄະແນນຢ່າງອິດສະຫຼະ

Meherns and Lehmann (1973 : 229 - 238) ໄດ້ສະເໜີແນະການກວດໃຫ້ຄະແນນ ແບບທົດສອບອັດຕະໄນໄວ້ ດ້ວຍວິທີປະເມີນທັງໝົດ (Holistic Method) ວ່າວິທີນີ້ຄຳຕອບຈະບໍ່ຖືກແບ່ງ ອອກເປັນສ່ວນໆ ແຕ່ຜູ້ກວດຈະອ່ານຢ່າງວ່ອງໄວແລ້ວໃຊ້ຄວາມປະທັບໃຈ ແລະ ໃຊ້ມາດຕະຖານ ບາງຢ່າງກຳນົດລະດັບຂອງຄຳຕອບ ການກວດຄຳຕອບຈະຂຶ້ນຢູ່ກັບລະດັບຂອງການແບ່ງ ອາດຈະແບ່ງ ຂໍ້ສອບເປັນ 2 ກຸ່ມຄື: “ກຸ່ມທີ່ອົບຮົມໄດ້ " ກຸ່ມທີ່ອົບຮົມບໍ່ໄດ້” ຫຼື 5 ກຸ່ມ ຄື “ດີຫຼາຍຈົນເຖິງ ຕ່ຳກວ່າມາດຕະຖານ ” ໂດຍສ່ວນຫຼາຍຈະແບ່ງປະມານ 4 ຫລື 5 ກຸ່ມ ແລະ ອະທິບາຍເຖິງການກວດໂດຍວິທີ ວິເຄາະຍ່ອຍ ( Analytic Method) ວ່າການໃຫ້ຄະແນນວິທີ ວິເຄາະເປັນວິທີທີ່ມີຮູບແບບຄຳຕອບປະກອບດ້ວຍປະເດັນສະເພາະທີ່ກຳນົດໄວ້ກ່ອນແລ້ວ ຄະແນນຂອງນັກຮຽນທີ່ໄດ້ຈະຂຶ້ນຢູ່ກັບຈຳນວນປະເດັນທີ່ທ່ານຕອບ ທັງໝົດໄປເຖິງສ່ວນອື່ນໆເຊັ່ນ: ສະແດງຄວາມຄິດເຫັນໄດ້ຊັດເຈນ ການໃຫ້ເຫດຜົນ ແລະ ການຍົກຕົວຢ່າງສະໜັບສະໜູນໃນປະເດັນຄຳຕອບ ແລະ ການກຳນົດຄະແນນໃນແຕ່ລະປະເດັນ ຈະຂຶ້ນອຢູ່ກັບເວລາທີ່ໃຊ້ໃນການຕອບຄວາມຊັບຊ້ອນຂອງຄຳຖາມ ແລະ ເນື້ອຫາທີ່ຄູສອນ Whitney and Sabers(1976 : 5) ໄດ້ສະເໜີແນະການກວດໃຫ້ຄະແນນແບບທົດສອບອັດຕະໄນ ໄວ້ ຈຳນວນ 2 ວິທີ ຄື: ວິທີທຽບກັບເກນກັບວິທີຈັດອັນດັບຄຸນນະພາບ ເຊິ່ງມີລາຍລະອຽດດັ່ງນີ້:

1. ການກວດສອບໂດຍວິທີທຽບກັບເກນ ( Analytic Method ຫລື Point Method ) ການກວດໃຫ້ຄະແນນວິທີນີ້ຄູຈະຕ້ອງກຳນົດແນວການຕອບໄວ້ລ່ວງໜ້າ ໂດຍແຍກແນວຄຳຕອບອອກເປັນຕອນຍ່ອຍໆ ຕາມອົງປະກອບຂອງການຕອບ ເຊັ່ນ: ການຈັດລຽງຄວາມຄິດ, ຫຼັກຖານທີ່ຍົກມາອ້າງ, ຕົວຢ່າງປະກອບ ເປັນຕົ້ນ ຈາກນັ້ນກຳນົດຄະແນນເຕັມຂອງແຕ່ລະຕອນຍ່ອຍ ເມື່ອຄູອ່ານຂໍ້ສອບຂອງນັກຮຽນກໍຈະໃຫ້ຄະແນນແຕ່ລະຕອນຍ່ອຍໆ ມາທັງໝົດກ່ອນເປັນຄະແນນທີ່ໄດ້ຮັບໃນຂໍ້

2. ການກວດໂດຍວິທີການຈັດອັນດັບຄຸນນະພາບ (Rating Method ຫລື Holistic Method ຫຼື Scoring Method ຫລື Global Scoring) ການກວດໃຫ້ຄະແນນວິທີນີ້ ຄູຈະອ່ານຄຳຕອບຂອງນັກຮຽນເທື່ອລະຄົນ ເມື່ອອ່ານເຈ້ຍຄຳຕອບແລ້ວກໍຈະແຍກເຈ້ຍຄຳຕອບເປັນກຸ່ມ ຫຼື ເປັນກອງ ຕາມລະດັບຄຸນນະພາບຂອງການຕອບ ເຊັ່ນ: ແຍກເຈ້ຍຄຳຕອບອອກເປັນ 5 ກອງ ດັ່ງເຊັ່ນ ດີຫຼາຍ, ດີ ພໍໃຊ້, ເກືອບພໍໃຊ້ ອ່ອນ ເມື່ອຄູອ່ານເຈ້ຍຄຳຕອບແລ້ວກໍຈະຈັດກອງໃດກອງໜຶ່ງໃນຫ້າກອງນີ້ຫຼັງ ຈາກນັ້ນຄູກໍຈະພິຈາລະນາເຈ້ຍໃນແຕ່ລະກອງ ໂດຍພິຈາລະນາວ່າໃຜຕອບດີກວ່າກັນ ແລ້ວລຽງ ເຈ້ຍຄຳຕອບຕາມລຳດັບຂອງຄຸນນະພາບ ແລ້ວໃຫ້ຄະແນນຕາມລຳດັບຂອງຄຸນນະພາບອີກທີໜຶ່ງ

Wiersma and Jurs (1985 : 175-177) ໄດ້ສະເໜີແນະການກວດໃຫ້ຄະແນນແບບທົດສອບ ອັດຕະໄນໄວ້ວ່າ ເປັນແບບທົດສອບທີ່ມີຄວາມເຄັ່ງຄັດໃນການໃຫ້ເກນການໃຫ້ຄະແນນຢ່າງຫຼາຍ ເພາະວ່າເປັນການຍາກທີ່ຈະໃຫ້ຄະແນນກັນຄື ຈະມີຄວາມເຊື່ອຖືໄດ້ຍາກ ເຊິ່ງມີຈຸດສຳຄັນຢູ່ທີ່ຂະບວນການໃຫ້ຄະແນນຂອງຜູ້ກວດ ວິທີການ

ນີ້ກໍຈະຊ່ວຍເພີ່ມຄວາມເປັນປາລະໄນໃນການໃຫ້ຄະແນນ ເພີ່ມຂຶ້ນຢ່າງໃດຕາມຕ້ອງອາໄສເວລາທີ່ຫຼາຍຂຶ້ນໃນການກວດ ທີ່ກ່ອນຈະໃຫ້ຄະແນນຄູຈະຕ້ອງມີ ວິທີການ ຫຼື ກຳນົດກອບຂອງຄຳຕອບໄວ້ລວ່ງໜ້າ ຮຽກວ່າ ໂມເດວຄຳຕອບ ເຊິ່ງເປັນສິ່ງຈຳເປັນການກຳນົດຄຳໃຫ້ປະເດັນສຳຄັນໆ ທີ່ຈະເຮັດໃຫ້ການກວດແຕກຕ່າງກັນນ້ອຍທີ່ສຸດ ວິທີການໃຫ້ຄະແນນມີ 2 ວິທີ ຄື:

1. ການໃຫ້ຄະແນນວິທີວິເຄາະຍ່ອຍ ( Analytic Scoring) ຈຸດສຳຄັຍຂອງການໃຫ້ຄະແນນຄໍ າຕອບຢູ່ທີ່ຈຳແນກ ແລະ ກຳນົດຂອບເຂດຂອງຄຳຕອບເປັນລາຍລະອຽດ ມີຄວາມຊັດເຈນຫຼາຍຈຶ່ງ ງ່າຍຕໍ່ການກວດ ແລະ ມີຄວາມເຊື່ອຖືໄດ້

2. ການໃຫ້ຄະແນນວິທີການໃຫ້ຄຸນນະພາບໂດຍທັງໝົດຫຼື ວິທີການປະເມີນທັງໝົດ (Holistic Scoring) ເປັນວິທີທີ່ອາໄສຄວາມປະທັບໃຈກັບຄຳຕອບ ຄຳຕອບຈະຖືກມອງໃນພາບລວມຫຼາຍກວ່າຈະແຍກອອກມາເປັນສ່ວນຍ່ອຍ ໂດຍຈະແຍກເຈ້ຍຄຳຕອບອອກເປັນ 2 ກອງ ຫຼືຫຼາຍກວ່າ ເຊັ່ນ ກອງດີຫຼາຍ, ກອງດີ, ກອງພໍໃຊ້ ກອງອ່ອນຫຼາຍ ການກວດຈະວ່ອງໄວ ແລະ ງ່າຍກວ່າ ແຕ່ເຮັດໃຫ້ບໍ່ມີຄວາມເປັນປາລະໄນ ມີຄວາມເຊື່ອຖືໄດ້ນ້ອຍ

ເຍົາວະດີ ວິບູນຍົດລີ (2545 : 132-138) ໄດ້ສະເໜີແນະການກວດໃຫ້ຄະແນນແບບທົດສອບອັດຕະໄນໄວ້ວ່າ ຂໍ້ສອບແບບອັດຕະໄນວັດຄວາມສາມາດຂອງນັກຮຽນບໍ່ໄດ້ຈົບສິ້ນລົງພຽງນຳຂໍ້ສອບໄປທົດສອບ ນັກຮຽນເທົ່ານັ້ນ ແຕ່ຍັງນຳເອົາເຈ້ຍຄຳຕອບມາກວດໃຫ້ຄະແນນຕາມວິທີການກວດທີ່ມີລະບົບ ເພື່ອໃຫ້ຄະແນນທີ່ໄດ້ມີຄວາມທ່ຽງກົງ ແລະ ເຊື່ອຖືໄດ້ ຫຼັງຈາກເຮົາພໍໃຈກັບຄຳຖາມ ຫຼື ຂໍ້ສອບເຊິ່ງສອດຄ່ອງກັບຈຸດປະສົງຂອງການສອນ ແລະ ແບບທົດສອບທີ່ສ້າງຢ່າງດີແລ້ວ ງານຖັດໄປຄື:

1. ການກວດໃຫ້ຄະແນນເຈ້ຍຄຳຕອບຂອງນັກຮຽນ ບັນຫາໃນຂັ້ນນີ້ຄືຈະກວດເຈ້ຍຄຳຕອບຂອງ ນັກຮຽນດ້ວຍວິທີການຈັດຄວາມລະດັບລຽງລົງໄປໃຫ້ນ້ອຍທີ່ສຸດ

2. ສົນໃຈແຕ່ສະເພາະຄຳຕອບທີ່ສຳຄັນ ແລະ ກ່ຽວຂ້ອງຄຳຖາມເທົ່ານັ້ນ

3. ລະວັງອິດທິພົນອັນເກີດຈາກຄວາມຄິດເຫັນສ່ວນຕົວເຂົ້າໄປມີສ່ວນກ່ຽວຂ້ອງກັບການໃຫ້ຄະແນນ

4. ນຳວິທີການທີ່ເປັນມາດຕະຖານໃຫ້ການກວດເປັນໄປຢ່າງສະເໝີຕົ້ນສະເໝີປາຍແກ່ນັກ

ຮຽນທຸກຄົນ ສຳລັບການກວດທີ່ຈະເຮັດໃຫ້ເກີດຄວາມຍຸດຕິທຳເປັນໄປຢ່າງຊື່ກົງເຊິ່ງເປັນບັນຫາທີ່ສຳຄັນຂອງການກວດຂໍ້ສອບແບບນີ້ ຖ້າຫາກການກວດຂາດຄວາມຄົງຊື່ກົງກໍບໍ່ ສາມາດນຳຄະແນນມາປຽບທຽບກັນໄດ້ ມີວິທີການກວດສອບແບບອັດຕະໄນທີ່ນິຍົມໃຊ້ກັນຫຼາຍທີ່ສຸດໃນປະຈຸບັນມີ 2 ວິທີ ຄື:

1. ການກວດແບບວິທີທຽບເກນ (Analytical Method ຫຼື Point Method ) ການກວດຂໍ້ສອບອັດຕະໄນ ໂດຍວິທີທຽບເກນນັ້ນ ຄູຕ້ອງກຳນົດແນວການຕອບໄວ້ກ່ອນໂດຍແຍກ ແນວຄຳຕອບອອກເປັນຕອນຍ່ອຍໆຕາມຄວາມສຳຄັນ ສະນັ້ນ ໃນການກວດໃຫ້ຄະແນນໂດຍວິທີນີ້ ຜູ້ກວດຈະຕ້ອງກຳນົດລາຍລະອຽດຂອງຄຳຕອບໄວ້ກ່ອນທີ່ຈະເຮັດການກວດໃຫ້ຄະແນນ ຜູ້ກວດຈະນຳເອົາເຈ້ຍມາທຽບກັບເກນ ຫຼື ແນວຄຳຕອບທີ່ໄດ້ກຳນົດແນວທາງຄຳຕອບນັ້ນ ຄູຜູ້ອອກຂໍ້ສອບຄວນຈະເຮັດໄວ້ພ້ອມໆ ກັບການຂຽນຂໍ້ຄຳຖາມເລີຍບໍ່ຄວນຈະມາກຳນົດແນວຄຳຕອບເມື່ອຈະເລີ່ມກວດການໃຫ້ຄະແນນແບບນີ້ເໝາະສົມສຳລັບຂໍ້ສອບແບບກຳນົດຂອບເຂດຂອງການຕອບຫຼາຍກ່ວາແບບບໍ່ກຳນົດຂອບເຂດຂອງການຕອບ

2. ການກວດໂດຍວິທີຈັດອັນດັບຄຸນນະພາບ ການກວດຂໍ້ສອບອັດຕະໄນໂດຍວິທີຈັດອັນດັບ ຄຸນນະພາບ

ນັ້ນ ຜູ້ກວດຈະອ່ານເຈ້ຍຄໍາຕອບຂອງ ຜູ້ເຂົ້າສອບທຸກຄົນເສຍກ່ອນເທື່ອລະຂໍ້ ແລ້ວຈຶ່ງນໍາ ຄໍາຕອບນັ້ນມາຈັດເປັນກຸ່ມໆ ຕາມຄວາມສາມາດເຊັ່ນ: ກຸ່ມດີຫຼາຍ  ດີປານກາງ ພໍໃຊ້ ຫຼື ໃຊ້ບໍ່ໄດ້ ແລ້ວຈຶ່ງກວດເບິ່ງຄຸນນະພາບຂອງຄໍາຕອບໃນແຕ່ລະກຸ່ມອີກທີເຊັ່ນ: ໃນກຸ່ມຕອບດີຫຼາຍນັ້ນ ຕ້ອງພິຈາລະນາ ກັນອີກວ່າ ໃຜຕອບດີກວ່າກັນ ໃຫ້ລຽງອັນດັບຂອງເຈ້ຍຄໍາຕອບໃຫ້ຕິດຕໍ່ກັນໄປ ແລ້ວຈຶ່ງໃຫ້ຄະແນນ ໃຜຢູ່ອັນດັບທໍາອິດກໍໄດ້ຄະແນນສູງສຸດຫຼຸດນ້ອຍລົງໄປຕາມລໍາດັບ ການກວດແບບນີ້ຈະເຮັດໃຫ້ຄະແນນມີຄວາມເຊື່ອໝັ້ນຫຼາຍຍິ່ງຂຶ້ນ  ຂໍ້ສະເໜີແນະໃນການກວດສອບແບບທົດສອບອັດຕະໄນ

1. ໃຫ້ກວດຄໍາຕອບເທື່ອລະຂໍ້ ນັ້ນຄື ຖ້າຈະກວດຄໍາຕອບຂໍ້ 1 ກໍໃຫ້ກວດຂໍ້ 1 ຂອງ ນັກຮຽນທຸກຄົນຈົນຈົບ ແລ້ວຈຶ່ງເລີ່ມກວດຂໍ້ 2 ຄູບໍ່ຄວນກວດຂໍ້ສອບໃຫ້ສໍາເລັດເທື່ອລະຄົນ

2. ໃຫ້ມີຄວາມຊື່ຕົງໃນການກວດ ເກນໃນການໃຫ້ຄະແນນຈະເໝືອນກັນສໍາລັບທຸກໆ ຄໍາຕອບ ຄູບາງຄົນອາດຈະໃຫ້ຄະແນນຄ່ອນຂ້າງນ້ອຍ ສໍາລັບຄໍາຕອບແຜນທໍາອິດ  ແຕ່ຈະໃຫ້ຄະແນນຫຼາຍຂຶ້ນສໍາລັບຄໍາຕອບແຜນຫຼັງໆ ທັ້ງໆ ທີ່ຄໍາຕອບເຫຼົ່ານັ້ນເປັນແນວດຽວກັນ

3. ເວລາກວດບໍ່ຄວນເບິ່ງຊື່ນັກຮຽນ ເພື່ອປ້ອງກັນບໍ່ໃຫ້ເກີດອະຄະຕິໃນເວລາກວດ

4. ຖ້າສາມາດໃຫ້ມີຜູ້ກວດ 2 ຄົນ ໃນແຕ່ລະຄໍາຕອບແລ້ວຫາຄ່າສະເລ່ຍຂອງຄະແນນນໍາມາເປັນຄະແນນທີ່ຄໍາຕອບນັ້ນໆ ຄວນຈະໄດ້ຈິງໆ ຈະເຮັດໃຫ້ຄະແນນມີຄວາມເຊື່ອໝັ້ນຫຼາຍຂຶ້ນ

5. ຄວນຈັບເຈ້ຍຄໍາຕອບມາກວດແບບສຸ່ມ

6. ບໍ່ຄວນເບິ່ງຊື່ຜູ້ຕອບໃນການກວດເຈ້ຍຄໍາຕອບ

7. ໃນເວລາກວດນັ້ນ ຄູບໍ່ຄວນນໍາເອົາເລື່ອງ “ ລາຍມື ” ຂອງຜູ້ຕອບມາເປັນສ່ວນໃນການໃຫ້ຄະແນນ

8. ພະຍາຍາມກວດຂໍ້ໃດຂໍ້ໜຶ່ງໃຫ້ສໍາເລັດວ່ອງໄວ ບໍ່ຄວນຢຸດພັກຈົນກ່ວາຈະກວດຂໍ້ນັ້ນ ສໍາເລັດແລ້ວ

9. ພະຍາຍາມຂຽນຂໍ້ແນະນໍາ ແລະ ແກ້ໄຂຄວາມຜິດໃນເຈ້ຍຄໍາຕອບ ເພື່ອໃຫ້ຜູ້ຕອບຮູ້ວ່າຕົນບົກຜ່ອງບ່ອນໃດ ໃນການວັດລະດັບຄວາມເຂົ້າໃຈທາງຄະນິດສາດ ເລຂາຄະນິດສອດຄ່ອງກັບແນວຄິດຂອງ  Pirie and Kieren  ໃຊ້ແບບທົດສອບອັດຕະໄນ ແບບກໍານົດຂອບເຂດຂອງຄໍາຕອບ ແລະມີເກນການ ໃຫ້ຄະແນນໂດຍວິທີວິເຄາະຍ່ອຍ ( Analytic Scoring ) ຄຸນນະພາບເຄື່ອງມື ນັກການສຶກສາຫຼາຍທ່ານໄດ້ສະເໜີຄວາມຄິດເຫັນກັບຄຸນນະພາບເຄື່ອງມືໄວ້ດັ່ງນີ້:

ບຸຍຊົມ ສີສະອາດ (2544 : 81 ) ໄດ້ກ່າວເຖິງຄຸນນະພາບຂອງເຄື່ອງມືໄວ້ວ່າ ເປັນການເກັບ ລວບລວມຂໍ້ມູນທີ່ຈະຕ້ອງມີຄຸນນະພາບຫຼາຍປະການປະກອບກັນດັ່ງນີ້:

1. ທຸກຂໍ້ຕ້ອງມີຄຸນນະພາບເຂົ້າເກນ ໃນດ້ານລະດັບຄວາມຍາກ ອໍານາດຈໍາແນກ,ຄວາມທ່ຽງກົງຕາມເນື້ອໃນ

2. ເມື່ອນໍາທຸກຂໍ້ທີ່ມີຄຸນນະພາບຕາມຂໍ້ 1 ມາທັງໝົດເປັນສະບັບ ເຄື່ອງມືທັງສະບັບນັ້ນ ຈະຕ້ອງມີຄຸນນະພາບໃນດ້ານຄວາມທ່ຽງກົງ ແລະ ຄວາມເຊື່ອໝັ້ນ

ສົມນຶກ ພັດທິບທານີ (2551 : 193) ໄດ້ກ່າວເຖິງຄຸນນະພາບຂອງເຄື່ອງມືໄວ້ວ່າ ການກວດສອບ ຄຸນນະພາບຂອງແບບທົດສອບທີ່ສ້າງຂຶ້ນວ່າມີຄຸນນະພາບດີພຽງໃດ ທັງລັກສະນະເປັນລາຍຂໍ້ ແລະທັງສະບັບ ຖ້າຂໍ້ສອບຂໍ້ໃດ ຫຼື ສະບັບໃດມີຄຸນນະພາບດີກໍຄວນນໍາໄປໃຊ້ ແລະ ຖ້າບົກຜ່ອງກໍຄວນປັບປຸງແກ້ໄຂ

ພິຊິດ ລິດທິດລູຍ (2551 : 134) ໄດ້ກ່າວເຖິງຄຸນນະພາບຂອງເຄື່ອງມືໄວ້ວ່າ ເຄື່ອງມືວັດຜົນທີ່ດີ ຈະຕ້ອງເປັນເຄື່ອງມືທີ່ມີຄຸນນະພາບຈຶ່ງຈະຊ່ວຍໃຫ້ການວັດຜົນມີຄວາມຖືກຕ້ອງເຊື່ອຖືໄດ້ ແລະຜົນການປະເມີນທີ່ໄດ້ຍອມເຊື່ອຖືໄດ້ດ້ວຍ ດັ່ງນັ້ນກ່ອນທີ່ຈະນໍາເຄື່ອງມືໄປໃຊ້ຈຶ່ງຄວນຈະກວດສອບຄຸນນະພາບ ຂອງເຄື່ອງມືກ່ອນທຸກເທື່ອ

ໃນເລື່ອງຄວາມທ່ຽງກົງ ຄວາມເຊື່ອໝັ້ນ ຄວາມຍາກ ອຳນາດຈຳແນກ ແລະ ຄວາມເປັນປະລະໄນ ເຄື່ອງວັດຜົນບາງຊະນິດຈຳເປັນຕ້ອງກວດຄຸນນະພາບໃຫ້ຄົບທັງ 5 ປະການ ແຕ່ບາງຊະນິດອາດກວດສອບພຽງບາງປະການແລ້ວແຕ່ລັກສະນະເຄື່ອງມື

ໄພສານ ອະລິກຳ (2554 :254) ໄດ້ກ່າວເຖິງຄຸນນະພາບຂອງເຄື່ອງມືໄວ້ວ່າ ເປັນເຈົ້າລັກສະນະທີ່ບົ່ງບອກເຖິງຄວາມສາມາດຂອງເຄື່ອງມືທີ່ໃຊ້ໃນການເກັບລວບລວມຂໍ້ມູນເພື່ອການວິໄຈເຊັ່ນ: ຄວາມທ່ຽງກົງ ຄວາມເຊື່ອໝັ້ນ ຄວາມຍາກ ແລະ ອຳນາດຈຳແນກ ເປັນຕົ້ນ ຄຸນສົມບັດທີ່ບົ່ງຊີ້ເຖິງຄຸນນະພາບຂອງ ເຄື່ອງມືທີ່ໃຊ້ໃນການວິໄຈປະກອບດ້ວຍຄວາມທ່ຽວກົງ ແລະ ຄວາມເຊື່ອໝັ້ນເປັນຫຼັກ ອຳນາດຈຳແນກນັ້ນຈະໃຊ້ສະເພາະໃນກໍລະນີຂອງແບບທົດສອບ ແລະ ແບບສອບຖາມ ແລະ ຄວາມຍາກຈະໃຊ້ສະເພາະ ກໍລະນີແບບທົດສອບເທົ່ານັ້ນ ສະຫຼຸບໄດ້ວ່າ ເປັນການປະເມີນຄຸນນະພາບຂອງແບບທົດສອບວ່າມີຄວາມຖືກຕ້ອງເຊື່ອຖືໄດ້ ຫຼື ເຄື່ອງມືມີຄຸນນະພາບເໝາະສົມໃນການນຳໄປໃຊ້ໃນການວິໄຈຫຼາຍນ້ອຍພຽງໃດ ຄຸນນະພາບຂອງເຄື່ອງມື ຈະເຊື່ອຖືໄດ້ ຈະຕ້ອງມີການກວດສອບລາຍລະອຽດທີ່ສາມາດບົ່ງບອກເຖິງຄວາມສາມາດຂອງ ເຄື່ອງມືນັ້ນໆ ບໍ່ວາຈະເປັນຄວາມທ່ຽງກົງ ຄວາມເຊື່ອໝັ້ນ ຄວາມຍາກ ອຳນາດຈຳແນກ ແລະ ຄວາມເປັນ ປະລະໄນຄວາມທ່ຽງກົງ ນັກການສຶກສາໄດ້ກ່າວເຖິງຄວາມໝາຍລັກສະນະ ແລະ ວິທີການຂອງຄວາມທ່ຽງ (Validity) ຫຼື ຄວາມກົງ ດັ່ງນີ້:

ສິລິໄຊ ກາຍຈັນວາສີ (2552 : 99) ໄດ້ກ່າວເຖິງຄວາມທ່ຽງກົງໄວ້ວ່າ ເປັນຄວາມໃກ້ຄຽງກັນລະຫວ່າງຄ່າທີ່ວັດໄດ້ກັບຄ່າທີ່ແທ້ຈິງ ຖ້າຜົນການວັດໄດ້ມີຄ່າໃກ້ຄຽງກບຄ່າທີ່ແທ້ຈິງພຽງໃດ ກໍຖືວ່າ ການວັດມີຄວາມທ່ຽງກົງຫຼາຍຍິ່ງຂຶ້ນພຽງນັ້ນ ຄວາມທ່ຽງກົງຈຶ່ງເປັນຄຸນສົມບັດທີ່ສຳຄັນທີ່ສຸດຂອງແບບວັດຄວາມທ່ຽງກົງຈຳແນກຕາມລັກສະນະ ຫຼື ຈຸດປະສົງຂອງການວັດໄດ້ 3 ປະເພດໃຫຍ່ໆ ດັ່ງນີ້:

1. ຄວາມທ່ຽງກົງທາງເນື້ອໃນ (Content Validity )
2. ຄວາມທ່ຽງກົງທາງເກນສຳພັນ (Criterion-Related Validity )
3. ຄວາມທ່ຽງກົງທາງໂຄງສ້າງ (Construct Validity )

1. ຄວາມທ່ຽງກົງທາງເນື້ອໃນ (Content Validity ) ໝາຍເຖິງ ເຄື່ອງມືທີ່ສາມາດວັດໄດ້ຕາມເນື້ອໃນທີ່ຕ້ອງການວັດ ຄວາມທ່ຽງກົງຕາມເນື້ອໃນ ຈຳແນກໄດ້ 2 ຊະນິດ:

1.1 ຄວາມທ່ຽງກົງທາງເຫດຜົນ (Logical Validity ) ເປັນຄວາມທ່ຽງກົງທີ່ໃຫ້ຜູ້ຊ່ຽວຊານພິຈາລະນາວ່າຂໍ້ສອບແຕ່ລະຂໍ້ວັດໄດ້ກົງຕາມຕາຕະລາງວິເຄາະຫຼັກສູດຫຼື ບໍ່

1.2 ຄວາມທ່ຽງກົງທາງພິນິດ (Face Validity ) ເປັນຄຸນນະພາບຂອງແບບທົດສອບທີ່ພິຈາລະນາວາຂໍ້ສອບແຕ່ລະຂໍ້ວັດໄດ້ກົງຕາມເຈົ້າລັກສະນະທີ່ນິຍາມໄວ້ ຫຼື ບໍ່ ເຊິ່ງເປັນຄວາມທຽງກົງທີ່ເໝາະກັບແບບວັດດ້ານຄວາມຮູ້ສຶກ ( Affective Domain ) ກ່ອນສ້າງຂໍ້ສອບ ຈະຕ້ອງ ນິຍາມສິ່ງທີ່ຈະວັດໃຫ້ຊັດເຈນກ່ອນ ຫຼັງຈາກນັ້ນຈຶ່ງຈະສ້າງຂໍ້ສອບ ຫຼື ຂໍ້ຄວາມແຕ່ລະຂໍ້ວ່າສ້າງກົງຕາມທີ່ນິຍາມໄວ້ຫຼື ບໍ່ ຖ້າສ້າງໄດ້ກົງຕາມທີ່ນິຍາມໄວ້ ກໍສະແດງວາແບບທົດສອບມີຄວາມທ່ຽງກົງຕາມເນື້ອໃນທາງດ້ານຄວາມທ່ຽງກົງເຊີງພິນິດ 2. ຄວາມທ່ຽງກົງເຊີງເກນສຳພັນ (Criterion – Related Validity) ໝາຍເຖິງ ຄຸນນະພາບ ຂອງເຄື່ອງມືທີ່ເອົາຜົນການວັດຂອງແບບທົດສອບໄປຫາຄວາມສຳພັນກັບເກນທີ່ຕ້ອງການຈຳແນກໄດ້ 2 ຊະນິດຄື:

2.1 ຄວາມທ່ຽງກົງທາງສະພາບ (Concurrent Validity ) ໝາຍເຖິງ ຄວາມທ່ຽງກົງ ທີ່ ເອົາຜົນການວັດຂອງແບບທີ່ທົດສອບທີ່ສ້າງຂຶ້ນໄປຫາຄວາມສຳພັນກັບເກນໃນສະພາບປະຈຸບັນ ( ລ້ວນ ສາຍຍົດ ແລະ ອັງຄະນາ ສາຍຍົດ.2543 : 251) ໂດຍການຄຳນວນຄ່າສຳປະສິດທົດສຳພັນ ລະຫວ່າງແບບທົດສອບກັບຄະແນນເກນຈາກເຄື່ອງມືອື່ນທີ່ສາມາດໃຊ້ບົ່ງບອກສະຖານພາບປະຈຸບັນ ຂອງລັກສະນະທີ່ມີຈຸດປະສົງວັດນັ້ນໄດ້ ເຄື່ອງມືທັງສອງເຮັດການວັດໃນເວລາດຽວກັນ ສຳປະສິດທີສຳພັນ ໃນທາງບວກທີ່ສູງ ສະແດງເຖິງຄະແນນຈາກແບບທົດສອບ ສາມາດໃຊ້ເປັນຕົວບົ່ງຊີ້ທີ່ດີຂອງສະຖານພາບ ຂອງລັກສະນະທີ່ມີຈຸດປະສົງວັດນັ້ນ

2.2 ຄວາມທ່ຽງກົງມາງພະຍາກອນ (Predictive Validity) ໝາຍເຖິງ ຄວາມທ່ຽງທີ່ໄດ້ເອົາມາ ຈາກການເອົາຜົນການວັດຂອງແບບທົດສອບທີ່ສ້າງຂຶ້ນໄປຄຳນວນຫາຄວາມສຳພັນກັບເກນ ໃນອະນາຄົດເພື່ອທີ່ຈະເອົາຜົນການສອບໄປພະຍາກອນຜົນຄວາມສຳເລັດໃນອະນາຄົດ(ລ້ວນ ສາຍຍົດ ແລະ ອັງຄະນາ ສາຍຍົດ.2543ຂ: 257) ໂດຍຄຳນວນຄ່າສຳປະສິດທິດສຳພັນລະຫວາງຄະແນນຈາກແບບທົດສອບ ກັບຄະແນນຈາກເກນ ຈາກເຄື່ອງມືທີ່ສາມາດບົ່ງບອກຜົນສຳເລັດຂອງລັກສະນະທີ່ມີຈຸດປະສົງວັດໃນອະນາຄົດເນື່ອງຈາກເຄື່ອງມືທັງສອງທຳການວັດໃນເວລາຕ່າງກັນ ໂດຍແບບທົດສອບທີ່ສ້າງ ທຳການວັດໃນປະຈຸບັນ ແຕ່ອີກເຄື່ອງມືໜຶ່ງຕ້ອງຊ່ວງເວລາດຳການວັດໃນເວລາຕໍ່ມາ ເພື່ອໃຫ້ໄດ້ ຄະແນນເກນອະນາຄົດ

3. ຄວາມທ່ຽງກົງທາງໂຄງສ້າງ (Construct Validity) ໝາຍເຖິງ ການເບິ່ງຂໍ້ຄຳຖາມຂອງ ແບບວັດໂຄງສ້າງ ຫຼື ແນວຄິດທິດສະດີໃດຈາກຜົນການຕອບຂໍ້ຄຳຖາມຂອງແບບວັດນັ້ນ ຄວາມທ່ຽງກົງຕາມໂຄງສ້າງພິຈາລະນາຜົນການຕອບວ່າເປັນໄປຕາມໂຄງສ້າງທີ່ກຳນົດໄວ້ ຫຼື ບໍ່ ໂດຍພິຈາລະນາຈາກສຳພັນລະຫວ່າງຂໍ້ຄຳຖາມຂອງແບບວັດສະບັບນັ້ນກັບສະບັບອື່ນທີ່ພິສູດມາແລ້ວ

ມິນແມນ (Millman, 1975 ອ້າງໃນຈະລັດສະລີ ທອງຊຸມນຸມ , 2540 : 15-16) ໄດ້ໃຫ້ຄຳແນະນຳວ່າ ໃນການກຳນົດຄະແນນຈຸດຕັດນັ້ນ ຄວນຄຳນຶງເຖິງປັດໄຈຕ່າງ ໆ ດັ່ງຕໍ່ໄປນີ້

1. ຄວາມສາມາດ (Performance) ຂອງຜູ້ຮຽນອື່ນການກຳນົດຄະແນນຈຸດຕັດນັ້ນຕ້ອງອາໄສຜົນການສອບຂອງຜູ້ຮຽນອື່ນດ້ວຍ ຈຶ່ງຕ້ອງຄຳນຶງເຖິງດ້ວຍວ່າ ໂດຍທົ່ວໄປຄວາມສາມາດຂອງຜູ້ສອບທີ່ໃຊ້ເພື່ອກຳນົດຄະແນນຈຸດຕັດເປັນຢ່າງໃດ ອາດໃຊ້ຜູ້ສອບທີ່ມີຄວາມສາມາດເປັນບັນທັດຖານໃນການກຳນົດຄະແນນຈຸດຕັດທີ່ປະຕິບັດໄດ້ ເຊັ່ນ:ນັກທົດສອບອາດຈະກຳນົດວ່າຄະແນນຈຸດຕັດຄວນເປັນຢ່າງນ້ອຍ 10 % ຂອງຄະແນນຂອງຜູ້ທີ່ມີຄວາມສາມາດໃນລະດັບອ້ອມຮູ້ (Master) ເປັນຕົ້ນ

2. ຄວາມຍາກຂອງແບບທົດສອບຄວນໃຊ້ດຸລົຍພິນິດໃນການຕັດສິນວ່າ ຈຸດປະສົງຕ່າງໆ ທີ່ຈະກໍ່ການທົດສອບນັ້ນ ຜູ້ສອບທີ່ມີຄວາມສາມາດປານກາງນັ້ນຄວນຈະເຮັດໄດ້ຖືກຕ້ອງເທົ່າໃດ ຈຶ່ງຈະຢູ່ໃນລະດັບທີ່ພໍໃຈ

3. ຜົນກະທົບທີ່ຕາມມາຈຸດໝາຍທີ່ສຳຄັນຂອງການກຳນົດຄະແນນຈຸດຕັດຄື: ການທີ່ຜູ້ຮຽນມີຄວາມຮູ້, ຄວາມສາມາດໃນລະດັບຕ່ຳທີ່ສຸດ ເພື່ອໃຫ້ພຽງພໍທີ່ຈະສຶກສາຕໍ່ໃນລະດັບທີ່ສູງກວ່າໄດ້ ແຕ່ບາງເທື່ອກໍຕ້ອງຄຳນຶງດ້ວຍວ່າຖ້າຄະແນນຈຸດຕັດສູງເກີນໄປຈະເຮັດໃຫ້ຜູ້ຮຽນບໍ່ຜ່ານໂດຍບໍ່ຈຳເປັນ ແຕ່ຖ້າຫາກວ່າຕ່ຳເກີນໄປກໍຈະເຮັດໃຫ້ໄດ້ມາດຕະຖານການສຶກສາຕ່ຳດ້ວຍ ຫຼື ເຮັດໃຫ້ຜູ້ຮຽນເກີດບັນຫາໃນການຮຽນຕໍ່ໄປ ດັ່ງນັ້ນຈຶ່ງຄວນຫາຄະແນນຈຸດຕັດທີ່ເໝາະສົມມາໃຊ້ໃນການຕັດສິນໂດຍຍຶດຄວາມສຳຄັນຂອງເນື້ອໃນ ຫຼື ຈຸດປະສົງເປັນຫຼັກວ່າ ເລື່ອງໃດຈຳເປັນຕ້ອງໃຫ້ຜູ້ຮຽນສອບຜ່ານ ແລະ ເລື່ອງໃດທີ່ຈຳເປັນນ້ອຍກໍໃຫ້ພິຈາລະນາຕັດໄດ້

4. ຜົນທາງຈິດວິທະຍາ ແລະ ການລົງທຸນທາງການສຶກສາການທີ່ໃຫ້ຜູ້ຮຽນສອບຕົກຢູ່ສະເໝີໆ ຄວນເປັນຜົນເສຍຕໍ່ຈິດໃຈຂອງຜູ້ສອບ ແລະ ເປັນຜົນເສຍຕໍ່ການລົງທຸນ ດັ່ງນັ້ນຈຶ່ງຄວນພິຈາລະນາວ່າຈະແກ້ບັນຫາເຫຼົ່ານີ້ໄດ້ຢ່າງໃດ ເພາະວ່າ " ຄວາມສາມາດຄວາມເຂົ້າໃຈ ແລະ ຄວາມຊາບລຶກ ເປັນປະສົບການທີ່ຄົນໂດຍຫຼາຍມີຢູ່ " ບໍ່ແມ່ນວ່າມີຢູ່ທັງໝົດ ຫຼື ບໍ່ມີເລີຍ ແຕ່ວ່າຕ່າງຄົນກໍມີຢູ່ຫຼາຍນ້ອຍແຕກຕ່າງກັນ

5. ຄວາມຄາດເຄື່ອນຈາກການເດົາ ແລະ ການສຸ່ມຕົວຢ່າງຂໍ້ສອບການທີ່ຜູ້ສອບສອບຜ່ານ ຫຼື ບໍ່ຜ່ານ ອາດເກີດຈາກຄວາມຄາດເຄື່ອນໃນການເດົາກໍໄດ້ ຖ້າຮູບແບບຂອງຂໍ້ສອບເປັນແບບຊີ້ແນະ ຫຼື ເປີດໂອກາດໃຫ້ນັກຮຽນຕອບຖືກໄດ້ໂດຍການເດົາ ເຮົາອາດແກ້ໄຂໄດ້ໂດຍການກຳນົດຄະແນນຈຸດຕັດໃຫ້ສູງຂຶ້ນ ສ່ວນຄວາມຄາດເຄື່ອນໃນການສຸ່ມຂໍ້ສອບເປັນຄວາມລຳອຽງທີ່ເນື່ອງມາຈາກການບໍ່ພິຈາລະນາຊະນິດຂອງຄຳຖາມແລະຊີ້ນຫາໃນໂດເມນ ທຳໃຫ້ການເລືອກຕົວຢ່າງບໍ່ຄວບຄຸມວັດຖຸປະສົງທີ່ຕັ້ງໄວ້ ເຊິ່ງອາດເບິ່ງໄດ້ຈາກດັດນີຄວາມສຳພັນຂອງເນື້ອໃນ

ບຸຍເຊີດ ພິບໂຍອະນັນຕະພົງ (2527 : 114) ກ່າວວ່າ ການກຳນົດຄະແນນຈຸດຕັດຕ້ອງຄຳນຶງເຖິງສິ່ງຕໍ່ໄປນີ້

1. ປະເພດຂອງແບບທົດສອບທີ່ໃຊ້ວ່າເປັນແບບເຕີມຄຳ ຖືກຜິດ ຫລືເລືອກຕອບຫຼາຍຕົວເລືອກ

2. ຈຳນວນຂໍ້ສອບ ເພາະຈຳນວນຂໍ້ນ້ອຍມີແນວໂນ້ມຕ້ອງກຳນົດຄະແນນຈຸດຕັດໃຫ້ສູງ ແຕ່ຖ້າຈຳນວນຂໍ້ຫຼາຍ ມີແນວໂນ້ມຕ້ອງກຳນົດຄະແນນຈຸດຕັດໃຫ້ຕ່ຳ

3. ພິຈາລະນາຈາກການໃຊ້ແບບທົດສອບເກົ່າ ໆ ສັງເກດພຶດຕິກຳ ຫຼື ຈາກຜົນການວິໄຈອື່ນໆປະກອບວິທີການກຳນົດຄະແນນຈຸດຕັດໃນທີ່ນີ້ຈະກ່າວເຖິງສະເພາະວິທີການກຳໜົນດຄະແນນຈຸດຕັດທີ່ໄດ້ຮັບຄວາມນິຍົມສຳລັບການນຳໄປປະຍຸກໃຊ້ ດັ່ງນີ້:

**1. ການກຳນົດຄະແນນຈຸດຕັດ**ໂດຍໃຊ້ພິນິດໄສຂອງຜູ້ຊ່ຽວຊານ ການກຳນົດຄະແນນຈຸດຕັດໃນແນວນີ້ມີຜູ້ສະເໜີໄວ້ຫຼາຍວິທີ ( ບຸຍເຊີດ ພິບໂຍອະນັນຕະພົງ, 2527 : 123-125 ; Glass , 1978 : 246-248) ເຊັ່ນ:

**1.1 ວິທີກຳນົດຄະແນນຈຸດຕັດ**ໂດຍໃຊ້ຜົນທີ່ໄດ້ຈາກການປະຕິບັດຂອງຄົນອື່ນໆ ເປັນເກນ (Performance of other as a Criterion) ລະດັບເກນ ຫຼື ຄະແນນຈຸດຕັດນີ້ສ້າງຂຶ້ນໂດຍອ້າງອີງພາຣາມິເຕີຣິກ ອີງປະຊາກອນຜູ້ເຂົ້າສອບ ດັ່ງນັ້ນ ຄະແນນຈຸດຕັດອາດກຳນົດໄດ້ໂດຍໃຊ້ຄ່າມັດຍະຖານ ( Median ) ຂອງຄະແນນຈາກແບບທົດສອບ ຫຼື ຄະແນນທີ່ສອດຄ່ອງກັບຈຳນວນເປີເຊັນຕົກຂອງຜູ້ສອບຜ່ານເກນເຊິ່ງລະບຸໄວ້ລ່ວງໜ້າ ໂດຍອາໄສຜູ້ຊ່ຽວຊານເນື້ອໃນວັດຜົນສຳເລັດພິຈາລະນາແບບທົດສອບ ແລ້ວໃຫ້ລະບຸຈຳນວນເປີເຊັນຕົກຂອງຜູ້ສອບຜ່ານວ່າຄວນເປັນເທົ່າໃດກ່ອນ ເຊິ່ງການກຳນົດວິທີນີ້ເປັນການອ້າງອີງ ( Norm) ຢ່າງແທ້ຈິງ ນັກທົດສະດີກ່ຽວກັບອີງເກນຈຶ່ງບໍ່ເຫັນດ້ວຍເນື່ອງຈາກຍັງເປັນການອີງກຸ່ມນັ້ນເອງ

**1.2 ນັບຖອຍຫຼັງຈາກ 100 % (Counting Backwards from 100 %)** ໃນການສ້າງແບບທົດສອບໂດຍພະຍາຍາມໃຫ້ຂໍ້ສອບທຸກໆ ຂໍ້ສອດຄລ້ອງກັບວັດຖຸປະສົງການຮຽນຮູ້ແລ້ວ ຜູ້ສອບທຸກຄົນຄວນເຮັດແບບທົດສອບນັ້ນໄດ້ທຸກຂໍ້ຄື ລະດັບປະຕິບັດຈະເປັນ 100 % ແຕ່ຄວາມເປັນຈິງແລ້ວເຮັດບໍ່ໄດ້ ຈຶ່ງຕ້ອງໃຊ້ວິທີຫຼຸດລະດັບຄະແນນຈຸດຕັດລົງມາສຳລັບຄວາມບໍ່ສົມບູນ ແລະ ຄວາມຄລາດເຄື່ອນຕ່າງໆ ຈາກ 100 % ເຫຼືອ 95 % ຫຼື 80 % ຫຼື ອື່ນໆ ເກນທີ່ຕັ້ງໃນລັກສະນະນີ້ເກີດບັນຫາໃນການກຳນົດກັນຕາມອຳເພີໃຈ

**1.3 ການພິຈາລະນາຈາກຄວາມສາມາດຕ່ຳສຸດ (Judging Minimal Competence)** ການກຳນົດຄະແນນຈຸດຕັດດ້ວຍວິທີນີ້ ອາໄສແນວຄິດຂອງເກນເຊວທີ່ສະເໜີໄວ້ວ່າ ຄວາມສາມາດຈະຕໍ່ເນື່ອງກັນຈາກບໍ່ມີເລຍຈົນເຖິງປະຕິບັດໄດ້ໂດຍສົມບູນທັງໝົດ ແລະ ຄະແນນຈຸດຕັດຈະແບ່ງຜູ້ທີ່ມີຄວາມສາມາດ ແລະ ບໍ່ມີຄວາມສາມາດອອກຈາກກັນ ດັ່ງນັ້ນຫາຜູ້ທີ່ມີຄວາມສາມາດຕ່ຳສຸດທີ່ຈະຍອມຮັບວ່າຜ່ານໄດ້ ກໍຈະເຮັດໃຫ້ໄດ້ຜົນຄະແນນຈຸດຕັດທີ່ເໝາະສົມ ສຳລັບວິທີການນີ້ມີຜູ້ສຶກສາ ແລະ ໄດ້ສະເໜີເທັກນິກໃນການຫາຄະແນນຄວາມສາມາດຕ່ຳສຸດໄວ້ຫຼາຍຄົນນຳກັນ ເຊັ່ນ

**1.3.1 ວິທີຂອງນີເດລົດກີ (Nedelsky , 1954)** ວິທີນີ້ເປັນການຫາຄະແນນຈຸດຕັດ ໂດຍອາໄສຄວາມໜ້າຈະເປັນຂອງການເດົາຕອບຖືກ ຈາກແບບທົດສອບເລືອກຕອບຫຼາຍຕົວເລືອກ ຄະແນນຈຸດຕັດຈະກຳນົດຈາກຄະແນນສອບຜ່ານຂັ້ນຕ່ຳຂອງນັກຮຽນທີ່ມີສະມັດຖະພາບຂັ້ນຕ່ຳສຸດ (ກຸ່ມຄາບເສັ້ນ) ຊຶ່ງຄິດໄລ່ໄດ້ຈາກສູດດັ່ງນີ້:

ເມື່ອ D ແທນ ຄະແນນສອບຜ່ານຂັ້ນຕ່ຳ (ຄະແນນຈຸດຕັດ)

MFD ແທນ ຄ່າເສລີ່ຍຄະແນນການເດົາຕອບຖືກທັງສະບັບ ຫາໄດ້ຈາກຜົນທັງຫມົດຂອງຄວາມໜ້າຈະເປັນໃນການເດົາຕອບຖືກ

SFD ແທນ ສ່ວນບ່ຽງເບນມາດຕະຖານຂອງຄະແນນການເດົາຕອບຖືກ(ຫລືຄວາມໜ້າຈະເປັນໃນການເດົາຕອບຖືກ)

K ແທນ ຄ່າຄົງທີ່ ຖ້າຕົວເລືອກຜິດເດັ່ນແຈ້ງຈະໃຊ້ຄ່າ 0.5 ຖ້າຕົວເລືອກແຕກຕ່າງກັນນ້ອຍໆຈະໃຊ້ຄ່າ 1.0 ຖ້າຕົວເລືອກຄ້າຍຄືກັນຫຼາຍຈະໃຊ້ຄ່າ 1.5

ວິທີການຫາຄະແນນຈຸດຕັດ ມີລຳດັບຂັ້ນດັ່ງນີ້

1. ນຳຂໍ້ສອບໄປໃຫ້ຄູປະຈຳວັດຜົນສຳເລັດກຸ່ມໜຶ່ງພິຈາລະນາ

2. ໃຫ້ກາເຄື່ອງໝາຍທັບຕົວເລືອກຂອງຂໍ້ສອບ ເຊິ່ງຄິດວ່ານັກຮຽນທີ່ມີສະມັດຖະພາບຂັ້ນຕ່ຳສຸດຮູ້ວ່າບໍ່ແມ່ນຕົວເລືອກຖືກ ອາດມີຫຼາຍກວ່າ 1 ຕົວເລືອກ

3. ໃຫ້ນຳຈຳນວນຕົວເລືອກທີ່ເຫຼືອມາຂຽນເປັນເສດສ່ວນກັບ ເຊັ່ນ: ມີຈຳນວນຕົວເລືອກເຫຼືອຢູ່ 3 ຕົວເລືອກ ກໍຂຽນເປັນ 1/3 ເຊິ່ງກໍຄື ຄະແນນການເດົາຕອບຖືກ

4. ເມື່ອຄູພິຈາລະນາຂໍ້ສອບໄປໄດ້ຈຳນວນໜຶ່ງແລ້ວ ຄວນຢຸດພິຈາລະນາຊົ່ວຄາວ ເພື່ອນຳຜົນທີ່ພິຈາລະນາແລ້ວມາປະຊຸມພິຈາລະນາຮ່ວມກັນ ເພື່ອປຽບທຽບ ແລະ ອະພິປາຍເຖິງການໃຊ້ມາດຕະຖານໃນການພິຈາລະນາວ່າກົງກັນ ຫຼື ບໍ່ ແລະໃນຂັ້ນນີ້ໃຫ້ພິຈາລະນາກຳນົດຄ່າຂອງ K ໄວ້ເລີຍວ່າຄວນໃຊ້ເທົ່າໃດ ຫຼັງຈາກນັ້ນແລ້ວກໍໃຫ້ຄູພິຈາລະນາຂໍ້ສອບຂໍ້ອື່ນໆຕໍ່ໄປຢ່າງອິດສະຫຼະ

5. ຫາຄ່າສະເລ່ຍຂອງຄະແນນການເດົາຕອບຖືກຂອງຂໍ້ສອບແຕ່ລະຂໍ້ ( ຜົນລັບທີ່ໄດ້ ເອີ້ນວ່າ "ຄວາມໜ້າຈະເປັນໃນການເດົາຕອບຖືກ )

6. ຫາຜົນທັງໝົດ ແລະ ສ່ວນບ່ຽງເບນມາດຕະຖານຂອງ " ຄວາມໜ້າຈະເປັນໃນການເດົາຕອບຖືກ " ( ເຊິ່ງຄິດໄລ່ຈາກຂໍ້ສອບທຸກຂໍ້ໃນແບບທົດສອບນັ້ນ ) ແລ້ວນຳໄປແທນຄ່າໃນສູດ ເພື່ອຫາຄ່າ D ຊຶ່ງຈະໄດ້ຄະແນນຈຸດຕັດຂອງແບບທົດສອບ

**1.3.2 ວິທີຂອງອິເບນ (Ebel , 1972)** ວິທີນີ້ຄຳນຶງເຖິງຈຸດອ່ອນຂອງຄະແນນຈຸດຕັດທີ່ໃຊ້ໃນການກຳນົດເປີເຊັນຕົ໋ກອີງຄະແນນສອບທັງໝົດ ວ່າອາດມີຂໍ້ບົກຜ່ອງ ເນື່ອງຈາກຂໍ້ສອບນັ້ນງ່າຍ ຫຼື ຍາກເກີນໄປ ຫຼື ອຳນາດຈຳແນກນ້ອຍກວ່າທີ່ຜູ້ສ້າງຕັ້ງໃຈໄວ້ ການທີ່ຈະສອບຜ່ານ ຫຼື ບໍ່ອາດເນື່ອງມາຈາກຕົວຂໍ້ສອບຫລາຍກວ່າລະດັບຄວາມສາມາດທີ່ແທ້ຈິງຂອງຜູ້ສອບກໍໄດ້ ອິເບນຈຶ່ງສະເໜີວິທີແກ້ໄຂໂດຍການໃຫ້ວິເຄາະເນື້ອໃນຂອງຂໍ້ສອບໃນແງ່ຂອງຄວາມກ່ຽວຂ້ອງ (Relevance) ແລະ ຄວາມຍາກງ່າຍ (Difficulty) ຂອງຂໍ້ສອບແຕ່ລະຂໍ້ທຽບກັບເປີເຊັນຕົກຄວາມຄາດຫວັງ ເຊິ່ງເປັນປະລິມານທີ່ຄາດວ່າຜູ້ທີ່ມີຄວາມສາມາດຕ່ຳສຸດທີ່ຈະສອບຜ່ານຄວນເຮັດໄດ້ ໂດຍໄດ້ຈຳແນກໄວ້ ດັ່ງຕາຕະລາງ

ຕາຕະລາງ 1 ສະແດງ ເປີເຊັນການສອບຜ່ານທີ່ຄາດຫວັງ ຈາກລັກສະນະຂໍ້ສອບ ແລະ ລະດັບຄວາມຍາກຂອງຂໍ້ສອບລັກສະນະຂໍ້ສອບ ລະດັບຄວາມຍາກງ່າຍ ປານກາງ ຍາກຈຳເປັນ (essential)……………………….. ສຳຄັນ (important)………..........……………..ຍອມຮັບໄດ້ (acceptable)………........…………ບໍ່ແນ່ໃຈ (questionable)………………..

ວິທີການຫາຄະແນນຈຸດຕັດມີລຳດັບຂັ້ນດັ່ງນີ້

1. ນຳຂໍ້ສອບທີ່ຕ້ອງການວິເຄາະໄປໃຫ້ຄູປະຈຳວັດຜົນສຳເລັດພິຈາລະນາວ່າຂໍ້ສອບມີລັກສະນະກົງກັບບັນຫາຫຼາຍນ້ອຍພຽງໃດ ມີລະດັບຄວາມຍາກງ່າຍພຽງໃດ
2. ຈຳແນກຂໍ້ສອບຕາມລັກສະນະ ແລະ ຄວາມຍາກ ໂດຍແຈກແຈງເປັນຄວາມຖີ່ທັງໝົດ
3. ກຳນົດເປີເຊັນການສອບຜ່ານຕາມລັກສະນະ ແລະ ຄວາມຍາກຂອງຂໍ້ສອບ
4. ຄູນຄວາມຖີ່ຈຳນວນຂໍ້ກັບເປີເຊັນການສອບຜ່ານທີ່ຄາດຫວັງ ແລະ ທັງໝົດຜົນຄູນທັງໝົດ
5. ຫາຄ່າເປີເຊັນການສອບຜ່ານທີ່ຄາດຫວັງໂດຍສະເລ່ຍ
6. ກຳນົດຄະແນນຈຸດຕັດຈາກຄ່າເປີເຊັນການສອບຜ່ານທີ່ຄາດຫວັງໂດຍສະເລ່ຍຈາກຂັ້ນທີ່ 5

**1.3.3 ວິທີຂອງແອງກົບ (Angoff , 1971)**

ວິທີນີ້ຈະອາໄສຫຼັກການຂອງຄວາມໜ້າຈະເປັນທີ່ນັກຮຽນເຊິ່ງມີສະມັດຖະພາບຂັ້ນຕ່ຳສຸດທີ່ຈະຍອມຮັບໄດ້ຕອບຂໍ້ສອບຖືກ ໂດຍນຳໄປໃຫ້ຜູ້ຊ່ຽວຊານເນື້ອໃນວັດຜົນສຳເລັດ ຫຼື ຄູຜູ້ສອນພິຈາລະນາ ຄ່າຄວາມໜ້າຈະເປັນໃນການຕອບຂໍ້ສອບຖືກ ຈະນຳມາໃຊ້ເປັນຄະແນນຈຸດຕັດ ວິທີການຫາຄະແນນຈຸດຕັດມີລຳດັບຂັ້ນດັ່ງນີ້:

1) ນຳຂໍ້ສອບທັງໝົດໄປໃຫ້ຄູຜູ້ສອນກຸ່ມໜຶ່ງພິຈາລະນາຊີ້ນຫາຂໍ້ສອບ ແລະ ຄວາມຍາກ

2) ໃຫ້ຄູຜູ້ສອນພິຈາລະນາຕໍ່ໄປວ່ານັກຮຽນທີ່ມີຄວາມສາມາດຂັ້ນຕ່ຳສຸດຕາມເນື້ອໃນຂໍ້ສອບຈະມີຄວາມໜ້າຈະເປັນໃນການຕອບຂໍ້ສອບແຕ່ລະຂໍ້ຖືກເປັນເທົ່າໃດ

3) ນຳຄ່າຄວາມໜ້າຈະເປັນໃນການຕອບຂໍ້ສອບຖືກທີ່ຄຣູຜູ້ສອນແຕ່ລະຄົນພິຈາລະນາໄວ້ມາຫາຄ່າສະເລ່ຍຂອງຄວາມໜ້າຈະເປັນ

4) ກຳນົດຄະແນນຈຸດຕັດຈາກຄ່າສະເລ່ຍໃນຂັ້ນທີ່ 3 ໂດຍການທັງຫມົດຄ່າສະເລ່ຍຂອງຄວາມໜ້າຈະເປັນຈາກຂໍ້ສອບທຸກຂໍ້ ຈະໄດ້ຄະແນນຈຸດຕັດຂອງແບບທົດສອບສະບັບນັ້ນ

2. ການກຳນົດຄະແນນຈຸດຕັດໂດຍໃຊ້ການທົດລອງສອບ ຫຼື ໃຊ້ການທົດສອບຮ່ວມກັບການໃຊ້ ພິນິດໄສການກຳນົດຄະແນນຈຸດຕັດ 2 ແນວທາງທີ່ກ່າວເຖິງພ້ອມກັນນີ້ ຕ້ອງນຳແບບທົດສອບໄປທົດລອງສອບກັບນັກຮຽນແລ້ວພິຈາລະນາເລືອກຄະແນນຈຸດຕັດທີ່ເໝາະສົມ ເຊິ່ງສ່ວນໃຫຍ່ຈະໃຊ້ຫຼັກສະຖິຕິເປັນເຄື່ອງມືໃນການກຳນົດຄະແນນຈຸດຕັດ ມີຜູ້ສະເໜີໄວ້ຫຼາຍວິທີ (ບຸຍເຊີດ ພິບໂຍອະນັນຕະພົງ, 2527 : 131-147 ; ຈະລັດສະລີ ທອງຊຸມນຸມ, 2540 : 21-24) ເຊັ່ນ:

2.1 ວິທີກຳນົດຄະແນນຈຸດຕັດທີ່ແທ້ຈິງຂອງ ບຸຍເຊີດ ພິບໂຍອະນັນຕະພົງ ຫຼື ວິທີກຳນົດຄະແນນຈຸດຕັດຈາກຄວາມຄາດເຄື່ອນຂອງການເດົາຕອບວິທີນີ້ໄດ້ຄຳນຶງເຖິງທິດສະດີການທົດສອບທີ່ວ່າ ຄະແນນຄວນມີຄວາມຄາດເຄື່ອນຢູ່ດ້ວຍ ດັ່ງນັ້ນ ຄະແນນຈຸດຕັດຈຶ່ງຄວນພິຈາລະນາຂອບເຂດຂອງຄວາມຄາດເຄື່ອນປະກອບດ້ວຍ ເຊິ່ງຄວາມຄາດເຄື່ອນອາດເກີດຈາກການເດົາຕອບຖືກ ຄະແນນທີ່ສອບໄດ້ຈຶ່ງມີຄ່າສູງກວ່າຄວາມສາມາດແທ້ຈິງຢູ່ນ້ອຍໆ ວິທີການຢ່າງໜຶ່ງກໍຄື: ຈະຕ້ອງຫາຄະແນນຈຸດຕັດທີ່ກຳຈັດຄວາມຄາດເຄື່ອນຈາກການເດົາຕອບຖືກອອກໄປເສຍກ່ອນ ຈຶ່ງຈຳເປັນຕ້ອງນຳແບບທົດສອບໄປສອບກັບນັກຮຽນ ແລ້ວໃຊ້ສູດປັບແກ້ຄະແນນເດົາເພື່ອຫາຄະແນນຈຸດຕັດທີ່ແທ້ຈິງ ບຸຍເຊີດ ພິບໂຍອະນັນຕະພົງ ໄດ້ສະເໜີສູດໄວ້ ໂດຍດັດແປງແນວຄິດຂອງກິນຟອດ (Guilford) ທີ່ໃຊ້ໃນການປັບແກ້ຄະແນນເດົາຕອບ ດັງນີ້ເມື່ອ ແທນ ສັດສ່ວນຂອງຜູ້ຕອບຖືກຈິງ ຫຼື ຜູ້ຮູ້ຄຳຕອບ ແທນ ຈຳນວນຜູ້ຕອບຖືກໃນຂໍ້ນັ້ນ

ແທນ ຈຳນວນຜູ້ຕອບຜິດໃນຂໍ້ນັ້ນ

ແທນ ຈຳນວນຕົວເລືອກຂອງແບບທົດສອບ

ແທນ ຈຳນວນຜູ້ສອບທັງໝົດນຳສັດສ່ວນຂອງຜູ້ຕອບຖືກຈິງ ( ) ໃນແຕ່ລະຂໍ້ມາທັງຫມົດກັນ ຈະໄດ້ຄະແນນຈຸດຕັດ ( C ) ຂອງແບບທົດສອບ ນັ້ນຄື

1.2 ວິທີກຳນົດຄະແນນຈຸດຕັດໂດຍເພີ່ມຄະແນນເກນອື່ນໆ (Bootstrapping onother Criterion Score)ໂດຍອາໄສການລະບຸຈາກເກນພາຍນອກກຳນົດວ່າ ສຳເລັດ ຫຼື ອ້ອມຮູ້ຢ່າງຊັດເຈນ ເຊັ່ນ: ອາດໃຊ້ເກນວ່າຜູ້ໄດ້ຮັບປະກາສນິຍະບັດເປັນເກນທີ່ຈະຈຳແນກຜູ້ມີຄວາມສຳເລັດການສຶກສາກັບຜູ້ຍັງມີຄວາມຮູ້ບໍ່ຄົບຖ້ວນພຽງພໍທີ່

ຈະສຳເລັດການສຶກສາ ການຫາຄະແນນຈຸດຕັດຈະພິຈາລະນາຈາກຄະແນນ ຈຸດຕັດທີ່ສາມາດແບ່ງຄົນໄດ້ສອດຄ່ອງຕາມເກນພາຍນອກ ໂດຍການປັບຄະແນນຈຸດຕັດເທື່ອລະຄະແນນຈົນກວ່າຈະໄດ້ຜົນສອດຄ່ອງກັບເກນພາຍນອກຫຼາຍທີ່ສຸດ

## 6. ການປະເມີນຜົນ ແລະ ແບບທົດສອບອີງເກນ

ການປະເມີນຜົນແບບອີງເກນ ມີພື້ນຖານມາຈາກທິດສະດີດ້ານພຶດຕິກຳຂອງສະກິນເນີ (B.F.Skinner) ແຫ່ງມະຫາວິທະຍາໄລຮາວາ ທີ່ມີຄວາມເຊື່ອວ່າ ການສຶກສາເປັນສິ່ງສຳຄັນສຳລັບນັກຮຽນທຸກຄົນ ທຸກຄົນສາມາດຮຽນໄດ້ ແລະ ໜ້າທີ່ຂອງຄູກໍຄື: ຊ່ວຍໃຫ້ນັກຮຽນຈຳນວນຫຼາຍໄດ້ຮຽນຮູ້ ທິດສະດີນີ້ເຊື່ອວ່າ ນັກຮຽນທຸກຄົນສາມາດຮຽນບົດຮຽນໃດໆ ກໍໄດ້ ຫາກໃຫ້ເວລາ ແລະ ໂອກາດເຈົ້າຫຼາຍພໍ ( ເບຍວັນນະ ຜ່ອງແຜ້ວ , 2529 : 3)

ປອບແຟມ ແລະ ຮູເຊກ (Popham and Husek , 1969 : 1) ກ່າວວ່າການປະເມີນຜົນແບບອີງເກນເປັນການກວດສອບຜົນສັມລິດຂອງບຸກຄົນໃນການກະທຳພຶດຕິກຳຕ່າງ ໆ ໂດຍປຽບທຽບກັບເກນທີ່ກຳນົດໄວ້

ອະນັນສະລິໂສພາ (2525 : 31) ກ່າວວ່າ ການວັດແບບອີງເກນເປັນການຕີຄວາມໝາຍຂອງຄະແນນຜົນການສອບຂອງນັກຮຽນແຕ່ລະຄົນ ໂດຍການນຳໄປປຽບທຽບກັບເກນ ເຊິ່ງໄດ້ກຳນົດໄວ້ລ່ວງໜ້າ

ບຸຍທຳ ກິດປີດາບໍລິສຸດ (2535 : 31) ກ່າວເຖິງ ການວັດຜົນແບບອີງເກນ (CriterionReferenced Measurement) ວ່າເປັນການວັດທີ່ປຽບທຽບຜົນກັບເກນມາດຕະຖານທີ່ກຳນົດໄວ້ໂດຍທີ່ຈະປະເມີນວ່າ ຜູ້ຮຽນມີຄວາມຮູ້ ຫຼື ບໍ່ມີຄວາມຮູ້ຫຍັງດ້ວຍ

## 7. ແບບທົດສອບອີງເກນ

### 7.1 ຄວາມຫມາຍຂອງແບບທົດສອບອີງເກນ

ລ້ວນ ສາຍຍົດ ແລະ ອັງຄນາ ສາຍຍົດ( 2539 : 20) ກ່າວວ່າ ແບບທົດສອບອີງເກນ ( Criterion-Referenced Test) ເປັນແບບທົດສອບທີ່ສ້າງຂຶ້ນໂດຍຍຶດຫຼັກການຮຽນເພື່ອຄວາມອ້ອມຮູ້ສອບເພື່ອປັບປຸງການຮຽນ ການສອນເປັນຫຼັກເນື້ອໃນແບບທົດສອບມັກເປັນວົງແຄບ ແລະ ເນັ້ນຄວາມຄວບຄຸມເນື້ອໃນ ແລະ ຈຸດປະສົງຢ່າງຫຼາຍ ແບບທົດສອບແບບນີ້ມີຈຸດໝາຍສອບ ເພື່ອພັດທະນາຄວາມຮູ້, ຄວາມສາມາດ ນັ້ນຄື ຄົນໃດສອບບໍ່ຜ່ານເກນທີ່ກຳນົດກໍຮ່ຳຮຽນໃໝ່ ແລ້ວສອບຊ່ອມເສີມດ້ວຍ ແບບທົດສອບເດີມ ຖ້າເກີດການຮຽນຮູ້ເພີ່ມຂຶ້ນກໍຈະສາມາດສອບຜ່ານເກນໄດ້ອາດສະຫຼຸບຄວາມຫມາຍຂອງແບບທົດສອບອີງເກນ ໄດ້ດັ່ງນີ້:

1. ເປັນແບບທົດສອບທີ່ສ້າງຂຶ້ນຕາມຈຸດປະສົງການຮຽນຮູ້ ເຊິ່ງໄດ້ມີການກຳນົດ ຫຼື ນິຍາມໄວ້ຢ່າງຊັດເຈນເພື່ອໃຫ້ສາມາດວັດຄວາມຮູ້ຄວາມສາມາດໄດ້ກົງຕາມຄວາມຄາດຫວັງທີ່ກຳນົດໄວ້ໃນຈຸດປະສົງການຮຽນຮູ້ນັ້ນ ໆ

2. ມີການກຳນົດເກນ ຫຼື ມາດຕະຖານຂັ້ນຕ່ຳ ເພື່ອໃຊ້ຕັດສິນວ່າ ຜູ້ຮຽນມີຄວາມຮູ້,ຄວາມສາມາດ ຫຼື ປະຕິບັດໃນເລື່ອງນັ້ນ ຫຼື ທີ່ຮຽກວ່າ ອ້ອມຮູ້ (Master) ຕາມເຈດຕະນາຂອງຈຸດປະສົງການຮຽນຮູ້ແລ້ວ ຫຼື ບໍ່ຈາກຄຳຈຳກັດຄວາມຂອງການປະເມີນຜົນແບບອີງເກນ ແລະ ແບບທົດສອບອີງເກນທີ່ກ່າວມາແລ້ວຂ້າງຕົ້ນ ຈະເຫັນໄດ້ວ່າການປະເມີນຜົນແບບອີງເກນ ຕ້ອງອາໄສເກນໃນການແປຄວາມຫມາຍຄະແນນຜົນການສອບຂອງນັກຮຽນ ແລະ ການສ້າງແບບທົດສອບອີງເກນຈະຕ້ອງຄຳນຶງເຖິງຈຸດປະສົງການຮຽນຮູ້ ເພື່ອໃຫ້ສາມາດແປຄວາມໝາຍຂອງຄະ

ແບບຜົນການສອບໄດ້ວ່າ ຜູ້ຮຽນມີຄວາມອ້ອມຮູ້ໃນຈຸດປະສົງທີ່ກຳນົດໄວ້ຫຼາຍນ້ອຍພຽງໃດ ຫຼັງຈາກທີ່ມີການຮຽນການສອນໄປແລ້ວ

**7.2 ຄວາມເປັນມາຂອງແບບທົດສອບອີງເກນ**

ແນວຄວາມຄິດກ່ຽວກັບການວັດຜົນແບບອີງເກນນັ້ນມີມາຕັ້ງແຕ່ ຄ.ສ. 1951 ເມື່ອ ຟານາແກນ (Flanagan) ໄດ້ອະທິບາຍຄຳວ່າ “ ເກນປົກກະຕິ ” ແລະ “ ມາດຕະຖານ ” ນອກຈາກນີ້ ຟານາແກນ ຍັງໄດ້ອະທິບາຍເຖິງການທົດສອບແບບອີງເກນໃນລັກສະນະຂອງຜູ້ຮຽນຈະແປໜັງສືໂດຍຜິດ ບໍ່ເກີນ 3 ແຫ່ງ (ສົມສັກດິ໌ ສິນທຸລະເວດ , 2525 : 47 ອ້າງເຖິງໃນເສົາວະນິດ ຣົ່ມສະຣີ , 2541 : 7)ເກວເຊວ (Glaser , 1963 : 519-521) ເປັນບຸກຄົນທຳອິດທີ່ໃຊ້ຄຳວ່າ “ ການວັດຜົນແບບອີງເກນ ” ( Criterion-Referenced Measurement ) ນອກຈາກນີ້ ອີເບນ ( Ebel ) ກ່າວວ່າ ໃນການທົດສອບໃດກໍ່ຕາມຈະມີຄວາມໝາຍສົມບູນກໍຕໍ່ເມື່ອມີການອ້າງອີງເຖິງເນື້ອໃນຢ່າງຊັດເຈນ ເຊິ່ງຄະແນນຈະແປໄດ້ຄວາມວ່າຢູ່ໃນລະດັບໃດຂອງເນື້ອໃນບ່ອນເຮັດວຽກສອບວັດ ຫຼື ທີ່ທ່ານຮຽນຮູ້ເປັນຮ້ອຍລະເທົ່າໃດຂອງເນື້ອໃນທັງໝົດຈະເຫັນໄດ້ວ່າ ແນວຄິດເຫຼົ່ານີ້ຄືສ່ວນທີ່ຮຽກວ່າ ການວັດຜົນແບບອີງເກນ ນັ້ນເອງ (ໂກວິດ ປະວາລົບເລີກ , 2523 : 17-18 ) ສ່ວນໃນປະເທດໄທ ການວັດຜົນແບບອີງເກນເລີ່ມມີການກ່າວເຖິງເມື່ອປະມານປີ ພ.ສ. 2517(ອາດສະໜາ ປະວາລົບເລີກ , 2517 : 80-85 ອ້າງເຖິງໃນ ເສົາວະນິດ ຣົ່ມສະລີ , 2541 ) ແລະ ໄດ້ມີການຕີພິມບົດຄວາມລົງໃນວານສານວັດຜົນການສຶກສາສະບັບເດືອນ ມັງກອນ – ເມສາ 2523 ໄດ້ລົງບົດຄວາມທັງເຫຼັ້ມວ່າດວ້ຍເລື່ອງຂອງການວັດຜົນແບບອີງເກນ ຫຼັງຈາກນັ້ນກຸ່ມຜູ້ທີ່ສົນໃຈໃນດ້ານການວັດຜົນແບບອີງເກນໄດ້ຄົ້ນຄວ້າເພີ່ມເຕີມຕະຫລອດເວລາ ໃນທີ່ສຸດມີການນຳເອົາການວັດຜົນແບບອີງເກນບາງສ່ວນເຂົ້າບັນຈຸໃນລະບຽບການປະເມີນຜົນຫຼັກສູດປະຖົມສຶກສາ 2521 ຕະຫລອດຈົນຫຼັກສູດມັດທະຍົມສຶກສາຕອນຕົ້ນ 2521 ແລະ ຕອນປາຍ 2524 ຈົນເຖິງປະຈຸບັນ ແລະ ໃນເວລາໃກ້ຄຽງກັນນັ້ນ ການຂຽນຂໍ້ສອບໂດຍຍຶດຈຸດປະສົງເຊີງພຶດຕິກຳ ໄດ້ເຜີຍແຜ່ໄປສູ່ຄູຜູ້ສອນທຸກລະດັບ ການຂຽນຂໍ້ສອບແນວນີ້ຖືວ່າເປັນຂໍ້ສອບແບບອີງເກນຊະນິດໜຶ່ງ (ບຸຍເຊີດ ພິບໂຍອະນັນຕະພົງ, 2527 : 9)

**7.3 ລັກສະນະຂອງແບບທົດສອບອີງເກນ**

ໄດ້ມີຜູ້ອະທິບາຍລັກສະນະຂອງແບບທົດສອບອີງເກນໄວ້ດັ່ງນີ້ໂກວິດ ປະວາລົບເລີກ (2523 : 18-19) ໄດ້ສະຫຼຸບລັກສະນະຂອງແບບທົດສອບອີງເກນໄວ້ດັ່ງນີ້:

1. ການຍຶດຈຸດປະສົງເປັນຫຼັກ ຫຼື ຈະຮຽກວ່າອີງຈຸດປະສົງທາງພຶດຕິກຳເຫຼົ່ານັ້ນເປັນເກນເພື່ອຈະບົ່ງຊີ້ວ່າໃຜຜ່ານເກນທີ່ກຳນົດໄວ້ໃນຈຸດປະສົງແລ້ວ ຫຼື ບໍ

2. ການຂະຫຍາຍຈຸດປະສົງໃຫ້ຄອບຄຸມປະຊາກອນຂອງພຶດຕິກຳທີ່ຮຽກວ່າ ໂດເມນແບບທົດສອບໃນລັກສະນະນີ້ ຮຽກວ່າ Domain-Referenced test ເຊິ່ງເມື່ອສອບວັດແລ້ວສາມາດອ້າງອີງໄດ້ວ່າ ບຸກຄົນມີຄວາມສາມາດໃນລະດັບໃດ ຕາມຄະແນນມາດຕະຖານ ຫຼື ມີຄວາມຮູ້ເທົ່າໃດ

ສະງົບ ລັກສະນະ (2523 : 36-37) ໄດ້ກ່າວເຖິງລັກສະນະສຳຄັນຂອງແບບທົດສອບອີງເກນວ່າ

1. ເປັນແບບທົດສອບທີ່ສ້າງຂຶ້ນຈາກພື້ນຖານຂອງຈຸດປະສົງ ຫຼື ສິ່ງທີ່ຕ້ອງການໃຫ້ຜູ້ສອບນັ້ນປະຕິບັດໄດ້ທີ່ໄດ້ຮັບການນິຍາມໄວ້ຢ່າງຊັດເຈນ

2. ລາຍຂໍ້ຂອງແບບທົດສອບ ຈະຕ້ອງວັດຈຸດປະສົງຫລືສິ່ງທີ່ຕ້ອງການໃຫ້ຜູ້ສອບນັ້ນປະຕິບັດໄດ້

3. ຄະແນນທີ່ໄດ້ຄວນແປຄວາມໝາຍວ່າ ຜູ້ສອບສາມາດບັນລຸຕາມເກນທີ່ກຳນົດໄວ້ ຫຼື ບໍ່

ອະນັນ ສະລິໂສພາ (2525 : 190) ກ່າວວ່າ ແບບທົດສອບອີງເກນໃຊ້ສຳລັບວັດຄວາມຮູ້ຄວາມສາມາດຂອງນັກຮຽນແຕ່ລະຄົນ ວ່າເຖິງເກນຂັ້ນຕ່ຳຕາມທີ່ເຮົາຄາດຫວັງໄວ້ ຫຼື ບໍ່ ບາງທີກໍເອີ້ນແບບທົດສອບນີ້ອີກຊື່ໜຶ່ງວ່າ Mastery test ແບບທົດສອບນີ້ຈຶ່ງເປັນການວັດຄວາມຮູ້ ແລະ ທັກສະຕ່າງໆ ໃນຕົວນັກຮຽນວ່າເຖິງເກນທີ່ກຳນົດໄວ້ ຫຼື ບໍ່ ໂດຍບໍ່ຄຳນຶງເຖິງຄວາມແຕກຕ່າງລະຫວ່າງນັກຮຽນ

ສຳເລີງ ບຸຍເຮືອງຣັດນ (2527 : 83) ກ່າວເຖິງລັກສະນະຂອງແບບທົດສອບທີ່ສ້າງຂຶ້ນມາວັດຜົນສຳເລັດທາງການຮຽນຕາມຫຼັກຂອງການວັດຜົນແບບອີງເກນນັ້ນ ມັກຈະສ້າງເພື່ອໃຊ້ກັບການຮຽນ ການສອນເພື່ອອ້ອມຮູ້ (Mastery Learning) ຊຶ່ງຫຼັກການນີ້ບລູມ (Bloom) ເປັນຜູ້ສະເໜີໄວ້ ໂດຍມີແນວຄິດດັ່ງນີ້:

1. ນັກຮຽນທຸກຄົນສາມາດຮຽນຮູ້ສິ່ງຕ່າງ ໆ ຕາມທີ່ສອນສັ່ງກັນໃນໂຮງຮຽນນັ້ນ ໄດ້ຢ່າງເທົ່າທຽມກັນ ຖ້າຈັດການຮຽນ ການສອນໃຫ້ຢ່າງເໝາະສົມ

2. ນັກຮຽນທຸກຄົນສາມາດຮຽນໄດ້ຜົນສຳເລັດເທົ່າກັນ ກໍຕໍ່ເມື່ອນັກຮຽນປະເພດ “ໂງ່-ຊ້າ”ໄດ້ຮັບເວລາໃນການຮຽນຢ່າງພຽງພໍ ແລະ ໄດ້ຮັບການຊ່ວຍເຫຼືອໃນເລື່ອງການຮຽນຢ່າງດີຈາກຄູຜູ້ສອນ ແລະ ເພື່ອນັກຮຽນທີ່ມີພື້ນເພທາງການສຶກສາມາຢ່າງດີ

ບຸຍຊົມ ສຣີສະອາດ (2528 : 2) ໄດ້ກ່າວເຖິງລັກສະນະຂອງແບບທົດສອບອີງເກນແທກໄວ້ໃນລັກສະນະຂອງການປະເມີນຜົນແບບອີງເກນ ສະຫຼຸບໄດ້ວ່າ ແບບທົດສອບອີງເກນເປັນແບບທົດສອບທີ່ສ້າງຂຶ້ນມາເພື່ອໃຊ້ວັດຕາມຈຸດປະສົງທີ່ກຳນົດໄວ້ ແລະ ຄຳນຶງເຖິງຄວາມທ່ຽງກົງຕາມເນື້ອໃນເປັນສຳຄັນການວິເຄາະຂໍ້ສອບໃຊ້ເກນພາຍນອກເຊັ່ນ: ກຸ່ມຄົນຮຽນເກັ່ງ ກັບບໍ່ແມ່ນຄົນເກັ່ງ ແລະ ຄະແນນຈະແປອອກມາໃນຮູບຂອງຄວາມອ້ອມຮູ້ ບໍ່ອ້ອມຮູ້

ສົມນຶກ ພັດທິຍທນີ (2533 : 238) ໄດ້ສະຫຼຸບລັກສະນະຂອງແບບທົດສອບອີງເກນໄວ້ວ່າ

1. ເປັນແບບທົດສອບທີ່ໃຊ້ເກນພາຍນອກໃນການປະເມີນ

2. ມີປະໂຫຍດໃນການປະເມີນການຮຽນ ການສອນ

3. ການວິເຄາະຂໍ້ສອບຕ້ອງຄຳນຶງເຖິງຄວາມທ່ຽງກົງຕາມເນື້ອໃນ ແລະ ຄວາມທ່ຽງກົງຕາມໂຄງສ້າງເປັນຫຼັກ ສ່ວນຄ່າຄວາມເຊື່ອໝັ້ນ, ຄວາມຍາກງ່າຍ, ອຳນາດຈຳແນກ, ບໍ່ມີຜົນກະທົບຕໍ່ການສ້າງແບບທົດສອບ ແຕ່ເນັ້ນການວັດທີ່ຈຸດປະສົງເປັນສຳຄັນ

4. ບໍ່ມຸ້ງວັດນັກຮຽນກັບນັກຮຽນຄົນອື່ນ

5. ແບບທົດສອບອີງເກນເໝາະສຳລັບໃຊ້ໃນວົງແຄບໆ ກັບການປະເມີນຜົນຍ່ອຍເພື່ອນຳຜົນໄປປັບປຸງການຮຽນການສອນ

6. ຫາເກນການປະເມີນຕ້ອງອາໄສທິດສະດີໃນການສ້າງ

ສະຫຼຸບໄດ້ວ່າ ແບບທົດສອບອີງເກນມີລັກສະນະເປັນແບບທົດສອບທີ່ວັດຜົນສຳເລັດທີ່ສ້າງຂໍ້ຄຳຖາມສອດຄ່ອງກັບຈຸດໝາຍທາງພຶດຕິກຳຕາມເນື້ອໃນສະເພາະເຈາະຈົງ ການແປຄວາມໝາຍຂອງຄະແນນ ໄດ້ຈາກການນຳ

ຄະແນນທີ່ເດັກສອບໄດ້ໄປທຽບກັບເກນທີ່ກຳນົດໄວ້ ແບບທົດສອບອີງເກນຈະມີປະໂຫຍດຢ່າງຍິ່ງໃນການນຳໄປໃຊ້ເປັນແນວທາງໃນການປັບປຸງການຮຽນ ການສອນ

**7.4 ການສ້າງແບບທົດສອບອີງເກນ**

ນັກວັດຜົນສຳເລັດການ ແລະ ນັກວັດຜົນການສຶກສາ ໄດ້ສະເໜີແນະແນວທາງໃນການສ້າງແບບທົດສອບອີງເກນໄວ້ດັ່ງນີ້:

ແອຣາຊຽນ ແລະ ເມດັດ (Aivasian and Meduas , 1972 : 8) ແບ່ງຂັ້ນຕອນຂອງການສ້າງແບບທົດສອບອີງເກນເປັນ 4 ຂັ້ນຕອນ ດັ່ງນີ້:

1. ຂຽນສະມັດຖະພາບທີ່ຈະວັດໃຫ້ຊັດເຈນ ໂດຍຂຽນໃນຮູບຂອງຈຸດປະສົງທາງພຶດຕິກຳທີ່ສາມາດສັງເກດໄດ້ ແລະ ສອບວັດໄດ້

2. ກຳນົດການອ້ອມຮູ້ໃນສະມັດຖະພາບນັ້ນ

3. ຄິດສະຖານນະການເພື່ອໃຫ້ນັກຮຽນໄດ້ສະແດງເຖິງຄວາມສາມາດທີ່ຕ້ອງການວັດແລ້ວຂຽນຂໍ້ສອບຕາມສະຖານນະການນັ້ນ

4. ຕັດສິນຄວາມອ້ອມຮູ້ຂອງນັກຮຽນໂດຍທຽບກັບມາດຕະຖານການປະຕິບັດຂັ້ນຕ່ຳສຸດຕາມຈຸດປະສົງ

ກະລອນລັນ (Gronlund , 1978 ອ້າງເຖິງໃນ ພານົດ ສະລິງາມ , 2530 : 12-13 ) ໄດ້ສະເໜີແນະແນວທາງການສ້າງແບບທົດສອບອີງເກນໄວ້ດັ່ງນີ້:

1. ແບບທົດສອບອີງເກນຈະຕ້ອງມີການກຳນົດຂອບເຂດຂອງງານເອົາໄວ້ຢ່າງຊັດເຈນເພາະແບບທົດສອບຕ່າງໆ ຈະນຳມາໃຊ້ໃຫ້ປະສົບຜົນສຳເລັດໄດ້ນັ້ນຈະຕ້ອງບອກເຖິງຄວາມເຈາະຈົ່ງຂອງຜົນການສອບທີ່ຜູ້ສອບກະທຳໄດ້

2. ແບບທົດສອບອີງເກນຈະຕ້ອງມີຄວາມຊັດເຈນໃນການກຳນົດຈຸດປະສົງຂອງການຮຽນ ການສອນ ໃນສິ່ງທີ່ຕ້ອງການໃຫ້ຜູ້ຮຽນສະແດງອອກມາໃນຮູບຂອງພຶດຕິກຳທີ່ປະຕິບັດໄດ້ຈິງຊຶ່ງເມື່ອເບິ່ງຈາກຜົນການສອບ ກໍຈະເຮັດໃຫ້ຮູ້ທັນທີວ່ານັກຮຽນສາມາດເຮັດຫຍັງໄດ້ດ້ວຍ ຈາກງານທີ່ມອບໝາຍໃຫ້

3. ແບບທົດສອບອີງເກນຈະຕ້ອງມີການກຳນົດເກນໃນການປະຕິບັດເອົາໄວ້ຢ່າງຊັດເຈນເພາະການກຳນົດເກນປະຕິບັດມີຜົນຕໍ່ການນຳແບບທົດສອບອີງເກນໄປໃຊ້ໃນຫ້ອງຮຽນ ເພື່ອທີ່ຈະສະແດງວ່າຜູ້ຮຽນມີຄວາມຮູ້ໃນເນື້ອໃນນັ້ນໆ ແລ້ວ

4. ແບບທົດສອບອີງເກນຕ້ອງສາມາດວັດຄວາມເປັນຕົວແທນຂອງຊິ້ນຫາໃນການວັດໄດ້ຢ່າງພຽງພໍ ໂດຍສາມາດເຮັດໄດ້ດັ່ງນີ້

4.1 ແບ່ງເນື້ອໃນການຮຽນອອກເປັນໜ່ວຍຍ່ອຍໆ

4.2 ກຳນົດໂດເມນ (Domain) ຂອງເນື້ອໃນໃຫ້ມີຄວາມຊັດເຈນ

4.3 ກຳນົດຊິ້ນຫາໃຫ້ມີຄວາມສະເພາະເຈາະຈົ່ງກັບກຸ່ມຜູ້ຮຽນ

5. ແບບທົດສອບອີງເກນຈະຕ້ອງສ້າງຂໍ້ສອບແຕ່ລະຂໍ້ໃຫ້ກົງກັບຈຸດປະສົງທີ່ຕ້ອງການວັດເພາະຈະສາມາດເຮັດໃຫ້ແປຄວາມໝາຍຂອງການກະທຳຂອງຜູ້ຮຽນໄດ້ຕາມໂດເມນຂອງເນື້ອໃນ

6. ແບບທົດສອບອີງເກນຈະຕ້ອງມີການຣາຍງານຜົນຂອງຄະແນນທີ່ສະແດງເຖິງການປະຕິບັດໄດ້ຈິງຂອງຜູ້ຮຽນໃນຂອບເຂດຂອງງານ (Task) ທີ່ກຳນົດເອົາໄວ້ຢ່າງຊັດເຈນ

ບຸຍເຊີດ ພິບໂຍອະນັ້ນຕະພົງ (2527 : 38-44) ໄດ້ສະຫຼຸບຂັ້ນຕອນການສ້າງແບບທົດສອບອີງເກນໄວ້ດັ່ງນີ້

ຂັ້ນທີ 1 ວິເຄາະຊື້ນຫາ ແລະຈຸດປະສົງ ເມື່ອຕ້ອງການທົດສອບຊື້ນຫາວັດຜົນສົມລິດໃດສິ່ງທີ່ຕ້ອງເຮັດປະການທໍອິດກໍຄື ທໍາການວິເຄາະເນື້ອໃນການວັດຜົນສໍາເລັດໃຫ້ເປັນຫົວຂໍ້ໃຫຍ່ໆ ແລະໃນແຕ່ລະຫົວຂໍ້ຕ້ອງກໍ່ການວິເຄາະຈຸດປະສົງ ຫຼື ພຶດຕິກໍາທີ່ຕ້ອງການໃຫ້ເກີດໃນຫົວຂໍ້ນັ້ນໆ ເຊິ່ງເຮັດໃຫ້ໄດ້ພຶດຕິກໍາຫຼັກທີ່ຕ້ອງການວັດ ຫລືຈຸດປະສົງຫຼັກ

ຂັ້ນທີ 2 ແປງຈຸດປະສົງຫຼັກໃຫ້ສະເພາະເຈາະຈົ່ງ ໂດຍແຕກພຶດຕິກໍາຫຼັກໃຫ້ເປັນຈຸດປະສົງທາງພຶດຕິກໍາຍ່ອຍໆ

ຂັ້ນທີ 3 ຂຽນຂໍ້ສອບ ຫຼື ຜະລິດຂໍ້ສອບຕາມຈຸດປະສົງທາງພຶດຕິກໍາ

ຂັ້ນທີ 4 ກວດທານຂໍ້ສອບ ເປັນການກວດສອບຂໍ້ສອບເປັນລາຍຂໍ້ ຫຼັງຈາກຂຽນຂໍ້ສອບສໍາເລັດ ເພື່ອແກ້ໄຂປັບແຕ່ງຂໍ້ສອບໃຫ້ມີຄວາມເໝາະສົມຂອງພາສາທີ່ໃຊ້ ວ່າມີຄວາມຊັດເຈນຈັດກຸ່ມ ຖືກຕ້ອງ ແລະ ຄວາມຖືກຕ້ອງຂອງເນື້ອໃນວັດຜົນສໍາເລັດທີ່ຕ້ອງການທົດສອບ

ຂັ້ນທີ 5 ວິເຄາະຂໍ້ສອບ ເປັນການຫາຄຸນນະພາບຂອງຂໍ້ສອບດ້ານຄວາມທ່ຽງເຊີງເນື້ອໃນ ແລະ ຄວາມທ່ຽງທາງໂຄງສ້າງເພື່ອຄັດເລືອກຂໍ້ສອບທີ່ມີຄຸນນະພາບມາທັງໝົດສະບັບ ການຫາຄຸນນະພາບດ້ານຄວາມທ່ຽງທາງເນື້ອໃນເປັນການກວດສອບວ່າຂໍ້ສອບມີຄວາມສອດຄ່ອງກັບເນື້ອໃນວັດຜົນສໍາເລັດທີ່ຕ້ອງການວັດ ຫຼື ບໍ່ໂດຍໃຊ້ຈຸດປະສົງທາງພຶດຕິກໍາເປັນເກນທຽບ ການຫາຄຸນນະພາບດ້ານຄວາມທ່ຽງທາງໂຄງສ້າງເປັນການກວດສອບວ່າຂໍ້ສອບສາມາດຈໍາແນກການອ້ອມຮູ້ ບໍ່ອ້ອມຮູ້ ໄດ້ ຫຼື ບໍ່ ໂດຍນໍາຄະແນນສອບຂອງກລຸ່ມທີ່ອ້ອມຮູ້ກັບກຸ່ມທີ່ບໍ່ອ້ອມຮູ້ມາປຽບທຽບກັນ ດັ່ງນັ້ນການຫາຄວາມທ່ຽງທາງໂຄງສ້າງຈຶ່ງຕ້ອງນໍາຂໍ້ສອບທີ່ມີຄວາມທ່ຽງທາງເນື້ອໃນໄປທົດສອບກັບນັກຮຽນແລ້ວນໍາຄະແນນຜົນການສອບມາວິເຄາະດັດນີອໍານາດຈໍາແນກ

ຂັ້ນທີ 6 ຄັດເລືອກຂໍ້ສອບ ກໍານົດຄວາມຍາວ ແລະ ຄະແນນຈຸດຕັດຂອງແບບທົດສອບການຄັດເລືອກຂໍ້ສອບທັງໝົດສະບັບເປັນການພິຈາລະນາໂດຍອາໄສເກນຄຸນນະພາບດ້ານຄວາມທ່ຽງທາງເນື້ອໃນ ແລະ ຄວາມທ່ຽງທາງໂຄງສ້າງ

ຂັ້ນທີ 7 ວິເຄາະແບບທົດສອບ ເປັນການຫາຄຸນນະພາບດ້ານຄວາມເຊື່ອໝັ້ນ ແລະ ຄວາມທ່ຽງຂອງແບບທົດສອບຫຼັງຈາກທີ່ຄັດເລືອກຂໍ້ສອບມາທັງໝົດເປັນສະບັບແລ້ວ ສ່ວນໃຫຍ່ການວິເຄາະແບບທົດສອບອີງເກນ ມັກກໍ່ການກວດສອບຄວາມເຊື່ອໝັ້ນພຽງຢ່າງດຽວ ເພາະຄວາມທ່ຽງຂອງແບບທົດສອບນັ້ນມັກພິຈາລະນາຄວາມທ່ຽງລາຍຂໍ້

ອັງຄນາ ສາຍຍົດ (ມ.ປ.ປ. : 3-8 ອ້າງເຖິງໃນ ປະນອມ ພັນໄສ , 2530 : 15-16) ໄດ້ກ່າວເຖິງຂັ້ນຕອນໃນການສ້າງແບບທົດສອບອີງເກນໄວ້ດັ່ງນີ້:

1. ກໍານົດຈຸດໝາຍໃນການສອນ ເປັນຂັ້ນທີ່ຈະຕ້ອງພິຈາລະນາວ່າຜູ້ສອນຕ້ອງການຈະໃຫ້ນັກຮຽນຮຽນແລ້ວ

2. ເກີດພຶດຕິກໍາຫຍັງ ຊຶ່ງຜູ້ສ້າງຂໍ້ສອບຈະເບິ່ງໄດ້ຈາກຈຸດໝາຍຂອງການສອນ

3. ສ້າງຕາຣາງກໍານົດລາຍລະອຽດ (Table of Specification) ນໍາຈຸດໝາຍທີ່ໄດ້ຈາກຂໍ້ 1 ມາວິເຄາະໃຫ້ສໍາພັນກັບເນື້ອໃນທີ່ຈະສອນ ເພື່ອທີ່ຈະເບິ່ງລາຍລະອຽດຂອງຈຸດໝາຍຂອງການສອນ

4. ຂຽນຈຸດປະສົງທາງພຶດຕິກຳ ຫຼື ກຳນົດລາຍລະອຽດຂອງໂດເມນ ໃນການຂຽນຈຸດປະສົງທາງພຶດຕິກຳນີ້ຈະຂຽນຈາກພຶດຕິກຳຫຼັກໃນຕາຕະລາງວິເຄາະຫຼັກສູດ ໂດຍນຳເອົາເນື້ອໃນ ແລະ ພຶດຕິກຳຫຼັກມາຂຽນເປັນຈຸດປະສົງທາງພຶດຕິກຳ

5. ການຂຽນຂໍ້ຄຳຖາມ ນຳຈຸດປະສົງທາງພຶດຕິກຳທີ່ຂຽນໃນຂັ້ນທີ 3 ມາຂຽນເປັນຂໍ້ສອບ

6. ການພິຈາລະນາຂໍ້ຄຳຖາມ ຂັ້ນນີ້ເປັນຂັ້ນທີ່ເອົາຂໍ້ຄຳຖາມທີ່ຂຽນຕາມຈຸດປະສົງທາງພຶດຕິກຳນັ້ນມາພິຈາລະນາດັ່ງນີ້:

6.1 ພິຈາລະນາວ່າຂໍ້ຄຳຖາມແຕ່ລະຂໍ້ຂຽນສອດຄ່ອງກັບຈຸດປະສົງທາງພຶດຕິກຳ ຫຼື ບໍ່ໂດຍໃຫ້ຜູ້ຊ່ຽວຊານທາງດ້ານວັດຜົນເປັນຜູ້ພິຈາລະນາ

6.2 ພິຈາລະນາຄວາມຄອບຄຸມຂອງຂໍ້ຄຳຖາມໃນແຕ່ລະຈຸດປະສົງທາງພຶດຕິກຳຄືໃຫ້ຜູ້ຊ່ຽວຊານທາງດ້ານເນື້ອໃນພິຈາລະນາວ່າ ຈຳນວນຂໍ້ຄຳຖາມໃນແຕ່ລະຈຸດປະສົງເຊີງພຶດຕິກຳນັ້ນມີຈຳນວນພຽງພໍ ຫຼື ບໍ່

7. ຄັດເລືອກຂໍ້ຄຳຖາມ ຂັ້ນນີ້ຈະຕ້ອງຄັດເລືອກຂໍ້ຄຳຖາມທີ່ມີຄວາມສອດຄ່ອງ ແລະ ຄອບຄຸມຈຸດປະສົງທາງພຶດຕິກຳເທົ່ານັ້ນ ຂໍ້ທີ່ບໍ່ສອດຄ່ອງຈະຕັດອອກ

8. ຫາຄຸນນະພາບຂອງແບບທົດສອບ ຂັ້ນນີ້ຈະຕ້ອງນຳແບບທົດສອບໄປທົດລອງສອບກັບນັກຮຽນແລ້ວນຳມາຫາຄຸນນະພາບທາງດ້ານຄວາມຍາກງ່າຍ ອຳນາດຈຳແນກ ຄວາມເຊື່ອໝັ້ນ ແລະ ຄວາມທ່ຽງຂອງແບບທົດສອບຕໍ່ໄປ

**7.5 ຈຸດໝາຍຂອງແບບທົດສອບອີງເກນ**

ສົມສັກດິ໌ ສິນທຸລະເວວ (2521 : 74) ກ່າວເຖິງຈຸດໝາຍຂອງແບບທົດສອບອີງເກນວ່າມີຈຸດໝາຍຢ່າງນ້ອຍທີ່ສຸດ 4 ປະການຄື

1. ເພື່ອໃຊ້ເປັນເຄື່ອງມືໃນການປະເມີນຈຸດປະສົງ

2. ເພື່ອໃຊ້ໃນການປັບປຸງການຮຽນ ການສອນ ໂດຍເບິ່ງຄວາມກ້າວໜ້າຂອງເດັກ ຫາກພົບເດັກຄົນໃດບົກຜ່ອງ ຫຼື ລ້າຫຼັງໃນເລື່ອງໃດກໍຈະໄດ້ຫາທາງຊ່ວຍເຫຼືອ

3. ເພື່ອໃຊ້ເປັນເຄື່ອງມືໃນການພິຈາລະນາຮູບແບບຂອງການສອນ ເຊັ່ນ: ຈຸດໝາຍຂອງການສອນ ວິທີດຳເນີນການສອນ

4. ເພື່ອໃຊ້ໃນການພິຈາລະນາວ່າເມື່ອນັກຮຽນໄດ້ຮຽນຈົບໃນແຕ່ລະໜ່ວຍການຮຽນແລ້ວນັກຮຽນອ້ອມຮູ້ຕາມເກນທີ່ຕັ້ງໄວ້ ຫຼື ບໍ່

ໄພສານ ຫວັງພານິດ (2526 : 187-188) ກ່າວວ່າຈຸດໝາຍສຳຄັນຂອງການວັດຜົນແບບອີງເກນຄື: ມີຈຸດປະສົງສອບວັດເພື່ອກວດສອບລະດັບການຮຽນຮູ້ຂອງຜູ້ຮຽນວ່າບັນລຸເຖິງເປົ້າໝາຍ ຫຼື ເກນທີ່ຕັ້ງໄວ້ ຫຼື ບໍ່ ການສອບຈຶ່ງມຸ້ງເນັ້ນເລື່ອງການພິຈາລະນາຄວາມສາມາດຂອງຜູ້ຮຽນ ເພື່ອໃຊ້ຜົນສຳລັບການປັບປຸງການຮຽນ ການສອນ ການສອນຕາມຈຸດໝາຍດັ່ງກ່າວຈຶ່ງເປັນການຕອບຄຳຖາມວ່າໃຜຮຽນໄດ້ເຖິງເກນທີ່ຕັ້ງໄວ້ ແລະ ໃຜຄວນຕ້ອງແກ້ໄຂການຮຽນ ຫຼື ຄວນໄດ້ຮັບການປັບປຸງຊ່ອມເສີມການຮຽນດ້ວຍ ຄຳຖາມເຫຼົ່ານີ້ສາມາດຕອບໄດ້ໂດຍການນຳຄະແນນຂອງຜູ້ຮຽນໄປທຽບກັບເກນທີ່ຕັ້ງໄວ້ ໂດຍຍອມຮັບວ່າຄະແນນຄືສິ່ງທີ່ແທນປະສິດທິຜົນໃນການຮຽນຂອງແຕ່ລະບຸກຄົນ

ອາລົມ ເພັດຊື່ນ (2527 : 23) ກ່າວວ່າຈຸດມຸ້ງໝາຍຂອງການທົດສອບແບບອີງເກນຄື: ເພື່ອວັດ ເພື່ອກວດສອບວ່າ ຜູ້ຮຽນຮູ້ຕາມຈຸດປະສົງ ຫຼື ບໍ່ ເພື່ພິຈາລະນາປະເມີນການຮຽນ ການສອນ ແລະ ປັບປຸງການຮຽນ ການສອນ

ບຸນຊົມ ສະລະສະອາດ (2528 : 1) ກ່າວເຖິງວັດຖຸປະສົງຂອງການປະເມີນຜົນແບບອີງເກນວ່າການປະເມີນຜົນແບບນີ້ ມີວັດຖຸປະສົງເພື່ອພິຈາລະນາຜູ້ຮຽນວ່າບັນລຸຈຸດປະສົງທີ່ວາງໄວ້ ຫຼື ບໍ່ ຜູ້ຮຽນຄົນໃດຍັງບໍ່ບັນລຸຈຸດປະສົງທີ່ວາງໄວ້ ກໍຈະໄດ້ຫາທາງປັບປຸງແກ້ໄຂ ເຊັ່ນ: ຈັດໃຫ້ມີການຮຽນເສີມ ເປັນຕົ້ນ ຈະເຫັນໄດ້ວ່າ ການປະເມີນຜົນແບບອີງເກນ ເປັນຜົນຈາກຄວາມເຊື່ອໃນທິດສະດີການຮຽນເພື່ອອ້ອມຮູ້ (Learning for Mastery)

ພວງລັດ ທະວີລັດ (2530 : 32) ກ່າວວ່າຈຸດໝາຍຂອງການທົດສອບອີງເກນ ຄືເປັນການກວດສອບເບິ່ງວ່າໃຜຮຽນໄດ້ເຖິງເກນ ແລະ ໃຜຍັງຮຽນໄດ້ບໍ່ເຖິງເກນ ແລະ ຖ້າໃຜຍັງບໍ່ເຖິງເກນຄວນໄດ້ຮັບການປັບປຸງແກ້ໄຂຕໍ່ໄປເຊັ່ນ: ອາດໃຫ້ມີການເສີມ

ສະຫຼຸບໄດ້ວ່າ ຈຸດໝາຍຂອງແບບທົດສອບອີງເກນຄື ເພື່ອກວດສອບວ່າຜູ້ຮຽນມີຄວາມສາມາດຜ່ານເກນທີ່ກຳນົດໄວ້ຫລືບໍ່ ເພື່ອນຳຂໍ້ມູນໄປປັບປຸງການຮຽນ ການສອນຕໍ່ໄປ

ການສ້າງເຄື່ອງມືວັດຜົນສຳເລັດທາງການຮຽນ ການວັດຜົນສຳເລັດທາງການຮຽນເປັນການວັດຄວາມສາມາດທາງສະໝອງ ຫຼື ວັດດ້ານສະຕິປັນຍາຂອງຜູ້ຮຽນວ່າມີຄວາມສາມາດຫຼາຍນ້ອຍພຽງໃດຫຼັງຈາກທີ່ໄດ້ຮັບປະສົບການຈາກການຈັດການຮຽນ ການສອນ ຫຼື ຈາກແຫຼ່ງວິທະຍາການຕ່າງໆ ດັ່ງນັ້ນໃນການວັດຄວາມສາມາດເພື່ອເບິ່ງຄວາມຈະເລີນງອກງາມຂອງຜູ້ຮຽນ ແລະ ເບິ່ງປະສິດທິພາບການຮຽນ ການສອນແລ້ວ ແບບທົດສອບນັບວ່າເປັນເຄື່ອງມືທີ່ມີຄວາມສຳຄັນຫຼາຍທີ່ຈະເຮັດໃຫ້ ຮູ້ສິ່ງເຫຼົ່ານັ້ນໄດ້ ລັກສະນະຂອງແບບທົດສອບທີ່ດີ ແບບທົດສອບທີ່ດີມີຄຸນນະພາບຄວນເຮັດໃຫ້ຜົນການວັດທີ່ໄດ້ມີຄວາມຖືກຕ້ອງ ແຕ່ຖ້າແບບທົດສອບມີ ຄຸນນະພາບບໍ່ດີຄວນເຮັດໃຫ້ຜົນການວັດມີຄວາມຜິດພາດ ດັ່ງນັ້ນໃນການວັດຜົນການສຶກສາຄຸນນະພາບຂອງ ເຄື່ອງມື ຄວນເປັນສິ່ງທີ່ຕ້ອງໃຫ້ຄວາມສົນໃຈເປັນພິເສດ ລັກສະນະຂອງເຄື່ອງມືວັດຜົນທີ່ດີມີຫຼາຍປະການ ດັ່ງນີ້:

1. ຄວາມທ່ຽງກົງ (Validity) ໝາຍເຖິງ ການວັດໃນສິ່ງທີ່ຕ້ອງການຈະວັດໄດ້ຢ່າງຖືກຕ້ອງ

2. ຄວາມເຊື່ອໝັ້ນ (Reliability) ໝາຍເຖິງ ການວັດທີ່ໃຫ້ຜົນແນ່ນອນສະເໝີ (Consistency) ເປັນທີ່ໝັ້ນໃຈ ຫຼື ເຊື່ອຖືໃນຜົນທີ່ວັດໄດ້ຈິງ ເຖິງແມ່ນຈະມີການວັດຊ້ຳອີກຜົນທີ່ໄດ້ກໍຄວນ ແນ່ນອນບໍ່ປ່ຽນແປງໄປຈາກເດີມ

3. ຄວາມເປັນປະໄນ ( Objectivity ) ໝາຍເຖິງ ຄວາມແຈ່ມແຈ້ງຂອງຄຳຖາມທີ່ເຮັດໃຫ້ຜູ້ຕອບເຂົ້າໃຈຄວາມໝາຍໄດ້ຖືກຕ້ອງກົງກັນ ຂໍ້ຄຳຖາມທີ່ມີຄວາມເປັນປາລະໄນຕ້ອງມີຄຸນສົມບັດ 3 ປະການ ຄື:

1. ຂໍ້ຄຳຖາມມີຄວາມຊັດເຈນວ່າຕ້ອງການຖາມຫຍັງ
2. ການກວດໃຫ້ຄະແນນໄດ້ກົງກັນບໍ່ວ່າຈະໃຫ້ໃຜກວດກໍຕາມ
3. ຄະແນນທີ່ໄດ້ສາມາດແປຄວາມໝາຍໄດ້ກົງກັນ

4. ອຳນາດຈຳແນກ (Discrimination) ເປັນຄວາມສາມາດໃນການແຍກຫລືຈ າແນກບຸກຄົນທີ່ມີ ເຈົ້າລັກສະນະຫລືຄວາມສາມາດແຕກຕ່າງກັນອອກຈາກກັນໄດ້

5. ຄວາມຍາກພໍເໝາະ (Difficulty) ເປັນເຈົ້າລັກສະນະຂອງຂໍ້ສອບທີ່ບໍ່ຍາກເກີນໄປ ຫຼື ງ່າຍ ເກີນໄປ

6. ວັດຢ່າງເລິກລຶກ (Searching) ໝາຍຄວາມວ່າ ລັກສະນະຂອງຄຳຖາມວັດໄດ້ຄອບຄຸມ ພຶດຕິກຳທີ່ຕ້ອງການວັດ ແລະ ບໍ່ເປັນຄຳຖາມທີ່ວັດແຕ່ພຽງຄວາມຮູ້ຄວາມຈຳຢ່າງດຽວ

7. ຍຸດຕິທຳ (Fair) ເປັນລັກສະນະຂອງຄຳຖາມທີ່ບໍ່ຖາມເພື່ອເປີດໂອກາດໃຫ້ຄົນກລຸ່ມໃດກຸ່ມ ໜຶ່ງ ຫຼື ບຸກຄົນໃດບຸກຄົນໜຶ່ງໄດ້ປຽບໃນການຕອບຫຼາຍກວ່າຄົນໃນກຸ່ມໜຶ່ງ ຫຼື ບຸກຄົນໜຶ່ງ

8. ມີຄວາມຈຳເພາະເຈາະຈົ່ງ (Definite) ບໍ່ຖາມຫຼາຍແງ່ຫຼາຍມຸມໃນຂໍ້ດຽວກັນ ຄວນຖາມ ຄຳຖາມດຽວໃນແຕ່ລະຂໍ້ ເອກະສານປະກອບການບັນລະຍາຍ ໂດຍ ຣົດ.ດົນ.ສຸດທິວັນນະ ພົນສັກດິໂສພົນ

9. ມີປະສິດທິພາບ (Efficiency) ໃນແງ່ຂອງການນຳໄປໃຊ້ ປະຫຍັດເວລາ ແລະ ງົບປະມານ

10. ມີການຈູງໃຈໃຫ້ຕອບ (Examplary) ອາດຈີ່ໄດ້ໂດຍລຽງຂໍ້ສອບຂໍ້ງ່າຍໆ ໄວ້ຕອນທຳອິດໆ ແລ້ວຄ່ອຍໆ ຍາກຂຶ້ນຕາມລຳດັບ ຫຼື ອາດໃຊ້ຮູບພາບປະກອບຄຳຖາມເພື່ອດຶງດູດຄວາມສົນໃຈໃຫ້ຜູ້ຕອບຢາກ ຕອບ ນອກຈາກນີ້ຮູບແບບການຈັດພິມຂໍ້ສອບຄວນໃຫ້ເບິ່ງສວຍງາມ ໜ້າຕອບ ປະເພດຂອງແບບທົດສອບວັດຜົນສຳເລັດທາງການຮຽນ ແບບທົດສອບວັດຜົນສຳເລັດທິທາງການຮຽນທີ່ໃຊ້ຢູ່ໃນປະຈຸບັນມີຫຼາຍແບບແຕກຕ່າງກັນໄປ ຈະໃຊ້ຮູບແບບໃດກໍຄວນພິຈາລະນາເຖິງຈຸດປະສົງໃນການວັດເປັນສຳຄັນ ສຳລັບແບບທົດສອບວັດຜົນສຳເລັດທິທາງການຮຽນ ເພື່ອຈຳແນກໄດ້ 2 ແບບ ດັ່ງນີ້:

1. ແບບທົດສອບວັດຜົນສຳເລັດທາງການຮຽນທີ່ຄູສ້າງຂຶ້ນເອງ

2. ແບບທົດສອບມາດຕະຖານ ໃນທີ່ນີ້ຈະກ່າວເຖິງສະເພາະແບບທົດສອບວັດຜົນສຳເລັດທິທີ່ຄູສ້າງຂຶ້ນເອງ ເພື່ອໃຊ້ວັດຄວາມຮູ້ຄວາມສາມາດຂອງນັກຮຽນ ເພື່ອຈຳແນກອອກໄດ້ ດັ່ງນີ້:

1. ຊະນິດທີ່ຜູ້ສອບເປັນຜູ້ໃຫ້ຄຳຕອບໄດ້ແກ່:

1.1 ແບບທົດສອບແບບອັດຕະໄນ ຫຼື ລຽງຄວາມ (Subjective Test or Essay Test) ຈຳແນກອອກເປັນ

1) ແບບຈຳກັດຄຳຕອບ (Restricted – response type)
2) ແບບບໍ່ຈຳກັດຄຳຕອບ (Unrestricted – response type)

1.2 ແບບທົດສອບແບບເຕີມຄຳ ຫຼື ຕອບສັ້ນ (Completion or Short-Answer Test)

2. ແບບທົດສອບຊະນິດທີ່ໃຫ້ຜູ້ສອບເລືອກຄຳຕອບ ໄດ້ແກ່:

2.1 ແບບທົດສອບແບບຖືກຜິດ (True – False Test)

2.2 ແບບທົດສອບແບບຈັບຄູ່ (Matching Test)

2.3 ແບບທົດສອບແບບເລືອກຕອບ (Multiple Choice Test) ຂັ້ນຕອນການສ້າງແບບທົດສອບວັດຜົນສຳເລັດທາງການຮຽນ ເນື່ອງຈາກແບບທົດສອບເປັນເຄື່ອງມືວັດຜົນຊະນິດໜຶ່ງທີ່ມີຄວາມສຳຄັນຈະເຮັດໃຫ້ຄູໄດ້ຮູ້ຖືງພຶດຕິກຳການຮຽນຂອງຜູ້ຮຽນ ແລະ ຮູ້ເຖິງປະສິດທິພາບໃນການຈັດການຮຽນ ການສອນ ການສ້າງ ແບບທົດສອບທີ່ດີມີຄຸນນະພາບຈຶ່ງບໍ່ແມ່ນຂອງງ່າຍນັກສຳລັບຄູຜູ້ອອກຂໍ້ສອບ ດັ່ງນັ້ນຈຶ່ງຄວນມີຂັ້ນຕອນການ ສ້າງແບບທົດສອບ ດັ່ງນີ້ :

1. ກຳນົດຈຸດໝາຍຂອງການສອບໃຫ້ຊັດເຈັນວ່າຈະສອບເພື່ອຫຍັງ ສອບກັບໃຜ ໃນລະດັບຊັ້ນໃດ

2. ກຳນົດລັກສະນະຂອງສິ່ງທີ່ຈະວັດ ໃນການສ້າງເຄື່ອງມືວັດຜົນສຳເລັດທິທາງການຮຽນຜູ້ວັດ ເອກະສານປະກອບການບັນລະຍາຍ ໂດຍ ຣົດ.ດົນ.ສຸດທິວັນນະ ພົນສັກດິໂສພົນ ຕ້ອງຮູ້ວ່າສິ່ງທີ່ຕ້ອງການຈະວັດນັ້ນຄື

ຫຍັງເຊັ່ນ: ຕ້ອງການວັດຜົນສຳເລັດທີທາງການຮຽນວິຊາຄະນິດສາດ ໃນລະດັບຊັ້ນມັດຍົມສຶກສາປີທີ່ 1 ຜູ້ວັດຈະຕ້ອງຮູ້ວ່າເນື້ອໃນ ຂອງກຸ່ມວິຊາຄະນິດສາດນີ້ມີຈຸດໝາຍຂອງການ ຮຽນການສອນຢ່າງໃດ ປະກອບດ້ວຍເນື້ອໃນໃດຕ້ອງການໃຫ້ຜູ້ຮຽນບັນລຸພຶດຕິກຳໃດດ້ວຍ ພຶດຕິກຳເຫຼົ່ານັ້ນເປັນຢ່າງໃດ ຕ້ອງກຳນົດໃຫ້ຊັດເຈນ ເຊິ່ງອາດສຶກສາຄົ້ນຄວ້າຈາກເອກະສານ ຕຳລາ ແລະ ທິດສະດີຕ່າງໆໄດ້ ໃນຂັ້ນຕອນນີ້ເຮົາອາດພິຈາລະນາຈາກຕາຕະລາງວິເຄາະຫຼັກສູດທີ່ໄດ້ເຮັດໄວ້ແລ້ວ

3. ກຳນົດຊະນິດຂອງເຄື່ອງມືທີ່ໃຊ້ໃນການວັດໃນກຳນົດຊະນິດຂອງເຄື່ອງມືທີ່ໃຊ້ວັດນັ້ນພິຈາລະນາຈາກເຈົ້າລັກສະນະຂອງສິ່ງທີ່ເຮົາຈະວັດວ່າຄືຫຍັງ ເຊິ່ງເບິ່ງໄດ້ຈາກຕາຕະລາງວິເຄາະຫຼັກສູດ ແລະ ຕ້ອງເບິ່ງດ້ວຍວ່າວັດພຶດຕິກຳໃດ ຈະວັດກັບໃຜທີ່ໃດ ເມື່ອໃດຢ່າງໃດດ້ວຍ ເພາະເຄື່ອງມືທີ່ໃຊ້ວັດມີຫຼາຍຊະນິດ ແຕ່ລະຊະນິດກໍເໝາະກັບເຈົ້າລັກສະນະທີ່ ຈະວັດຕ່າງກັນ ດັ່ງນັ້ນຜູ້ສ້າງຕ້ອງຮູ້ລັກສະນະຂອງເຄື່ອງມືແຕ່ລະຊະນິດດ້ວຍ

4. ຂຽນຂໍ້ສອບ ເມື່ອກຳນົດໄດ້ແລ້ວເຖິງຊະນິດຂອງເຄື່ອງມືທີ່ໃຊ້ວັດຜົນສຳເລັດທີ ກໍເລີ່ມລົງມືຂຽນຂໍ້ສອບໂດຍຂຽນໃຫ້ສອດຄລ້ອງກັບເຈົ້າລັກສະນະ ຫຼື ພຶດຕິກຳທີ່ຕ້ອງການຈະວັດ ແລະໃຫ້ຖືກຕ້ອງຕາມຫຼັກວິຊາຂອງການຂຽນຂໍ້ສອບແຕ່ລະຊະນິດດ້ວຍ

5. ໃຫ້ຜູ້ຊ່ຽວຊານພິຈາລະນາກວດສອບແກ້ໄຂ ເມື່ອຂຽນຂໍ້ສອບສຳເລັດແລ້ວ ຄວນໃຫ້ຜູ້ຊ່ຽວຊານກວດສອບເຄື່ອງມື ເຊິ່ງຜູ້ຊ່ຽວຊານຄວນ ປະກອບດ້ວຍບຸກຄົນ 2 ຝ່າຍ ຄື ຜູ້ຊ່ຽວຊານ ເນື້ອໃນລາຍວິຊາ ແລະ ຜູ້ຊ່ຽວຊານທີ່ມີຄວາມຮູ້ທາງດ້ານ ວັດຜົນເປັນຜູ້ພິຈາລະນາຄຳຖາມແລະ ຄຳຕອບວ່າຖືກຕ້ອງຕາມຫຼັກວິຊາ ຫຼື ບໍ່ ຂໍ້ສອບວັດໄດ້ກົງຕາມຈຸດປະສົງ ຫຼື ບໍ່ ອີກທັງພາສາທີ່ໃຊ້ໃນການຂຽນຂໍ້ສອບຖືກຕ້ອງຕາມຫຼັກວິຊາ ຫຼື ບໍ່

6. ການທົດລອງໃຊ້ຂໍ້ສອບ ຫຼັງຈາກທີ່ໃຫ້ຜູ້ຊ່ຽວຊານພິຈາລະນາກວດສອບແກ້ໄຂແລ້ວ ກໍນຳແບບທົດສອບໄປທົດລອງໃຊ້ ແລ້ວນຳຜົນຈາກການທົດລອງມາວິເຄາະເພື່ອຫາຄຸນນະພາບ ແລະ ພັດທະນາແບບທົດສອບຕໍ່ໄປ ໃນການທົດລອງ ໃຊ້ອາດຕ້ອງເຮັດຫຼາຍໆ ເທື່ອຈົນສາມາດພັດທະນາແບບທົດສອບໄດ້ມີຄຸນນະພາບເປັນທີ່ພໍໃຈຈຶ່ງນຳໄປໃຊ້ຈິງໃນ ການສອບຕໍ່ໄປ

7. ສ້າງເກນໃນການແປຄວາມໝາຍຄະແນນ ການສ້າງເກນໃນການແປຄວາມໝາຍຄະແນນກໍເພື່ອຕ້ອງການບອກໃຫ້ຮູ້ວ່າ ຖ້າບຸກຄົນ ໃດສອບໄດ້ຄະແນນເທົ່າໃດ ທ່ານຈະເປັນຜູ້ທີ່ມີຄວາມສາມາດ ຫຼື ມີລັກສະນະພຶດຕິກຳຢ່າງໃດ

8. ການຂຽນລາຍງານ ແລະ ຄູ່ມືການໃຊ້ ການຂຽນລາຍງານ ແລະ ຄູ່ມືການໃຊ້ ຈະເຮັດໃຫ້ຜູ້ນຳໄປໃຊ້ໄດ້ຮູ້ເຖິງຂັ້ນຕອນໃນການສ້າງແບບ ເອກະສານປະກອບການບັນລະຍາຍ ໂດຍ ຣົດ.ດົນ.ສຸດທິວັນນະ ພົນສັກດິໂສພົນທົດສອບນັ້ນ ແລະ ລາຍລະອຽດກ່ຽວກັບການດຳເນີນກາສອບວ່າຈະປະຕິບັດຢ່າງໃດ ຄະແນນທີ່ແຕ່ລະຄົນສອບໄດ້ຈະແປຄວາມໝາຍຢ່າງໃດ ຊຶ່ງຈະເປັນຂໍ້ມູນໃຫ້ຜູ້ໃຊ້ເລືອກໃຊ້ແບບທົດສອບໄດ້ເໝາະສົມກັບຈຸດມຸ້ງໝາຍໃນ ການສອບດ້ວຍ ຂໍ້ສອບແບບອັດຕະໄນ ຫຼື ຄວາມລຽງ (Essay Items) ລັກສະນະທົ່ວໄປ ມີລັກສະນະເປັນຄຳຖາມ ຫຼື ໂຈດບັນຫາທີ່ເປີດໂອກາດໃຫ້ຜູ້ຕອບຂຽນຕອບ ໂດຍໃຊ້ພາສາ ແລະ ຄວາມສາມາດຂອງຕົນເອງໃນການທີ່ຈະລະນຶກເຖິງຄວາມຮູ້ທີ່ມີຢູ່ ແລ້ວຮຽບຮຽງ ຫຼື ຈັດລະບຽບຄວາມຮູ້ນັ້ນອອກມາເປັນພາສາຂຽນ ລັກສະນະຄຳຖາມ ຄຳຖາມທີ່ໃຊ້ໃນຂໍ້ສອບແບບນີ້ມີແງ່ມຸມການຖາມໄດ້ຫຼວງຫຼາຍ ແລ້ວແຕ່ລະດັບຂອງຈຸດປະສົງການຮຽນຮູ້ທີ່ຈະວັດສາມາດວັດພຶດຕິກຳທາງປັນຍາໄດ້ຄົບທັງ 6 ລະດັບ ຕາມແນວ ການຈຳແນກຂອງບລູມ (Bloom) ດັ່ງນີ້:

1. ຄຳຖາມປະເພດຫຍັງ ໃຜ ທີ່ໃດ ເມື່ອໃດ ຢ່າງໃດ ເຊັ່ນ ໃຜເປັນຜູ້ດກໍ່ໂລກ

2. ຖາມໃຫ້ຍົກຕົວຢ່າງ ເຊັ່ນ ຈົ່ງຍົກຕົວຢ່ງຈຸດປະສົງທາງພຶດຕິກຳຂອງລາຍວິຊາ ສິລະປະ

3. ຄຳຖາມໃຫ້ເລົ່າ ຫຼື ບັນລະຍາຍເຫດການ ເຊັ່ນ ຈົ່ງບັນຍາຍເຖິງເຫດການສົງຄາມໂລກຄັ້ງທີ 2

4. ຄຳຖາມໃຫ້ອະທິບາຍ ຫຼື ແປຄວາມໝາຍເຊັ່ນ ສິລະປະກຳເນີດມາຈາກການອອກແຮງງານ ໝາຍຄວາມວ່າ ແນວໃດ

5. ຄຳຖາມໃຫ້ສະຫຼຸບຄວາມເຫັນ ເຊັ່ນ ຈົ່ງສະຫຼຸບເຫດການສຳຄັນທີ່ເຮັດໃຫ້ເກີດສົງຄາມໂລກຄັ້ງທີ 2

6. ຄຳຖາມກ່ຽວກັບການນຳກົດເກນ ຫຼື ຫຼັກວິຊາໄປໃຊ້ແກ້ບັນຫາ ເຊັ່ນ ຜົນທີ່ໄດ້ຮັບຈາກການຕັດໄມ້ທຳລາຍປ່າຄືຫຍັງ

7. ຄຳຖາມໃຫ້ປຽບທຽບ ໃຫ້ອົດພິປາຍ ເຊັ່ນ ຈົ່ງພິປາຍເຖິງຄວາມສຳພັນລະຫວ່າງໂລກກັບດວງຕາເວັນ

8. ຄຳຖາມໃຫ້ວາງແຜນ ເຊັ່ນ ຈົ່ງສະເໜີວິທີການທີ່ຈະເຮັດໃຫ້ເດັກມີນິໄສຮັກການອ່ານຫຼາຍຂຶ້ນ

9. ຄຳຖາມໃຫ້ປະເມີນຜົນ ຫຼື ປະເມີນຄ່າ ເຊັ່ນ ນາງມີທອງ ເປັນຄົນດີຢ່າງໃດ ຈົ່ງອ້າງເຫດຜົນ ແລະ ຕົວຢ່າງຕາມທ້ອງເລື່ອງ ປະກອບ ເອກະສານປະກອບການບັນລະຍາຍ ໂດຍ ຣົດ.ດົນ.ສຸດທິວັນນະ ພົນສັກດິໂສພົນ 5 ຫຼັກໃນການສ້າງຂໍ້ສອບອັດຕະໄນ

1. ກຳໜົດຈຸດໝາຍວ່າຕ້ອງການໃຫ້ຜູ້ສອບໃຊ້ຂະບວນການທາງສະໝອງ (Mental Process) ໃດດ້ວຍ

2. ຄຳຖາມທີ່ສ້າງຂຶ້ນ ຄວນເປັນສະຖານນະການໃໝ່ ບໍ່ຄວນຖາມໃນເລື່ອງທີ່ເຄີຍສອນ ຫຼື ເຄີຍ ອະພິປາຍໃນຊັ້ນຮຽນມາແລ້ວ

3. ຄຳຖາມແຕ່ລະຂໍ້ຄວນຊັດເຈນບໍ່ຄຸມເຄືອ

4. ຄຳຖາມທີ່ສ້າງຂຶ້ນ ຕ້ອງຖາມໃນເລື່ອງທີ່ຜູ້ສອບສາມາດຫາຫຼັກຖານມາສະໜັບສະໜູນຄຳຕອບໄດ້ ບໍ່ຄວນຖາມໃນເລື່ອງທີ່ຫາຂໍ້ຍຸດຕິບໍ່ໄດ້

5. ຕ້ອງແນ່ໃຈວ່າ ຄຳຖາມແຕ່ລະຂໍ້ທີ່ສ້າງຂຶ້ນ ຖາມເພື່ອວັດພຶດຕິກຳທີ່ເຮົາຕ້ອງການໃຫ້ຜູ້ຕອບ ສະແດງອອກ

6. ຄວາມຍາວ ແລະ ຄວາມຊັບຊ້ອນຂອງຄຳຖາມ ຕ້ອງເໝາະກັບລະດັບຊັ້ນຂອງຜູ້ສອບ ຂໍ້ສະເໜີແນະໃນການໃຊ້ຂໍ້ສອບອັດຕະໄນ

1. ຄວນໃຊ້ຂໍ້ສອບອັດຕະໄນໃນກໍລະນີທີ່ຕ້ອງການວັດພຶດຕິກຳທີ່ບໍ່ສາມາດວັດໄດ້ດ້ວຍຂໍ້ສອບ ປາລະໄນ

2. ຄວນວິເຄາະຈຸດປະສົງ ແລະ ເນື້ອໃນວິຊາກ່ອນ ເພື່ອເລືອກວັດສະເພາະຈຸດປະສົງ ແລະ ເນື້ອໃນທີ່ສຳຄັນໃຫ້ເໝາະກັບສິ່ງທີ່ຕ້ອງການວັດ

3. ຄວນມີການແນະນຳການຕອບ ຫຼື ຝຶກຕອບຄຳຖາມໃນແນວຂໍ້ສອບອັດຕະໄນເມື່ອໃຊ້ກັບນັກຮຽນ ໃນເທື່ອແຮກ ໆ

4. ບໍ່ຄວນຕັ້ງຄຳຖາມເພື່ອໃຫ້ເລືອກຕອບບາງຂໍ້ ເພາະຄຳຖາມແຕ່ລະຂໍ້ຍາກງ່າຍບໍ່ເທົ່າກັນ ວັດ ບໍ່ໄດ້ທຸກຂໍ້ ແລະ ບໍ່ຍຸດຕິທຳກັບຜູ້ສອບ

5. ຂຽນຄຳຊີ້ແຈງໃຫ້ຊັດເຈນ ເຊັ່ນ ເນັ້ນຈຳນວນຂໍ້ທີ່ເຮັດ ເວລາທີ່ໃຊ້ ແລະ ຄະແນນເຕັມແຕ່ລະຂໍ້ ຂໍ້ດີຂອງຂໍ້ສອບອັດຕະໄນ

1. ສາມາດວັດຂະບວນການທາງຄວາມຄິດໄດ້ດີ

2. ຜູ້ສອບສາມາດໃຊ້ຄວາມຮູ້ຄວາມຄິດໄດ້ຢ່າງເຕັມທີ່ ທັງໝົດ ທັງສະແດງຄວາມສາມາດໃນການໃຊ້ພາສາໄດ້ຢ່າງກວ້າງຂວາງ

3. ສ້າງໄດ້ໄວ ໃຊ້ເວລານ້ອຍ ປະຢັດຄ່າໃຊ້ຈ່າຍ ເວລາ ແລະ ແຮງງານໃນການສ້າງຂໍ້ສອບ

4. ຜູ້ສອບມີໂອກາດເດົາຄຳຕອບໄດ້ນ້ອຍກວ່າຂໍ້ສອບຊະນິດອື່ນໆ ຂໍ້ຈຳກັດຂອງຂໍ້ສອບອັດຕະໄນ

1. ຖາມໄດ້ນ້ອຍຂໍ້ ບໍ່ຄວບຄຸມເນື້ອໃນບົດຮຽນ ແລະ ໃຊ້ເວລາໃນການຕອບຫຼາຍ

2. ໃຊ້ເວລາໃນການກວດຫຼາຍ ຈຶ່ງບໍ່ເໝາະທີ່ຈະສອບກັບນັກຮຽນຈຳນວນຫຼາຍ ໆ

3. ມີຄວາມຄາດເຄື່ອນໃນການກວດຫຼາຍ ເຊັ່ນ ລາຍມືຂອງຜູ້ສອບ ອາລົມຂອງຜູ້ກວດ ເອກະສານປະກອບການບັນລະຍາຍ ໂດຍ ຣົດ.ດົນ.ສຸດທິວັນນະ ພົນສັກດິໂສພົນ 6 ຂໍ້ສອບແບບເລືອກຕອບ (Multiple Choice Items) ລັກສະນະທົ່ວໄປ ຂໍ້ສອບແບບເລືອກຕອບປະກອບດ້ວຍສ່ວນສຳຄັນທີ່ສຸດສອງສ່ວນ ຄື ສ່ວນຂໍ້ຄຳຖາມ (Item) ແລະ ສ່ວນທີ່ເປັນຕົວເລືອກ (Alternative or Choice) ຕົວເລືອກຍັງແຍກອອກເປັນສອງສ່ວນ ຄື ຕົວເລືອກທີ່ເປັນຕົວຖືກ (Key) ກັບຕົວລວງ (Foils or Distracters) ຫຼັກການຂຽນຂໍ້ສອບແບບເລືອກຕອບ ຂໍ້ສອບແບບເລືອກຕອບເປັນຂໍ້ສອບທີ່ຂຽນຍາກກວ່າຂໍ້ສອບແບບອື່ນໆ ຜູ້ຂຽນຕ້ອງໃຊ້ຄວາມ ພະຍາຍາມຝຶກຂຽນເລື້ອຍໆ ເພື່ອໃຫ້ເກີດທັກສະ ແລະ ຄວາມຊຳນານ ນອກຈາກນີ້ແລ້ວກ່ອນຂຽນຄວນພິຈາລະນາ ວ່າຕົນເອງມີຄວາມຮູ້ໃນເນື້ອໃນທີ່ຈະຖາມນັ້ນພຽງໃດ ແລະ ຮູ້ເທັກນິກວິທີການຂຽນຂໍ້ສອບຫຼາຍນ້ອຍ ພຽງໃດ ສິ່ງເຫຼົ່ານີ້ຈະຊ່ວຍເຮັດໃຫ້ມີລີລາໃນຂຽນຂໍ້ສອບແບບເລືອກຕອບໄດ້ດີ ດັ່ງນັ້ນໃນການຂຽນຂໍ້ສອບ ແບບເລືອກຕອບຄວນພິຈາລະນາເລື່ອງຕໍ່ໄປນີ້:

**ກ. ດ້ານຕົວຄຳຖາມ** ຕົວຄຳຖາມເປັນຕົວເດົາຕົວທຳອິດທີ່ຈະເຮັດໃຫ້ເກີດການຕອບສະໜອງ ຖ້າຕົວຄຳຖາມຂາດຄຸນນະພາບ ແລ້ວ ຜົນການຕອບສະໜອງຈະໄປຄົນລະທິດລະທາງບໍ່ເປັນໄປຕາມຈຸດປະສົງທີ່ຕ້ອງການ ການຂຽນຕົວຄຳຖາມ ຈຶ່ງຄວນລະມັດລະວັງ ດັ່ງນີ້:

**1. ຄວນບອກໃຫ້ຊັດເຈັນວ່າເປັນຄຳຖາມ ຫຼື ເຕີມຄຳ** ຄຳຖາມບໍ່ຄວນຂຽນຂຶ້ນມາແບບບໍ່ມີຄຳຕອບ ຄວນໃຫ້ເປັນຄຳຖາມສົມບູນແບບທຸກເທື່ອ ເວັ້ນແຕ່ຂໍ້ ຄຳຖາມນັ້ນມີຈຸດໝາຍເພື່ອໃຫ້ຜູ້ຕອບເຕີມຄຳ ຫຼື ຕໍ່ຄວາມໝາຍ ດັ່ງຕົວຢ່າງ ຄຳ ມ່ວນ ຄຳມ່ວນ ເປັນຊື່ຂອງຫຍັງ ກ. ເປັນເມືອງເກົ່າ ກ. ແຂວງ ຂ. ແຂວງໜຶ່ງ ຂ. ເມືອງເກົ່າ ຄ. ສະຖານສຶກສາ ຄ. ສະຖານສຶກສາ ງ. ມີບູຮານວັດຖຸ ງ. ບູຮານວັດຖຸ ຈ. ມີບູຮານສະຖານ ຈ. ບູຮານສະຖານ

**2. ຖາມໃຫ້ກົງຈຸດ ແລະ ຊັດເຈນ** ຄຳຖາມຄວນຖາມໃຫ້ກົງຈຸດທີ່ຕ້ອງການໃຫ້ຜູ້ຕອບ ຕອບ ບາງເທື່ອຜູ້ຕອບອາດເບິ່ງເຫັນຄຳຖາມ ເປັນຫຼາຍແງ່ຫຼາຍມຸມ ບໍ່ດີ ຄົນລາວເປັນຢ່າງໃດ ດີຂຶ້ນ ຄົນລາວມີຈິດໃຈລັກສະນະໃດເດັ່ນທີ່ສຸດ ກ. ຂະຫຍັນ ກ. ຂະຫຍັນ ຂ. ສະຫລາດ ຂ. ອົດທົນ ຄ. ສາມັກຄີ ຄ. ສາມັກຄີ ງ. ເກັ່ງໃຈ ຈ. ເຫັນແກ່ຕົວ ຈ. ເຫັນແກ່ຕົວ ເອກະສານປະກອບການບັນລະຍາຍ ໂດຍ ຣົດ.ດົນ.ສຸດທິວັນນະ ພົນສັກດິໂສພົນ 7 ບໍ່ດີ ປະເທດໃດສຳຄັນທີ່ສຸດໃນອາຊຽນ ດີຂຶ້ນ ປະເທດໃດທີ່ເປັນຜູ້ນຳທາງອຸດສາຫະກຳ ກ. ຈີນ ຂອງທະວີບອາຊຽນ ຂ. ຍີ່ປຸ່ນ ກ. ຈີນ ຄ. ເກົາຫຼີ ຂ. ຍີ່ປຸ່ນ ງ. ອິນເດຍ ຄ. ເກົາຫຼີ ຈ. ມາເລເຊຍ ງ. ອິນເດຍ ຈ. ມາເລເຊຍ

**3. ຄຳຖາມຄວນໃຫ້ກະທັດຮັດບໍ່ຟຸ່ມເຟືອຍ** ຄຳຖາມຄວນໃຊ້ຄຳໃຫ້ກະທັດຮັດ ບໍ່ຟຸ່ມເຟືອຍ ບໍ່ໃຊ້ຄຳທີ່ຊ້ຳຊ້ອນໃນຕົວຄຳຖາມໂດຍບໍ່ ຈຳເປັນ ຄຳຖາມທີ່ດີບໍ່ຄວນຂຽນຍາວນັກ ແຕ່ຖ້າຂຽນຍາວ ແລະ ເປັນການໃຊ້ຂໍ້ຄວາມທີ່ເປັນປະໂຫຍດ ຕໍ່ຂໍ້ຄຳຖາມຈະຕັດອອກບໍ່ໄດ້ ເພາະຖ້າຕັດອອກແລ້ວຈະເຮັດໃຫ້ຂໍ້ຄວາມປ່ຽນແປງໄປບໍ່ກົງກັບຈຸດປະສົງເດີມທີ່ຕ້ອງການ ບໍ່ດີ ຄົນຕາຍໃນບ້ານຕ້ອງແຈ້ງພາຍໃນ 24 ຊ.ມ. ດີຂຶ້ນ ຄົນຕາຍນອກບ້ານຕ້ອງແຈ້ງ

ພາຍໃນ ແຕ່ຖ້າຄົນຕາຍນອກບ້ານຕ້ອງແຈ້ງພາຍໃນເວລາ ເວລາ ເທົ່າໃດ ກ. 8 ຊ.ມ. ຂ. 12 ຊ.ມ. ຄ. 24 ຊ.ມ. ງ. 36 ຊ.ມ. ຈ. 48 ຊ.ມ.

**4. ຄຳຖາມຄວນສ້າງຄວາມສົນໃຈໃຫ້ຜູ້ຕອບໄດ້ໃຊ້ຄວາມຄິດ** ຄຳຖາມຄວນຖາມໃຫ້ຜູ້ຕອບໃຊ້ຄວາມຄິດວິເຄາະ ບໍ່ຄວນຖາມສິ່ງທີ່ເດັກທ່ອງຈຳມາຕອບ ຫຼື ບໍ່ໃຊ້ຄວາມຄິດເລີຍ ບໍ່ດີ ຂໍ້ໃດເປັນແມ່ສີ ດີຂຶ້ນ ເມື່ອວາດຮູບພຸ່ມໄມ້ຄວນລະບາຍດ້ວຍສີຄູ່ໃດ ກ. ຂາວ – ແດງ ກ. ຂຽວກັບຟ້າ ຂ. ຂຽວ – ແດງ ຂ. ຂຽວກັບແດງ ຄ. ຂຽວ – ເຫຼືອງ ຄ. ນ້ຳເງິນກັບແດງ ງ. ນ້ຳເງິນ – ແດງ ງ. ນ້ຳເງິນກັບຂຽວ ຈ. ນ້ຳເງິນ – ເຫຼືອງ ຈ. ນ້ຳເງິນກັບເຫຼືອງ ເອກະສານປະກອບການບັນລະຍາຍ ໂດຍ ຣົດ.ດົນ.ສຸດທິວັນນະ ພົນສັກດີໂສພົນ

## 8. ການວັດ ແລະ ປະເມີນຜົນການຮຽນ

ການວັດ ແລະ ປະເມີນຜົນການຮຽນ ເປັນກຣະບວນການທີ່ໃຫ້ໄດ້ມາຊຶ່ງຂໍ້ມູນສານສົນເທດທີ່ສະແດງເຖິງການພັດທະນາຄວາມກ້າວໜ້າ ຄວາມສຳເລັດ ຜົນສຳເລັດທາງການຮຽນຂອງຜູ້ຮຽນ ແລະ ຂໍ້ມູນທີ່ຈະເປັນປະໂຫຍດຕໍ່ການສົ່ງເສີມໃຫ້ຜູ້ຮຽນເກີດການພັດທະນາ ແລະ ຮຽນຮູ້ໄດ້ເຕັມສັກກາຍະພາບ ເກີດທັກສະຂະບວນການ ແລະ ຄ່ານິຍົມທີ່ເພິ່ງປະສົງ ເຊິ່ງສະຖານສຶກສາໃນຖານະເປັນຜູ້ຮັບຜິດຊອບການຈັດການສຶກສາ ຈະຕ້ອງຈັດເຮັດລະບຽບແລະ ແນວປະຕິບັດໃນການວັດ ແລະ ປະເມີນຜົນການຮຽນຂອງສະຖານສຶກສາ ເພື່ອໃຫ້ບຸຄະລາກອນທີ່ກ່ຽວຂ້ອງທຸກຝ່າຍຖືປະຕິບັດຮ່ວມກັນ ແລະ ເປັນໄປໃນມາດຕະຖານດຽວກັນ

1) ການວັດ ແລະ ປະເມີນຜົນລາຍວິຊາ ເປັນການປະເມີນຜົນການຮຽນລາຍວິຊາ ສະຖານສຶກສາຕ້ອງດຳເນີນການຄວບຄູ່ໄປກັບການຈັດກິດຈະກຳການຮຽນຮູ້ຂອງຜູ້ຮຽນ ເພື່ອໃຫ້ຮູ້ວ່າຜູ້ຮຽນມີຄວາມກ້າວໜ້າທາງດ້ານຄວາມຮູ້ ທັກສະ ຂະບວນການ ເຈົ້າທຳ ແລະ ຄ່ານິຍົມອັນເພິ່ງປະສົງອັນເປັນຜົນເນື່ອງມາຈາກການຈັດກິດຈະກຳການຮຽນຮູ້ພຽງໃດ ແລະ ຕ້ອງມີການປະເມີນຜົນທັງໝົດເພື່ອຮູ້ວ່າຜູ້ຮຽນມີຜົນສຳເລັດທາງການຮຽນບັນລຸຕາມມາດຕະຖານການຮຽນຮູ້ ຫຼື ບໍ່ຢ່າງໃດ ດັ່ງນັ້ນການວັດ ແລະ ປະເມີນຜົນຈຶ່ງຕ້ອງໃຊ້ເຄື່ອງມື ແລະ ວິທີການທີ່ຫຼາກຫຼາຍໃຫ້ສອດຄ່ອງກັບຄວາມຮູ້ທີ່ໄດ້ຮຽນ ແລະ ມາດຕະຖານການຮຽນຮູ້ ຜົນການຮຽນຮູ້ທີ່ຄາດຫວັງ ໄວ້

2) ການປະເມີນກິດຈະກຳພັດທະນາຄຸນນະພາບຊີວິດ ເປັນການປະເມີນສິ່ງທີ່ຜູ້ຮຽນປະຕິບັດເພື່ອການພັດທະນາຕົນເອງ ຄອບຄົວ ຊຸມຊົນ ສັງຄົມ ໂດຍພິຈາລະນາທັງເວລາການເຂົ້າຮ່ວມກິດຈະກຳ ການປະຕິບັດກິດຈະກຳ ແລະ ຜົນຈາກການປະຕິບັດກິດຈະກຳຂອງຜູ້ຮຽນຕາມເກນທີ່ສະຖານສຶກສາກຳນົດ

3) ການປະເມີນສິ່ງທີ່ພະຕິບັດ ເປັນການປະເມີນສິ່ງທີ່ຕ້ອງການປຸກຝັງໃນຕົວຜູ້ຮຽນ ໂດຍປະເມີນຈາກກິດຈະກຳການຮຽນຮູ້ທາງດ້ານການພັດທະນາຕົນ ການພັດທະນາງານ ການຢູ່ຮ່ວມກັນໃນສັງຄົມຢ່າງມີຄວາມສຸກ ການພັດທະນາຄຸນນະພາບຊີວິດ ການເຂົ້າຮ່ວມກິດຈະກຳ ການຮຽນຮູ້ໃນຣາຍວິຊາຕ່າງໆ ແລະ ກິດຈະກຳ ໃນລັກສະນະອື່ນໆ ທີ່ສະຖານສຶກສາຈັດຂຶ້ນ ເພື່ອເສີມສ້າງສິ່ງທີ່ເຮັດໃຫ້ເກີດຂຶ້ນກັບຜູ້ຮຽນ

4) ການປະເມີນຄຸນນະພາບການສຶກສານອກລະບົບລະດັບຊາດ ສະຖານສຶກສາຕ້ອງຈັດໃຫ້ຜູ້ຮຽນເຂົ້າຮັບການປະເມີນຄຸນນະພາບການສຶກສານອກລະບົບລະດັບຊາດ ໃນພາກຮຽນສຸດທ້າຍຂອງທຸກລະດັບການສຶກສາໃນສິ່ງທີ່ ຮຽນຮູ້ທີ່ສຳນັກງານ ກຳນົດ ການປະເມີນຄຸນນະພາບການສຶກສານອກລະບົບລະດັບຊາດມີວັດຖຸປະສົງເພື່ອຮູ້ຜົນການຮຽນຂອງຜູ້ຮຽນສຳລັບນຳໄປໃຊ້ໃນການວາງແຜນປັບປຸງ ແລະ ພັດທະນາຄຸນນະພາບການສຶກສານອກລະບົບຕໍ່ໄປ ການປະເມີນດັ່ງກ່າວບໍ່ມີຜົນຕໍ່ການໄດ້ ຫຼື ຕົກຂອງຜູ້ຮຽນ

**8.1 ການຈົບຫຼັກສູດ**

ຜູ້ຈົບການສຶກສາຕາມຫຼັກສູດການສຶກສານອກລະບົບລະດັບການສຶກສາຂັ້ນພື້ນຖານໃນແຕ່ລະລະດັບການສຶກສາຕ້ອງຜ່ານເກນການຈົບຫຼັກສູດ ດັ່ງນີ້:

1) ຜ່ານການປະເມີນ ແລະ ໄດ້ຮັບຜົນການຕັດສິນການຮຽນຕາມເກນທີ່ການສຶກສາກຳນົດທັງ 5 ເນື້ອໃນການຮຽນຮູ້ ແລະ ໄດ້ຕາມຈຳນວນໜ່ວຍກິດທີ່ກຳນົດຕາມໂຄງສ້າງຫຼັກສູດ

2) ຜ່ານຂະບວນການປະເມີນກິດຈະກຳພັດທະນາຄຸນນະພາບຊີວິດບໍ່ນ້ອຍກວ່າ 100 ຊົ່ວໂມງ

3) ຜ່ານຂະບວນການປະເມີນເຈົ້າທຳ

4) ເຂົ້າຮັບການປະເມີນຄຸນນະພາບການສຶກສານອກລະບົບລະດັບຊາດ

## 9. ຄວາມໝາຍຂອງການວັດ ແລະ ການປະເມີນ

**9.1 ຄວາມໝາຍຂອງການວັດຜົນ (measurement)**

ການວັດຜົນໝາຍເຖິງຂະບວນການເພື່ອໃຫ້ໄດ້ມາເຊິ່ງຕົວເລກ ຫຼື ສັນຍາລັກ ຫຼື ຄູນນະພາບຂອງສິ່ງທີ່ວັດ ໂດຍໃຊ້ເຄື່ອງມືທີ່ມີປະສິດທິພາບຫາລາຍລະອຽດສິ່ງທີ່ດວ່າມີຈຳນວນ ຫຼື ປະລິມານເທົ່າໃດເຊັ່ນ ການວັດສ່ວນສູງຂອງເດັກເປັນການແປງຄຸນລັກສະນະ ດ້ານຄວາມສູງອອກມາເປັນຕົວເລກວ່າຈັກຊັງຕີແມັດ ຫຼື ນັກຮຽນສອບວິຊາຄະນິດໄດ້ 20 ຄະແນນກໍ່ເປັນການແປງຄຸນະພາບ ດ້ານຄວາມສາມາດໃນວິຊາຄະນິດສາດອອກມາເປັນຕົວເລກໂດຍຊ້ແບບທົດສອບເປັນຕົ້ນ.

**9.2 ຄວາມໝາຍຂອງການປະເມີນຜົນ (evaluation)**

ການປະເມີນຜົນໝາຍເຖິງຂະບວນການທີເຮັດຕໍ່ຈາກການວັດຜົນ ແລ້ວວິນິດໄສຕັດສິນລົງສະຫຼຸບຄຸນຄ່າທີ່ໄດ້ຈາກການວັດຜົນຢ່າງມີກົດເກນ ແລະ ມີຄຸນະທຳ ເພື່ອພິຈາລະນາຕັດສິນໃຈວ່າສິ່ງນັ້ນດີ ຫຼື ຊົ່ວ,ເກັ່ງ ຫຼື ອ່ອນ,ໄດ້ ຫຼື ຕົກ ເປັນຕົ້ນ.

ການວັດ ແລະ ການປະເມີນຜົນມີຄວາມສຳພັນກັນຄື ການວັດຜົນຈະເຮັດໃຫ້ໄດ້ຕົວເລກ ຫຼື ປະລິມານ ຫຼື ລາຍລະອຽດຂອງຄຸນລັກສະນະ ຫຼື ພຶດຕິກຳທີ່ກຳນົດໄວ້ເພື່ອຕັດສິນໃຈ ຫຼື ສະຫຼຸບກ່ຽວກັບສິ່ງນັ້ນເຊິ່ງເອີ້ນວ່າການປະເມີນຜົນ

ການວັດຜົນ ແລະ ການປະເມີນຜົນທາງການສຶກສາກ່ຽວຂ້ອງກັບການສອນຕະຫຼອດເວລາ ເຊິ່ງຈຸດໝາຍຂອງການວັດຜົນ ແລະ ປະເມີນຜົນນັ້ນ ບໍ່ສະເພາະການນຳຜົນການວັດໄປຕັດສິນໄດ້-ຕົກ ຫຼື ໃຜຄວນຈະໄດ້ເກດເທົ່າໃດເທົ່ານັ້ນ ແຕ່ຄວນນຳຜົນການວັດ ແລະ ປະເມີນນີ້ໄປໃຊ້ໃຫ້ເກີດປະໂຫຍດຕໍ່ການສຶກສາໃນຫຼາຍໆລັກສະນະດັ່ງນີ້:

1. ເພື່ອຄົ້ນຄ້ວາ ແລະ ພັດທະນາສະມັດຖະພາບຂອງນັກຮຽນໝາຍເຖິງການວັດຜົນປະເມີນຜົນເພື່ອເບິ່ງວ່ານັກຮຽນບົກພ່ອງຫຼືບໍ່ເຂົ້າໃຈໃນເລື່ອງໃດຕອນໃດແລ້ວຄູພະຍາຍາມສອນໃຫ້ນັກຮຽນເກີດຄວາມຮູ້ ມີຄວາມຈະເລີນງອກງາມຕາມສັກກາຍະພາບຂອງຕົນ ຈຸດໝາຍຂໍ້ນີ້ມີຄວາມສຳຄັນຢ່າງຍິ່ງ ຫຼື ອາດກ່າວໄດ້ວ່າເປັນປັດຊະຍາການວັດຜົນການສຶກສາ( ຊະວານ ແພລັດກຸນ 2516.34)

2. ເພືອຈັດຕຳແໜ່ງ (placement) ການວັດຜົນ ແລະ ປະເມີນຜົນວິທີນີ້ເພື່ອປຽບທຽບຕົນເອງກັບ

ຄົນອື່ນໆ ໂດຍອາໃສກຸ່ມເປັນເກນວ່າໃຜເກັ່ງ,ອ່ອນ ໃຜໄດ້ອັນດັບທີ1 ໃຜສອບໄດ້-ສອບຕົກ ຫຼື ໃຜຄວນໄດ້ເກດໃດ ເປັນຕົ້ນ.

ການວັດຜົນ ແລະ ປະເມີນຜົນວິທີນີ້ເໝາະສຳລັບການຕັດສິນຜົນການຮຽນແບບອີງກຸ່ມ ແລະ ການຄັດເລືອກຄົນເຂົ້າເຮັດວຽກ.

3. ເພື່ອວິນິໄສ (diagnostic) ເປັນການວັດຜົນ ແະ ປະເມີນຜົນທີ່ມຈຸດໝາຍ ເພື່ອຫາຄວາມບົກຜ່ອງຂອງຜູ້ຮຽນວ່າວິຊາທີ່ຮຽນນັ້ນມີຈຸດບົກຜ່ອງຕອນໃດເພື່ອທີ່ຈະໄດ້ນຳໄປປັບປຸງແກ້ໄຂຊ່ອມເສີມສ່ວນທີ່ຂາດຫາຍໄປໃຫ້ດີຍິ່ງຂຶ້ນເຊິ່ງໃນຂະບວນການຮຽນການສອນເອີ້ນວ່າການວັດຜົນຍ່ອຍ (formative measurement)

4. ເພື່ອປຽບທຽບ (assessment) ເປັນການວັດຜົນ ແລະ ປະເມີນຜົນເພື່ອປຽບທຽບຕົນເອງ ຫຼື ເພື່ອເບິ່ງຄວາມງອກງາມຂອງເດັກແຕ່ລະຄົນໃນຊ່ວງເວລາທີ່ຕ່າງກັນວ່າຈະເລີນງອກງາມເພີ່ມຂຶ້ນກວ່າເດີມຫຼາຍນ້ອຍພຽງໃດ ເຊັ່ນ ການປຽບທຽບຜົນກ່ອນຮຽນ (pre-test) ແລະ ຫຼັງຮຽນ(post-test).

5. ເພື່ອພະຍາກອນ (prediction) ເປັນການວັດຜົນ ແລະ ປະເມີນຜົນ ເພື່ອທຳນາຍອະນາຄົດຕໍ່ໄປວ່າຈະເປັນຢ່າງໃດນັ້ນຄືເມື່ອເດັກຄົນໜຶ່ງສອບແລ້ວສາມາດຮູ້ອະນາຄົດໄດ້ເລີຍວ່າ ຖ້າການຮຽນຂອງເດັກຢູ່ໃນລັກສະນະນີ້ຕໍ່ໄປແລ້ວການຮຽນຈະປະສົບຜົນສຳເລັດ ຫຼື ບໍ່ເຊິ່ງສາມາດນຳໄປໃຊ້ໃນເລື່ອງຂອງການແນະແນວການສຶກສາວ່ານັກຮຽນຄວນຮຽນສາຂາໃດ ຫຼື ອາຊີບໃດຈິ່ງຈະຮຽນໄດ້ສຳເລັດ. ແບບທົດສອບທີ່ໃຊ້ວັດຈຸດໝາຍໃນຂໍ້ນີ້ໄດ້ແກ່: ແບບທົດສອບວັດຄວາມຖະນັດ (aptitude test) ແບບທົດສອບວັດສະຕິປັນຍາ (intelligence test) ເປັນຕົ້ນ.

6. ເພື່ອປະເມີນຜົນ (evaluation) ເປັນການນຳຜົນທີ່ໄດ້ມາມາຈາກການວັດໄປປຽບທຽບກັບເກນທີ່ກຳນົດໄວ້ ເພື່ອຕັດສິນສະຫຼຸບໃນການວັດຜົນວ່າເໝາະສົມ ຫຼື ບໍ່ ແລະ ຄວນປັບປຸງແກ້ໄຂຢ່າງໃດ

### 9.3 ຄວາມສຳຄັນຂອງການວັດຜົນ ແລະ ປະເມີນຜົນ

ການຈັດການຮຽນການສອນໜຶ່ງໆຄວນມີການກວດສອບຄຸນນະພາບຂອງຜູ້ຮຽນ ຜູ້ສອນ ແລະຂະບວນການສອນເປັນໄລຍະ ເພື່ອພິຈາລະນາກວດສອບວ່າຜູ້ຮຽນມີຄຸນສົມບັດ ຫຼື ເກີດພຶດຕິກຳທີ່ເໝາະສົມກົງຕາມຈຸດປະສົງຂອງການຮຽນ ການສອນຕົງຕາມທີ່ກຳນົດໄວ້ຫຼືບໍ່ ຂະບວນການວັດ ແລະ ປະເມີນຜົນນີ້ຈະພະຍາຍາມເຮັດໃຫ້ໄດ້ຂໍ້ມູນຈາກການຈັດການຮຽນ ການສອນ ເພື່ອນຳມາໃຊ້ວິເຄາະ ແລະ ຕັດສິນໃຈວ່າການສອນດັ່ງກ່າວນັ້ນບັນລຸຜົນ ຫຼື ບໍ່ ນຳຜົນການຕັດສິນໃຈເພື່ອປະໂຫຍດໃນການຈັດລຳດັບເລື່ອນຊັ້ນຮຽນ ແລະ ພັດທະນາປັບປຸງການຮຽນການສອນຕໍ່ໄປ.

ການຮຽນ ການສອນຫາກບໍ່ມີການວັດ ແະ ປະເມີນຜົນແລ້ວຜູ້ສອນກໍ່ບໍ່ຮູ້ວ່າຜູ້ຮຽນມີຄວາມຮູ້ເພີ່ມຂຶ້ນ ຫຼື ບໍ່ ຫຼາຍ,ໜ້ອຍພຽງໃດ ບໍ່ຮູ້ວ່າການຈັດການຮຽນການສອນດັ່ງກ່າວມີປະສິດທິພາບ ຫຼື ບໍ່ ເໝາະສົມ ຫຼື ບໍ່ ຫາກຕ້ອງການພັດທະນາປັບປຸງແກ້ໄຂ ຈະປັບປຸງພັດທະນາຈຸດໃດເປັນຕົ້ນ ຄວາມສຳຄັນ ແລະ ອົງປະກອບຂອງການວັດ ແລະ ປະເມີນຜົນການຈັດການຮຽນ ການສອນ



ການວັດ ແລະ ປະເມີນຜົນ ⟵⟶ ການສອນ ແລະ ການຈັດປະສົບການການຮຽນຮູ້

**9.4 ປະໂຫຍດຂອງການວັດ ແລະ ປະເມີນຜົນການສຶກສາ**

ການວັດຜົນ ແລະ ການປະເມີນຜົນການສຶກສາມີປະໂຍຫດຕໍ່ຂະບວນການຮຽນກາສອນເປັນຢ່າງຍິ່ງ ເພາະວ່າເປັນເຄື່ອງມືຢ່າງໜຶ່ງໃນການຕັດສິນໃຈຂອງຄູ ຜູ້ບໍລິຫານ ແລະ ນັກສຶກສາເຊິ່ງພໍຈະສະຫຼຸບປະໂຫຍດໃນດ້ານຕ່າງໆດັ່ງນີ້:

1. ປະໂຫຍດຕໍ່ຄູ ຊ່ວຍໃຫ້ຮູ້ກ່ຽວກັບພຶດຕິກຳເບື້ອງຕົ້ນຂອງນັກຮຽນ ຄູກໍ່ຈະຮູ້ວ່ານັກຮຽນມີຄວາມຮູ້ພື້ນຖານພ້ອມທີ່ຈະຮຽນໃນບົດຕໍ່ໄປຫຼື ບໍ ຖ້າຫາກວ່ານັກຮຽນຄົນໃດຍັງບໍ່ພ້ອມຄູກໍ່ຈະຫາທາງສອນຊ່ອມເສີມ ນອກຈາກນີ້ຍັງຊ່ວຍໃຫ້ຄູປັບປຸງເທັກນິກການສອນໃຫ້ເໝາະສົມ ແລະ ມີປະສິດທິພາບອີກດ້ວຍ.

2. ປະໂຫຍດຕໍ່ນກຮຽນ ຊ່ວຍໃຫ້ນັກຮຽນຮູ້ວ່າຕົວເອງເກັ່ງ ຫຼື ອ່ອນວິຊາໃດ ເລື່ອງໃດ ຄວາມາມາດຂອງຕົນຢູ່ໃນລະດັບໃດເພື່ອທີ່ຈະໄດ້ປັບປຸງຕົນເອງຕະຫຼອດຈົນແກ້ໄຂຂໍ້ບົກຜ່ອງທາງການຮຽນຂອງຕົນໃຫ້ດີຍິ່ງຂຶ້ນ

3. ປະໂຫຍດຕໍ່ການແນະແນວ ຊ່ວຍໃຫ້ແນະແນວການເລືອກວິຊາຮຽນ ການສຶກສາຕໍ່ ການເລືອກປະກອບອາຊີບຂອງນັກຮຽນໃຫ້ສອດຄ່ອງເມາະສົມກັບຄວາມຮູ້ຄວາມສາມາດແລະບຸກຄະລິກພາບຕະຫຼອດຈົນຊ່ວຍໃຫ້ສາມາດແກ້ປັນຫາທາງຈິດວິທະຍາ ອາລົມ ສັງຄົມ ແລະ ບຸກຕະລິກພາບຕ່າງໆຂອງນັກຮຽນ.

4. ປະໂຫຍດຕໍ່ການໍລິຫານ ຊ່ວຍໃນການວາງແຜນການຮຽນ ການສອນ ຕະຫຼອດຈົນການບໍລິຫານໂຮງຮຽນຊ່ວຍໃຫ້ຮູ້ວ່າປີຕໍ່ໄປຈະວາງແຜນໂຮງຮຽນຢ່າງໃດເຊັ່ນການຈັດຄູເຂົ້າສອນການສົ່ງສົມເດັກທີ່ຮຽນດີການປັບປຸງລາຍວິຊາຂອງໂຮງຮຽນໃຫ້ດີຂຶ້ນເປັນຕົ້ນ ນອກຈາກນີ້ຍັງມີປະໂຫຍດຕໍ່ການຄັດເລືອກບຸກຄະລາກອນເຂົ້າເຮັດວຽກໃນຕຳແໜ່ງຕ່າງໆ ຕາມຄວາມເໝາະສົມ.

5. ປະໂຫຍດຕໍ່ການວິໄຈ ຊ່ວຍວິນິດໄສຂໍ້ບົກຜ່ອງໃນການບໍລິຫານງານຂອງໂຮງຮຽນ ການສອນຂອງຄູ ແລະ ຂໍ້ບົກຜ່ອງຂອງນັກຮຽນນອກຈາກນີ້ຍັງນຳໄປສູ່ການວິໄຈການທົດສອບຕ່າງໆອັນຈະເປັນປະໂຫຍດຕໍ່ການສຶກສາຫຼາຍ.

6. ປະໂຫຍດຕໍ່ຜູ້ປົກຄອງ ( ພິດ ທອງຊົ້ນ 2524:7) ຊ່ວຍໃຫ້ຮູ້ວ່າເດັກໃນການປົກຄອງຂອງຕົນນັ້ນ ມີຄວາມຈະເລີນງອກງາມເປັນຢ່າງໃດເພື່ອກຽມການສະໜັບສະໜຸນໃນການຮຽນຕໍ່ຕະຫຼອດຈົນການເລືອກອາຊີບຂອງເດັກ

**9.5 ຫຼັກການໃນການວັດ ແລະ ປະເມີນຜົນ**

ການວັດຜົນການສຶກສາຈະມີປະສິດທິພາບໄດ້ນັ້ນກໍ່ຕໍ່ເມື່ອຢຶດຖືຕາມຫຼັກການທີ່ສຳຄັນດັ່ງນັ້ນ.

**ຕ້ອງໃຫ້ຖືກກັບຈຸດປະສົງຂອງການຮຽນ - ການສອນ**

ການວັດຜົນການສຶກສາ ເປັນການວັດເບິ່ງວ່າຜົນຂອງການສອນຂອງຄູນັ້ນເຮັດໃຫ້ເດັກຮຽນຮູ້ຕາມຈຸດທີ່ວາງໄວ້ ຫຼື ບໍ່, ຖ້າການວັດຜົນການສຶກສາບໍ່ຖືກກັບຈຸດປະສົງຂອງການຮຽນ - ການສອນແລ້ວ ກໍຖືວ່າບໍ່ມີປະໂຫຍດຫຍັງເລີຍ.

**ຊອກເຄື່ອງມືວັດຜົນທີ່ດີ ແລະ ເໝາະສົມທີ່ສຸດ**

ຄູຄວນຊອກຫາເຄື່ອງມືວັດຜົນທີ່ມີຄຸນນະພາບດີທີ່ສຸດ ເພື່ອໃຫ້ໄດ້ຜົນທີ່ຖືກຕ້ອງ ແລະ ໜ້າເຊື່ອຖືໄດ້.

**ພະຍາຍາມໃຫ້ຄວາມຜິດພາດໜ້ອຍທີ່ສຸດ**

ໃນການວັດຜົນການສຶກສານັ້ນຈະເກີດມີຄວາມຜິດພາດສະເໝີ ດັ່ງນັ້ນຄູຄວນລະມັດລະວັງ ເພື່ອໃຫ້ຄວາມຜິດພາດນັ້ນໜ້ອຍທີ່ສຸດ, ຖ້າໃຊ້ເຄື່ອງມືຊະນິດໃດວັດກໍຄວນລະມັດລະວັງເຖິງຂໍ້ຈຳກັດຂອງເຄື່ອງມືຊະນິດນັ້ນ ແລະ ຄວນເຮັດການວັດຜົນຫຼາຍຄັ້ງ.

**ຄວນຕີຄວາມໝາຍຂອງການວັດຜົນໃຫ້ຖືກຕ້ອງ**

ເມື່ອໄດ້ຜົນການວັດອອກມາເປັນຄະແນນ ( ສັນຍາລັກ) ແລ້ວຄວນຕີຄວາມໝາຍຂອງຄະແນນ(ສັນຍາລັກ) ນັ້ນໃຫ້ຖືກຕ້ອງເໝາະສົມ ແລະ ຍຸດຕິທຳ.

**ຄວນໃຊ້ການວັດເປັນປະໂຫຍດທີ່ສຸດ**

ການວັດຜົນບໍ່ແມ່ນພຽງແຕ່ຮູ້ວ່າແຕ່ຈະຮູ້ວ່າເດັກຄົນໃດໄດ້ຄາດໝາຍ ຫຼື ບໍ່, ເດັກຄົນໃດເກັ່ງ ຫຼື ອ່ອນ ແຕ່ສິ່ງທີ່ດີ ຕ້ອງພະຍາຍາມຄົ້ນຄວ້າເຖິງວ່າເດັກແຕ່ລະຄົນມີຈຸດດີ ແລະ ຈຸດອ່ອນຢູ່ບ່ອນໃດ ເພື່ອໃຫ້ການສອນບັນລຸຈຸດປະສົງທີ່ວາງໄວ້.

ການວັດຜົນ ແລະ ປະເມີນຜົນມີການພົວພັນກັນຢ່າງສະນິດແໜ້ນກັບການຮຽນ - ການສອນ ແລະ ບໍ່ສາມາດຕັດແຍກອອກຈາກກັນໄດ້.

**ຈຸດປະສົງຂອງການວັດ ແລະ ປະເມີນຜົນການຮຽນ-ການຫຼິ້ນຂອງເດັກ.**

1) **ການວັດຜົນເພື່ອພັດທະນາການຮຽນ-ການສອນ**

ເປັນການວັດຜົນເພື່ອຊອກຮູ້ວ່າເດັກມີຄວາມບົກຜ່ອງ ຫຼື ບໍ່ເຂົ້າໃຈໃນບົດຮຽນແລ້ວຈຶ່ງຄ່ອຍຫາວິທີການສອນເພື່ອແກ້ໄຂຂໍ້ບົກຜ່ອງເຫຼົ່ານັ້ນ,ຈຸດປະສົງນີ້ຖືວ່າເປັນຈຸດປະສົງທີ່ສຳຄັນທີ່ສຸດ.

2) **ວັດຜົນເພື່ອວິນິດໄສ**

ເປັນການວັດຜົນເພື່ອຊອກຮູ້ວ່າເດັກມີຄວາມບົກບົກຜ່ອງຢູ່ຈຸດໃດໃນບົດຮຽນໃດໜຶ່ງ ຈາກນັ້ນກໍ່ຊອກທາງຊ່ວຍເຫຼືອ ເພື່ອໃຫ້ເດັກມີຄວາມເຂົ້າໃຈໃນຈຸດນັ້ນ.

3) **ວັດຜົນເພື່ອຈັດອັນດັບທີ່ຂອງເດັກ**

ເປັນການວັດຜົນເພື່ອປຽບທຽບວ່າເດັກຄົນໃດເກັ່ງ,ຄົນໃດອ່ອນ ເດັກຄົນໃດຈະໄດ້ສັນຍາລັກເທົ່າໃດ.

4) **ວັດຜົນເພື່ອປຽບທຽບພັດທະນາການຂອງເດັກ**

ເປັນການວັດເພື່ອປຽບທຽບສະມັດຕະພາບຂອງເດັກວ່າ ເດັກມີຄວາມກ້າວໜ້າ ຫຼື ບໍ່ ເຊັ່ນ: ການປຽບທຽບກ່ອນຮຽນ ແລະ ຫຼັງຮຽນ ຫຼື ປຽບທຽບການຮຽນລະຫວ່າງພາກຮຽນທີ 1 ແລະ ພາກຮຽນທີ 2.

5) **ວັດຜົນເພື່ອພະຍາກອນ**

ເປັນການວັດຜົນເພື່ອຄາດຄະເນລ່ວງໜ້າວ່າເດັກຄົນໃດຈະມີພອນສະຫວັນໃນດ້ານໃດ ເພື່ອໄປຮຽນຕໍ່ໃນລາຍວິຊາໃດຈຶ່ງຈະມີຜົນສຳເລັດອັນດີ ການວັດຜົນແບບນີ້ມີປະໂຫຍດໃນການແນະນຳການສຶກສາ.

6) **ວັດຜົນເພື່ອປະເມີນຜົນ**

ເປັນການວັດຜົນເພື່ອເອົາຜົນຂອງການວັດນັ້ນໄປໃຊ້ໃນການສະຫຼຸບຕີລາຄາວ່າ ການຈັດການສຶກສານັ້ນມີປະສິດທິພາບສູງ ຫຼື ຕໍ່າ, ຫຼັກສູດເໝາະສົມ ຫຼື ບໍ່ຄວນປັບປຸງແກ້ໄຂທັຍງແດ່ ແລະ ຈະຕັດສິນໃຈເຮັດແນວໃດໃນຂັ້ນຕໍ່ໄປ ຫຼື ອາດນໍາເຄື່ອງມືທີ່ໃຊ້ໃນການວັດຜົນນັ້ນໄປວິເຄາະວ່າເໝາະສົມ ຫຼື ບໍ່.

**9.6 ລັກສະນະຂອງການວັດແລະປະເມີນຜົນການຮຽນ - ການຫຼິ້ນຂອງເດັກ**

ການວັດຜົນແລະ ປະເມີນຜົນເປັນການວັດໃນສິ່ງທີ່ເປັນນາມມະທໍາເຊິ່ງເປັນການວັດຜົນທີ່ຫຍຸ້ງຍາກກວ່າການວັດຜົນທີ່ເປັນຮູບປະທໍາ.ສະນັ້ນ ການວັດຜົນການສຶກສາຈິ່ງມີຄຸນລັກສະນະດັ່ງຕໍ່ໄປນີ້:

1) **ການວັດຜົນການສຶກສາເປັນການວັດຜົນທາງອ້ອມ**

ການວັດຜົນທາງການສຶກສາບໍ່ມີເຄື່ອງມືຊະນິດໃດທີ່ຈະວັດໄດ້ ໂດຍກົງຄືກັບການວັດແທກລວງຍາວ ແລະ ການຊັ່ງນໍ້າໜັກ.ການວັດຜົນການສຶກສາເປັນການວັດສິ່ງທີ່ເຮົາບໍ່ສາມາດທີ່ຈະແຕະຕ້ອງໄດ້. ດັ່ງນັ້ນຈິ່ງຊອກຫາວິທີການຕ່າງໆ ມາປະຕິບັດຈາກນັ້ນກໍແປຜົນຂອງການວັດຜົນນັ້ນອອກມາເປັນຄະແນນ (ສັນຍາລັກ) ວ່າເດັກຜູ້ນັ້ນເກັ່ງ ຫຼື ອ່ອນ. ມີຄວາມຮູ້ໜ້ອຍຫຼາຍປານໃດເຊິ່ງບໍ່ແນ່ໃຈວ່າເປັນການແປຄວາມໝາຍທີ່ຖືກຕ້ອງ ແລະ ຊັດເຈນ.

2) **ການວັດຜົນການສຶກສາເປັນການວັດຜົນທີ່ບໍ່ສົມບູນ,ບໍ່ລະອຽດ.**

ໃນຂະບວນການຮຽນ - ການສອນເລື່ອງໃດໜຶ່ງນັ້ນ ມັນມີລາຍລະອຽດຫຼາຍທີ່ສຸດ,ຈົນຜູ້ສອນບໍ່ອາດສາມາດທີ່ຈະສ້າງຄໍາຖາມໃຫ້ຄົບຖ້ວນໄດ້.

ດັ່ງນັ້ນ, ຜູ້ສອນຈິ່ງຈໍາເປັນເລືອກເອົາເນື້ອໃນທີ່ສໍາຄັນຕອນໃດຕອນໜຶ່ງມາສ້າງເປັນຄໍາຖາມ ເພື່ອໃຫ້ເດັກຕອບແລ້ວຖືເອົາຜົນຂອງການຕອບນັ້ນມາຕີລາເປັນຄະແນນ(ສັນຍາລັກ) ຂອງເລື່ອງນັ້ນໆ ດ້ວຍເຫດນັ້ນຈິ່ງຖືວ່າເປັນການວັດຜົນທີ່ບໍ່ສົມບູນ.

3) **ການວັດຜົນການສຶກສາຍ່ອມມີຄວາມຜິດພາດ,ຄວາມຄາດເຄື່ອນ.**

ການວັດຜົນການສຶກສາເປັນການວັດໃນສິ່ງທີ່ເຮົາບໍ່ສາມາດຈັບບາຍໄດ້. ດັ່ງນັ້ນ,ຈິ່ງເກີດມີຄວາມຜິດພາດສູງ,ສິ່ງທີ່ເຮັດໃຫ້ມີຄວາມຜິດພາດນັ້ນຫຼາຍປັດໃຈ ແຕ່ໃນທີ່ນີ້ສະເໜີບາງອັນຄື:

**ກ. ຄວາມຜິດພາດທີ່ເກີດຈາກນັກຮຽນເອງເຊັ່ນ:**

ໃນມື້ທົດສອບນັ້ນເດັກຜູ້ໃດຜູ້ອາດຈະມີສຸຂະພາບບໍ່ຄ່ອຍດີ,ມີຄວາມກັງວົນໃຈ ຫຼື ມີອາລົມບໍ່ດີ, ຕຽມຕົວບໍ່ດີ ທຸດຈະລິດໃນການສອບເສັງ ແລະ ອື່ນໆ........

**ຂ. ຄວາມຜິດພາດທີ່ເກີດຈາກສະພາບແວດລ້ອມເຊັ່ນ:**

ສະພາບຫ້ອງສອບເສັງບໍ່ດີ ມີສຽງລົບກວນຈາກພາຍນອກ ຄໍາຖາມບໍ່ຊັດເຈນກໍາມະການຄວບຄຸມຫ້ອງເສັງເຄັ່ງຄັດເກີນໄປ ຫຼື ໂຍະຍານເກີນໄປເປີດໂອກາດໃຫ້ມີການທຸດຈະລິດໃນການສອບເສັງ ແລະ ອື່ນໆ....

**9.7 ປະເພດຂອງການວັດ ແລະ ປະເມີນຜົນ.**

**ປະເພດຂອງການວັນຜົນ**

ການວັດຜົນການສຶກສາຕາມຈຸດປະສົງຂອງການວັດ ແລະ ປະເມີນຜົນແບ່ງອອກເປັນ **3** ປະເພດຄື:

1) ການວັດຜົນກ່ອນຮຽນ
2) ການວັດຜົນລະຫວ່າງການຮຽນ
3) ການວັດຜົນຫຼັງການຮຽນ.

**1) ການວັດຜົນກ່ອນຮຽນ**

ເປັນການປະເມີນກ່ອນການເລີ່ມຕົ້ນການຈັດກິດຈະກໍາການຮຽນຮູ້. ເພື່ອໃຫ້ຄູຮູ້ຈັກວ່າລະດັບຄວາມ

ຮູ້ພື້ນຖານຂອງນັກຮຽນທີ່ຕົນຈະສອນນັ້ນມີໜ້ອຍຫຼາຍສໍ່າໃດ,ຖ້າມີນັກຮຽນຈໍານວນໜຶ່ງຫາກມີຄວາມຮູ້ພື້ນຖາບໍ່ທັນພຽງພໍ ທີ່ຈະຮັບໃນສິ່ງທີ່ຄູຈະສອນ ຄູກໍຄວນສ້າງພື້ນຖານໃຫ້ເຂົາເຈົ້າກ່ອນ ເພື່ອຈະກ້າວໄປຮຽນເນື້ອໃນໃໝ່,ທີ່ຄູຈະຖ່າຍທອດໃຫ້.ຖ້າບໍ່ດັ່ງນັ້ນນັກຮຽນຈະບໍ່ສາມາດຕິດຕາມຄູທັນ ແລະ ຈະເຮັດໃຫ້ລະດັບນັກຮຽນທີ່ໂຕກັນຢູ່ແລ້ວຍິ່ງຫ່າງໄກຈາກນັ້ນອີກ.ໝາຍເຖິງຜູ້ເກັ່ງຈະເກັ່ງຂຶ້ນແຕ່ຜູ້ອ່ອນຍັງຢູ່ຄືເກົ່າ.

**2) ການວັດຜົນລະຫວ່າງການຮຽນ**

ເປັນການວັດ ແລະ ປະເມີນຜົນຍ່ອຍໃນລະຫວ່າງຮຽນ ເພື່ອກວດສອບວ່ານັກຮຽນບັນລຸຈຸດປະສົງການຮຽນຮູ້ຕາມແຜນການຮຽນຮູ້ທີ່ກໍານົດໄວ້ໃນແຕ່ລະໜ່ວຍ ຫຼື ບໍ່ຫາກພົບວ່າຍັງບໍ່ຜ່ານຈະໄດ້ດໍາເນີນການປັບປຸງແກ້ໄຂໃຫ້ຜ່ານກ່ອນເຂົ້າສູ່ໜ່ວຍຕໍ່ໄປ. ຊ່ວຍໃຫ້ນັກຮຽນປະສົບຜົນສໍາເລັດໃນການຮຽນຮູ້ຢ່າງຕໍ່ເນື່ອງ ຜົນທີ່ໄດ້ຈາກການປະເມີນນໍາໄປໃຊ້ໃນການປັບປຸງຂໍ້ບົກຜ່ອງ ແລະ ສົ່ງເສີມການຮຽນຮູ້ຂອງນັກຮຽນ ແລະ ໃຊ້ໃນການປັບປຸງຂໍ້ບົກຜ່ອງຂອງການຈັດກິດຈະກໍາການຮຽນຮູ້.

ການວັດຜົນໝາຍເຖິງສອນໄປນໍາ ແລະ ກວດກາໄປນໍາ,ຈາກນັ້ນນໍາເອົາຜົນຂອງການກວດກາມາປັບປຸງການຮຽນ - ການສອນໃຫ້ດີຂຶ້ນ.ການວັດຜົນແບບນີ້ຖືວ່າເປັນສິ່ງທີ່ຈໍາເປັນທີ່ສຸດ.ຄູຈະເຮັດການວັຜົນ ແລະ ປະເມີນຜົນ

**3) ການວັດຜົນຫຼັງການຮຽນ.**

ເປັນການວັດຜົນເມື່ອສິ້ນສຸດການຈັດກິດຈະກໍາການຮຽນຮູ້ ເພື່ອຕັດສິນຄວາມສໍາເລັດຂອງຜູ້ຮຽນວ່າມີຄວາມຮູ້ໃນເລື່ອງທີ່ຮຽນລະດັບໃດ ຄວນໄດ້ລະດັບຜົນການຮຽນເທົ່າໃດ ຫາກນໍາຜົນການປະເມີນຫຼັງຮຽນໄປປຽບທຽບກັບຜົນການປະເມີນກ່ອນຮຽນແລ້ວຈະຊ່ວຍໃຫ້ຮູ້ວ່ານັກຮຽນມີພັດທະນາການຂຶ້ນພຽງໃດ.

ການວັດຜົນຫຼັງການຮຽນໝາຍເຖິງການວັດຜົນເພື່ອຕັດສິນຄວາມສາມາດຂອງນັກຮຽນ.ສົມມຸດວ່າໃນວິຊາທີ່ສອນເຮົາມີວັດຖຸປະສົງທີ່ຈະວັດຜົນຢູ່ 40 ຈຸດປະສົງ,

ການວັດຜົນ 3 ປະເພດນີ້ແມ່ນວັດຖຸປະສົງ ເພື່ອພັດທະນາການຮຽນ - ການສອນ, ບໍ່ແມ່ນວັດຜົນເພື່ອບອກວ່ານັກຮຽນຜູ້ນີ້ເສັງໄດ້ ຫຼື ນັກຮຽນຜູ້ນັ້ນເສັງຕົກ. ດັ່ງນັ້ນຈຶ່ງອະທິບາຍລະອຽດກ່ຽວກັບແຕ່ລະປະເພດຂອງການວັດຜົນ.

**9.8 ປະເພດຂອງການປະເມີນຜົນ**

ການປະເມີນຜົນແບ່ງໄດ້ເປັນ 2 ປະເພດ ການປະເມີນແບບອີງກຸ່ມ ແລະ ການປະເມີນແບບອີງເກນ.

**1) ການປະເມີນຜົນແບບອີງກຸ່ມ:** ເປັນການປຽບທຽບຄະແນນຈາກແບບທົດສອບ ຫຼື ຜົນງານຂອງບຸກຄົນໃດບຸກຄົນໜຶ່ງກັບບຸກຄົນອື່ນໆ ທີ່ໄດ້ເຮັດແບບທົດສອບດຽວກັນ ຫຼື ໄດ້ເຮັດງານຢ່າງດຽວກັນ ນັ້ນຄື ເປັນການໃຊ້ ເພື່ອຈໍາແນກ ຫຼື ຈັດລໍາດັບບຸກຄົນໃນກຸ່ມ ການປະເມີນແບບນີ້ມັກໃຊ້ກັບການປະເມີນເພື່ອຄັດເລືອກເຂົ້າສຶກສາຕໍ່ ຫຼື ການສອບຊິງທຶນຕ່າງໆ.

**2) ການປະເມີນຜົນແບບອີງເກນ**: ເປັນການປຽບທຽບຄະແນນຈາກແບບທົດສອບ ຫຼື ຜົນງານຂອງບຸກຄົນໃດບຸກຄົນໜຶ່ງກັບເກນ ຫຼື ຈຸດມຸ່ງໝາຍທີ່ໄດ້ກໍານົດໄວ້ເຊັ່ນ ການປະເມີນລະຫວ່າງການຮຽນ-ການສອນວ່າຜູ້ຮຽນໄດ້ບັນລຸວັດຖຸປະສົງການຮຽນຮູ້ທີ່ໄດ້ກໍານົດໄວ້ ຫຼືບໍ່

**9.9 ຄຸນນະທໍາແລະຈັນຍາບັນຂອງນັກວັດຜົນແລະປະເມີນຜົນ**

ເພື່ອເຮັດໃຫ້ການວັດຜົນ ແລະ ການປະເມີນຜົນການສຶກສາມີຄວາມຖືກຕ້ອງເປັນທໍາ,ມີປະສິດທິພາບນັ້ນຜູ້ດໍາເນີນການວັດຜົນ ແລະ ປະເມີນຜົນການສຶກສາມີ ຄຸນນະທໍາ ແລະ ຈັນຍາບັນດັ່ງນີ້.

**ມີຄວາມຊື່ສັດບໍລິສຸດ**

ເປັນຜູ້ທີ່ມີຄວາມຊື່ສັດບໍລິສຸດຕໍ່ການວັດຜົນຄື ບໍ່ສໍ້ໂກງ,ບໍ່ເຫັນແກ່ຄ່າຈ້າງລາງວັນ,ບໍ່ເຮັດໃຫ້ບົດທົດສອບສູງກວ່າລະດັບຄວາມຮູ້ຂອງເດັກ ຫຼື ຕັດສິນໃຫ້ເດັກຜ່ານການທົດສອບ ແລະ ອື່ນໆ

**ມີຄວາມຍຸດຕິທຳ**

ໃຫ້ຄວາມເປັນທຳແກ່ຜູ້ເຂົ້າຮ່ວມການວັດຜົນທຸກຄົນເຊັ່ນ: ໃຊ້ການທົດສອບໃຫ້ຖືກຕ້ອງເປັນທຳ,ໃຊ້ວິທີການວັດຜົນຢ່າງຖືກຕ້ອງ ແລະ ມີຄຸນນະທຳ.

**ມີຄວາມດຸໝັ່ນແລະອົດທົນ**

ການວັດຜົນການສຶກສາເປັນວຽກທີ່ຕ້ອງເຮັດເປັນປະຈຳ ດັ່ງນັ້ນ, ຜູ້ເຮັດການວັດຜົນຕ້ອງມີຄວາມດຸໝັ່ນອົດທົນ ແລະ ຄວນຖືວ່າການວັດຜົນຕ້ອງໄປຄຽງຄູ່ກັບຈັດການຮຽນ - ການສອນຢູ່ສະເໝີ.

**ມີຄວາມລະອຽດຖີ່ຖ້ວນແລະຮອບຄອບ**

ການວັດຜົນການສຶກສາເປັນວຽກງານທີ່ລະອຽດອ່ອນທີ່ສຸດ ດັ່ງນັ້ນ, ຕ້ອງເຮັດດ້ວຍຄວາມລະມັດລະວັງລະອຽດຖີ່ຖ້ວນມີຄວາມສຸຂຸມຮອບຄອບ ເພື່ອບໍ່ໃຫ້ເກີດມີບັນຫາຂຶ້ນມາໄດ້.

**ມີຄວາມຮັບຜິດຊອບສູງ**

ຜູ້ເຮັດການວັດຜົນການສຶກສາຕ້ອງຖືວ່າການວັດຜົນເປັນວຽກງານທີ່ສຳຄັນ ດັ່ງນັ້ນ, ຕ້ອງເປັນຜູ້ທີ່ຮັກສາຄວາມລັບຂອງຜົນການທົດສອບໄວ້ເປັນຢ່າງດີ ແລະ ເຮັດສຳເລັດຕາມໜ້າທີ່ມອບໝາຍ.

**ກົງຕໍ່ເວລາ**

ການວັດຜົນການສຶກສາຕ້ອງກົງຕໍ່ເວລາທີ່ກຳນົດໄວ້ເຊັ່ນ: ການສົ່ງຕົ້ນສະບັບຂອງບົດທົດສອບ,ການນັດວັນທົດສອບ ແລະ ການສົ່ງຜົນການທົດສອບໃຫ້ທັນເວລາ.

**ສົນໃຈເຕັກນິກການວັດຜົນຢູ່ສະເໝີ**

ເມື່ອມີການວັດຜົນຕ້ອງພະຍາຍາມໃຊ້ເຕັກນິກການວັດຜົນໃຫ້ເໝາະສົມບໍ່ແມ່ນເຮັດໄປຕາມໃຈມັກຂອງຕົນເອງ ຫຼື ເຮັດພໍແລ້ວມື ( ຂຽນຜົນການທົດສອບເອົາເອງ ).

**9.10 ການປະເມີນພັດທະນາການເດັກ**

**ປະເມີນພັດທະນາການດ້ານຮ່າງກາຍ ແລະ ການເຄື່ອນໄຫວ**

1) ເດັກເຮັດຫຍັງແດ່ໄດ້
2) ເດັດເຮັດສິ່ງໃດໄດ້ຫຼືບໍ່( ແລ່ນຂາ, ແລ່ນພ້ອມອຸປະກອນ)
3) ເດັກເຮັດໄດ້ດີໃນລະດັບໃດ
4) ເດັກເຮັດໄດ້ດົນປານໃດ
5) ເປັນຫຍັງເດັກຍັງເຮັດສິ່ງນີ້ບໍ່ໄດ້( ຫຼິ້ນເກມຕໍ່ຮູບພາບ)
6) ພັດທະນາການຂອງເດັກແຕກຕ່າງໄປຢ່າງໃດເມື່ອປຽບທຽບກັບການປະເມີນຄັ້ງກ່ອນ
7) ຂັ້ນຕອນໃດທີ່ເດັກຂ້າມໄປ ແລະ ບໍ່ໄດ້ເຮັດ
8) ເດັກມີສະມະທິພຽງໃດໃນການເຮັດສິ່ງນັ້ນ
9) ພັດທະນາການຂັ້ນຕໍ່ໄປທີ່ເດັກຄວນໄດ້ລົງມືເຮັດຄືຫຍັງ

**ປະເມີນພັດທະນາການທາງດ້ານພາສາ**

1) ເດັກຟັງເປັນຫຼືບໍ່ ຟັງເລື່ອງນີ້ເຂົ້າໃຈຫຼືບໍ
2) ເດັກຟັງເລື່ອງທີ່ອ່ານໃຫ້ຟັງໄດ້ນານພຽງໃດ
3) ເດັກຟັງໄດ້ດົນຈັກນາທີ ມີສະມາທິໃນການຟັງຫຼືບໍ
4) ເດັກເວົ້າສື່ສານສິ່ງທີ່ຄິດອອກມາໄດ້ດີພຽງໃດ
5) ເດັກອ່ານ ຫຼື ຈື່ເລື່ອງລ້າວໃນໜັງສືຈືນອ່ານໄດ້ ທັງທີ່ສະກົດຍັງທັນໄດ້ແລ້ວຫຼືບໍ່ ຖ້າເຮັດໄດ້ໃນລະດັບໃດ
6) ເດັກມັກເຂົ້າມຸມອ່ານໜັງສືຫຼື ບໍ່ ເມື່ອເຂົ້າມຸມອ່ານເຂົາອ່ານໜັງສືຫຍັງ ແລະ ປະເພດໃດທີ່ມັກອ່ານ
7) ເດັກມັກຂຽນຫຼື ບໍ່
8) ທຸກຂໍ້ຂ້າງເທິງພັດທະນາການຂອງເດັກແຕກຕ່າງໄປຢ່າງໃດເມື່ອປຽບທຽບກັບການປະເມີນຄັ້ງກ່ອນ

**ການປະເມີນດ້ານສິລະປະສ້າງສັນ**

1. ເດັກເຮັດກິດຈະກຳ ແຕ້ມ,ປັ້ນ ຕັດ,ຕິດໄດ້ ຫຼື ຍັງ
2. ເດັກໃຊ້ເຄື່ອງມືເຮັດງານສິລະປະ ເປັນ ຫຼື ບໍ
3. ເດັກເຮັດງານສິລະປະດ້ວຍຄວາມຕັ້ງໃຈ ແລະ ອົດທົນພຽງໃດ
4. ເດັກສື່ສານຄວາມໝາຍອອກມາໃນງານສິລະປະໄດ້ຫຼືບໍ່
5. ເດັກກ້າລິເລີ່ມເຮັດງານສິລະປະຕາມຄວາມຄິດຂອງຕົວເອງ

**ການປະເມີນພັດທະນາການດ້ານອາລົມແລະຈິດໃຈ**

1. ເດັກຮູ້ຈັກຈັດການເວລາຂອງຕົນເອງຫຼືຍັງ
2. ເດັກຮູ້ຈັກຄຸມອາລົມໄດ້ພຽງໃດຂະນະເຈິເຫດການເລື່ອງລ້າວທີ່ຜັນແປໄປ ເຊັ່ນ ພໍໃຈ ຫຼື ບໍພໍໃຈ,ເສຍໃຈ ຫຼື ໂມໂຫ
3. ເດັກຮູ້ຈັກການຄອຍ ຫຼື ຍັງ
4. ເດັກຮູ້ຈັກຂອບໃຈ ຂໍໂທດ ຫຼື ຍັງ ໃຊ້ຄຳໃນສະຖານະການທີ່ຄວນໃຊ້ຫຼືຍັງ
5. ເດັກຮູ້ຈັກແບ່ງປັນ ແລະ ເກັບຮັກສາສິ່ງຂອງ ຫຼື ບໍ່
6. ເດັກຮູ້ຈັກການຢູ່ກັບຄົນອື່ນ ແລະ ຢູ່ໄດ້ຢ່າງດີ ຫຼື ບໍ່
7. ເດັກເຮັດວຽກຮ່ວມກັບຄົນອື່ນຈົນສຳເລັດ
8. ເດັກຮູ້ຈັກຫົວຂົບຂັນ ເສົ້າໃຈໃນເລື່ອງໜ້າເສົ້າ ຫຼື ບໍ

**ການປະເມີນພັດທະນາການດ້ານການຄິດ**

1. ເດັກສື່ສານສິ່ງທີ່ຄິດອອກມາໄດ້ ຫຼື ບໍ່
2. ເດັກອະທິບາຍເຫດຜົນຂອງສິ່ງທີ່ໄດ້ ຫຼື
3. ເດັກອະທິບາຍປະກົດການຕ່າງໆທີ່ພົບໄດ້ ຫຼື ບໍ່
4. ເດັກຄັດສິນໃຈໄດ້ບໍວ່າສິ່ງນັ້ນດີ ສິ່ງນັ້ນມັກ ສິ່ງນັ້ນບໍ່ມັກ
5. ເດັກໃຫ້ເຫດຜົນໄດ້ບໍ່ວ່າສິ່ງນັ້ນດີ ສິ່ງນີ້ດີ ເພາະຫຍັງ
6. ເດັກຫຼິ້ນຂອງຫຼິ້ນຕ່າງໆແບບຊັບຊ້ອນພັດທະນາຈາກງ່າຍໄປຫາຍາກ ຫຼື ບໍ່

## 10. ເຄື່ອງມືໃນການວັດຜົນການຮຽນ - ຫຼິ້ນຂອງເດັກ

**ຊະນິດຂອງເຄື່ອງມືວັດຜົນການສຶກສາ**

1. **ການທົດສອບ**

ການທົດສອບເປັນວິທີໜຶ່ງທີ່ສາມາດຂອງເດັກຢູ່ໃນໂຮງຮຽນກັບເດັກທົ່ວໄປ ໂດຍໃຊ້ເກນປົກກະຕິຂອງພັດທະນາການເດັກ. ການໃຊ້ແບບທົດສອບຄູສາມາດໃຊ້ໄດ້ໂດຍອີງຕາມບາງຕົວຊີ້ວັດຂອງສະມັດຖະພາບຄວາມພ້ອມທາງດ້ານການຮຽນຂອງເດັກ.

ແບບທົດສອບທີ່ມີຄຳຕອບຢູ່ເບື້ອງຊ້າຍ ແລະ ຄຳຕອບຢູ່ເບື້ອງຂວາ,ສ່ວນຄຳຕອບທີ່ໃຫ້ເດັກເລືອກທາງຂວາຈະມີເສັ້ນຂັ້ນເປັນຫ້ອງໆ ຈາກເບື້ອງຊ້າຍໄປຫາເບື້ອງຂວາ.

ຕົວຢ່າງ: ໃຫ້ຂີດເສັ້ນອ້ອມຮູບທີ່ມີຮູບຮ່າງຄືກັນ

2. **ການສັງເກດ**

ການສັງເກດໂດຍຜ່ານຈາກການຈັດກິດຈະກຳການຮຽນ - ການສອນ ໃນແຕ່ລະກິດຈະກຳຊຶ່ງຊ່ວຍໃຫ້ຄູ ຫຼື ຜູ້ກ່ຽວຂ້ອງເຂົ້າໃຈ,ເຫັນໄດ້ຄວາມປ່ຽນແປງຂອງເດັກ ພ້ອມທັງຊອກວິທີແກ້ໄຂສ່ວນຂາດຕົກບົກຜ່ອງ, ສົ່ງເສີມດ້ານນີ້ ຄູຄວນມີການວາງແຜນ ແລະ ມີການບັນທຶກ.

3. **ການສຳພາດ**

ການສຳພາດ ຫຼື ສົນທະນາກັບຜູ້ປົກຄອງຂອງເດັກ ໂດຍກົງເປັນວິທີທີ່ດີທີ່ສຸດ ທີ່ຈະຮຽນຮູ້ພຶດຕິກຄວາມສາມາດຂອງເດັກຢູ່ພາຍໃນຄອບຄົວ ຊຶ່ງອາດຈະແຕກຕ່າງຢູ່ໃນໂຮງຮຽນ ແລະ ເປັນການສ້າງສາຍສຳພັນທີ່ດີລະຫວ່າງພໍ່ແມ່ກັບຄູ,ຄູກັບເດັກ.

4. **ການສອບຖາມ**

ການສອບໝາຍເຖິງຊຸດຂອງຄຳຖາມກ່ຽວກັບເລື່ອງໃດເລື່ອງໜຶ່ງ ເພື່ອໃຊ້ໃນການເກັບກຳລວບລວມຂໍ້ມູນຈາກກຸ່ມຕົວຢ່າງທີ່ຕ້ອງການສຶກສາ ເຊັ່ນ: ຄວາມຄິດເຫັນ ບຸກຄະລິກພາບ ແລະ ຄວາມສົນໃຈຕ່າງໆ.

## 11. ການປະເມີນຜົນໂດຍໃຊ້ແຟ້ມຜົນງານ

### 11.1 ຄວາມໝາຍຂອງການປະເມີນຜົນໂດຍການໃຊ້ແຟ້ມສະສົມຜົນງານ ( portfolios )

ການປະເມີນຜົນໂດຍໃຊ້ແຟ້ມສະສົມຜົນງານເປັນວິທີການປະເມີນຜົນການຮຽນ - ການສອນໂດຍເດັກມີສ່ວນຮ່ວມໃນການປະເມີນຜົນ,ຄື ໃຫ້ເດັກແຕ່ລະຄົນເກັບລວບລວມຜົນງານ,ບັນທຶກຜົນການປະເມີນຕ່າງໆໄວ້ໃນແຟ້ມສະສົມຜົນງານ,ຫຼັງຈາກນັ້ນເດັກແຕ່ລະຄົນຈັດ ແລະ ຄັດເລືອກຜົນງານຈາກການປະຕິບັດກິດຈະກຳສ້າງສັນມາລວມຜົນງານ ເພື່ອຈັດເປັນແຟ້ມສະສົມຜົນງານຂອງຕົນ.

ກ. ການສະແດງຜົນຕາມຄວາມສາມາດຂອງແຕ່ລະບຸກຄົນ,ເດັກຈະເລືອກຜົນງານ ແລະ ຈັດກຽມເຮັດແຟ້ມສະສົມຜົນງານດ້ວຍຕົນເອງ, ປຽບທຽບຄືກັນກັບນັກສິນລະປິນທີ່ລວບລວມ ແລະ ສະແດງຜົນງານ

ຂ. ຄວາມຮ່ວມມືກັນໃນການເຮັດວຽກງານລະຫວ່າງຄູ ແລະ ເດັກ,ເຊິ່ງຈະຊ່ວຍກັນກຳນົດເກນ,ວິທີການ ແລະ ຮູບແບບການປະເມີນໂດຍໃຊ້ແຟ້ມສະສົມຜົນງານ.

ຄ. ວິທີການຍຶດຖືຜູ້ຮຽນເປັນໃຈກາງເຊິ່ງຕ້ອງຍຶດຖືເປົ້າໝາຍ,ຄວາມຕ້ອງການ,ຄວາມສົນໃຈ ແລະ ຄວາມສຳເລັດຂອງຜູ້ຮຽນແຕ່ລະຄົນເປັນຫຼັກ,ຜູ້ຮຽນຕ້ອງຮັບຜິດຊອບໃນການເກັບລວບລວມຜົນງານຂອງຕົນເອງ.

ງ. ຕ້ອງປະສົມປະສານລະຫວ່າງຄູສອນ ແລະ ການປະເມີນຜົນເຂົ້າກັນ.

ຈ. ການສົ່ງເສີມຜູ້ຮຽນໃຫ້ຮູ້ຈັກຮັບຜິດຊອບ ແລະ ຮູ້ປະເມີນຜົນຂອງຕົນເອງ

**11.2 ສ່ວນປະກອບຂອງແຟ້ມສະສົມຜົນງານ**

ໃນແຟ້ມສະສົມຜົນງານປະກອບມີ:

ກ. ເຈ້ຍສະຫຼຸບຜົນງານຂອງເດັກ ເພື່ອສະຫຼຸບວ່າໃນແຟ້ມສະສົມຜົນງານນີ້ມີຜົນງານອັນໃດແດ່?

**ຕົວຢ່າງ:** ເຈ້ຍສະຫຼຸບຜົນງານ

ຊື່ ແລະນາມສະກຸນເດັກ ...........................................................................................

ຊື່ ແລະ ນາມສະກຸນຄູສອນ ......................................................................................

ກິດຈະກຳ ...................................... ໄລຍະເວລາ ............,ເລີ່ມຕົ້ນ .............ເຖິງ.............

ໃນແຟ້ມສະສົມຜົນງານມີອັນໃດແດ່?

## 12. ການປະເມີນຜົນພັດທະນາການດ້ານສະຕິປັນຍາ

### 12.1 ການປະເມີນພັດທະນາການທາງດ້ານພາສາຂອງເດັກໃນຊັ້ນລ້ຽງເດັກ

**ກ. ເດັກອ່ອນຕອນຕົ້ນ**

ໄລຍະນີ້ເດັກຈະຮ້ອງໄຫ້ ເພື່ອຕອບສະໜອງສິ່ງທີ່ຕ້ອງການ,ການຮ້ອງໄຫ້ຂອງເດັກໄດ້ມີການປ່ຽນແປງເປັນລຳດັບທີ່ສ່ອງແສງໃຫ້ເຫັນພັດທະນາການທາງດ້ານພາສາ ເດັກເລີ່ມຮ້ອງສຽງອໍ - ແອຕັ້ງແຕ່ອາຍຸ 6 ເດືອນ,ສຽງທີ່ຮ້ອງອອກມານັ້ນເປັນພະຍາງດຽວຈະເປັນສະຫຼະ ຫຼື ພະຍັນຊະນະກໍ່ຕາມ ແລ້ວສຽງດັ່ງກ່າວຈະກາຍເປັນພາສາເຮົາເມື່ອເດັກໄດ້ເຝິກຮຽນສຽງຕ່າງໆ ໂດຍເດັກຮຽນແບບຜູ້ໃຫຍ່ທີ່ຢູ່ໃກ້ຊິດ ສ້າງສຽງຕ່າງໆໃຫ້ເດັກຟັງ.

ເດັກເລີ່ມເຂົ້າໃຈຄຳເວົ້າຂອງຜູ້ອື່ນ ແລະ ສະແດງຄວາມຮູ້ສຶກອອກມາທາງສີໜ້າ ແລະ ທ່າທາງພ້ອມກັນນັ້ນ ເດັກສາມາດເຮັດຕາມຄຳສັ່ງໄດ້ຖືກຕ້ອງເຊັ່ນ: “ ຈັບກວດນົມ “ , “ ຂໍຕຸກກະຕາ “ ແລະ “ ຫອມແກ້ມ “ ເປັນຕົ້ນ.ນອກຈາກນັ້ນ ເດັກເຝິກເວົ້າປະໂຫຍກທີ່ມີຄຳດຽວເຊັ່ນ: ແມວ, ນ້ຳ........ ຄ່ອຍໆພັດທະນາຂຶ້ນເທື່ອລະຄຳແຕ່ກໍ່ຍັງໃຊ້ທ່າທາງປະກອບ.

**ຂ. ເດັກອ່ອນຕອນປາຍ**

ພາສາຂອງເດັກມີການພັດທະນາຂຶ້ນ.ເດັກສາມາດເວົ້າຄຳສັບຕ່າງໆໄດ້ຫຼາຍກວ່າ 30 ຄຳ ແຕ່ນ້ອຍກວ່າ 50 ຄຳ ຫຼື ເດັກບາງຄົນອາດຈະຮູ້ຄຳສັບຫຼາຍກວ່ານີ້.ນອກຈາກນີ້ ເດັກສາມາດປະສົມຄຳເຂົ້າກັນໄດ້,ໃຫ້ຄວາມສົນໃຈຟັງຜູ້ໃຫຍ່ລົມກັນ ແລະ ສາມາດເຂົ້າໃຈປະໂຫຍກໄດ້.ແຕ່ການສື່ສານຂອງເດັກຍັງບໍ່ເປັນການໃຊ້ພາສາເວົ້າທັງໝົດ.ໃນຂະນະດຽວກັນນັ້ນ ຍັງສະແດງທ່າທາງອອກມາ ພ້ອມກັນນັ້ນເດັກຍັງມັກເບິ່ງປຶ້ມຮູບ ແລະ ສາມາດຊີ້ບອກຊື່ຮູບ,

ຮ້ອງເພງໄດ້ບາງຕອນ ແລະ ມັກຮຽນສຽງເວົ້າຂອງແມ່ ຫຼື ພໍ່ ຫຼື ສຽງຂອງສາວຄູ

**1) ການປະເມີນພັດທະນາການທາງດ້ານພາສາຂອງເດັກໃນຊັ້ນອະນຸບານ**

**ກ. ພັດທະນາການທາງດ້ານພາສາຂອງເດັກອາຍຸ 3 – 4 ປີ**

ເດັກສາມາດເວົ້າຫຼາຍຂຶ້ນ ແລະ ມີຄຳສັບໃໝ່ໆ,ເວົ້າປະໂຫຍກເອງໄດ້ຫຼາຍຂຶ້ນ,ໃຊ້ຄຳເວົ້າ 4-5 ຄຳໄດ້,ຮູ້ຈັກວາງປະໂຫຍກໃຫ້ຖືກຕ້ອງ,ເຂົ້າໃຈຄຳວ່າ ເບື້ອງເທິງ ແລະ ເບື້ອງລຸ່ມ,ຮູ້ຈັກໃຊ້ຄຳເວົ້າປະຕິເສດເຊັ່ນ: ບໍ່ໄປ,ມັກຟັງເລື່ອງ ຫຼື ນິທານໄດ້ດົນກວ່າ 20 ນາທີ,ມັກທຳສຽງປາກເວົ້າແປກໆ,ບອກຊື່ສ່ວນຕ່າງໆຂອງກາຍຮ່າງ ແລະ ສິ່ງຂອງຕ່າງໆ ທີ່ຢູ່ໃກ້ຕົວໄດ້,ຮ້ອງເພງສັ້ນໆໄດ້,ປະຕິບັດຕາມຄຳສັ່ງງ່າຍໆໄດ້,ໃຊ້ຄຳຖາມ ແລະ ຄຳຕອບງ່າຍໆໄດ້.

**ຂ. ພັດທະນາການທາງດ້ານພາສາຂອງເດັກອາຍຸ 4 – 5 ປີ**

ດ້ານພາສາດີຂຶ້ນກວ່າເດັກອາຍຸ 3 ປີ ທາງດ້ານຄໍາສັບ,ການໃຊ້ຄໍາກິລິຍາ,ການໃຊ້ຄໍາຖາມ ແລະ ຄໍາຕອບໄດ້ດີ,ສົນທະນາ ແລະ ສະແດງຄວາມຄິດເຫັນຢ່າງງ່າຍໆໄດ້,ປະຕິບັດຕາມຄໍາສັ່ງງ່າຍໄດ້,ເລົ່າເລື່ອງ ແລະ ສິ່ງທີ່ພົບເຫັນໄດ້,ເດັກ 4 ປີ ຈໍາຄໍາສັບໄດ້ປະມານ1,550 ຄໍາ ແລະ ຮອດ 4 ປີ 6 ເດືອນ ສາມາດຈື່ຄໍາສັບໄດ້ 1,990 ຄໍາ, ສາມາດເວົ້າຄໍາວ່າ ສະບາຍດີ,ຂອບໃຈ,ລາກ່ອນໄດ້,ສົນໃຈເບິ່ງໂທລະທັດຫຼາຍຂຶ້ນ,ບອກຊື່ ແລະ ນາມສະກຸນໄດ້, ຮູ້ຈັກເພດຂອງຕົນເອງ,ແຕ່ງປະໂຫຍກ ໂດຍໃຊ້ຄໍາ 5 – 6 ຄໍ,ມັກແຕ່ງປະໂຫຍກໃຊ້ຄໍາຕ່າງໆ,ຮູ້ຈັກຄໍາບໍ່ສຸພາບຈາກເພື່ອນໆທີ່ມັກເວົ້າວ່າ ກູ.... ມຶງ..... ມັກຄວາມຮຸນແຮງເວລາເລົ່າເລື່ອງເຊັ່ນ: ຂ້າກັນ,ຟັນກັນ,ບອກຊື່ສິ່ງຂອງຈາກຮູບພາບໄດ້ເຖິງ 10 ຮູບ,ມັກເລື່ອງສະໜຸກສະໜານ,ຕະຫຼົກ.

**ຄ. ພັດທະນາການທາງດ້ານພາສາຂອງເດັກອາຍຸ 5- 6 ປີ**

ເດັກເຂົ້າໃຈພາສາໄດ້ດີຂຶ້ນເຊັ່ນ:ສາມາດບອກຊື່ສິ່ງຂອງຕ່າງໆໄດ້ຫຼາຍຂຶ້ນ,ຮ້ອງເພງ,ເລົ່າເລື່ອງຫຼື ເຫດການຕ່າງໆທີ່ພົບເຫັນໄດ້ຢ່າງດີ,ສາມາດປະຕິບັດຕາມຄໍາສັ່ງ ຫຼື ຄໍາສັ່ງທີ່ເປັນຂັ້ນຕອນຕໍ່ເນື່ອງໄດ້,ຕັ້ງຄໍາຖາມ ແລະ ຕອບກ່ຽວກັບສິ່ງຂອງຕ່າງໆໄດ້,ສົນທະນາ ແລະ ສະແດງຄວາມຄິດເຫັນໄດ້ດີຂຶ້ນ,ເວົ້າໄດ້ຄ່ອງ ແລະ ຖືກຕ້ອງຕາມຫຼັກໄວຍະກອນ ແຕ່ຍັງອອກສຽງພະຍັນຊະນະບາງຕົວບໍ່ໄດ້ຊັດເຈນເຊັ່ນ: ສ,ວ,ຟ ສົນໃຈຄໍາໃໝ່ ພະຍາຍາມຄົ້ນຫາຄວາມໝາຍຂອງຄໍານັ້ນ,ຈື່ຄໍາສັບໄດ້ເຖິງ 2,200 ຄໍາ,ບອກຊື່ອາຍຸ ບ່ອນຢູ່ກັບໝູ່ເພື່ອນ ຫຼື ຄົນດຽວ.

**1. ການປະເມີນພັດທະນາການທາງດ້ານຄະນິດສາດຂອງເດັກໃນຊັ້ນລ້ຽງເດັກ**

ເດັກອາຍຸ 2 - 3 ປີໃນໄລຍະນີ້ເດັກສາມາດຊອກຮູ້,ຄົ້ນຫາ ແລະ ສາມາດແກ້ໄຂບັນຫາໄດ້ບາງຢ່າງໄດ້ເອງ,ເລີ່ມຮຽນຮູ້ຈໍາແນກສີພື້ນຖານ 3 ສີໄດ້,ຮູ້ປຽບທຽບ ແລະ ເຂົ້າໃຈຄວາມໝາຍພື້ນຖານຂອງຄະນິດສາດ.

## 2. ການປະເມີນພັດທະນາການທາງດ້ານຄະນິດສາດຂອງເດັກໃນຊັ້ນອະນຸບານ

**ກ. ພັດທະນາການທາງດ້ານຄະນິດສາດຂອງເດັກອາຍຸ 3 – 4 ປີ**

ເດັກສາມາດປຽບທຽບຂະໜາດໃຫຍ່ - ນ້ອຍ - ໜາ - ບາງໄດ້, ຈໍາແນກສີພື້ນຖານ ແດງ, ເຫຼືອງ , ຟ້າໄດ້,ສາມາດຈໍາແນກຮູບເລຂາຄະນິດໄດ້ເຊັ່ນ: ຮູບວົງມົນ,ສາມຫຼ່ຽມ ແລະ ສີ່ຫຼ່ຽມມົນທົນໄດ້,ປຽບທຽບໜັກ - ເບົາໄດ້,ປຽບທຽບຊັດສ່ວນໄດ້ເຊັ່ນ:ຕຸ້ຍ-ຈ່ອຍ,ສັ້ນ-ຍາວ,ສູງ-ຕໍ່າ ແລະ ສາມາດປຽບທຽບຈໍານວນນ້ອຍ ຫຼື ຫຼາຍໄດ້, ຕົວເລກ ຈື່ຮູບຮ່າງ ແລະ ລໍາດັບຕົວເລກໄດ້ຈາກ 0 ຫາ 3, ຕໍາແໜ່ງ, ຮູ້ຄວາມໝາຍຄໍາວ່າ ໜ້າ - ຫຼັງ - ຊ້າຍ-ຂວາ - ເທິງ - ລຸ່ມໄດ້

**ຂ. ພັດທະນາການທາງດ້ານຄະນິດສາດຂອງເດັກອາຍຸ 4 – 5 ປີ**

ຄວາມພ້ອມດ້ານຄະນິດສາດດີຂຶ້ນກວ່າເດັກ 3 – 4 ປີ,ສາມາດປຽບທຽບສິ່ງຂອງ 3 ອັນ,ນັບເລກໄດ້ 1- 20,ຮູ້ຄຸນຄ່າຈໍານວນ 1 – 5 ໄດ້,ສັງເກດ ແລະ ບອກຄວາມແຕກຕ່າງລຽງລໍາດັບກັບສິ່ງຂອງຂະນາດໃຫຍ່ - ກາງ - ນ້ອຍໄດ້,ບອກຊື່ວັນໃນ 1 ອາທິດ,ຮູ້ຈັກແບ່ງສິ່ງຂອງອອກເປັນ 2 ສ່ວນເທົ່າກັນ,ບອກຊື່ ແລະ ຈັບຄູ່ແມ່ສີ, ໃຊ້ຄໍາເວົ້າທີ່ບອກທີ່ຕັ້ງໄດ້ເຊັ່ນ: ກ້ານນ້າ,ດ້ານຫຼັງ,ທາງລຸ່ມ,ທາງເທິງ,ທາງໃນ ແລະ ທາງນອກໄດ້,ມີຄວາມເຂົ້າໃຈເລື່ອງເວລາເພີ່ມຂຶ້ນເຊັ່ນ:ວັນ,ເດືອນ,ນາທີ,ເວລາ,ເຂົ້ານອນໄດ້.

**ຄ. ພັດທະນາການທາງດ້ານຄະນິດສາດຂອງເດັກອາຍຸ 5- 6 ປີ**

ເດັກສາມາດນັບເລກແຕ່ 1- 30 ໄດ້ເຊັ່ນ: ຮູບວົງມົນ,ສາມຫຼ່ຽມ,ສີ່ຫຼ່ຽມມົນທົນ,ສີ່ຫຼຽມຍາວ,ສັງເກດ ແລະ ບອກຄວາມແຕກຕ່າງຂອງຂະນາດຕ່າງໆໄດ້,ຮູ້ຈັກຈໍານວນເທົ່າກັນ,ໜ້ອຍກວ່າ,ບອກເວລາເຊົ້າ,ຕອນທ່ຽງ,

ຕອນແລງ ແລະ ກາງງຄືນໄດ້,ບອກວັນໃນ 1 ອາທິດໄດ້,ປຽບທຽບ ແລະ ບອກຄວາມແຕກຕ່າງຂອງນໍ້າໜັກ(ໜັກ-ເບົາ)ຂະໜາດ ແລະ ລັກສະນະຂອງວັດຖຸ,ບອກອຸນຫະພູມຮ້ອນ-ເຢັນ-ອຸ່ນໄດ້,ບອກທີ່ຕັ້ງໄດ້.ທາງໜ້າ,ທາງຫຼັງ,ຊ້າຍ,ຂວາ,ນີ້ວມືຈາກຂ້າງໜຶ່ງຕໍ່ເນື່ອງໄປອີກຂ້າງໜຶ່ງໄດ້ ແລະ ບອກຈຳນວນນິ້ວມືໄດ້,ຈັບຄູ່ຈຳນວສິ່ງຂອງໄດ້,ຮູ້ເລື່ອງຄວາມສຳພັນລະຫວ່າງການຂຽນ ແລະການບອກຈຳນວນ,ລອກແບບຕົວພະຍັນຊະນະຕາມຄຳບອກໄດ້,ມັກເກມຕໍ່ຮູບພາບ,ໂດມິໂນໃນຮູບພາບ,ຈັດກຸ່ມ ແລະ ຈັດຄູ່ສິ່ງຂອງທີ່ມີພື້ນຜິວ,ກິ່ນ ແລະ ລົດຊາດຄືກັນ,ຈັບຄູ່ສີ 10 ສີ ແລະ ບອກຊື່ສີພື້ນຖານ 4 ສີໄດ້.

## 13. ຄັງຂໍ້ສອບ

### 13.1 ຄວາມຫມາຍຂອງຄັງຂໍ້ສອບ

ຄັງຂໍ້ສອບ (Item bank) ເປັນຄຳທີ່ເລີ່ມໃຊ້ໃນປະເທດອັງກິດ ຊ່ວງກາງປີ ຄ.ສ. 1960 ໝາຍເຖິງການຈຳແນກຂໍ້ສອບອອກເປັນກຸ່ມໆ ຕາມເກນທີ່ກຳນົດຢ່າງເປັນລະບົບ ເຊັ່ນດຽວກັບການຈັດຫນັງສືໃນຫ້ອງສະໝຸດ ເພື່ອຄວາມສະດວກວ່ອງໄວໃນການຄັດເລືອກຂໍ້ສອບມາໃຊ້ໃນການສ້າງແບບສອບປະເພດຕ່າງໆ ຄຳພາສາອັງກິດທີ່ໃຊ້ໃນຄວາມຫມາຍຂອງຄັງຂໍ້ສອບ : question bank, item pool, item collection, item reservoirs, test item libraries ມີວັດຖຸປະສົງເພື່ອພັດທະນາຄຸນນະພາບແບບທົດສອບ ລຸດພາລະໃນການອອກຂໍ້ສອບໃໝ່ ແລະ ຫຼຸດຄ່າໃຊ້ຈ່າຍປະຢັດເວລາໃນການສ້າງຂໍ້ສອບໃໝ່ ນັກການສຶກສາຫຼາຍທ່ານໄດ້ໃຫ້ຄວາມຫມາຍຂອງຄັງຂໍ້ສອບໄວ້ ດັ່ງນີ້ :

Mllan and Arter (1984) ເປັນແຫຼ່ງຈັດເກັບຂໍ້ສອບທີ່ມີຄວາມກ່ຽວຂ້ອງສຳພັນກັນຈຳນວນຫຼາຍເພື່ອສາມາດນຳເອົາໄປໃຊ້ໄດ້ຢ່າງສະດວກວ່ອງໄວ

ກໍາວິຊາການ ( 2534 ) ເປັນແຫຼ່ງລວບລວມຂໍ້ສອບລາຍຂໍ້ທີ່ວັດໄດ້ກົງຕາມຈຸດປະສົງການຮຽນຮູ້ແຕ່ລະຈຸດປະສົງ ໃນແຕ່ລະລາຍວິຊາ ເພື່ອໃຫ້ຄູຜູ້ສອນສາມາດນຳໄປໃຊ້ໃນດ້ານການວັດຜົນ ແລະ ການສອນຊ່ອມເສີມໃນແຕ່ລະຈຸດປະສົງທີ່ຕ້ອງການແລະຈຳເປັນໄດ້ຢ່າງວ່ອງໄວ

ອຸໄທ ບຸຍປະເສີດ (2540) ທະນາຄານຂໍ້ສອບ ທີ່ທັງໝົດຂອງຂໍ້ສອບ ເຊິ່ງມີໄວ້ເພື່ອປະໂຫຍດ ໃນການໃຊ້ຂໍ້ສອບເຫຼົ່ານັ້ນ ຕາມຈຸດປະສົງຂອງການທົດສອບໃນເທື່ອຕໍ່ໄປ

ພາວິນີ ສະລິສຸຂະວັດນານັນ (2543) ການຈັດເກັບຂໍ້ສອບຈຳນວນຫຼາຍຢ່າງເໝາະສົມເປັນລະບົບ ແລະ ມີຂະບວນການຮຽກຄືນກລັບມາໃຊ້ຫລືປັບປຸງໃໝ່

ສະຫລຸບໄດ້ວ່າ ຄັງຂໍ້ສອບ ໝາຍເຖິງ ແຫຼ່ງລວບລວມ ແລະ ຈັດເກັບຂໍ້ສອບທີ່ມີຄຸນນະພາບຢ່າງເປັນລະບົບ ໂດຍມີການຈຳແນກຂໍ້ສອບຕາມຄວາມຮູ້ວິຊາ ພຶດຕິກຳການຮຽນຮູ້ ແລະ ຄຸນນະພາບຂໍ້ສອບໃນດ້ານຄວາມຍາກ ແລະ ອຳນາດຈຳແນກ ເພື່ອກໍ່ການຈັດເກັບໃນລັກສະນະເອກະສານ ຫຼື ໃຊ້ລະບົບຄອມພິວເຕີຢ່າງໃດຢ່າງໜຶ່ງ. Mllan ແລະ Arter (1984) ໄດ້ສະເໜີຈຳນວນຂໍ້ສອບທີ່ເໝາະສົມສຳລັບຈັເກັບໃນຄັງຂໍ້ສອບວ່າຫາກໃຊ້ເພື່ອການວັດຜົນໃນແຕ່ລະຄັ້ງ (ການທົດສອບ) ຄວນມີຈຳນວນ 10 ຂໍ້ແຕ່ຖ້າໃຊ້ເພື່ອການວັດຜົນເປັນເວລາ 1 ຊົ່ວໂມງ ຄວນມີຈຳນວນຂໍ້ສອບ 50 ຂໍ້ຈຳນວນຂໍ້ສອບໃນຄັງຂໍ້ສອບຍັງມີຫຼາຍເທົ່າໃດກໍ່ຍິ່ງດີຫຼາຍເທົ່ານັ້ນ ເພື່ອຊ່ວຍລົດບັນຫາການໃຊ້ຂໍ້ສອບທີ່ຈັດເກັບຊ່ວຍລົດບັນຫາການໃຊ້ຂໍ້ສອບຊໍ້ດລື້ອຍໆ ຄັງຫຼາຍຈົນເກີນໄປຢ່າງໃດກໍ່ຕາມຂໍ້ສອບທີ່ຈັດເກັບຕ້ອງມີລັກສະນະການຂຽນຂໍ້ສອບທີ່ມີຄວາມຖືກຕ້ອງຊັດເຈນ ທັງຂໍ້ຄຳຖາມ ແລະ ຕົວເລືອກມີຄວາມຕົງຕາມເນື້ອໃນຄວາມຮູ້ ແລະ ມີຄ່າສະຖິຕິສະແດງຄຸນນະພາບຂອງຂໍ້ສອບມີເໝາະສົມໂດຍທົ່ວໄປ ການຈັດ

ແບ່ງປະເພດຂອງຂໍ້ສອບ ເພື່ອຈັດເກັບເຂົ້າຄັງຂໍ້ສອບຈະໃຊ້ເນັ້ນຄວາມຮູ້ລາຍວິຊາເປັນເກນໂດຍແບ່ງເນື້ອໃນຄວາມຮູ້ອອກເປັນຫົວຂໍ້ຍ່ອຍແບ່ງຂໍ້ສອບອອກຕາມຈຸດປະສົງ ແລະ ເພື່ອຄວາມສະດວກໃນການຄົ້ນຫາຂໍ້ສອບຄວນກຳນົດລະຫັດປະຈຳຂໍ້ສອບທີ່ສະແດງລາຍລະອຽດເຖິງເນື້ອໃນຄວາມຮູ້ ແລະ ຈຸດປະສົງທີ່ຕ້ອງການວັດ.

**13.2 ຂັ້ນຕອນຂອງການພັດທະນາລະບົບຄັງຂໍ້ສອບ**

ສີລິໄຊ ການຈະນາວາສີ (2541) ໄດ້ສະເໜີຂັ້ນຕອນຂອງການພັດທະນາລະບົບຄັງຂໍ້ສອບດ້ວຍຄອມພິວເຕີໄວ້ 7 ຂັ້ນຕອນດັ່ງນີ້:

**1. ການວາງແຜນ**

1.1 ວິເຄາະສະພາບບັນຫາກຳນົດຂອບເຂດຄວາມຕ້ອງການໃນການໃຊ້ຄັງຂໍ້ສອບ

1.2 ກຳນົດລັກສະນະຄັງຂໍ້ສອບໃຜຈະເປັນຜູ້ຈັດເຮັດລະບົບ ແລະ ພັດທະນາຄັງຂໍ້ສອບລັກສະນະຂອງຊອບແວ ແລະ ຮາດແວ ເຄື່ອງຄອມພິວເຕີທີ່ໃຊ້ຕ້ອງມີຄວາມຈຸ ຫຼື ໜ່ວຍຄວາມຈຳເທົ່າໃດ ໂຄ້ງສ້າງຂອງລະບົບຄັງຂໍ້ສອບມີລັກສະນະຢ່າງໃດຖານຂໍ້ມູນການໃຊ້ໂປແກມໃນວັດຖຸປະສົງຕ່າງໆໃຜເປັນຜູ້ຮັບຜິດຊອບດູແລຮັກສາອຸປະກອນຄອມພິວເຕີ້ຄື່ອງມື

1.3 ກຳນົດລະຫັດປະຈຳຂໍ້ສອບ (coding of item) ເຊັ່ນ: ລະດັບຫຼັກສູດ, ຊື່ວິຊາ, ເນື້ອໃນຄວາມຮູ້, ຈຸດໝາຍການຮຽນ - ການສອນ, ຈຸດປະສົງ ການຮຽນຮູ້, ລະດັບຊັ້ນຮຽນ, ລະດັບພຶດຕິກຳການຮຽນຮູ້, ການສອນ , ຄ່າສະຖິຕິຂອງຂໍ້ສອບເປັນຕົ້ນ.

**2. ອອກແບບໂປແກມຄອມພິວເຕີ**

2.1 ຈັດຫານັກຂຽນໂປແກມຄອມພິວເລືອກພາສາໂປແກມຂຽນ ໂປແກມທົດສອບໂປແກມ ຫຼື ຈັດຊື້ຊອບແວ

2.2 ປະເມີນລະບົບຄັງຂໍ້ສອບ ຂໍ້ສອບໃນຄັງຂໍ້ສອບສາມາດວັດຄວບຄຸມວັດຖຸປະສົງ ຫຼື ເນື້ອໃນຄວາມຮູ້ທີ່ກຳນົດ ຫຼື ບໍ່ໃຫ້ຜົນການວັດທີ່ມີມາດຖານດຽວກັນເມື່ອວັດໃນຊ່ວງເວລາຕ່າງກັນ ຫຼື ບໍ່

2.3 ຈັດເຮັດຄູ່ມືການໃຊ້

**3. ການຈັດເກັບຂໍ້ສອບເຂົ້າຄັງ**

3.1 ການບັນທຶກຂໍ້ສອບເຂົ້າຄັງ: ຄ່າຄວາມຕົງ ແລະ ຄວາມທຽ່ງເທົ່າຈິງຈະຈັດເກັບຄ່າພາລາມິເຕີຂອງຂໍ້ສອບຄວນກຳນົດເທົ່າໃດໃຜຈະເປັນຜູ້ຈັດເກັບ ແລະຈະເກັບຕົວຂໍ້ສອບຢ່າງໃດຈຳນວນຂໍ້ຄຳຖາມທີ່ຕ້ອງການຈັດເກັບມີເທົ່າໃດ

3.2 ການປັບປຸງແກ້ໄຂ: ພິຈາລະນາຄວາມເປັນປັດຈຸບັນຂອງຂໍ້ສອບມີການປັບປຸງແກ້ຂໍ້ສອບ ຫຼື ບໍ່ໃຜເປັນຜູ້ປັບປຸງແກ້ໄຂ

**4. ການຄັດເລືອກຂໍ້ສອບຈາກຄັງມາໃຊ້ງານ**

4.1 ກຳນົດລັກສະນະຂອງແບບສອບທີ່ຕ້ອງການເປັນຮູບແບບປາຍເປີດ ຫຼື ເປັນແບບຄຳຕອບໃຫ້ຈຳນວນຈັກຕົວເລືອກ

4.2 ຄັດເລືອກຂໍ້ສອບໂດຍການສຸ່ມຈະສຸ່ມເລືອກຂໍ້ສອບໂດຍການສຸ່ມເລືອກຂໍ້ສອບຢ່າງໃດຂໍ້ສອບແຕ່ລະຂໍ້ໃຊ້ເລື່ອຍພຽງໃດ

4.3 ຈັດລຽງຂໍ້ສອບມີຂະບວນການຈັດລຽງຂໍ້ສອບຢ່າງໃດໃຊ້ຄຳສັ່ງເລືອກຢ່າງສຸ່ມ ຫຼື ການຈັດໃຫ້ໃຫ້ຂໍ້ສອບແຕກຕ່າງກັນໃນແຕ່ລະແບບສອບ

**5. ການຈັດພິມຂໍ້ສອບ**

5.1 ກຳນົດຮູບແບການຈັດພິມຂໍ້ສອບ

5.2 ຈັດພິມຂໍ້ສອບ

**6. ການໃຫ້ຂ່າວສານກ່ຽວກັບຄັງຂໍ້ສອບ**

6.1 ການຈຳແນກລັກສະນະຂໍເສອບ

6.2 ຈຳນວນຂໍ້ສອບຄ່າສະຖິຕິຂອງຂໍ້ສອບ

**7. ການຮັກສາຄວາມປອດໄພຂອງລະບົບຄັງຂໍ້ສອບ**

7.1 ການປ້ອງກັນການເຂົ້າເຖິງຄັງຂໍ້ສອບ

- ການແບ່ງລະດັບຜູ້ໃຊ້ ແລະ ການເຂົ້າເຖິງ: ໃຜທີ່ສາມາດໃຊ້ຂໍ້ສອບ ຫຼື ຂໍ້ມູນອື່ນໆໃນຄັງຂໍ້ສອບໄດ້ໃຜສາມາດເຂົ້າສູ່ໄປເບິ່ງລາຍງານຜົນການສອບໄດ້
- ການກຳນົດລະຫັດຜ່ານ ແລະ ເຮັດການປ່ຽນແປງເປັນໄລຍະໆ

7.2 ການປ້ອງກັນການໍາລາຍຂໍ້ສອບ

- ຊອບແວຊ່ວຍເຕື່ອນກວດ,ຈັບທຳລາຍສິ່ງແປກປອມການຕໍ່ຕ້ານປ້ອງກັນໄວລັດ

**13.3 ປະໂຫຍດຂອງຄັງຂໍ້ສອບ**

Choppin (1985), ສຸພັດ ສຸກະມົນສັນ (2539) ແລະ ສີລິໄຊ ການຈະນາວາສີ (2541) ໄດ້ສະຫຼຸບປະໂຫຍດຂອງຄັງຂໍ້ສອບໄວ້ດັ່ງນີ້:

1. ເຮັດໃຫ້ໄດ້ຂໍ້ສອບທີ່ຕົງກັບຈຸດໝາຍ ແລະ ເນື້ອໃນຄວາມຮູ້ຂອງແຕ່ລະລາຍວິຊາສາມາດລືອກໃຊ້ໄດ້ຢ່າງເໝາະສົມກັບສະພາບການ
2. ເຮັດໃຫ້ໄດ້ຂໍ້ສອບ ແລະ ແບບສອບທີ່ມີຄຸນນະພາບໜ້າເຊື່ອຖືເປັນຈຳນວນຫຼາຍຜົນທີ່ໄດ້ຈາກການວັດກໍ່ຈະມີຄວາມຖືກຕ້ອງແນ່ນອນຫຼາຍຂື້ນ
3. ສ້າງຂໍ້ສອບໄດ້ຢ່າງໄວ ແລະ ຖືກຕ້ອງມີຄວາມພ້ອມໃນການສ້າງແບບສອບໄດ້ທຸກເວລາ
4. ໃຊ້ຂໍ້ສອບຊໍ້າໄດ້ຫຼາຍຄັ້ງດ້ວຍການເລືອກໃຊ້ຂໍ້ສອບທີ່ມີລະບົບ
5. ປະຢັດງົບປະມານຊັບພະຍາກອນ ແລະ ເວລາລົດພາລະດ້ານການອອກຂໍ້ສອບໃຫ້ແກ່ຄູຜູ້ສອນ
6. ໄດ້ຂໍ້ສອບທີ່ມີລັກສະນະເປັນຂໍ້ສອບຄູ່ຂະໜານໄດ້
7. ສາມາດຈັດເຮັດແບບສອບທີ່ເໝາະກັບຄວາມສາມາດຈັດ້ຂອງກຸ່ມຜູ້ສອບທີ່ເປັນເປົ້າໝາຍໄດ້ຕະຫຼອດຈົນສາມາດສ້າງຂໍເສອບແບບປັບເໝາະສົມສຳລັບບຸກຄົນໄດ້
8. ກະຕຸ້ນຄູຜູ້ສອນໃຫ້ເກີດການພັດທະນາຂໍ້ສອບໃຫ້ມີຄຸນນະພາບ ແລະ ມີມາດຖານທີ່ສູງຍິ່ງຂື້ນ

## 14. ຄວາມສຳຄັນຂອງແບບທົດສອບ

ແບບທົດສອບເປັນເຄື່ອງມືປະເພດໜຶ່ງຂອງນັກແນະແນວໃນການເກັບຂໍ້ມູນ ເພື່ອທຳຄວາມຮູ້ຈັກນັກຮຽນ

ໃນດ້ານຕ່າງໆເປັນຕົ້ນວ່າຂໍ້ມູນທີ່ກ່ຽວກັບສະຕິປັນຍາ ຜົນສຳເລັດທາງການຮຽນ,ຄວາມຖະໜັດ,ຄວາມສົນໃຈ, ບຸກຄະລິກພາບ,ການໃຊ້ແບບທົດສອບ ນອກຈາກຈະເຮັດໃຫ້ນັກແນະແນວໄດ້ທຳຄວາມເຂົ້າໃຈນັກຮຽນແລ້ວຍັງມີວັດຖຸປະສົງເພື່ອໃຫ້ນັກຮຽນເຂົ້າໃຈຕົນເອງດ້ວຍ.

**14.1 ແບບທົດສອບວັດຜົນສຳເລັດທາງການຮຽນ**

ພິຊິດ ລິທິຈູນ ( 2545: 96 ) ກ່າວວ່າ ແບບທົດສອບວັດຜົນສຳເລັດທາງການຮຽນໝາຍເຖິງວິຊາການທີ່ນັກຮຽນໄດ້ຮຽນຮູ້ມາແລ້ວວ່າບັນລຸຜົນສຳເລັດຕາມຈຸດປະສົງທີ່ກຳນົດໄວ້ພຽງໃດ

ສີລິພອນ ທິບຄົງ ( 2545:193) ກ່າວວ່າແບບທົດສອບວັດຜົນສຳເລັດທາງການຮຽນໝາຍເຖິງ ຄວາມຮູ້, ທັກສະ ແລະ ສະມັດຕະພາບດ້ານສະໝອງດ້ານຕ່າງໆ ໃນເລື່ອງທີ່ຮຽນຮູ້ໄປແລ້ວຫຼາຍໜ້ອຍພຽງໃດ

ສົມພອນ ເຊື້ອພັນ ( 2547:59 ) ກ່າວວ່າແບບທົດສອບວັດຜົນສຳເລັດທາງການຮຽນໝາຍເຖິງ ຄວາມຮູ້ ຫຼື ຄວາມສາມາດໃນການເຮັດກິດຈະກຳການຮຽນຮູ້ຂອງນັກຮຽນທີ່ເປັນຜົນມາຈາກການຈັດກິດຈະກຳການຮຽນຮູ້ໄວ້ພຽງໃດ

ແບບທົດສອບວັດຜົນສຳເລັດທາງການຮຽນປະເພດທີ່ຄູສ້າງມີຫຼາຍແບບແຕ່ທີ່ນິຍົມໃຊ້ມີ 6 ປະເພດຄື:

1. ຂໍ້ສອບອັດຕະໄນ ຫຼື ລຽງຄວາມ( Subjective or Essey test ) ເປັນຂໍ້ສອບທີ່ຂຽນບັນຍາຍຕາມຄວາມຮູ້ ແລະ ຂຽນຂໍ້ຄິດເຫັນຂອງແຕ່ລະຄົນ.
2. ຂໍ້ສອບແບບຄຳຖືກ-ຜິດ ( True-false test ) ຄືຂໍ້ສອບແບບເລືອກຕອບທີ່ມີຄວາມໝາຍກົງກັນຂ້າມ ເຊັ່ນ ຖືກ-ຜິດ,ແມ່ນ-ບໍ່ແມ່ນ,ຈິງ- ບໍ່ຈິງ, ເໝືອນກັນ-ຕ່າງກັນເປັນຕົ້ນ.
3. ຂໍ້ສອບບແບບເຕີມຄຳ ( Completion test ) ເປັນຂໍ້ສອບທີ່ປະກອບດ້ວຍປະໂຫຍກ ຫຼື ຂໍ້ຄວາມລົງໃນຊ່ອງວ່າງທີ່ເວັ້ນໄວ້ນັ້ນເພື່ອໃຫ້ມີໃຈຄວາມສົມບູນ ແລະ ຖືກຕ້ອງ
4. ຂໍ້ສອບແບບຕອບສັ້ນໆ ( Short answer test ) ເປັນຂໍ້ສອບທີ່ຄ້າຍກັບຂໍ້ສອບຂຽນເປັນປະໂຫຍກຄຳຖາມສົມບູນ( ຂໍ້ສອບຕື່ມຄຳເປັນປະໂຫຍກ ຫຼື ຂໍ້ຄວາມທີ່ຍັງໄມ່ສົມບູນ)ສັ້ນກະທັດຮັດໄດ້ໃຈຄວາມສົມບູນບໍ່ແມ່ນເປັນການບັນຍາຍແບບຂໍ້ສອບອັດຕະໄນ ຫຼື ລຽງຄວາມ.
5. ຂໍ້ສອບແບບຈັບຄູ່( Matching test ) ເປັນຂໍ້ສອບແບບເລືອກຕອບຊະນິດໜຶ່ງຜູ້ຕອບເລືອກຈັບຄູ່ວ່າແຕ່ລະຂໍ້ຄວາມໃນຊຸດໜຶ່ງຈະຄູ່ກັບຄຳຫຼື ຂໍ້ຄວາມໃດໃນອີກຊຸດໜຶ່ງມີຄວາມສຳພັດກັນ.
6. ຂໍ້ສອບແບບເລືອກຕອບ ( Multiple choce test ) ຄຳຖາມແບບເລືອກຕອບ ( Stem ) ກັບຕອນເລືອກ ( Choce ) ໃນຕອນເລືອກນັ້ນຈະປະກອບດ້ວຍຕົວເລືອກທີ່ເປັນຄຳຕອບຖືກ ຫຼື ຜິດຫາຕົວເລືອກທີ່ຖືກຕ້ອງຫຼາຍທີ່ສຸດພຽງຕົວເລືອກຕົວດຽວຈາກຕົວເລືອກອື່ນໆ ແລະ ຄຳຖາມແບບເລືອກຕອບທີ່ດີນິຍົມໃຊ້.

ດັ່ງນັ້ນໃນການສ້າງແບບທົດສອບວັດຜົນສຳເລັດທາງການຮຽນຈິງເປັນການວັດປະເມີນຜົນທີ່ຫຼາກຫຼາຍໄດ້ແກ່: ຂໍ້ສອບອັດຕະໄນ ຫຼື ລຽງຄວາມຂໍ້ສອບແບບກາຖືກກາຜິດ ຂໍ້ສອບແບບຕື່ມຄຳ,ຂໍ້ສອບແບບເລືອກຕອ

## 15. ປະເພດຂອງແບບທົດສອບ

ແບບທົດສອບທີ່ໃຊ້ທາງການສຶກສາມີແຕກຕ່າງກັນສາມາດແບ່ງໄດ້ຫຼາຍປະເພດ ແລ້ວແຕ່ຈະຍຶດສິ່ງໃດເປັນຫຼັກເກນທີ່ໃຊ້ໃນການແບ່ງ ເຊິ່ງຈະຂໍຍົກບາງຕົວຢ່າງການແບ່ງປະເພດ ພ້ອມທັງອະທິບາຍດັ່ງນີ້:

1. ແບ່ງຕາມສິ່ງທີ່ວັດສາມາດແບ່ງອອກເປັນ 3 ປະເພດຄື:

1.1 ແບບທົດສອບວັດຜົນສຳເລັດ ( achievemen ) ໝາຍເຖິງຂໍ້ສອບທີ່ວັດສະມັດຕະພາບສະໝອງດ້ານຕ່າງໆທີ່ນັກຮຽນໄດ້ຮັບການຮຽນຮູ້ຜ່ານມາແລ້ວວ່າມີຢູ່ເທົ່າໃດແບ່ງອອກເປັນ 2 ຊະນິດຄື:

1) ແບບທົດສອບທີ່ຄູສ້າງ ຈຳແນກໄດ້ 2 ປະເພດ

1, ແບບທົດສອບທີ່ຄູສ້າງຂຶ້ນເອງ ( Teacher Made Test) ເປັນແບບທົດສອບທີ່ສ້າງຂື້ນສະເພາະຄັ້ງຄາວ ເພື່ອໃຊ້ທົດສອບຜົນສຳເລັດ ແລະ ຄວາມສາມາດທາງວິຊາການຂອງເດັກ.

2, ແບບທົດສອບມາດຖານ ( Standardized Test ) ເປັນແບບທົດສອບທີ່ສ້າງຂຶ້ນດ້ວຍຈະບວນການຫຼືວິທີການທີ່ຊັບຊ້ອນຫຼາຍກວ່າແບບທົດສອບທີ່ຄູສ້າງຂຶ້ນແລ້ວມີການນຳໄປທົດລອງວິເຄາະດ້ວຍວິທີການທາງສະຖິຕິຫຼາຍໆຄັ້ງເພື່ອປັບປຸງໃຫ້ມີຄຸນນະພາບດີ ມີຄວາມເປັນມາດຖານ

**ແບບທົດສອບມາດຖານຈະມີຄວາມເປັນມາດຖານຢູ່ 2 ປະການຄື**

2.1 ມາດຖານໃນການດຳເນີນການສອບ ເພື່ອຄວບຄຸມຕົວແປທີ່ມີຜົນກະທົບຕໍ່ຄະແນນຂອງຜູ້ສອບດັ່ງນັ້ນຂໍ້ສອບຜົນສຳເລັດ ດັ່ງນັ້ນຂໍ້ສອບມາດຖານຈິ່ງຈຳເປັນຕ້ອງມີຄູ່ມືດຳເນີນການສອບໄວ້ເປັນແນວປະຕິບັດສຳຜູ້ໃຊ້ຂໍ້ສອບ.

1) ມາດຖານໃນການແປຄວາມໝາຍຄະແນນຂໍ້ສອບມາດຖານມີເກນສຳຫຼັບປຽບທຽບຄະແນນໃຫ້ເປັນມາດຖານດຽວກັນເຊິ່ງເອີ້ນວ່າເກນປົກກະຕິ ( Norm ).

ແບບທັດສອບທີ່ຄູສ້າງຂື້ນ ມີຂໍ້ດີບ່ອນວ່າຄູວັດໄດ້ກົງຈຸດປະສົງເພາະຜູ້ສອນເປັນຜູ້ອອກຂໍ້ສອບເອງ ແຕ່ແບບທົດສອບມາດຖານມີຂໍ້ດີຄືຄຸນນະພາບຂອງແບບທົດສອບເປັນທີ່ເຊື່ອຖືໄດ້ ເຮັດໃຫ້ສາມາດນຳຜົນໄປປຽບທຽບໄດ້ກ້ວາງຂວາງກວ່າ.

2) ຈຳແນນຕາມຈຸດໝາຍໃນການໃຊ້ປະໂຫຍດ ຈຳແນກໄດ້ 3 ປະເພດດັ່ງນີ້:

1, ແບບທົດສອບວັດຜົນສຳເລັດ ( Achievement Test ) ໝາຍແບບທົດສອບທີ່ໃຊ້ວັດຄວາມຮູ້ຄວາມສາມາດ ທັກສະທາງດ້ານວິຊາການທີ່ໄດ້ຮຽນຮູ້ມາວ່າຮັບຮູ້ໄວ້ໄດ້ຫຼາຍໜ້ອຍພຽງໃດ

2, ແບບທົດສອບຄວາມຖະໜັດ ( Aptitud Test ) ເປັນແບບທົດສອບທີ່ໃຊ້ວັດຄວາມສາມາດທີ່ເກີດຈາກການສະສົມປະສົບການທີ່ໄດ້ຮຽນຮູ້ມາໃນອະດີດ ສ່ວນຫຼາຍໃຊ້ໃນການທຳນາຍສະມັດຕະພາບຂອງບຸກຄົນວ່າສາມາດຮຽນໄປໄດ້ໄກພຽງໃດ

1 ແບບທົດສອບແບ່ງຄວາມຖະໜັດແບ່ງອອກເປັນ 2 ປະເພດໃຫຍ່ຄື:

1) ແບບທົດສອບຄວາມຖະໜັດທາງການຮຽນ ( Schotastic Aptitude Test ) ໝາຍເຖິງແບບທົດສອບທີ່ໃຊ້ວັດຄວາມຖະໜັດທາງດ້ານວິຊາການຕ່າງໆເຊັ່ນ ຄວາມຖະໜັດທາງດ້ານພາສາ ດ້ານຄະນິດສາດເປັນຕົ້ນ.

2) ແບບທົດສອບວັດຄວາມຖະໜັດສະເພາະດ້ານ ຫຼື ຄວາມຖະໜັດພິເສດ(Specific Aptitude Test) ໝາຍເຖິງແບບທົດສອບທີ່ວັດຄວາມຖະໜັດທາງດ້ານອາຊີບ ຄວາມສາມາດພິເສດທີ່ນອກເໜືອຈາກຄວາມສາມາດດ້ານວິຊາການເຊັ່ນ ຄວາມຖະໜັດທາງດ້ານດົນຕີ, ສິລະປະ.ການແກະສະລັກ, ກິລາ ເປັນຕົ້ນ.

1.2 ແບບທົດສອບວັດບຸກຄະລິກພາບ ( Personal Social Test ) ມີຫຼາຍປະເພດ

1.3 ແບບທົດສອບວັດທັດສະນະຄະຕິ ( Attitud Test ) ໃຊ້ວັດທັດສະນະຄະຕິ ຂອງບຸກຄົນທີ່ມີຕໍ່ບຸກຄົນ ສິ່ງຂອງ ການກະທຳ ສິ່ງຄົມ ປະເທດ ສາສະໜາ ແລະ ອື່ນໆ

1.4 ແບບທົດສອບວັດຄວາມສົນໃຈອາຊີບ

1.5 ແບບທົດສອບວັດການປັບຕົວ ຄວາມໝັ້ນໃຈ

2. ຈຳແນກຕາມຮູບແບບຄຳຖາມແລະວິທີການຕອບ ຈຳແນກໄດ້ 3 ປະເພດດັ່ງນີ້:

1) ແບບທົດສອບອັດຕະໄນ ( Subjective Test ) ແບບທົດສອບປະເພດນີ້ມີຈຸດໝາຍທີ່ຈະໃຫ້ຜູ້ຕອບໄດ້ຕອບຍາວໆ ສະແດງຄວາມຄິດເຫັນເຕັມທີ່ ຜູ້ສອບມີຄວາມຮູ້ໃນເນື້ອຫານັ້ນຫຼາຍໜ້ອຍພຽງໃດກໍ່ຂຽນອອກມາໃຫ້ໝົດພາຍໃນເວລາທີ່ກຳນົດໃຫ້.

2) ແບບທົດສອບປາລະໄນ ( Objectve Test ) ເປັນແບບທົດສອບທີ່ມຸ່ງໃຫ້ຜູ້ສອບຕອບສັ້ນໆໃນແຕ່ລະຂໍ້ວັດຄວາມສາມາດພຽງເລື່ອງໃດໜຶ່ງພຽງດຽວ ແບບທົດສອບແບບຕ່າງໆດັ່ງຕໍ່ໄປນີ້

3) ແບບຖືກຜິດ ( True - False )

4) ແບບຕື່ມຄຳ ( Completion )

5) ແບບຈັບຄູ່ ( Matching )

6) ແບບເລືອກຕອບ ( Multiple Choices )

3. ຈຳແນກຕາມລັກສະນະການຕອບ ຈຳແນກໄດ້ 3 ປະເພດດັ່ງນີ້

1) ແບບທົດສອບພາກປະຕິບັດຕົວຈິງ ( Performance Test ) ໄດ້ແກ່ຂໍ້ສອບພາກປະຕິບັດຕົວຈິງທັງຫຼາຍເຊັ່ນ ວິຊາ ພາລະສຶກສາ ໃຫ້ສະແດງທ່າທາງປະກອບເພງວິຊາ ສິລິປະຫັດຖະກຳ -ແຕ້ມ ໃຫ້ປະດິດຂອງໃຊ້ດ້ວຍເສດວັດສະດຸ ໃຫ້ເຮັດອາຫານເປັນຕົ້ນ.

2) ແບບທົດສອບຂຽນຕອບ ( Paper-Pencil Test ) ເປັນແບບທົດສອບທີ່ໃຊ້ການຂຽນຕອບທຸກ

3) ຊະນິດໄດ້ແກ່ ແບບທົດສອບປາລະໄນ ແລະ ອັດຕາໄນທີ່ໃຊ້ກັນຢູ່ທົ່ວໄປໃນໂຮງຮຽນ ລວມທັງການ

4) ຂຽນລາຍງານເຊິ່ງຕ້ອງໃຊ້ເຈ້ຍ, ສໍ, ບິກ ເປັນເຄື່ອງມືສຳຄັນໃນການສອບ.

3) ແບບທົດສອບດ້ວຍວາຈາ ( Oral Test ) ເປັນແບບທົດສອບທີ່ຜູ້ສອນໃຊ້ການໂຕ້ຕອບດ້ວຍວາຈາແທນທີ່ຈະເປັນການຂຽນຄຳຕອບ ຫຼື ປະຕິບັດຕົວຈິງເຊັ່ນການສອບສຳພາດ, ການສອບທ່ອງຈຳເປັນຕົ້ນ.

4. ຈຳແນກຕາມເວລາທີ່ກຳນົດໃຫ້ຕອບ ຈຳແນກໄດ້ 2 ປະເພດດັ່ງນີ້

1) ແບບທົດສອບວັດຄວາມໄວ ( Speed Test ) ເປັນແບບທົດສອບທີ່ມຸ້ງວັດທັກສະຄວາມຄ່ອງແຄ້ວໃນການຄິດ ຄວາມແນ່ນອນໃນການຮູ້ເປັນສຳຄັນ ແບບທົດສອບປະເພດນີ້ມັກມີລັກສະນະຕ້ອນຂ້າງງ່າຍແຕ່ມີຈຳນວນຂໍ້ຫຼາຍ ແລະ ໃຫ້ເວລາເຮັດໜ້ອຍ ໃຜເຮັດສຳເລັດກ່ອນ ແລະ ຖືກຕ້ອງຫຼາຍທີ່ສຸດຖືວ່າມີປະສິດທິພາບສູງສຸດ

2) ແບບທົດສອບວັດຄວາມສາມາດສູງສຸດ ( power Test ) ມີລັກສະນະຄ້ອນຂ້າງຍາກ ແລະ ໃຫ້ເວລາເຮັດຫຼາຍພຽງພໍໃນການຕອບ ເປັນການສອບວັດຄວາມສາມາດໃນເລື່ອງໃດເລື່ອງໜຶ່ງ ໂດຍໃຫ້ເວລາຜູ້ຕອບເຮັດຈົນສຸດຄວາມສາມາດ ຫຼື ຈົນທຸກຄົນເຮັດສຳເລັດເຊັ່ນ ການໃຫ້ຄົ້ນຄວ້າລາຍງານ ການເຮັດວິທະຍານິພົນ ຫຼື ຂໍ້ຊອບອັດຕາໄນບາງຢ່າງກໍ່ອະນຸໂລມຈັດຢູ່ໃນປະເພດນີ້ໄດ້.

**ການໃຊ້ແບບທົດສອບ**

ການໃຊ້ແບບທົດສອບເພື່ອການວັດຜົນການສຶກສານັ້ນຄວນຄຳນຶງເຖິງເກນ ແລະ ຂໍ້ຈຳກັດບາງປະການດັ່ງນີ້

1. ເລືອກໃຊ້ຂໍ້ສອບທີ່ວັດຄຸນລັກສະນະທີ່ຕ້ອງການນັ້ນຢ່າງໃກ້ຄຽງກັບຄວາມເປັນຈິງຫຼາຍທີ່ສຸດ

2. ການໃຊ້ແບບທົດສອບຕ້ອງໃຫເໝາະກັບລະດັບກຸ່ມຂອງເດັກ

3. ການໃຊ້ແບບທົດສອບຕ້ອງໃຫ້ເກີດຄວາມຍຸດຕິທຳຫຼາຍທີ່ສຸດທັ້ງໃນດ້ານຂໍ້ຄຳຖາມທີ່ໃຊ້ ແລະ ວິທີດຳເນີນການສອບ

4. ຄວນສອບວັດຫຼາຍໆດ້ານ ແລະ ໃຊ້ຂໍ້ສອບຫຼາຍໆຢ່າງປະກອບກັນ

5. ແບບທົດທີ່ໃຊ້ໄດ້ຜົນຕາມເປົ້າໝາຍຈະຕ້ອງເປັນແບບທົດສອບທີ່ມີຄຸນນະພາບດີ

6. ຄະແນນຈາກການສອບເປັນພຽງຕົວເລກໃນການຈັດອັນດັບ( Ordinal Scale ) ຈິ່ງຄວນຄຳນຶງໃນການແປຄະແນນທີ່ໄດ້ຈາກການສອບ.

7. ການໃຊ້ແບບທົດສອບຄວນພະຍາຍາມໃຊ້ຜົນການສອບທີ່ໄດ້ໃຫ້ກ້ວາງຂວາງຫຼາຍໆດ້ານ

8. ຄະແນນທີ່ໄດ້ຈາກການສອບແຕ່ລະຄັ້ງ ຕ້ອງຖືວ່າຄະແນນທີ່ເກີດຈາກຄວາມສາມາດຂອງແຕ່ລະບຸກຄົນ ດັ່ງນັ້ນຖ້າມີສິ່ງໃດທີ່ຈະເຮັດໃຫ້ການສອບໄດ້ຜົນບໍ່ກົງກັບຄວາມຄິດຂ້າງເທິງ ຄວນຈະໄດ້ຮັບການແກ້ໄຂ.

9. ລະວັງການສອບທີ່ເຮັດໃຫ້ເດັກໄດ້ປຽບ ເຊັ່ນ: ການໃຊ້ແບບທົດສອບຊຸດເດີມ

10. ການສອບແຕ່ລະຄັ້ງຄວນຈະມີການກວດສອບໃຫ້ຄະແນນຜົນການສອບຢ່າງເປັນປາລະໄນ.

## 16. ການສ້າງແບບທົດສອບສຳລັບເດັກ

ການທົດສອບສຳລັບເດັກແມ່ນຮູບແບບການປະເມີນຜົນທີ່ຊ່ວຍໃຫ້ຄູເຫັນການປ່ຽນແປງ. ຄວາມກ້າວໜ້າຂອງເດັກສາມາດເຫັນໄດ້ຊັດເຈນ. ເນື່ອງຈາກວ່າຈະມີຄຳຕອບທີ່ສະແດງໃຫ້ເຫັນຄວາມສາມາດທີ່ເປັນຜົນມາຈາກ ການຮຽນຮູ້ ແລະ ປະສົບການຂອງເດັກນ້ອຍ ແລະ ຄຳຕອບຖືກກວດສອບເປັນຄະແນນ, ເຊິ່ງສະດວກຕໍ່ການລາຍງານຜົນໄດ້ຮັບໃຫ້ພໍ່ແມ່ ແລະ ສະດວກໃນການຕີຄວາມໝາຍຂອງຜົນສຳເລັດຂອງເດັກນ້ອຍໃນລັກສະນະທີ່ສອດຄ່ອງ, ນອກຈາກນັ້ນ, ມັນເປັນວິທີການປະເມີນຜົນທີ່ບໍ່ຈຳເປັນຕ້ອງໃຊ້ເວລາຫຼາຍ.ເພາະຄູຕ້ອງລະບຸ ເງື່ອນໄຂໃຫ້ເດັກຕອບໃນແບບດຽວກັນ ເຊັ່ນ: ການໃຊ້ຄຳຖາມດຽວກັນ ແລະ ແກ້ໄຂບັນຫາໃນເວລາດຽວກັນເປັນກຸ່ມທັງໝົດ.

ການນຳໃຊ້ການທົດສອບເພື່ອປະເມີນຄວາມພ້ອມຄວນເລີ່ມຕົ້ນໃນຊັ້ນອະນຸບານ 2 ເພາະວ່າການນຳໃຊ້ການທົດສອບມີຂະບວນການສອບເສັງທີ່ມີໂຄງສ້າງຫຼາຍເຊັ່ນ: ຕ້ອງມີເຄື່ອງຈັບເວລາ ຫຼື ຕັ້ງເວລາທີ່ໃຫ້ເຮັດໄວ້, ສະນັ້ນ,ຖ້າຫາກວ່າຄວາມສົນໃຈຂອງເດັກນ້ອຍສັ້ນ, ຈະມີບັນຫາຫຼາຍໃນການດຳເນີນການສອບ ອີກຢ່າງໜຶ່ງແມ່ນເດັກຕ້ອງໄດ້ຕອບໂດຍການຂີດຕອບ ເຊິ່ງເດັກຄວນຈັບສໍໄດ້ຢ່າງຄ່ອງແຄ້ວ ສຸດທ້າຍ, ໃນການດຳເນີນການສອບເສັງ, ຄູຕ້ອງອ່ານຄຳຖາມ ຫຼື ຄຳແນະນຳໃຫ້ເດັກຟັງ,ດັ່ງນັ້ນ, ເດັກນ້ອຍຄວນມີຄວາມສາມາດໃນການໃຊ້ພາສາເພື່ອເວົ້າ ແລະ ຕອບໄດ້ຢ່າງດີ.

ການທົດສອບສາມາດນຳໃຊ້ໄດ້ພຽງແຕ່ຢູ່ໃນຂອບເຂດທີ່ຈຳກັດຄືຈະໃຊ້ວັດຜົນສຳເລັດໃນສ່ວນໃຫຍ່ແມ່ນທາງດ້ານສະຕິປັນຍາ. ດັ່ງນັ້ນ ຈຶ່ງສາມາດເວົ້າວ່າແບບທົດສອບສອບເໝາະສຳລັບປະເມີນຄວາມພ້ອມທາງດ້ານສະຕິປັນຍາຫຼາຍກວ່າຈະໃຊ້ວັດຄວາມພ້ອມທາງດ້ານຮ່າງກາຍ, ອາລົມ, ຫຼືສັງຄົມ, ແຕ່ທັງນີ້ອາດໃຊ້ປະເມີນທັກສະທາງກົນໄກທີ່ໃຊ້ໃນການຮັບຮູ້ໄດ້ບາງລັກສະນະເຊັ່ນ: ການຮັບຮູ້ທາງສາຍຕາ ແລະ ວຽກງານຄວາມສຳພັນລະຫວ່າງຕາ ແລະ ມື.

ແບບທົດສອບທີ່ກ່າວຢູ່ທີ່ນີ້ຈະເປັນຊະນິດຂຽນຄຳຕອບ. ໂດຍການເຮັດເປັນວົງມົນ (0) ຫຼື ຂີດກາລະບາດ (x) ຫຼື ຂຽນຕາມຄຳສັ່ງ ເຊິ່ງເນັ້ນທີ່ຄຳຕອບຂອງເດັກວ່າຖືກຕ້ອງ ຫຼື ຜິດເປັນສິ່ງສຳຄັນ. ເພື່ອນຳໄປສູ່ການໃຫ້ຄະແນນສຳລັບການປະເມີນຜົນ. ລັກສະນະຂອງການທົດສອບປະເພດນີ້ ຄູຈະອ່ານຄຳຖາມໃຫ້ເດັກຟັງ ແລະ ເດັກນ້ອຍຈະຕ້ອງພິຈາລະນາຮູບພາບໃນແບບທົດສອບທີ່ຕົນຖືວ່າຮູບໃດທີ່ເປັນຄຳຕອບຂອງຄຳຖາມນັ້ນ.(ແບບເລືອກຕອບ) ຫຼື ໃຫ້ເດັກນ້ອຍເຊື່ອມຕໍ່ຮູບພາບເປັນຄູ່ຕາມຄຳແນະນຳຂອງຄູສອນ (ແບບຈັບຄູ່),ແລະອື່ນໆ ການທົດສອບປະເພດນີ້ສາມາດດຳເນີນເປັນກຸ່ມ.

ລັກສະນະຄຳຖາມໃນສ້າງແບບທົດສອບ

ລັກສະນະຂອງຄຳຖາມໃນການທົດສອບ ອາດຈະຖືກອອກແບບໃນລັກສະນະດັ່ງຕໍ່ໄປນີ້:

1) ຮູບພາບໃດທີ່ມີຄວາມໝາຍຄືກັບຄຳ (ປະໂຫຍກ) ທີ່ຄູເວົ້າ
2) ຮູບພາບໃດມີຄວາມແຕກຕ່າງຈາກຮູບພາບອື່ນທັງໝົດ?
3) ຮູບພາບໃດທີ່ຄືກັນກັບຮູບພາບທີ່ຄູກຳນົດໄວ້.
4) ສິ່ງໃດທີ່ໃຊ້ຄູ່ກັບ (ມີຄວາມສຳພັນກ່ຽວຂ້ອງກັນ) ສິ່ງທີ່ຄູໄດ້ກຳນົດໄວ້
5) ຮູບພາບໃດເປັນຮູບພາບທີ່ສົມບູນຂອງຮູບພາບທີ່ຄູໄດ້ກຳນົດໄວ້? (ຮູບພາບບໍ່ຄົບຖ້ວນ)
6) ຮູບພາບໃດມີຄວາມໝາຍຄືກັນກັບທ່າທາງທີ່ຄູສະແດງ?
7) ສິ່ງຂອງໃດທີ່ມີສຽງຄືກັບຄຳທີ່ຄູອ່ານ (ປູ, ຫູ, ເຂົ້າ, ໄຂ່, ແລະອື່ນໆ).
8) ເຊື່ອມຕໍ່ຮູບພາບຄືກັນ. (ທີ່ກ່ຽວຂ້ອງ)
9) ຮູບພາບໃດມາກ່ອນ? (ມາສຸດທ້າຍ)
10) ຮູບພາບໃດເປັນເຫດການຕາມຮູບພາບທີ່ຄູລະບຸ?
11) ແບ່ງພາບ (ຈັດປະເພດ) ຮູບອອກເປັນ 2 ກຸ່ມ.

ລັກສະນະພຶດຕິກຳທີ່ຖືກປະເມີນໂດຍແບບທົດສອບ

1) ການຮັບຮູ້ໂດຍໃຊ້ຕາ (ຊອກຫາຮູບພາບທີ່ຄ້າຍຄືກັນ)
2) ຄວາມເຂົ້າໃຈຄວາມຫມາຍຂອງຄຳສັບແລະປະໂຫຍກ (ຊອກຫາຮູບພາບທີ່ກົງກັບຄຳສັບຫຼືປະໂຫຍກ)
3) ຄວາມຮູ້ກ່ຽວກັບທຳມະຊາດຂອງວັດຖຸ, ພືດ, ສັດ, ແລະທຳມະຊາດອ້ອມຂ້າງເດັກນ້ອຍ (ສິ່ງໃດກໍ່ຕາມທີ່ເຕີບໃຫຍ່ຢູ່ໃຕ້ດິນ. ຂ້ອຍຕື່ນເຕັ້ນກັບລູກຂອງຂ້ອຍແລະຫຼັງຈາກນັ້ນຂ້ອຍກໍ່ເອົາມັນໄປ. ຄຸນສົມບັດໃດທີ່ແຕກຕ່າງຈາກລິງອື່ນ?)
4) ຄວາມຮູ້ກ່ຽວກັບກົດລະບຽບທາງສັງຄົມ ຈັນຍາບັນ ແລະໜ້າທີ່ສັງຄົມ ແຕກຕ່າງກັນໃນສັງຄົມ, ເວລາເຈັບປ່ວຍຄວນໄປຫາໃຜ?)
5) ຄວາມສາມາດໃນການຈັດລຳດັບສິ່ງຂອງຕາມຂະຫນາດ, ໄລຍະຫ່າງ, ແລະນ້ຳຫນັກ. ຫຼືລັກສະນະ

ຂອງສິ່ງຕ່າງໆ (ອັນໃດເປັນສຽງດັງທີ່ສຸດ? ອັນໃດໃຫຍ່ທີ່ສຸດ?)

6) ຄວາມເຂົ້າໃຈກ່ຽວກັບເຫດຜົນສຳລັບການຈັດປະເພດ ຮູບແບບການຈັດລຽງ, ການຈັດລຳດັບ (ຊຸດ) ແລະໂຄງສ້າງຂອງເວລາ. (ອັນໃດມາກ່ອນ? What comesafter?)

7) ຄວາມເຂົ້າໃຈຕົວເລກ ແລະຕົວເລກ. (ສິ່ງທີ່ໃຫຍ່ກວ່າໜ້ອຍກວ່າມີຕົວເລກ ແມ່ນ5)

8) ຄວາມສາມາດໃນການບອກຄວາມຫມາຍຂອງສັນຍາລັກ ຕິດຕໍ່ສື່ສານ 53 ຂໍ້ຈຳກັດຂອງການນຳໃຊ້ການທົດສອບໃນການປະເມີນໄວເດັກ ການປະເມີນຜົນການພັດທະນາເດັກນ້ອຍໃນຕອນຕົ້ນໂດຍນຳໃຊ້ການທົດສອບນີ້ມີຂໍ້ຈຳກັດ. ສຳລັບເດັກນ້ອຍຈຳນວນຫຼາຍ, ເຊັ່ນ: ເດັກນ້ອຍໃນອາຍຸນີ້ບໍ່ສາມາດອ່ານຫຼືຂຽນໄດ້,ດັ່ງນັ້ນການທົດສອບຕ້ອງຢູ່ໃນຮູບພາບ, ຄູສອນຫມັ້ນໃຈວ່າເດັກນ້ອຍທຸກຄົນຕ້ອງສາມາດເຂົ້າໃຈເຄື່ອງຫມາຍຫຼືສັນຍາລັກນັ້ນມັນຈະຖືກສະແດງໃຫ້ເຫັນ, ສຳລັບຕົວຢ່າງ, ຄວາມເຂົ້າໃຈແລະຄວາມສາມາດໃນການຂຽນກະປ໋ອງ , ເດັກນ້ອຍໃນອາຍຸນີ້ມີຄວາມສົນໃຈຫຼາຍ, ສະນັ້ນຄູສອນຕ້ອງກະກຽມສະຖານທີ່ແລະ ມັນເປັນການຍາກທີ່ຈະຊອກຫາບັນຍາກາດທີ່ບໍ່ມີສິ່ງລົບກວນ, ເຊັ່ນການຕອບແຕ່ລະພາກສ່ວນຊ້າໆ. ຂ້າພະເຈົ້າເຊື່ອຢ່າງໝັ້ນໃຈວ່າທຸກຄົນເຂົ້າໃຈທຸກຄົນ , ຄູຕ້ອງອ່ານທຸກພາກ ແລະທຸກຄຳຖາມໃຫ້ເດັກເຂົ້າໃຈຢ່າງຈະແຈ້ງ. ຕ້ອງຕິດຕາມເດັກທຸກຄົນເພື່ອເບິ່ງວ່າເຂົາເຈົ້າສາມາດໄດ້ຍິນສຽງທັງຫມົດໃນຫ້ອງ ຫຼື ບໍແລະ ໃນການສອບເສັງ,ຕ້ອງຕິດຕາມກວດກາຢູ່ສະເໝີ ວ່ານັກຮຽນທັງໝົດຕອບຄຳຖາມ. ສິ່ງດຽວກັນກັບທີ່ຄູເຮັດສຳລັບການສອບເສັງ.

**ການສ້າງແບບທົດສອບສຳລັບເດັກກ່ອນຮຽນ**

ການສ້າງແບບທົດສອບສຳລັບເດັກກ່ອນໄວຮຽນປົກກະຕິເປັນຮູບພາບ. ສາມາດສ້າງໄດ້ທັງການຈັບຄູ່, ແບບເລືອກຕອບ ແລະ ແບບຕື່ມຄຳສັບ ຫຼື ຄຳຕອບຄຳຖາມສັ້ນໆ, ໂດຍການພະຍາຍາມສ້າງຮູບແບບທີ່ເຫມາະສົມກັບເນື້ອຫາ. ແລະຈຸດປະສົງ

ຕົວຢ່າງ ແບບທົດສອບກ່ຽວກັບຈຳນວນ ແລະ ຕົວເລກ

ຄຳຊີ້ແຈ້ງ ໃຫ້ນັກຮຽນຂີດ X ທັບຮູບພາບທີ່ມີຈຳນວນເທົ່າກັບຕົວເລກທີ່ກຳນົດໃຫ້




ສະຫຼຸບ ການປະເມີນໄລຍະຍາວແມ່ນເປັນກິດຈະກຳທີ່ໃສ່ເຂົ້າໃນການຮຽນ-ການສອນທຸກຂັ້ນຕອນໂດຍເລີ່ມຈາກການປະເມີນສະພາບຂອງນັກຮຽນກ່ອນເລີ່ມຮຽນ. ປະເມີນພຶດຕິກຳໃນຂະນະທີ່ຮຽນ ແລະ ປະເມີນຜົນງານທາງວິຊາການ. ທັງຄວາມສາມາດໃນການເຮັດ ແລະ ຄວາມຮູ້ສຶກທີ່ໄດ້ຮັບຈາກການເຮັດກິດຈະກຳ ດັ່ງນັ້ນ, ການປະເມີນເປັນເຄື່ອງມືສຳຄັນທີ່ຈະຊ່ວຍໃຫ້ການຮຽນຮູ້ບັນລຸເປົ້າໝາຍ. ໂດຍການຊ່ວຍຊີ້ບອກເຖິງວິທີການສອນ

ເດັກໃຫ້ເນັ້ນໃສ່ໃນດ້ານໃດ, ຈະໄດ້ຜົນອັນໃດ, ເພື່ອເປັນການເພີ່ມ ແລະ ປັບປຸງໃນຕໍ່ໜ້າ. ຜົນປະໂຫຍດຂອງການປະເມີນ ດັ່ງນັ້ນ, ມັນຂຶ້ນກັບວ່າຜົນໄດ້ຮັບຈະຖືກນຳໃຊ້ແນວໃດສຳລັບການພັດທະນາຂອງເດັກຫຼັງຈາກການປະເມີນຜົນ. ການຈັດປະສົບການໃຫ້ເດັກນ້ອຍທີ່ໄດ້ບັນລຸເປົ້າໝາຍໄປໃນລະດັບໃດ ການປະເມີນຜົນສາມາດນຳໃຊ້ເຕັກນິກ ແລະວິທີການຫຼາຍວິທີເຊັ່ນ: (1) ການສັງເກດແລະການບັນທຶກ; ໃນຂະນະທີ່ເດັກນ້ອຍເຮັດກິດຈະກຳຕ່າງໆສ່ວນບຸກຄົນເພື່ອຮູ້ ການພັດທະນາເດັກ ເມື່ອສັງເກດພຶດຕິກຳໃດທີ່ເປັນບັນຫາຂອງເດັກ ກໍ່ບັນທຶກ ແລະ ແກ້ໄຂໃນຕໍ່ໄປ (2) ການສົນທະນາ ເພື່ອໃຫ້ເຂົ້າໃຈການພັດທະນາຂອງພາສາ. ເຊັ່ນດຽວກັນກັບຄວາມຄິດຂອງເດັກນ້ອຍ (3) ການກວດຜົນງານທີ່ ເຊິ່ງຜົນງານທີ່ນຳມາກວດໄດ້ແກ່:ຜົນງານທາງສິລະປະ,ແຟ້ມສະສົມຜົນງານ, ເຊິ່ງໄດ້ຖືກຈັດກຸ່ມຕາມການຈັດອັນດັບຄຸນນະພາບຂອງງານ, ເຊິ່ງຄວນຈະມີ 3 ຫາ 5 ອັນດັບ ຄື: ດີ, ປານກາງ,ອ່ອນ ຫຼື ດີຫຼາຍ,ດີ ປານກາງ, ອ່ອນ, ອ່ອນຫຼາຍ (4) ການນຳໃຊ້ການສອບເສັງປາກເປົ່າ. ຄູຕ້ອງກະກຽມຄຳຖາມທີ່ຈະໃຊ້. ຖາມ ແລະ ກຽມພ້ອມທີ່ຈະຈັດອັນດັບຄຸນນະພາບ (5) ການນຳໃຊ້ການທົດສອບທີ່ມີຄູນະພາບທີ່ເໝາະສົມກັບເດັກ,ຮູບພາບທີ່ຊັດເຈນ ແລະ ເນື້ອຫາທີ່ສອດຄ່ອງກັບຈຸດປະສົງ.

## 17. ຜົນສຳເລັດທາງການຮຽນ (Learning Achievement)

### 17.1 ຄວາມໝາຍຂອງຜົນສຳເລັດທາງການຮຽນ

ຜົນສຳເລັດທາງການຮຽນ ( Learning Achievement ) ເປັນຜົນທີ່ເກີດຈາກປັດໄຈຕ່າງໆ ໃນການ ຈັດການສຶກສານັກສຶກສາໄດ້ໃຫ້ຄວາມສຳຄັນກັບຜົນສຳເລັດທາງການຮຽນ ແລະ ເນື່ອງຈາກຜົນສຳເລັດທາງການຮຽນເປັນດັດນີປະການໜຶ່ງທີ່ສາມາດບອກເຖິງຄຸນນະພາບການສຶກສາດັ່ງທີ່ຜົນສຳເລັດທາງການຮຽນເປັນຄວາມສາມາດຂອງນັກຮຽນໃນດ້ານຕ່າງໆ ເຊິ່ງເກີດຈາກນັກຮຽນໄດ້ຮັບປະສົບການຈາກຂະບວນການຮຽນ ການສອນຂອງຄູໂດຍຄູຕ້ອງສຶກສາແນວທາງໃນການວັດ ແລະ ປະເມີນຜົນ ການສ້າງເຄື່ອງມືວັດໃຫ້ມີຄຸນນະພາບນັ້ນ ໄດ້ມີຜູ້ໃຫ້ຄວາມໝາຍຂອງຜົນສຳເລັດທາງການຮຽນໄວ້ດັ່ງນີ້ :

ສົມພົນ ເຊື້ອພັນ ( 2547, ໜ້າ 53) ສະຫຼຸບວ່າ ຜົນສຳເລັດທາງການຮຽນວິຊາຄະນິດສາດ ໝາຍເຖິງຄວາມສາມາດ ຄວາມສຳເລັດ ແລະ ສະມັດຖະພາບດ້ານຕ່າງໆ ຂອງຜູ້ຮຽນທີ່ໄດ້ຈາກການຮຽນຮູ້ອັນເປັນຜົນມາຈາກການຮຽນ ການສອນ ການຝຶກຝົນ ຫຼື ປະສົບການຂອງແຕ່ລະບຸກຄົນເຊິ່ງສາມາດວັດໄດ້ຈາກການທົດສອບດ້ວຍວິທີການຕ່າງໆ

ພິມພັນ ເດຊະຄຸບ ແລະ ພະເຍົາ ຍິນດີສຸກ (2548: 125) ກ່າວວ່າ ຜົນສຳເລັດທາງການຮຽນໝາຍເຖິງຂະໜາດຂອງຄວາມສຳເລັດທີ່ໄດ້ຈາກຂະບວນການຮຽນ ການສອນ

ປານີ ທອງຈິນດາ (2549,ໜ້າ 42) ກ່າວວ່າ ຜົນສຳເລັດທາງການຮຽນ ໝາຍເຖິງ ຄວາມສາມາດ ຫຼື ຜົນສຳເລັດທີ່ໄດ້ຮັບຈາກກິດຈະກຳການຮຽນ ການສອນເປັນການປ່ຽນແປງພຶດຕິກຳ ແລະ ປະສົບການຮຽນຮູ້ທາງດ້ານພຸດທິພິໄສ ຈິດພິໄສ ແລະ ທັກສະພິໄສ ແລະ ຍັງໄດ້ຈຳແນກຜົນສຳເລັດທາງການຮຽນໄວ້ຕາມລັກສະນະຂອງວັດຖຸປະສົງຂອງການຮຽນ ການສອນທີ່ແຕກຕ່າງກັນ

ອະນາຕາຊີ ( 1970: 107 ອ້າງເຖິງໃນ ປະລິຍະທິບ ບຸຍຄົງ, 2546: 7 ) ກ່າວໄວ້ພໍສະຫຼຸບໄດ້ວ່າຜົນສຳເລັດທາງການຮຽນມີຄວາມສຳພັນກັບອົງປະກອບດ້ານສະຕິປັນຍາ ແລະ ອົງປະກອບດ້ານທີ່ບໍ່ໃຊ້ສະຕິປັນຍາໄດ້

ແກ່ອີງປະກອບດ້ານເສດຖະກິດສັງຄົມແຮງຈູງໃຈ  ແລະ  ອົງປະກອບທີ່ບໍ່ໃຊ້ສະຕິປັນຍາດ້ານອື່ນ

ໄອແຊງ ອາໂນລັດ ແລະໄມລີ (ອ້າງເຖິງໃນ ປະລິຍະທິບ  ບຸຍຄົງ, 2546: 7) ໃຫ້ຄວາມໝາຍຂອງ ຄຳວ່າ ຜົນສຳເລັດໝາຍເຖິງຂະໜາດຂອງຄວາມສຳເລັດທີ່ໄດ້ຈາກການເຮັດວຽກງານທີ່ຕ້ອງອາໄສຄວາມພະຍາຍາມຢ່າງຫຼາຍເຊິ່ງເປັນຜົນມາຈາກການກະທຳທີ່ຕ້ອງອາໄສທັງຄວາມສາມາດທາງຮ່າງກາຍ ແລະ ທາງສະຕິປັນຍາ ດັ່ງນັ້ນຜົນສຳເລັດທາງການຮຽນຈຶ່ງເປັນຂະໜາດຂອງຄວາມສຳເລັດທີ່ໄດ້ຈາກການຮຽນໂດຍອາໄສຄວາມສາມາດສະເພາະຕົວບຸກຄົນຜົນສຳເລັດທາງການຮຽນອາດໄດ້ຈາກຂະບວນການທີ່ບໍ່ຕ້ອງອາໄສການທົດສອບ ເຊັ່ນການສັງເກດ ຫຼື ການກວດການບ້ານ ຫຼື ອາດໄດ້ໃນຮູບຂອງເກດຈາກໂຮງຮຽນ ເຊິ່ງຕ້ອງອາໄສຂະບວນການ ທີ່ຊັບຊ້ອນ ແລະ ໄລຍະເວລາດົນພໍສົມຄວນ ຫຼື ອາດໄດ້ຈາກການວັດແບບວັດຜົນສຳເລັດທາງການຮຽນທົ່ວໄປ  ເຊິ່ງສອດຄ່ອງກັບໄພສານ ຫວັງພານິດ ( 2536: 89) ທີ່ໃຫ້ຄວາມໝາຍຜົນສຳເລັດທາງການຮຽນວ່າ ໝາຍເຖິງ ຄຸນລັກສະນະ  ແລະ  ຄວາມສາມາດຂອງບຸກຄົນອັນເກີດຈາກການຮຽນ   ການສອນເປັນການປ່ຽນແປງພຶດຕິກຳ  ແລະ  ປະສົບການການຮຽນທີ່ເກີດຂຶ້ນຈາກການຝຶກອົບຮົມ ຫຼື ການສອບຈຶ່ງເປັນການກວດສອບລະດັບຄວາມສາມາດຂອງບຸກຄະລາກອນວ່າຮຽນແລ້ວມີຄວາມຮູ້ເທົ່າໃດສາມາດວັດໄດ້ໂດຍການໃຊ້ແບບທົດສອບຕ່າງໆ ເຊັ່ນ ໃຊ້ຂໍ້ສອບວັດຜົນສັມລິດຂໍ້ສອບວັດພາກປະຕິບັດສາມາດວັດໄດ້ 2 ຮູບແບບ ດັ່ງນີ້ :

1. ການວັດດ້ານປະຕິບັດເປັນການກວດສອບຣະດັບຄວາມສາມາດໃນການປະຕິບັດໂດຍທັກສະຂອງຜູ້ຮຽນໂດຍມຸ້ງເນັ້ນໃຫ້ຜູ້ຮຽນສະແດງຄວາມສາມາດດັ່ງກລ່າວໃນຮູບຂອງການກະທຳຈິງໃຫ້ອອກເປັນຜົນງານການວັດຕ້ອງໃຊ້ຂໍ້ສອບພາກປະຕິບັດ

2. ການວັດດ້ານເນື້ອໃນຄວາມຮູ້ເປັນການກວດສອບຄວາມສາມາດກ່ຽວກັບເນື້ອໃນຄວາມຮູ້ ເຊິ່ງເປັນປະສົບການຮຽນທັງໝົດເຖິງພຶດຕິກຳຄວາມສາມາດໃນດ້ານຕ່າງໆ ສາມາດວັດໄດ້ໂດຍໃຊ້ແບບວັດຜົນສຳເລັດ

ຈາກຄວາມໝາຍຂ້າງຕົ້ນສະຫຼຸບໄດ້ວ່າຜົນສຳເລັດທາງການຮຽນໝາຍເຖິງຜົນການວັດ ການປ່ຽນແປງ ແລະ ປະສົບການການຮຽນຮູ້ເນື້ອໃນຄວາມຮູ້ທີ່ຮຽນມາແລ້ວວ່າເກີດການຮຽນຮູ້ເທົ່າໃດມີຄວາມສາມາດຊະນິດໃດໂດຍສາມາດວັດໄດ້ຈາກແບບທົດສອບວັດສຳເລັດໃນລັກສະນະຕ່າງໆ  ແລະ ການວັດຜົນຕາມສະພາບຈິງ ເພື່ອບອກເຖິງຄຸນນະພາບການສຶກສາຄວາມໝາຍຂອງການວັດຜົນສຳເລັດທາງການຮຽນ  ແລະ  ສາມາດວັດໄດ້ໂດຍການສະແດງອອກມາທັງ 3 ດ້ານ ຄື ດ້ານພຸດທິພິສັຍ ດ້ານຈິດພິໄສ ແລະ ດ້ານທັກສະພິໄສ.

## 18. ແບບທົດສອບວັດຜົນສຳເລັດທາງການຮຽນ

ພິຊິດ ຣັດທິດຸ່ຍ (2545: 96) ກ່າວວ່າ ແບບທົດສອບວັດຜົນສຳເລັດທາງການຮຽນ ໝາຍເຖິງແບບທົດສອບທີ່ໃຊ້ວັດຄວາມຮູ້ ທັກສະ ແລະ ຄວາມສາມາດທາງວິຊາການທີ່ນັກຮຽນໄດ້ຮຽນຮູ້ມາແລ້ວວ່າບັນລຸຜົນສຳເລັດຕາມຈຸດປະສົງທີ່ກຳນົດໄວ້ພຽງໃດ

ສີຣິພົນ ທິບຍະກົງ (2545: 193) ກລ່າວວ່າ ແບບທົດສອບວັດຜົນສຳເລັດທາງການຮຽນ ໝາຍເຖິງຊຸດຄຳຖາມທີ່ມີຈຸດປະສົງວັດພຶດຕິກຳການຮຽນຂອງນັກຮຽນວ່າມີຄວາມຮູ້ ທັກສະ ແລະ ສະມັດຖະພາບດ້ານສະໝອງດ້ານຕ່າງໆ ໃນເລື່ອງທີ່ຮຽນຮູ້ໄປແລ້ວຫຼາຍນ້ອຍພຽງໃດ

ສົມພົນ ເຊື້ອພັນ (2547: 59) ກ່າວວ່າ ແບບທົດສອບວັດຜົນສຳເລັດທາງການຮຽນ ໝາຍເຖິງແບບທົດສອບ ຫຼື ຊຸດຂອງຂໍ້ສອບທີ່ໃຊ້ວັດຄວາມສຳເລັດ ຫຼື ຄວາມສາມາດໃນການເຮັດກິດຈະກຳການຮຽນຮູ້ຂໍນັກຮຽນທີ່ເປັນຜົນມາຈາກການຈັດກິດຈະກຳການຮຽນ ການສອນຂອງຄຣູຜູ້ສອນວ່າຜ່ານຈຸດປະສົງການຮຽນຮູ້ທີ່ຕັ້ງໄວ້ພຽງໃດ ແບບທົດສອບວັດຜົນສຳເລັດທາງການຮຽນ ປະເພດທີ່ຄູສ້າງມີຫຼາຍແບບ ແຕ່ທີ່ນິຍົມໃຊ້ມີ 6 ແບບດັ່ງນີ້:

1. ຂໍ້ສອບອັດຕະໄນ ຫຼື ລຽງຄວາມ (Subjective or Essey test) ເປັນຂໍ້ສອບທີ່ມີສະເພາະຄຳຖາມ ແລ້ວໃຫ້ນັກຮຽນຂຽນຕອບຢ່າງເສລີ ຂຽນບັນລະຍາຍຕາມຄວາມຮູ້ ແລະ ຂຽນຂໍ້ຄິດເຫັນຂອງແຕ່ລະຄົນ

2. ຂໍ້ສອບແບບກາຖືກ-ຜິດ (True-false test) ຄືຂໍ້ສອບແບບເລືອກຕອບທີ່ມີ 2 ຕົວເລືອກແຕ່ຕົວເລືອກດັ່ງກລ່າວເປັນແບບຄົງທີ່ແລະມີຄວາມຫມາຍກົງກັນຂ້າມ ເຊັ່ນ ຖືກ-ຜິດ ໃຊ່-ບໍ່ແມ່ນ ຈິງ-ບໍ່ຈິງ ຄືກັນ-ຕ່າງກັນ ເປັນຕົ້ນ

3. ຂໍ້ສອບແບບເຕີມຄຳ (Completion test) ເປັນຂໍ້ສອບທີ່ປະກອບດ້ວຍປະໂຫຍກ ຫຼື ຂໍ້ຄວາມທີ່ຍັງບໍ່

4. ສົມບູນແລ້ວໃຫ້ຕອບເຕີມຄຳ ຫຼື ປະໂຫຍກ ຫຼື ຂໍ້ຄວາມລົງໃນຊ່ອງວ່າງທີ່ເວັ້ນໄວ້ນັ້ນເພື່ອໃຫ້ມີໃຈຄວາມສົມບູນແລະ ຖືກຕ້ອງ

5. ຂໍ້ສອບແບບຕອບສັ້ນໆ (Short answer test) ເປັນຂໍ້ສອບທີ່ຄ້າຍກັບຂໍ້ສອບ ແບບເຕີມຄຳ ແຕ່ແຕກຕ່າງກັນທີ່ຂໍ້ສອບແບບຕອບສັ້ນໆຂຽນເປັນປະໂຫຍກຄຳຖາມສົມບູນ (ຂໍ້ສອບເຕີມຄຳເປັນປະໂຫຍກ ຫຼື ຂໍ້ຄວາມທີ່ຍັງບໍ່ສົມບູນ) ແລ້ວໃຫ້ຜູ້ຕອບຂຽນຕອບ ຄຳຕອບທີ່ຕ້ອງການຈະສັ້ນ ແລະ ກະທັດຮັດໄດ້ໃຈຄວາມສົມບູນບໍ່ແມ່ນເປັນການບັນລະຍາຍແບບຂໍ້ສອບອັດຕະໄນ ຫຼື ລຽງຄວາມ

6. ຂໍ້ສອບແບບຈັບຄູ່ (Matching test) ເປັນຂໍ້ສອບແບບເລືອກຕອບຊະນິດໜຶ່ງໂດຍມີຄຳ ຫຼື ຂໍ້ຄວາມແຍກອອກຈາກກັນເປັນ 2 ສ່ວນແລ້ວໃຫ້ຜູ້ຕອບເລືອກຈັບຄູ່ວ່າແຕ່ລະຂໍ້ຄວາມໃນຊຸດໜຶ່ງຈະຄູ່ກັບຄຳ ຫຼື ຂໍ້ຄວາມໃດໃນອີກຊຸດໜຶ່ງ ເຊິ່ງມີຄວາມສຳພັນກັນຢ່າງໃດຢ່າງໜຶ່ງຕາມທີ່ຜູ້ອອກຂໍ້ສອບກຳນົດໄວ້

7. ຂໍ້ສອບແບບເລືອກຕອບ (Multiple choice test) ຄຳຖາມແບບເລືອກຕອບໂດຍທົ່ວໄປຈະປະກອບດ້ວຍ 2 ຕອນ ຄື ຕອນນຳ ຫຼື ຄຳຖາມ (Stem) ກັບຕອນເລືອກ (Choice) ໃນຕອນເລືອກນັ້ນຈະປະກອບດ້ວຍຕົວເລືອກທີ່ເປັນຄຳຕອບຖືກ ແລະ ຕົວເລືອກລວງ ປົກກະຕິຈະມີຄຳຖາມທີ່ກຳນົດໃຫ້ພິຈາລະນາ ແລ້ວຫາຕົວເລືອກທີ່ຖືກຕ້ອງຫຼາຍທີ່ສຸດພຽງຕົວເລືອກດຽວຈາກຕົວເລືອກອື່ນໆ ແລະ ຄຳຖາມແບບເລືອກຕອບທີ່ດີນິຍົມໃຊ້ຕົວເລືອກທີ່ໃກ້ຄຽງກັນ  ດັ່ງນັ້ນໃນການສ້າງແບບທົດສອບວັດຜົນສຳເລັດທາງການຮຽນ ຈຶ່ງເປັນວິທີການວັດປະເມີນຜົນ ການຮຽນຮູ້ວິທະຍາສາດ ເຊິ່ງມີການສ້າງແບບທົດສອບຫຼາກຫຼາຍໄດ້ແກ່ ຂໍ້ສອບອັດຕະໄນ ຫຼື ລຽງຄວາມ ຂໍ້ສອບແບບກາຖືກກາຜິດ ຂໍ້ສອບແບບເຕີມຄຳ ຂໍ້ສອບແບບຕອບສັ້ນໆ ຂໍ້ສອບແບບຈັບຄູ່ ແລະ ຂໍ້ສອບແບບເລືອກຕອບ ໃນການວິໄຈເທື່ອນີ້ຜູ້ວິຈັຍສ້າງແບບທົດສອບວັດຜົນສຳເລັດທາງການຮຽນແບບເລືອກຕອບເນື່ອງຈາກເປັນແບບທົດສອບທີ່ສາມາດວັດພຶດຕິກຳທັງ 6 ດ້ານ ໄດ້ແກ່ ດ້ານຄວາມຮູ້ ດ້ານຄວາມເຂົ້າໃຈ ດ້ານການນຳໄປໃຊ້ ດ້ານການວິເຄາະ ດ້ານການສັງເຄາະ ແລະ ດ້ານການປະເມີນຄ່າ

**18.1 ຄວາມຫມາຍຂອງແບບທົດສອບວັດຜົນສຳເລັດທາງການຮຽນ**

ນັກການສຶກສາຫຼາຍທ່ານໄດ້ໃຫ້ຄວາມໝາຍຂອງແບບທົດສອບວັດຜົນສຳເລັດທາງການຮຽນໄວ້ ດັ່ງນີ້:

ສົມນຶກ ພັດທິຍະທະນີ (2546 : 78-82) ໄດ້ໃຫ້ຄວາມໝາຍຂອງແບບທົດສອບວັດຜົນສຳເລັດທາງການຮຽນວ່າໝາຍເຖິງແບບທົດສອບວັດສະມັດຖະພາບທາງສະໝອງຕ່າງໆ ທີ່ນັກຮຽນໄດ້ຮັບການຮຽນຮູ້ຜ່ານມາ

ແລ້ວ ເຊິ່ງແບ່ງໄດ້ເປັນ 2 ປະເພດ ຄື: ແບບທົດສອບທີ່ຄູສ້າງກັບແບບທົດສອບມາດຕະຖານ ແຕ່ເນື່ອງຈາກຄູຕ້ອງເຮັດຫນ້າທີ່ວັດຜົນນັກຮຽນຄືຂຽນຂໍ້ສອບວັດຜົນສຳເລັດທີ່ຕົນໄດ້ສອນ ເຊິ່ງກ່ຽວຂ້ອງໂດຍກົງກັບແບບທົດສອບທີ່ຄູສ້າງ ແລະມີຫຼາຍແບບແຕ່ທີ່ນິຍົມໃຊ້ມີ 6 ແບບ ດັ່ງນີ້:

1. ຂໍ້ສອບແບບອັດນັຍຫລືຄວາມຣຽງ ລັກສະນະທົ່ວໄປເປັນຂໍ້ສອບທີ່ມີສະເພາະຄຳຖາມແລ້ວໃຫ້ນັກຮຽນຂຽນຕອບຢ່າງເສລີຂຽນບັນລະຍາຍຕາມຄວາມຮູ້ແລະຂໍ້ຄິດເຫັນແຕ່ລະຄົນ

2. ຂໍ້ສອບແບບກາຖືກ-ຜິດ ລັກສະນະທົ່ວໄປຖືໄດ້ວ່າຂໍ້ສອບແບບກາຖືກ-ຜິດຄື ຂໍ້ສອບແບບເລືອກຕອບທີ່ມີ 2 ຕົວເລືອກແຕ່ຕົວເລືອກ ດັ່ງກ່າວເປັນແບບຄົງທີ່ ແລະ ມີຄວາມຫມາຍກົງກັນຂ້າມ ເຊັ່ນ ຖືກ-ຜິດໃຊ່-ບໍ່ແມ່ນຈິງ-ບໍ່ຈິງ ຄືກັນ-ຕ່າງກັນ ເປັນຕົ້ນ

3. ຂໍ້ສອບແບບເຕີມຄຳລັກສະນະທົ່ວໄປເປັນຂໍ້ສອບທີ່ປະກອບດ້ວຍປະໂຫຍກ ຫຼື ຂໍ້ຄວາມ ທີ່ຍັງບໍ່ສົມບູນໃຫ້ຜູ້ຕອບເຕີມຄຳ ຫຼື ປະໂຫຍກ ຫຼື ຂໍ້ຄວາມລົງໃນຊ່ອງວ່າງທີ່ເວັ້ນໄວ້ນັ້ນເພື່ອໃຫ້ມີໃຈຄວາມສົມບູນ ແລະ ຖືກຕ້ອງ

4. ຂໍ້ສອບແບບຕອບສັ້ນໆ ລັກສະນະທົ່ວໄປຂໍ້ສອບປະເພດນີ້ຄ້າຍກັບຂໍ້ສອບແບບເຕີມຄຳແຕ່ແຕກຕ່າງກັນທີ່ຂໍ້ສອບແບບຕອບສັ້ນໆ ຂຽນເປັນປະໂຫຍກຄຳຖາມສົມບູນ (ຂໍ້ສອບເຕີມຄຳເປັນປະໂຫຍກທີ່ຍັງບໍ່ສົມບູນ) ແລ້ວໃຫ້ຜູ້ຕອບເປັນຄົນຂຽນຕອບຄຳຕອບທີ່ຕ້ອງການຈະສັ້ນ ແລະ ກະທັດຮັດໄດ້ໃຈຄວາມສົມບູນບໍ່ແມ່ນເປັນການບັນລະຍາຍແບບຂໍ້ສອບອັດຕະໄນ ຫຼື ລຽງຄວາມ

5. ຂໍ້ສອບແບບຈັບຄູ່ ລັກສະນະທົ່ວໄປເປັນຂໍ້ສອບເລືອກຕອບຊະນິດໜຶ່ງໂດຍມີຄຳ ຫຼື ຂໍ້ຄວາມແຍກຈາກກັນເປັນ 2 ຊຸດແລ້ວໃຫ້ຜູ້ຕອບເລືອກຈັບຄູ່ວ່າແຕ່ລະຂໍ້ຄວາມໃນຊຸດໜຶ່ງ (ຕົວຢືນ) ຈະຄູ່ ກັບຄຳ ຫຼື ຂໍ້ຄວາມໃດໃນອີກຊຸດໜຶ່ງ (ຕົວເລືອກ) ເຊິ່ງມີຄວາມສຳພັນກັນຢ່າງໃດຢ່າງໜຶ່ງຕາມທີ່ຜູ້ອອກຂໍ້ສອບກຳນົດໄວ້

6. ຂໍ້ສອບແບບເລືອກຕອບ ລັກສະນະທົ່ວໄປຂໍ້ສອບແບບເລືອກຕອບນີ້ຈະປະກອບດ້ວຍ 2 ຕອນ ຕອນນຳຫຼືຄຳຖາມກັບຕອນເລືອກ ໃນຕອນເລືອກນີ້ຈະປະກອບດ້ວຍຕົວເລືອກທີ່ເປັນຄຳຕອບຖືກ ແລະ ຕົວເລືອກທີ່ເປັນຕົວລວງປົກກະຕິຈະມີຄຳຖາມທີ່ກຳນົດໃຫ້ນັກຮຽນພິຈາລະນາແລ້ວຫາຕົວເລືອກທີ່ຖືກຕ້ອງຫຼາຍທີ່ສຸດພຽງຕົວເລືອກດຽວຈາກຕົວເລືອກອື່ນໆ ແລະ ຄຳຖາມແບບເລືອກຕອບທີ່ດີນິຍົມໃຊ້ຕົວເລືອກທີ່ໃກ້ຄຽງກັນເບິ່ງເຜີນໆ ຈະເຫັນວ່າທຸກຕົວເລືອກຖືກໝົດ ແຕ່ຄວາມຈິງມີນ້ຳໜັກຖືກຫຼາຍນ້ອຍຕ່າງກັນ.

ພວງຣັດ ທະວີຣັດ (2543: 96) ໄດ້ກ່າວເຖິງແບບທົດສອບວັດຜົນສຳເລັດທາງການຮຽນ ໃນທຳນອງດຽວ ກັນວ່າໝາຍເຖິງແບບທົດສອບທີ່ວັດຄວາມຮູ້ຂອງນັກຮຽນທີ່ໄດ້ຮຽນໄປແລ້ວ ເຊິ່ງມັກຈະເປັນ ຂໍ້ຄຳຖາມໃຫ້ນັກຮຽນຕອບດ້ວຍເຈ້ຍ ແລະ ສໍກັບໃຫ້ນັກຮຽນປະຕິບັດຈິງ ຈາກຄວາມໝາຍຂອງແບບທົດສອບວັດຜົນສຳເລັດທາງການຮຽນທີ່ກ່າວມາແລ້ວສະຫຼຸບໄດ້ວ່າແບບທົດສອບວັດຜົນສຳເລັດທາງການຮຽນໝາຍເຖິງແບບທົດສອບທີ່ວັດຄວາມຮູ້ຄວາມສາມາດທາງການຮຽນ ດ້ານເນື້ອໃນດ້ານວິຊາການ ແລະ ທັກສະຕ່າງໆ ຂອງວິຊາຕ່າງໆ.

## 19. ຫຼັກເກນໃນການສ້າງແບບທົດສອບວັດຜົນສຳເລັດທາງການຮຽນ

ໃນການສ້າງແບບທົດສອບວັດຜົນສຳເລັດທາງການຮຽນຜູ້ວິໄຈໄດ້ວິເຄາະຈາກນັກການສຶກສາຫຼາຍໆ ທ່ານທີ່ກ່າວເຖິງຫຼັກເກນໄວ້ສອດຄ່ອງກັນ ແລະ ໄດ້ລຳດັບເປັນຂັ້ນຕອນດັ່ງນີ້:

1. ເນື້ອໃນຄວາມຮູ້ໃນລາຍວິຊາ ຫຼື ທັກສະທີ່ຄວບຄຸມໃນແບບທົດສອບນັ້ນຈະຕ້ອງເປັນພຶດຕິກຳທີ່ສາມາດວັດຜົນສຳເລັດໄດ້

2. ຜົນສຳເລັດທາງການຮຽນທີ່ໃຊ້ແບບທົດສອບວັດນັ້ນຖ້ານຳໄປປຽບທຽບກັນຈະຕ້ອງໃຫ້ທຸກຄົນມີໂອກາດຮຽນຮູ້ໃນສິ່ງຕ່າງໆ ເຫຼົ່ານັ້ນໄດ້ຄອບຄຸມ ແລະ ເທົ່າທຽມກັນ

3. ວັດໃຫ້ກົງກັບຈຸດປະສົງການສ້າງແບບທົດສອບວັດຜົນສຳເລັດທາງການຮຽນຄວນຈະວັດຕາມວັດຖຸປະສົງທຸກຢ່າງຂອງການສອນ ແລະ ຈະຕ້ອງໝັ້ນໃຈວ່າໄດ້ວັດສິ່ງທີ່ຕ້ອງການຈະວັດໄດ້ຈິງ

4. ການວັດຜົນສຳເລັດທາງການຮຽນເປັນການວັດຄວາມຈະເລີນງອກງາມຂອງນັກຮຽນ ການປ່ຽນແປງ ແລະ ຄວາມກ້າວໜ້າໄປສູ່ວັດຖຸປະສົງທີ່ວາງໄວ້ດັ່ງນັ້ນຄູຄວນຈະຮູ້ວ່າກ່ອນຮຽນນັກຮຽນມີຄວາມຮູ້ຄວາມສາມາດຢ່າງໃດເມື່ອຮຽນສຳເລັດແລ້ວມີຄວາມຮູ້ແຕກຕ່າງຈາກເດີມ ຫຼື ບໍ່ ໂດຍການທົດສອບກ່ອນຮຽນ ແລະ ທົດສອບຫຼັງຮຽນ

5. ການວັດຜົນເປັນການວັດຜົນທາງອ້ອມເປັນການຍາກທີ່ຈະໃຊ້ຂໍ້ສອບແບບຂຽນຕອບວັດພຶດຕິກຳກົງໆຂອງບຸກຄົນໄດ້ສິ່ງທີ່ວັດໄດ້ຄື: ການຕອບສະໜອງຕໍ່ຂໍ້ສອບດັ່ງນັ້ນການປ່ຽນວັດຖຸປະສົງໃຫ້ເປັນພຶດຕິກຳທີ່ຈະສອບຈະຕ້ອງເຮັດຢ່າງອ້ອມຄອບ  ແລະ ຖືກຕ້ອງ

6. ການວັດການຮຽນຮູ້ເປັນການຍາກທີ່ຈະວັດທຸກສິ່ງທຸກຢ່າງທີ່ສອນໄດ້ພາຍໃນເວລາຈຳກັດ ສິ່ງທີ່ວັດໄດ້ເປັນພຽງຕົວແທນຂອງພຶດຕິກຳທັງໝົດເທົ່ານັ້ນ  ດັ່ງນັ້ນຕ້ອງໝັ້ນໃຈວ່າສິ່ງທີ່ວັດນັ້ນເປັນຕົວແທນແທ້ຈິງໄດ້

7. ການວັດຜົນສຳເລັດທາງການຮຽນເປັນເຄື່ອງຊ່ວຍພັດທະນາການສອນຂອງຄູ ແລະ ເປັນເຄື່ອງຊ່ວຍໃນການຮຽນຂອງເດັກ

8. ໃນການສຶກສາທີ່ສົມບູນນັ້ນສິ່ງສຳຄັນບໍ່ໄດ້ຢູ່ທີ່ການທົດສອບແຕ່ພຽງຢ່າງດຽວການທົບທວນການສອນຂອງຄູກໍເປັນສິ່ງສຳຄັນຍິ່ງ

9. ການວັດຜົນສຳເລັດທາງການຮຽນຄວນຈະເນັ້ນໃນການວັດຄວາມສາມາດໃນການໃຊ້ຄວາມຮູ້ໃຫ້ເປັນປະໂຫຍດ ຫຼື ການນຳຄວາມຮູ້ໄປໃຊ້ໃນສະຖານນະການໃໝ່ໆ

10. ຄວນໃຊ້ຄຳຖາມໃຫ້ສອດຄ່ອງກັບເນື້ອໃນຄວາມຮູ້ວິຊາ ແລະ ວັດຖຸປະສົງທີ່ວັດ

11. ໃຫ້ຂໍ້ສອບມີຄວາມເໝາະສົມກັບນັກຮຽນໃນດ້ານຕ່າງໆ ເຊັ່ນ: ຄວາມຍາກງ່າຍພໍເໝາະ ມີເວລາພໍສຳລັບນັກຮຽນໃນການເຮັດຂໍ້ສອບ    ສະຫຼຸບໄດ້ວ່າໃນການສ້າງແບບທົດສອບໃຫ້ມີຄຸນນະພາບວິທີການສ້າງແບບທົດສອບທີ່ເປັນຄຳຖາມ ເພື່ອວັດເນື້ອໃນ  ແລະ  ພຶດຕິກຳທີ່ສອນໄປແລ້ວຕ້ອງຕັ້ງຄຳຖາມທີ່ສາມາດວັດພຶດຕິກຳການຮຽນການສອນໄດ້ຢ່າງຄອບຄຸ່ມ ແລະ ກົງຕາມຈຸດປະສົງການຮຽນຮູ້.

## 20. ຊະນິດຂອງແບບທົດສອບວັດຜົນສຳເລັດທາງການຮຽນ

ລ້ວນ ສາຍຍົດ ແລະ ອັງຄະນາ ສາຍຍົດ (2538 : 146) ໄດ້ໃຫ້ຄວາມໝາຍຂອງແບບທົດສອບວັດຜົນສຳເລັດທາງການຮຽນໄວ້ວ່າເປັນແບບທົດສອບທີ່ວັດຄວາມຮູ້ຂອງນັກຮຽນ ຫຼັງຈາກທີ່ໄດ້ຮຽນໄປແລ້ວ ເຊິ່ງມັກຈະເປັນຂໍ້ຄຳຖາມໃຫ້ນັກຮຽນຕອບດ້ວຍເຈ້ຍ ໃຫ້ນັກຮຽນປະຕິບັດຈິງ ເຊິ່ງແບ່ງແບບທົດສອບປະເພດນີ້ເປັນ 2 ປະເພດຄື :

1.  ແບບທົດສອບຂອງຄູໝາຍເຖິງຊຸດຂອງຂໍ້ຄຳຖາມທີ່ຄູເປັນຜູ້ສ້າງຂຶ້ນເປັນຂໍ້ຄຳຖາມທີ່ກ່ຽວກັບຄວາມຮູ້ທີ່ນັກຮຽນໄດ້ຮຽນໃນຫ້ອງຮຽນເປັນການທົດສອບວ່ານັກຮຽນມີຄວາມຮູ້ຫຼາຍ ແລະ ບົກຜ່ອງໃນສ່ວນໃດຈະໄດ້ສອນເສີມ  ຫຼື ເປັນການວັດເພື່ອເບິ່ງຄວາມພ້ອມທີ່ຈະຮຽນໃນຄວາມຮູ້ໃໝ່ ທັງນີ້ຂຶ້ນຢູ່ກັບຄວາມຕ້ອງການຂອງຄູ

2. ແບບທົດສອບມາດຕະຖານໝາຍເຖິງແບບທົດສອບທີ່ສ້າງຂຶ້ນຈາກຜູ້ຊ່ຽວຊານໃນແຕ່ລະສາຂາວິຊາ ຫຼື ຈາກຄູທີ່ສອນວິຊານັ້ນແຕ່ຜ່ານການທົດລອງຫາຄຸນນະພາບຫຼາຍເທື່ອຈົນມີຄຸນນະພາບດີຈຶ່ງສ້າງເກນປົກກະຕິຂອງ

ແບບທົດສອບນັ້ນສາມາດໃຊ້ຫຼັກ ແລະ ປຽບທຽບຜົນເພື່ອປະເມີນຄ່າຂອງການຮຽນ ການສອນໃນເລື່ອງໃດໆກໍໄດ້ແບບທົດສອບມາດຕະຖານຈະມີຄູ່ມືດໍາເນີນການສອບບອກເຖິງວິທີການ ແລະ ຍັງມີມາດຕະຖານໃນດ້ານການແປຄະແນນດ້ວຍທັງແບບທົດສອບຂອງຄູ ແລະ ແບບທົດສອບມາດຕະຖານຈະມີວິທີການໃນການສ້າງຂໍ້ຄໍາຖາມທີ່ຄືກັນເປັນຄໍາຖາມທີ່ວັດຄວາມຮູ້ ແລະ ພຶດຕິກໍາໃນດ້ານຕ່າງໆ ທັງ 4 ດ້ານ ດັ່ງນີ້ :

2.1 ວັດດ້ານການນໍາໄປໃຊ້

2.2 ວັດດ້ານການວິເຄາະ

2.3 ວັດດ້ານການສັງເຄາະ

2.4 ວັດດ້ານການປະເມີນຄ່າ

## 21. ລັກສະນະຂອງແບບທົດສອບຜົນສໍາເລັດທີ່ດີ

ນັກການສຶກສາຫຼາຍທ່ານໄດ້ກ່າວເຖິງລັກສະນະຂອງແບບທົດສອບວັດຜົນສັມລິດທີ່ດີ (ສີຣິພົນ ທິບຢີງ. 2545: 195 ; ພີຊິດ ຣັດທົ່ດຣູຍ. 2545: 135 – 161)

1. ຄວາມທ່ຽງກົງ ເປັນແບບທົດສອບທີ່ສາມາດນໍາໄປວັດໃນສິ່ງທີ່ເຮົາຕ້ອງການວັດໄດ້ຢ່າງຖືກຕ້ອງ ຄົບຖ້ວນ ກົງຕາມຈຸດປະສົງທີ່ຕ້ອງການວັດ

2. ຄວາມເຊື່ອໝັ້ນ ແບບທົດສອບທີ່ມີຄວາມເຊື່ອໝັ້ນ ຄື ສາມາດວັດໄດ້ຄົງທີ່ບໍ່ວ່າຈະວັດຈັກເທື່ອກໍຕາມ ເຊັ່ນ ຖ້ານໍາແບບທົດສອບໄປວັດກັບນັກຮຽນຄົນເດີມຄະແນນຈາກການສອບທັງສອງເທື່ອ ຄວນມີຄວາມສໍາພັນກັນດີ ເມື່ອສອບໄດ້ຄະແນນສູງໃນເທື່ອທໍາອິດກໍ່ຄວນໄດ້ຄະແນນສູງໃນການສອບເທື່ອທີ່ສອງ

3. ຄວາມເປັນປາລະໄນ ເປັນແບບທົດສອບທີ່ມີຄໍາຖາມຊັດເຈນ ສະເພາະເຈາະຈົ່ງ ຄວາມຖືກຕ້ອງຕາມຫຼັກວິຊາ ແລະ ເຂົ້າໃຈກົງກັນ ເມື່ອນັກຮຽນອ່ານຄໍາຖາມຈະເຂົ້າໃຈກົງກັນ ຂໍ້ຄໍາຖາມຕ້ອງຊັດເຈນອ່ານແລ້ວເຂົ້າໃຈກົງກັນ

4. ການຖາມເລິກ ໝາຍເຖິງ ບໍ່ຖາມພຽງພຶດຕິກໍາຂັ້ນຄວາມຮູ້ຄວາມຈໍາ ໂດຍຖາມຕາມຕໍາລາ ຫຼື ຖາມຕາມທີ່ຄູສອນ ແຕ່ພະຍາຍາມຖາມພຶດຕິກໍາຂັ້ນສູງກວ່າຂັ້ນຄວາມຮູ້ຄວາມຈໍາໄດ້ແກ່ : ຄວາມເຂົ້າໃຈ, ການນໍາໄປໃຊ້ການວິເຄາະ, ການສັງເຄາະ ແລະ ການປະເມີນຄ່າ .

5. ຄວາມຍາກງ່າຍພໍເໝາະ ໝາຍເຖິງ ຂໍ້ສອບທີ່ບອກໃຫ້ຮູ້ວ່າຂໍ້ສອບຂໍ້ນັ້ນມີຄົນຕອບຖືກຫຼາຍ ຫຼື ຕອບຖືກນ້ອຍ ຖ້າມີຄົນຕອບຖືກຫຼາຍຂໍ້ສອບຂໍ້ນັ້ນກໍງ່າຍ ແລະ ຖ້າມີຄົນຕອບຖືກນ້ອຍຂໍ້ສອບຂໍ້ນັ້ນກໍຍາກ ຂໍ້ສອບທີ່ຍາກເກີນຄວາມສາມາດຂອງນັກຮຽນຈະຕອບໄດ້ນັ້ນກໍບໍ່ມີຄວາມໝາຍ ເພາະບໍ່ສາມາດຈໍາແນກນັກຮຽນໄດ້ວ່າໃຜເກັ່ງໃຜອ່ອນ ໃນທາງກົງກັນຂ້າມຖ້າຂໍ້ສອບງ່າຍເກີນໄປນັກຮຽນຕອບໄດ້ໝົດ ກໍບໍ່ສາມາດຈໍາແນກໄດ້ເຊັ່ນກັນ ສະນັ້ນຂໍ້ສອບທີ່ດີຄວນມີຄວາມຍາກງ່າຍພໍເໝາະ ບໍ່ຍາກເກີນໄປບໍ່ງ່າຍເກີນໄປ

6. ອໍານາດຈໍາແນກ ໝາຍເຖິງ ແບບທົດສອບນີ້ສາມາດແຍກນັກຮຽນໄດ້ວ່າໃຜເກັ່ງໃຜອ່ອນໂດຍສາມາດຈໍາແນກນັກຮຽນອອກເປັນປະເພດໆ ໄດ້ທຸກລະດັບຢ່າງລະອຽດຕັ້ງແຕ່ອ່ອນສຸດຈົນເຖິງເກັ່ງສຸດ

7. ຄວາມຍຸດຕິທໍາ ຄໍາຖາມຂອງແບບທົດສອບຕ້ອງບໍ່ມີຊ່ອງທາງຊີ້ແນະໃຫ້ນັກຮຽນທີ່ສະຫຼາດໃຊ້ສະຕິປັນຍາໃນການເດົາໄດ້ຖືກຕ້ອງ ແລະ ບໍ່ເປີດໂອກາດໃຫ້ນັກຮຽນທີ່ກຽດຄ້ານ ເຊິ່ງເບິ່ງຕໍາລາຢ່າງຄ່າວໆຕອບໄດ້ ແລະ ຕ້ອງເປັນແບບທົດສອບທີ່ບໍ່ລໍາອຽງຕໍ່ກຸ່ມໃດກຸ່ມໜຶ່ງ

ສະຫລຸບໄດ້ວ່າ ແບບທົດສອບວັດຜົນສຳເລັດທີ່ດີ ຕ້ອງເປັນແບບທົດສອບທີ່ມີຄວາມທ່ຽງກົງ, ຄວາມເຊື່ອໝັ້ນ, ຄວາມເປັນປາລະໄນ, ຖາມເລິກ, ມີຄວາມຍາກງ່າຍພໍເໝາະ , ມີຄ່າອຳນາດຈຳແນກ ແລະ ມີຄວາມຍຸດຕິທຳ

## 22. ທິດສະດີກ່ຽວກັບຜົນສຳເລັດທາງການຮຽນ

### 22.1 ຄວາມໝາຍຂອງຜົນສຳເລັດທາງການຮຽນ

ຜົນສຳເລັດທາງການຮຽນເປັນຄວາມສາມາດຂອງນັກຮຽນໃນດ້ານຕ່າງໆ ເຊິ່ງເກີດຈາກນັກຮຽນໄດ້ຮັບປະສົບການຈາກຂະບວນການຮຽນການສອນຂອງຄູ ໂດຍຄູຕ້ອງສຶກສາແນວທາງໃນການວັດ ແລະ ປະເມີນຜົນ ການສ້າງເຄື່ອງມືວັດທທີ່ມີຄຸນນະພາບນັ້ນ ໄດ້ມີຜູ້ໃຫ້ຄວາມໝາຍຂອງຜົນສຳເລັດທາງການຮຽນໄວ້ດັ່ງນີ້:

ສົມພອນ ເຊື້ອພັນ ( 2547) ສະຫຼຸບວ່າ ຜົນສຳເລັດຜົນທາງການຮຽນວິຊາຄະນິດໝາຍເຖິງຄວາມສາມາດ ຄວາມສຳເລັດ ແລະ ສະມັດຕະພາບດ້ານຕ່າງໆຂອງຜູ້ຮຽນທີ່ໄດ້ຈາກການຮຽນຮູ້ອັນເປັນຜົນມາຈາກການທົດສອບດ້ວຍວິທີການຕ່າງໆ

### 22.2 ຂໍ້ຄວນດຳເນີນໃນການກຳນົດຄະແນນ

ມິນແມນ (Millman, 1975 ອ້າງໃນຈະລັດ,ສີທອງ , 2540 : 15-16) ໄດ້ໃຫ້ຄຳແນະນຳວ່າໃນການກຳນົດຄະແນນຈຸດຕັດນັ້ນຄວນຄຳນຶງເຖິງປັດໄຈຕ່າງໆດັ່ງຕໍ່ໄປນີ້:

**1. ຄວາມສາມາດ (Performance) ຂອງຜູ້ຮຽນອື່ນ**

ການກຳນົດຄະແນນຈຸດຕັດນັ້ນຕອ້ງອາໄສຜົນການສອບຂອງຜູ້ຮຽນອື່ນດ້ວຍຈຶ່ງຕ້ອງຄຳນຶງເຖິງວ່າໂດຍທົ່ວໄປຄວາມສາມາດຂອງຜູ້ສອບທີ່ໃຊ້ເພື່ອກຳຄະແນນຈຸດຕັດເປັນຢ່າງອາດໃຊ້ຜູ້ສອບທີ່ມີຄວາມສາມາດເປັນບັນທັດຖານໃນການກຳນົດຄະແນນຈຸດຕັດທີ່ປະຕິບັດໄດ້ເຊັ່ນນັກສອບອາດຈະກຳນົດວ່າຄແນນຈຸດຕັດເປັນຢ່າງໜ້ອຍ 10 %ຂອງຄະແນນຂອງຜູ້ທີ່ມີຄວາມສາມາດໃນລະດັບຮອບຮູ້ (Master) ເປັນຕົ້ນ

**2. ຄວາມຍາກຂອງແບບທົດສອບ**

ຄວນໃຊ້ດຸນພິນິດໃນການຕັດສິນວ່າຈຸດປະສົງຕ່າງໆທີ່ຈະເຮັດການທົດສອບນັ້ນຜູ້ສອບທີ່ມີຄວາມສາມາດປານກາງນັ້ນຄວນຈະເຮັດໄດ້ຖືກຕ້ອງຈັກເທົ່າໃດຈຶ່ງຈະຢູ່ໃນລະດັບທີ່ພໍໃຈ

**3. ຜົນກະທົບທີ່ຕາມມາ**

ຈຸດໝາຍທີ່ສຳຄັນຂອງການນົດກຳຄະແນນຄືການທີ່ຜູ້ຮຽນທີຄວາມຮູ້ ຄວາມສາມາດໃນລະດັບຕ່ຳທີ່ສຸດ ເພື່ອໃຫ້ພຽງພໍທີ່ຈະສຶກສາຕໍ່ໃນລະດັບທີ່ສູງກວ່າໄດ້ ແຕ່ບາງຄັ້ງກໍ່ຕ້ອງຄຳນຶງດ້ວຍວ່າຖ້າຄະແນນຈຸດຕັດສູງເກີນໄປຈະດຮັດໃຫ້ຜູ້ຮຽນບໍ່ຜ່ານ ໂດຍບໍ່ຈຳເປັນແຕ່ຖ້າຫາກວ່າຕ່ຳເກີນໄປກໍ່ຈະເຮັດໃຫ້ມາດຖານການສຶກສາຕ່ຳດ້ວຍ ຫຼື ເຮັດໃຫ້ຜູ້ຮຽນເກີດບັນຫາໃນການຮຽນຕໍ່ໄປ ດັ່ງນັ້ນຈຶ່ງຄວນຫາຄະແນນຈຸດຕັດທີ່ເໝາະສົມມາໃຊ້ໃນການຕັດສິນ ໂດຍຍຶດຄວາມສຳຄັນຂອງເນື້ອໃນຄວາມຮູ້ ຫຼື ຈຸດປະສົງເປັນຫຼັກວ່າເລື່ອງໃດຈຳເປັນຕ້ອງໃຫ້ຜູ້ຮຽນສອບຜ່ານ ແລະ ເລື່ອງໃດທີ່ຈຳເປັນນ້ອຍກໍ່ໃຫ້ພິຈາລະນາໄດ້.

**4. ຜົນທາງຈິດວິທະຍາ ແລະ ການລົງທຶນທາງການສຶກສາ** ການທີ່ໃຫ້ຜູ້ຮຽນສອບຕົກຢູ່ສະເໝີຍ່ອມເປັນຜົນເສຍຕໍ່ຈິດໃຈຂອງຜູ້ສອບ ແລະ ເປັນຜົນເສຍຕໍ່ການລົງທຶນ ດັ່ງນັ້ນຈຶ່ງຄວນພິຈາລະນາວ່າຈະແກ້ ບັນຫາເຫຼົ່ານີ້ໄດ້ແນວໃດ ເພາະວ່າ ຄວາມສາມາດ ຄວາມເຂົ້າໃຈ ແລະ ຄວາມພູມໃຈເປັນປະສົບການທີ່ຄົນສ່ວນຫຼາຍມີຢູ່ ບໍ່ວ່າມີຢູ່ທັງໝົດ ຫຼື ບໍ່ມີເລີຍແຕ່ວ່າຕ່າງຄົນກໍ່ມີຢູ່ຫຼາຍຫຼນ້ອຍແຕກຕ່າງກັນ.

**5. ຄວາມຄາດເຄື່ອນ ຈາ**ກການເດົາ ແລະ ການສຸ່ມຕົວຢ່າງຂໍ້ສອບການທີ່ມີຜູ້ສອບ ສອບຜ່ານ ຫຼື ບໍ່ຜ່ານ ອາດເກີດຄວາມຄາດເຄື່ອນຈາກການເດົາກໍ່ໄດ້ ຖ້າຮູບແບບຂອງຂໍ້ສອບເປັນແບບຊີ້ແນະ ຫຼື ເປີດ ໂອກາດໃຫ້ນັກຮຽນຕອບຖືກໄດ້ໂດຍການເດົາເຮົາອາດແກ້ໄຂໄດ້ ໂດຍການກຳນົດຄະແນນຈຸດຕັດໃຫ້ສູງຂຶ້ນສ່ວນຄວາມຄາດເຄື່ອນໃນການສຸ່ມຂໍ່ເສອບເປັນຄວາມລຳອຽງທີ່ເນື່ອງມາຈາກການບໍ່ພິຈາລະນາຊະນິດຂອງຄຳຖາມ ແລະ ເນື້ອມນຄວາມຮູ້ໃນການເຮັດໃຫ້ການເລືອກຕົວຢ່າງບໍ່ຄອບຄຸມວັດຖຸປະສົງທີ່ຕັ້ງໄວ້ ເຊິ່ງອາດເຫັນໄດ້ຈາກດັດສະນີຄວາມສຳພັນຂອງເນື້ອໃນຄວາມຮູ້

ບຸນເຊີດພິນໂທອານັນຕະພົງ (2527 : 114) ກ່າວໄວ້ວ່າການກຳນົດຄະແນນຈຸດຕັດຕ້ອງຄຳນຶງເຖິງສິ່ງຕໍ່ໄປນີ້:

1. ປະເພດຂອງແບບທົດສອບທີ່ໃຊ້ວ່າເປັນແບບເຕີມຄຳຖືກຜິດ ຫຼື ເລືອກຕອບຫຼາຍຕົວເລືອກ
2. ຈຳນວນຂໍ້ສອບເພາະຈຳນວນຂໍ້ນ້ອຍມີແນວໂນ້ມຕ້ອງກຳນົດຄະແນນຈຸດຕັດໃຫ້ສູງແຕ່ຖ້າຈຳນວນຂໍ້ຫຼາຍມີແນວໂນ້ມຕ້ອງກຳນົດຄະແນນຈຸດຕັດໃຫ້ຕ່ຳ
3. ພິຈາລະນາການໃຊ້ແບບທົດສອບເກົ່າໆສັງເກດພຶດຕິກຳ ຫຼື ຈາກຜົນການວິໄຈອື່ນໆ

## 23. ທິດສະດີກ່ຽວກັບການຮຽນຮູ້ຂອງເດັກ

### 23.1 ຄວາມໝາຍຂອງການຮຽນຮູ້(Learning)

ກຸນລະຍາ ຕັນຕິຜະລາຊີວະ (2551: 35) ກ່າວວ່າການຮຽນຮູ້ເປັນການກົນໄກຂອງການປ່ຽນແປງຂອງພຶດຕິກຳຂອງບຸກຄົນທີ່ໝາຍເຖິງການປ່ຽນແປງສັກກາຍະພາບຂອງພຶດຕິກຳຢ່າງຖາວອນໂດຍປ່ຽນຜົນ ຈາກປະສົບການທີ່ໄດ້ຮັບສາມາດເກີດຂຶ້ນໄດ້ທຸກທີ ທຸເວລາເຊິ່ງມີປະຕິສຳພັນກັບບຸກຄົນສັງຄົມ ແລະ ສິ່ງແວດລ້ອມ

ສີລິມາ ພີລະໂຍອະນັນຕະພົງສິຣິມາ (2550: 80) ກ່າວວ່າທຳມະຊາດຂອງຂະບວນການທີ່ມະນຸດມີພຶດຕິກຳປ່ຽນແປງໄປຈາກເດີມຈົນເຕີບໂຕເປັນຜູ້ໃຫຍ່ເກີດການຮຽນຮູ້ໄດຈາກການສັງເກດ ການຮຽນຮູ້ຂອງເດັກເປັນຜົນມາຈາກການມີປະສົບການຢູ່ໃນສິ່ງແວດລ້ອມ ແລະ ຈາກການຝຶກຝົນ ນອກຈາກນີ້ຍັງສິ່ງທີ່ມີອິດທິພົນຕໍ່ການຮຽນຮູ້ຂອງເດັກໄດ້ແກ່: ສະພາບແວດລ້ອມ , ການມີປະຕິສຳພັນ,ຄວາມຕ້ອງການ ແລະ ຄວາມສົນໃຈຂອງເດັກເຊິ່ງປັດໃຈເຫຼົ່ານີ້ເຮັດໃຫ້ ຄວາມສາມາດຕ່າງໆຂອງເດັກຖືກນຳອອກມາໃຊ້ຢ່າງມີປະສິດທິພາບ ການຮຽນຮູ້ຂອງເດັກປະຖົມໄວມີຂອບເຂດຄືໃຊ້ເວລາສັ້ນ ການຮັບຮູ້ເນື້ອຫາແບບຮູບປະທຳ ວິທີການຮຽນຮູ້ແບບການຫຼິ້ນລົງມືປະຕິບັດ ສຳຫຼວດສິ່ງຮອບຕົວຕາມພໍໃຈຂອງຕົນເອງ ອໍຊູເບນ ( ກຸນຍາ ຕັນຕິຜະລາຊີວະ 2545: 9; ອ້າງອີງຈາກ Ausubel. 1978) ກ່າວເຖິງການຮຽນຮູ້ວ່າເປັນການປ່ຽນແປງພຶດຕິກຳທີ່ເປັນຜົນມາຈາກປະສົບການ ທັ້ງນີ້ບໍ່ລວມເຖິງວຸເທິພະອະ ແລະ ອາການທີ່ປະກົດຊົ່ວຄູ ການຮຽນຮູ້ບໍ່ໄດ້ເກີດຂຶ້ນອັດຕະໂນມັດແຕ່ເກີດຈາກການໄດ້ຮັບປະສົບການ ແລ້ວມີຂະບວນການບູລະນາການໃນສະໝອງທີ່ເຮັດໃຫ້ເກີດການປ່ຽນແປງລະບົບຂອງຂໍ້ມູນທີ່ໄດ້ຮັບໄປສູ່ການຈື່ຈຳ ຖ້າການໄດ້ການຮັບຂໍ້ມູນ ຫຼື ປະສົບການ ສະນັ້ນໄດ້ຮັບການກະຕຸ້ນ ແລະ ຈູງໃຈທີ່ດີຈະເຮັດໃຫ້ການຮັບຂໍ້ມູນ ຫຼື ປະສົບການນັ້ນແຈ້ງຂຶ້ນ, ຄວາມງອກງາມໃນຄວາມຮູ້ຄວາມເຂົ້າຫຼາຍຂຶ້ນ ແລະ ຈຳໄດ້ດົນນານຫາກຂໍ້ມູນໃໝ່ທີ່ໄດ້ຮັບມີຄວາມສຳພັນ ແລະ ເຊື່ອມຕໍ່ຂໍ້ມູນເກົ່າ ຫຼື ປະສົບການເດີມທີ່ມີຢູ່ຈະເຮັດໃຫ້ເກີດການຮຽນຮູ້ໄດ້ຢ່າງໄວ.

ທິດສະນາ ແຂມມະນີ ແລະ ຊະນະທິບ ພອນກຸນ (2544: 35) ກ່າວວ່າການຮຽນຮູ້ມີຂອບເຂດທີ່ຄອບຄຸມຄວາມໝາຍ 2 ປະການຄື: ການຮຽນຮູ້ໃນຄວາມໝາຍຂອງ“ ຂະບວນການຮຽນຮູ້ ”(Learning

process) ເຊິ່ງໝາຍເຖິງການດຳເນີນການຢ່າງເປັນຂັ້ນຕອນ ຫຼື ວິທີການຕ່າງ ຄວາມສາມາດໃນການເຮັດ ແລະ ການໃຊ້ທັກສະຂະບວນການຕ່າງໆ ລວມທັງຄວາມຮູ້ສຶກ ແລະ ເຈດຄະຕິອັນເປັນຜົນທີ່ເກີດຂຶ້ນຈາກຂະບວນການຮຽນຮູ້ ຫຼື ກ່າວອີກຢ່າງວ່າການຮຽນຮູ້ເປັນທັ້ງລັກສະນະຜົນລັບອັນເປັນເປົ້າໝາຍ ( ends ) ແລະ ວິທີການທີ່ນຳໄປສູ່ເປົ້າໝາຍ (means) ເຊິ່ງລັກສະນະທັງສອງນັບເປັນອົງປະກອບທີ່ສຳພັນກັນ ແລະ ສົ່ງຜົນກະທົບຕໍ່.

ກັນທີ (Guthrie) ໃຫ້ຄວາມໝາຍຂອງການຮຽນຮູ້ວ່າການຮຽນຮູ້ເປັນການປ່ຽນແປງ ພຶດຕິກຳ ອັນເນື່ອງມາຈາກສິ່ງທີ່ເຮົາກຳນົດໃຫ້ ( ພັດທະນາ ຊັດຊະພົງ. 2541: 110) ຈາກຄວາມໝາຍຂອງການຮຽນຮູ້ດັ່ງກ່າວສະຫຼຸບໄດ້ວ່າ ການຮຽນຮູ້ເປັນຂະບວນການທີ່ມີຄວາມຕໍ່ເນື່ອງເປັນຂັ້ນຕອນ ສາມາດປ່ຽນແປງພຶດຕິກຳໄດ້ຢ່າງຖາວອນ ເຊິ່ງປ່ຽນແປງເກີດຂຶ້ນໄດ້ຕາມປະສົບການ ຫຼື ສິ່ງທີ່ໄດ້ຮັບຂອງແຕ່ລະບຸກຄົນ

### 23.2 ລັກສະນະສຳຄັນຂອງການຮຽນຮູ້

ທິດສະນາ ແຂມມະນີ ແລະ ຊະນາທິບ ພອນກຸນ (2544: 37 – 38) ກ່າວວ່າການຮຽນຮູ້ເປັນຂະບວນການທີ່ມີລັກສະນະດັ່ງນີ້:

1. ການຮຽນຮູ້ເປັນຂະບວນການທາງສະຕິປັນຍາ (a cognitive process) ຫຼື ຂະບວນການທາງສະໝອງ ເຊິ່ງບຸກຄົນໃຊ້ໃນການສ້າງຄວາມເຂົ້າໃຈ ຫຼື ການສ້າງຄວາມໝາຍຂອງສິ່ງຕ່າງໆໃຫ້ແກ່ຕົນເອງ ດັ່ງນັ້ນການຮຽນຮູ້ຈຶ່ງເປັນຈະບວນການຈັດກະດຈະກຳ (action on) ຕໍ່ຂໍ້ມູນ ແລະ ປະສົບການທີ່ໃຊ້ເປັນພຽງການຮັບ (talking in) ຂໍ້ມູນ ຫຼື ປະສົບການເທົ່ານັ້ນ

2. ການຮຽນຮູ້ເປັນງານສະເພາະຕົນ ຫຼື ເປັນປະສົບການສ່ວນຕົວ (individual) ທີ່ບໍ່ມີຜູ້ໃດຮຽນຮູ້ ຫຼື້ຮັດແທນກັນໄດ້

3. ການຮຽນຮູ້ເປັນຂະບວນການທາງສັງຄົມ (a social process) ເນື່ອງຈາກບຸກຄົນລໍຢູ່ໃນສັງຄົມ ເຊິ່ງເປັນສິ່ງແວດລ້ອມທີ່ມີອິທິພົນຕໍ່ຕົນ ການປະຕິສຳພັນທາງສັງຄົມຈຶ່ງສາມາດກະຕຸ້ນການຮຽນຮູ້ ແລະ ຂະຫຍາຍຂອບເຂດຂອງຄວາມຮູ້ດ້ວຍ

4. ການຮຽນຮູ້ເປັນຂະບວນການທີ່ເກີດຂຶ້ນໄດ້ທັງຈາກການຄິດ ການເຮັດ ການປະຕິບັດ ການແກ້ບັນຫາ ແລະ ການສຶກສາວິໄຈຕ່າງໆ

5. ການຮຽນຮູ້ດປັນຂະບວນການທີ່ຕື່ນຕົວ ສະໜຸກສະໜານ (active and enjoyable) ແລະ ດຮັດໃຫ້ຜູ້ຮຽນຮູ້ສຶກຜູກພັນ ແລະ ເກີດຄວາມໄຝ່ຮູ້ ການຮຽນຮູ້ເປັນກິດຈະກຳທີ່ນຳມາມາເຊິ່ງຄວາມສະໜຸກສະໜານ

6. ການຮຽນຮູ້ເປັນຂະບວນການທີ່ຕົນເອງອາໃສສະພາບແວດລ້ອມທີ່ເໝາະສົມ (good environment) ເພື່ອເອື້ອອຳນວຍໃຫ້ບຸກຄົນເກີດການຮຽນຮູ້ໄດ້ດີ

7. ການຮຽນຮູ້ເປັນຂະບວນການທີ່ເກີດຂຶ້ນໄດ້ທຸກຄົນເວລາ ທຸກເວລາ ທຸກສະຖານທີ່ ທັ້ງໃນໂຮງຮຽນຄອບຄົວ ແລະ ຊຸມຊົນ

8. ການຮຽນຮູ້ຄື ການປ່ຽນແປງ (change) ກ່າວວ່າ ການຮຽນຮູ້ຈະສົ່ງຜົນຕໍ່ການປັບປຸງປ່ຽນແປງຕົນເອງທັງດ້ານເຈດຕະຄະຕິຄວາມຮູ້ສຶກ ຄວາມຄິດ ແລະ ການເຮັດເພື່ອການດຳລົງຊີວິດຢ່າງເປັນປົກກະຕິທາງສຸກະພາບ ແລະ ຄວາມເປັນມະນຸດທີ່ສົມບູນ

9. ການຮຽນຮູ້ເປັນຂະບວນການຕໍ່ເນື່ອງຕະຫຼອດຊີວິດ (life long process) ບຸກຄົນຈຳເປັນຕ້ອງຮຽນຮູ້ຢູ່ສະເໝີ ເພື່ອການພັດທະນາຊີວິດຈິດໃຈຂອງຕົນເອງ ການສ້າງວັດທະນະທຳການຮຽນຮູ້ຕະຫຼອດຊີວິດ ຈຶ່ງເປັນຂະບວນການພັດທະນາທີ່ຍັ້ງຍືນ ຊ່ວຍໃຫ້ບຸກຄົນ ແລະ ສັງຄົມມີການພັດທະນາຢ່າງຕໍ່ເນື້ອງ

10, ຈາກລັກສະນະສຳຄັນຂອງຮຽນຮູ້ ສະຫຼຸບໄດ້ວ່າລັກສະນະການຮູ້ຄື ຂະບວນການທາງສະຕິປັນຍາ ແລະ ສັງຄົມທີ່ເກີດຂຶ້ນໄດ້ທຸກທີ່ ທຸກເວລາ ໂດຍໄດ້ຮັບການກະຕຸ້ນຈາກສິ່ງຕ່າງໆ ແລະ ມີການພັດທະນາຢ່າງຕໍ່ເນື່ອງມີການປ່ຽນແປງໄດ້ຕາມປະສົບການ ການຮຽນຮູ້ທີ່ໄດ້ຮັບ ການຮຽນຮູ້ເກີດຂຶ້ນໄດ້ຕາມລຳດັບຂັ້ນຕອນ ຈາກການລົງມືປະຕິບັດຄິດຫາວິທີແກ້ບັນຫາເປັນງານສະເພາະຕົວບໍ່ສາມາດຮຽນແທນກັນໄດ້

**23.3 ທຳມະຊາດການຮຽນຮູ້ຂອງເດັກກ່ອນໄວຮຽນ**

ສາຍສຸລີ ຈຸຕິກຸນ (2543: 50 – 51) ກ່າວວ່າທຳມະຊາດການຮຽນຮູ້ຂອງເດັກແຕ່ລະຄົນນັ້ນມີຄວາມແຕກຕ່າງກັນ ດັ່ງນີ້:

1) ຄວາມແຕກຕ່າງດ້ານລີລາການຮຽນຮູ້ນັກວິໄຈ ພົບວ່າ ຜູ້ຮຽນບາງຄົນຖະນັດຈະເຮັດຮູ້ດ້ວຍການຟັງຄືຟັງຢ່າງດຽວກໍ່ໄດ້ເລື່ອງແລ້ວບາງຄົນຕ້ອງເຫັນດ້ວບບາງຄົນມັກການຮຽນຮູ້ແບບສະບາຍໆບາງຄົນມີຄວາມກັງວົນເລັກນ້ອຍບາງຄົນອາດເປັນປະເພດຕ້ອງມີຄວາມກົດດັນ ຫຼື ເລັ່ງເວລາ ບາງຄົນມັກເຮັດວຽກຄົນດຽວ ,ບາງຄົນມັກມີເພື່ອນຮ່ວມງານ ພໍ່ແມ່ ຜູ້ປົກຄອງ ແລະ ຄູຄວນພະຍາຍາມເປີດໂອກາດໃຫ້ເດັກມີປະສົບການ ການຮຽນຮູ້ດ້ວຍລີລາຕ່າງໆ ແລະ ສັງເກດເດັກວ່າຖະນັດໄປທາງໃດ ຢ່າງໃດກໍ່ດີບໍ່ໄດ້ໝາຍຄວາມວ່າຈະຈຳລີລາການຮຽນຮູ້ຂອງເດັກໄປໃນທິດທາງໃດທິດທາງໜຶ່ງແຕ່ໃຫ້ເພີ່ມຄວາມເຂົ້າໃຈວ່າມີລີລາການຮຽນຮູ້ຕ່າງໆກັນລະຫວ່າງເດັກຈະໄດ້ອາໄສວິທີການເຫຼົ່ານັ້ນເພື່ອໃໝ່ເດັກເກີດການຮຽນຮູ້

2) ຄວາມແຕກຕ່າງດ້ານສະຕິປັນຍາເດັກແຕ່ລະຄົນຈະມີຄວາມ ແລະ ລະດັບສະຕິປັນຍາທີ່ແຕກຕ່າງກັນຄວາມແຕກຕ່າງດ້ານການຮຽນຮູ້ຊ້າ ຫຼື ໄວ ເດັກແຕ່ລະຄົນຈະມີຄວາມສາມາດໃນການຮັບຮູ້ໄດ້ຕ່າງກັນ ບາງຄົນຮັບຮູ້ໄດ້ໄວໃນຂະນະທີ່ບາງຄົນຮັບຮູ້ ໄດ້

ຊາອະນຸດ ລົມມສີລີ (2542: 30) ກ່າວວ່າທຳມະຊາດການຮຽນຮູ້ຂອງເດັກ ສະຫຼຸບໄດ້ດັ່ງນີ້: 1. ການຮຽນຮູ້ຄື: ການປ່ຽນແປງໃນພຶດຕິກຳອັນເປັນຜົນມາຈາກການຄິດ ການເຮັດ ການໄດ້ເຫັນ ໄດ້ຟັງ ໄດ້ສຳຜັດ ໄດ້ຊີມລົດຊາດ ແລະ ໄດ້ດົມກິ່ນ

1) ເດັກອາຍຸໃນໄວດຽວກັນມີພົກທະນາການໂດຍທົ່ວໆໄປຄາຍຄືກັນ

2) ເດັກແຕ່ລະຄົນຈະມີແຕກຕ່າງກັນໃນຄວາມສາມາດທີ່ຕິດຕົວມາຄວາມໄວ,ຄວາມຊ້າຂອງການຈະເລີນເຕີບໂຕ ພັດທະນາບຸກຄະລິກກະພາບ ແລະ ປະສົບການທີ່ເຄີຍມີມາແລ້ວ ເຊິ່ງອາດຈະແຕກຕ່າງກັນທາງດ້ານຖະນາທາງສັງຄົມ ນາງເສດຖະກິດ ແລະ ການສຶກສາຂອງພໍ່ແມ່

3) ເດັກແຕ່ລະຄົນຈະມີແຕກຕ່າງກັນໃນການຮ່ຳຮຽນຝຶກຝົນໃຫ້ມີຄວາມສາມາດ ແລະ ທັກສະໄດ້ພ້ອມກັນໃນເວລາດຽວກັນ ໄວສະເໝີກັນ ແລະ ມີຄວາມສຳເລັດໄດ້ເທົ່າທຽມກັນ

4) ເດັກມີຄວາມຕ້ອງການຫຼາຍຢ່າງທີ່ຄູຕ້ອງເອົາໃຈໃສ່ເບິ່ງແຍງດູແລໃຫ້ໄດ້ຮັບຄວາມພໍໃຈເດັກຕອ້ງການຄວາມຮັກ ຄວາມອົບອຸ່ນຈາກພໍ່ແມ່ ຄູ ແລະ ຜູ້ໃກ້ຊິດອື່ນໆເດັກຕ້ອງການເປັນຜູ້ທີ່ໄດ້ຮັບການນັບໜ້າຖືຕາໃນຖານະທີ່ເປັນຄົນໜຶ່ງໃນຄອບຄົວ ໃນຫ້ອງຮຽນໃນໂຮງຮຽນເດັກຕ້ອງມີຄວາມສຳເລັດໃນໜ້າທີ່ຄວາມຮັບຜິດຊອບທີ່ເດັກ

ຕ້ອງການທີ່ຈະມີຄວາມຮູ້ ແລະ ຄວາມເຂົ້າໃຈໃນສິ່ງຕ່າງໆ ທີ່ພົບເຫັນຈາກທີ່ກ່າວມາຈະເຫັນໄດ້ວ່າທຳມະຊາດໃນການຮຽນຮູ້ຂອງເດັກກ່ອນໄວຮຽນແຕ່ລະຄົນມີຄວາມແຕກຕ່າງກັນຕາມປະສົບການເດີມທີ່ເຄີຍໄດ້ຮັບ ແລະ ຄວາມຖະໜັດດັ່ງນັ້ນ ພໍ່ແມ່ຜູ້ປົກຄອງ ແລະ ຄູຜູ້ສອນຕ້ອງເຮັດການສັງເກດຄວາມຖະໜັດໃນການຮຽນຮູ້ຂອງເດັກເພື່ອຈະໄດ້ຈັດການຮຽນຮູ້ໃຫ້ເໝາະສົມກັບລີລາໃນການຮຽນຮູ້ເພື່ອພັດທະນາເດັກໃຫ້ເຕັມສັກກາຍະພາບ ແລະ ເກີດປະສິດທິພາບສູງສຸດໃນການຈັດການຮຽນຮູ້.

### 23.4 ວິທີການຮຽນຮູ້ຂອງເດັກກ່ອນໄວຮຽນ

ສິລິມາ ພິໂຍອະນັນຕະພົງ (2543: 74) ກ່າວວ່າການພັດທະນາເດັກກ່ອນໄວຮຽນໃຫ້ມີຄວາມສາມາດໃນການຮຽນຮູ້ດ້ວຍການໃຊ້ປະສາດສຳຜັດທັງ 5 ຄື ການເບິ່ງເຫັນ,ການຟັງ ການດົມ ການຊີມ ແລະ ການສຳຜັດນຳໄປເຊື່ອມໂຍງກັບສິ່ງແວດລ້ອມທຳມະຊາດຕ່າງໆ ທີ່ຢູ່ຮອບຕົວເດັກເປັນການກະຕຸ້ນ ແລະ ທີ່ຢູ່ຮອບຕົວເດັກເປັນການກະຕຸ້ນ ແລະ ຕອບສະໜອງຄວາມສົນໃຈຂອງເດັກດ້ວຍການໃຫ້ເດັກສຳຫຼວດລົງມືເຮັດກິດຈະກຳຕ່າງໆດ້ວຍຕົນເອງເຮັດໃຫ້ເກີດການຮັບຮູ້ ຄວາມເຂົ້າໃຈຂອງ ແລະ ຄວາມຄິດລວມຍອດນຳໄປສູ່ການພັດທະນາສະຕິປັນຍາ ສຳນັກງານຄະນະກຳມະການສຶກສາແຫ່ງຊາດ (2543: 16) ກ່າວວ່າການຮຽນຮູ້ໃນຊ່ວງໄວ 0 – 6 ປີ ຖືໄດ້ວ່າເປັນໂອກາດທອງຂອງການຮຽນຮູ້ເພາະໄວນີ້ສະໝອງຈະເລີນເຕີບໂຕຢ່າງໄວ ໂດຍສະເພາະ 3 ປີ ທຳອິດສະໝອງຂອງເດັກມີການປ່ຽນແປງທັງປະລິມານເສັ້ນໃຍສະໝອງ ແລະ ຈຸດເຊື່ອມຕໍ່ສານເຄມີໃນສະໝອງ ລວມທັງຮອຍຍັບທີ່ພື້ນຜິວສະໝອງ ເຊິ່ງລ້ວນສິ່ງຜົນຕໍ່ສະຕິປັນຍາ ແລະ ຄວາມສະຫຼາດຂອງເດັກ ຖ້າເດັກໄດ້ຮັບການພັດທະນາ ໄດ້ຮັບການກະຕຸ້ນດ້ວຍວິທີທີ່ຖືກຕ້ອງແລ້ວຈະຊ່ວຍພັດທະນາເຊວສະໝອງ ເຈດຕະຄະຕິຕໍ່ການຮຽນຮູ້ ແລະ ວາງພື້ນຖານຂອງການຮຽນຮູ້ຊ່ວຍໃຫ້ທັກສະການຮຽນຮູ້ພັດທະນາໄປໄດ້ຕະຫຼອດຊີວິດຢ່າງມີປະສິດທິພາບເດັກໄວນີ້ມັກເຄື່ອນໄຫວສຳຜັດເປັນໄວທີ່ມັກໃຊ້ມືໃຊ້ເທົ່າເດັກມັກກິດຈະກຳການຫຼິ້ນ ແລະ ການອອກກຳລັງກາຍເດັກມັກປັ້ນດິນ ຖອນຫຍ້າ ປູກຕົ້ນໄມ້ອື່ນ ເດັກຫຼິ້ນ ແລະ ເຮັດວຽກເລັກໆນ້ອຍ ໆໄປພ້ອມກັນໄວນີ້ດານຫຼິ້ນຄືການຮຽນເດັກໃນໄວ 0 – 6 ປີ ເປັນໄວຊີວິດທີ່ຄິດຝັນ ຈິນຕະນາການເປັນໄວແຫ່ງການສຳຜັດຄວາມປາດຖະໜາທີ່ຈະຮຽນຮູ້ສື່ສານ ຫຼິ້ນຮ່ວມກັບຜູ້ອື່ນເປັນໄວເລີ່ມແລກ ທີ່ຈະວາງຮາກຖານຂອງຊີວິດຂ້າງໜ້າວ່າຈະພັທະນາໄດ້ດີພຽງໃດແຫຼ່ງການຮຽນຮູ້ໃນຊ່ວງໄວ 0 – 6 ປີທີ່ສຳຄັນທີ່ສຸດຄື ຄອບຄົວໄດ້ແກ່ ພໍ່ ແມ່ແລະ ບຸກຄົນໃນຄອບຄົວ ສະນັ້ນການຕຽມການສຶກສາສຳຫຼັບພໍ່ແມ່ໃນຖານະເປັນຄູຄົນທຳອິດຂອງລູກຈຶ່ງມີຄວາມສຳຄັນ ຄວບຄູ່ໄປກັບການສອນເດັກກ່ອນໄວຮຽນຈະຮຽນຮູ້ດ້ວຍວິທີການດັ່ງຕໍ່ປນີ້:

1. ຂະບວນການສໍສຜັດ
2. ຂະບວນການຜະເຊີນສະຖານະການແລະ ແກ້ບັນຫາຈົນເກີດປະສົບການ
3. ຂະບວນການອົບຮົມບົ່ມສອນດ້ານຄຸນນະທຳ ແລະ ລັກສະນະນິໄສ
4. ຂະບວນການສົ່ງເສີມຄວາມສາມາດ ແລະ ຄວາມຖະນັດ ຄວາມສົນໃຈ
5. ຂະບວນການເສີມທັກສະ ແລະ ຄວາມໄຝ່ຮູ້ເພື່ອການຮຽນ ແລະສ້າງຄວາມຮູ້ໄດ້ເອງຕະຫຼອດຊີວິດ

## 24. ຫຼັກການຮຽນຮູ້ (Principles of learning)

ບົດບາດຂອງຄູ ( Teacher role ) ບົດບາດຂອງເດັກ ( Student role ) ແລະ ການຈັດສະພາບການຮຽນຮູ້ (Learning environment) ສະຫຼຸບໄດ້ດັ່ງນີ້:

1. ມີຄວາມເຊື່ອວ່າເດັກທຸກຄົນມີສັກກາຍະພາບໃນການສ້າງອົງຄວາມຮູ້ໂດຍອາໄສສະພາບຈິງທີ່ສອດຄ້ອງກັບບໍລິບົດຂອງສັງຄົມ ແລະ ວັດທະນະທຳຂອງເດັກ

2. ຈັດປະສົບການການຮຽນຮູ້ທີ່ຫຼາກຫຼາຍເໝາະສົມກັບຂອງເດັກ ( Developmentally Appropriate curriculum)

3. ບູລະນາການເນື້ອຫາກິດຈະກຳ ແລະ ທັກສະການຮຽນຮູ້ ໂດຍເຊື່ອມໂຍງພື້ນຖານປະສົບການຂອງເດັກ ແລະ ຂະຫຍາຍຄວາມຄິດຢ່າງຕໍ່ເນື່ອງຄ່ອຍເປັນຄ່ອຍໄປມີຄວາມໝາຍ ແລະ ມີຄວາມສຳພັນກັນ

4. ໃຫ້ໂອກາດເດັກສຳຜັດປະຕິບັດກິດຈະກຳດ້ວຍຈົນເອງ (Manipulation)

5. ໃຫ້ເດັກໄດ້ມີປະຕິສຳພັນກັບເພື່ອນ ແລະ ຄູໂດຍເຮັດວຽກຮ່ວມກັນແລກ ແລກປ່ຽນຄວາມຄິດ ແລະໄດ້ປັບຕົວທາງສັງຄົມ (interaction and communication)

6. ໃຫ້ເດັກມີໂອກາດເລືອກຄິດ ຕັດສິນໃຈໃນການເຮັດກິດຈະກຳໂດຍມີຜູ້ໃຫຍ່ໃຫ້ກຳລັງໃຈສະໜັບສະໜຸນ (adult support)

7. ສ້າງບັນຍາກາດການຮຽນຮູ້ໃຫ້ເດັກມີຄວາມຄິດອິສະລະ ແລະ ສະໜັບສະໜູນຄວາມຄິດລິເລີ່ມ (Childinitiate atmosphere)

8. ເສີມສ້າງຄວາມຮູ້ສຶກ ພູມໃຈໃນການເຮັດກິດຈະກຳ ແລະ ຄວາມຮູ້ສຶກທີ່ດີຕໍ່ຕົນເອງ (self - esteem)

9. ຕິດຕາມສັງເກດເດັກ ສະທ້ອນຂໍ້ມູນຈາກການສັງເກດ ແລະ ປະເມີນການຮຽນຮູ້ຕາມສະພາບຈິງ (authentic assessment)

10. ປັບປ່ຽນບົດບາດຄູໃນຖານຜູ້ສອນມາເປັນຜູ້ສັງເກດ (observer) ຜູ້ຮຽນຮູ້ (learner) ແລະ ຜູ້ອຳນວຍຄວາມສະດວກໃນການຮຽນຮູ້ (facilitator)

11. ສົ່ງເສີມ ແລະ ໃຫ້ຄວາມສຳຄັນກັບບົດບາດຂອງພໍ່ ແມ່ ແລະ ສະຖາບັນຄອບຄົວໃນການອົບຮົມລ້ຽງດູ ແລະ ໃຫ້ການສຶກສາແກ່ເດັກ (parents as teacher and partners)

ກຳມະການ (2540: 23 24) ໄດ້ກ່າວເຖິງຫຼັກການຈັດປະສົບການ ຫຼັກການຈັດກິດຈະກຳສຳລັບເດັກກ່ອນໄວຮຽນໄວ້ດັ່ງນີ້:

1. ກິດຈະກຳທີ່ຈັດຄວນຄຳນຶງເຖິງຈົວເດັກເປັນສຳຄັນເດັກແຕ່ລະຄົນມີຄວາມສົນໃຈແຕກຕ່າງກັນຈຶ່ງຄວນຈັດມີກິດຈະກຳຫຼາຍປະເພດທີ່ເໝາະສົມກັບເດັກ ກັບຄວາມສົນໃຈ ແລະ ຄວາມຕ້ອງການຂອງເດັກ

2. ກິດຈະກຳທີ່ຈັດຄວນມີທັງກິດຈະກຳທີ່ໃຫ້ເດັກເຮັດເປັນລາຍບຸກຄົນ ແລະ ກຸ່ມໃຫຍ່ ຄວນເປີດໂອກາດໃຫ້ເດັກລິ້ເລີ່ມກິດຈະກຳດ້ວຍຕົນເອງຕາມຄວາມເໝາະສົມ

3. ກິດຈະກຳທີ່ຈັດຄວນມີຄວາມສົມດຸນຄື ໃຫ້ມີທັງກິດຈະກຳໃນຫ້ອງຮຽນ ແລະ ນອກຫ້ອງຮຽນກິດຈະກຳທີ່ຕ້ອງເຄື່ອນໄຫວ ແລະ ສະຫງົບ ກິດຈະກຳທີ່ເດັກ ແລະ ຄູລິເລີ່ມ

4. ໄລຍະເວລາທີ່ຈັດຄວນເໝາະສົມກັບໄວ ມີການຢືດຢຸ່ນໄດ້ຕາມຄວາມຕ້ອງການ ແລະ ຄວາມສົນໃຈຂອງເດັກເຊັ່ນໄວ 3 ປີ ມີຄວາມສົນໃຈສັ້ນປະມານ 8 ນາທີ ໄວອາຍຸ 4 ປີ ມີຄວາມສົນໃຈຢູ່ໄດ້ປະມານ 12 ນາທີ ໄວອາຍຸ 5 ປີມີຄວາມສົນໃຈຢູ່ໄດ້ ປະມານ 15 ນາທີ ກິດຈະກຳທີ່ຄວນເນັ້ນໃຫ້ມີສື່ຂອງຈິງໃຫ້ເດັກມີໂອກາດສັງເກດ,ສຳຫຼວດຄົ້ນຄວ້າທົດລອງ ແກ້ບັນຫາດ້ວຍຕົນເອງ ມີໂອກາດສ້າງຄວາມສຳພັນກັບເດັກຜູ້ອື່ນ ແລະ ຜູ້ໃຫຍ່

ຈາກຫຼັກການຈັດກິດຈະກຳ ແລະ ປະສົບການດັ່ງກ່າວກຳມະການກະຊວງສຶກສາແຫ່ງປະເທດໄທ (2542: 24 - 44) ຈຶ່ງໄດ້ສະເໜີກິດຈະກຳຫຼັກສຳລັບເດັກກ່ອນໄວຮຽນເປັນ 6 ກິດຈະກຳ ຄື ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ, ກິດຈະກຳວົງມົນ,ກິດຈະກຳສ້າງສັນ,ກິດຈະກຳກາງແຈ້ງ, ກິດຈະກຳເກມການສຶກສາ ແລະ ກິດຈະກຳການຫຼິ້ນຕາມມູມ ກິດຈະກຳກຸ່ມໃຊ້ເວລາ 20 ນາທີ ແລະ ກິດຈະກຳອິດສະຫຼະ ໃຊ້ເວລາ 30-60 ນາທີ

## 25. ການປະເມີນພັດທະນາການ ແລະ ການຮຽນຮູ້ເດັກກ່ອນໄວຮຽນ

ການປະເມີນພັດທະນາການ ແລະ ການຮຽນຮູ້ເປັນອົງປະກອບທີ່ສຳຄັນຢ່າງຍິ່ງໃນການພັດທະນາເດັກ

ກ່ອນໄວຮຽນ ເປັນຂະບວນການລວບລວມຂໍ້ມູນກ່ຽວກັບພຶດຕິກຳ ແລະ ຄວາມສາມາດຂອງເດັກໃນດ້ານຕ່າງໆ ທັງໃນທາງປະລິມານ ແລະ ທາງຄຸນນະພາບຢ່າງຕໍ່ເນື່ອງ ແລ້ວນຳມາຮຽບຮຽງຢ່າງເປັນລະບົບເພື່ອໃຊ້ເປັນຂໍ້ມູນໃນການຕັດສິນໃຈກ່ຽວກັບເດັກຫຼືການຈັດປະສົບການໃຫ້ແກ່ເດັກ

ການປະເມີນພັດທະນາການ ແລະ ການຮຽນຮູ້ເປັນສິ່ງທີ່ຄວນເກີດຂຶ້ນຄວບຄູ່ໄປກັບການຈັດປະສົບການຕາມປົກກະຕິໃນກິດຈະກຳປະຈຳວັນ ຄູທີ່ປະເມີນຢ່າງຕໍ່ເນື່ອງ ແລະ ເປັນລະບົບຈະສາມາດໃຊ້ຫຼັກສູດ ແລະ ຈັດປະສົບການໄດ້ຢ່າງເໝາະສົມກັບໄວ ແລະ ຄວາມແຕກຕ່າງລະຫວ່າງບຸກຄົນຂອງເດັກ

### 24.1ຫຼັກການປະເມີນພັດທະນາການຂອງເດັກ

ຫຼັກການປະເມີນພັດທະນາການຂອງເດັກຕາມຫຼັກສູດການສຶກສາເດັກກ່ອນໄວຮຽນ ພຸທະສັກະລາດ 2546 ມີດັ່ງນີ້

1.ປະເມີນພັດທະນາການຂອງເດັກຄົບທຸກດ້ານແລະນຳຜົນມາພັດທະນາເດັກ

2.ປະເມີນເປັນລາຍບຸກຄົນຢ່າງສະໝ່ຳສະເໜີຕໍ່ເນື່ອງຕະຫຼອດປີ

3.ສະພາບການປະເມີນຄວນມີລັກສະນະເຊັ່ນດຽວກັບກິດຈະກຳປະຈຳວັນ

4.ປະເມີນຢ່າງເປັນລະບົບມີການວາງແຜນເລືອກໃຊ້ເຄື່ອງມືແລະຈົດບັນທຶກໄວ້ເປັນຫຼັກຖານ

5. ປະເມີນຕາມສະພາບຈິງດ້ວຍວິທີການຫຼາກຫຼາຍເໝາະກັບເດັກ ທັງໝົດທັງໃຊ້ແຫຼ່ງຂໍ້ມູນຫຼາຍໆ ດ້ານບໍ່ຄວນໃຊ້ການທົດສອບ

## 26.ແນວທາງການປະເມີນພັດທະນາການ ແລະ ການຮຽນຮູ້ຂອງເດັກກ່ອນໄວຮຽນຕາມສະພາບຈິງ

ການປະເມີນພັດທະນາການ ແລະ ການຮຽນຮູ້ຂອງເດັກກ່ອນໄວຮຽນຕາມສະພາບຈິງມີແນວທາງດັ່ງຕໍ່ໄປນີ້:

1. ໃຊ້ເຄື່ອງມືປະເມີນທີ່ເໝາະສົມກັບພັດທະນາການ ແລະ ທຳມະຊາດການຮຽນຮູ້ຂອງເດັກກ່ອນໄວຮຽນຄື: ຄູຕ້ອງສຶກສາພັດທະນາການທຸກດ້ານຂອງເດັກທັງດ້ານຮ່າງກາຍ,ດ້ານ ອາລົມ, ດ້ານ ສັງຄົມ ແລະ ດ້ານສະຕິປັນຍາເພື່ອກຳນົດຕົວບົ່ງຊີ້ໃນເຄື່ອງມືການປະເມີນ ການທີ່ຄູຮູ້ພັດທະນາການ ແລະ ເຂົ້າໃຈຈຸດໝາຍການຮຽນຮູ້ທີ່ຊັດເຈນ ແລະ ເໝາະສົມຈະເຮັດໃຫ້ຄູສາມາດປະເມີນພັດທະນາການ ແລະ ຜົນການຮຽນຮູ້ຢ່າງແທ້ຈິງໄດ້

2. ໃຊ້ເຄື່ອງມືໃນການປະເມີນທີ່ຫຼາກຫຼາຍ ການປະເມີນພັດທະນາການ ແລະ ການຮຽນຮູ້ຂອງເດັກກ່ອນໄວຮຽນຄວນເປັນການປະເມີນແບບບໍ່ເປັນທາງການ ວິທີການເກັບລວບລວມຂໍ້ມູນໃນການປະເມີນທີ່ເໝາະສົມຄືການສັງເກດ ຫຼື ການສົນທະນາກັບເດັກ ແລ້ວບັນທຶກຢ່າງເປັນລະບົບວິທີການບັນທຶກອາດໃຊ້ວິທີການສຳຫຼວດລາຍການ,ການຈົດບັນທຶກພຶດຕິກຳ ມາດຕາສ່ວນປະເມີນຄ່າ ອາດໃຊ້ວິທີການບັນທຶກວີດີໂອ ບັນທຶກສຽງ ເກັບຕົວຢ່າງງານ ຫຼື ໃຊ້ແຟ້ມສະສົມງານ (Portfolio) ທັງນີ້ ຄູຄວນຮຽນຮູ້ວິທີໃຊ້ເຄື່ອງມືໃນແຕ່ລະປະເພດ ແລະເລືອກໃຊ້ເຄື່ອງການປະເມີນທີ່ຫຼາກຫຼາຍເພື່ອໃຫ້ສາມາດສະທ້ອນການຮຽນຮູ້ຂອງເດັກຢ່າງແທ້ຈິງ

3. ບູນນາການການສອນກັບການປະເມີນ ການປະເມີນຖືເປັນສ່ວນໜຶ່ງຂອງການຈັດປະສົບການ ການປະເມີນຢ່າງຕໍ່ເນື່ອງເຮັດໃຫ້ຄູຮູ້ພັດທະນາການ ແລະ ການຮຽນຮູ້ຂອງເດັກ ເຂົ້າໃຈເດັກ ແລະ ຮູ້ວ່າຈະພັດທະນາເດັກຢ່າງໃດຕໍ່ໄປ ວຽກງານທີ່ສຳຄັນຂອງຄູໃນສ່ວນນີ້ ຄື ຄູຕ້ອງທົບທວນວ່າຈະປະເມີນພັດທະນາການຕາມລາຍການໃດ ເລືອກໃຊ້ເຄື່ອງມືປະເມີນຊະນິດໃດ ປະເມີນໃນຊ່ວງເວລາໃດໃນກິດຈະກຳປະຈຳວັນທີ່ຈັດຂຶ້ນ ການວາງແຜນການປະເມີນທີ່ເໝາະສົມ ແລະ ຍືດຫຍຸ່ນໄດ້ຈະຊ່ວຍໃຫ້ຄູສາມາດຈັດປະສົບການໂດຍກໍ່ການປະເມີນຄວບຄູ່ກັນໄປໄດ້ຢ່າງລາບລື່ນ

4. ເນັ້ນທີ່ຄວາມກ້າວໜ້າຂອງເດັກ ໃນການປະເມີນພັດທະນາການ ແລະ ການຮຽນຮູ້ ຄູຄວນບັນທຶກສິ່ງທີ່ເດັກສາມາດເຮັດໄດ້ ເພື່ອເປັນການປະເມີນຄວາມກ້າວໜ້າຂອງເດັກ ບໍ່ຄວນສັງເກດສິ່ງທີ່ເດັກຍັງບໍ່ສາມາດເຮັດໄດ້ ການຮູ້ສິ່ງທີ່ເດັກເຮັດໄດ້ຈະຊ່ວຍໃຫ້ຄູສາມາດແນະນຳສະໜັບສະໜູນໃຫ້ເດັກກ້າວໄປສູ່ພັດທະນາການໃນຂັ້ນທີ່ສູງຂຶ້ນໄດ້ ການເນັ້ນທີ່ຄວາມກ້າວໜ້າຂອງເດັກນີ້ຖືເປັນການພິຈາລະນາ ແລະ ຊ່ວຍແກ້ບັນຫາໃຫ້ແກ່ເດັກໄດ້ເປັນຢ່າງດີ.

6. ໃຫ້ຄວາມສົນໃຈທັງຂະບວນການ ແລະ ຜົນຜະລິດ ຂະນະທີ່ເດັກຮ່ວມກິດຈະກຳຄູຄວນໃຫ້ຄວາມສົນໃຈ

7. ກັບຂະບວນການໃນການຮຽນຮູ້ຂອງເດັກເຊັ່ນ ຂະນະທີ່ເດັກກຳລັງລົງຊື່ມາໂຮງຮຽນ ເມື່ອຄູສັງເກດຂະບວນການເຮັດວຽກງານຂອງເດັກ ຈະພົບວ່າເດັກບາງຄົນໃຊ້ວິທີຄັດລອກຊື່ຂອງຕົນໂດຍເບິ່ງຈາກຊື່ທີ່ປ້າຍເສື້ອ ເຮັດໃຫ້ຜົນງານການຂຽນມີລັກສະນະກັບຫົວ ບາງຄົນອາດຂຽນໄດ້ຢ່າງຄ່ອງແຄ້ວຈາກຄວາມຈຳຂອງຕົນເອງໂດຍທີ່ຜົນຜະລິດມີລັກສະນະໃກ້ຄຽງກັບຄົນທີ່ຂຽນໂດຍການຄັດລອກຈາກແບບທີ່ ຄູຕຽມໄວ້ ຫາກບໍ່ສັງເກດຂະບວນການຄວນເຮັດໃຫ້ຄູບໍ່ສາມາດໃຫ້ຄວາມຊ່ວຍເຫຼືອເດັກໄດ້ຢ່າງເໝາະສົມ ຢ່າງໃດກໍຕາມຄູຄວນໃຫ້ຄວາມສົນໃຈ ແລະ ຄວນກວດສອບທັງຂະບວນການແລະຜົນຜະລິດຄວບຄູ່ກັນໄປ

8. ປະເມີນຈາກບໍລິບົດທີ່ຫຼາກຫຼາຍ ຄູຈຳເປັນຕ້ອງປະເມີນພັດທະນາການແລະການຮຽນຮູ້ຂອງເດັກຈາກບໍລິບົດທີ່ຫຼາກຫຼາຍ ເພື່ອໃຫ້ໄດ້ຜົນການປະເມີນທີ່ກົງຕາມສະພາບຈິງຂອງເດັກ ສະຫຼຸບຈາກບໍລິບົດໃດບໍລິບົດໜຶ່ງອາດເຮັດໃຫ້ບໍ່ໄດ້ຜົນການປະເມີນທີ່ແທ້ຈິງເນື່ອງຈາກເດັກອາດຈະເຮັດກິດຈະກຳໃນບໍລິບົດໜຶ່ງໄດ້ດີກວ່າອີກ

9. ປະເມີນເດັກເປັນລາຍບຸກຄົນ ການປະເມີນພັດທະນາການ ແລະ ການຮຽນຮູ້ຂອງເດັກ ຄູຕ້ອງໝັ່ນສັງເກດເດັກແຕ່ລະຄົນ ເພື່ອໃຫ້ຮູ້ຈັກເດັກເປັນລາຍບຸກຄົນ ການປະເມີນເປັນລາຍບຸກຄົນອີກຈາກຈະເຮັດໃຫ້ຄູຮູ້ຄວາມກ້າວໜ້າຂອງເດັກແລ້ວ ຍັງຊ່ວຍໃຫ້ຄູຮູ້ຄວາມສົນໃຈ ທັດສະນະຄະຕິ ຄວາມຄິດ ແລະ ອື່ນໆ ກ່ຽວກັບເດັກ ຊຶ່ງເປັນສ່ວນສຳຄັນໃນການວາງແຜນການຊ່ວຍເຫຼືອສະໜັບສະໜູນເດັກໄດ້ຢ່າງເໝາະສົມອີກດ້ວຍ

10. ໃຫ້ເດັກມີໂອກາດປະເມີນຕົນເອງ ເດັກຄວນໄດ້ຮັບການກະຕຸ້ນໃຫ້ຄິດເພື່ອປະເມີນຄວາມກ້າວໜ້າຂອງຕົນເອງ ການທີ່ເດັກມີສ່ວນຮ່ວມໃນການຕິດຕາມຄວາມກ້າວໜ້າຂອງຕົນເອງ ຈະຊ່ວຍໃຫ້ເດັກພູມໃຈ ແລະ ເກີດຄວາມຕ້ອງການທີ່ຈະພັດທະນາຕົນເອງຕໍ່ໄປ ໂດຍຄູອາດນຳແຟ້ມສະສົມງານຂອງເດັກມາໃຊ້ໃນການໃຫ້ເດັກໄດ້ມີສ່ວນຮ່ວມໃນການປະເມີນຕົນເອງ

## 27. ວິທີການປະເມີນພັດທະນາການ ແລະ ການຮຽນຮູ້ຂອງເດັກກ່ອນໄວຮຽນ

ການປະເມີນພັດທະນາການ ແລະ ການຮຽນຮູ້ຂອງເດັກກ່ອນໄວຮຽນຄວນເປັນການປະເມີນຢ່າງບໍ່ເປັນທາງການ ໂດຍວິທີການທີ່ເໝາະສົມໃນການປະເມີນພັດທະນາການ ແລະ ການຮຽນຮູ້ຂອງເດັກກ່ອນໄວຮຽນໄດ້ແກ່:

1. ເກັບລວບລວມຂໍ້ມູນ ຄູຄວນວາງແຜນການເກັບລວບລວມຂໍ້ມູນຄວບຄູ່ກັບການຈັດປະສົບການ ໂດຍເປັນການວາງແຜນລ່ວງໜ້າ ທັງນີ້ ວິທີການເກັບລວບລວມຂໍ້ມູນກ່ຽວກັບພັດທະນາການ ແລະ ການຮຽນຮູ້ຂອງ

ເດັກກ່ອນໄວຮຽນມີດັ່ງນີ້

1.1 ການສັງເກດ ແລະ ບັນທຶກພຶດຕິກຳ ຫຼື ຄຳເວົ້າຂອງເດັກ ຄູຄວນໃຊ້ເວລາໃນການສັງເກດ ແລະ ເບິ່ງເດັກ ເພື່ອໃຫ້ຮູ້ວ່າເດັກແຕ່ລະຄົນມີຈຸດເດັ່ນ ຄວາມຕ້ອງການ ຄວາມສົນໃຈ  ແລະ ຕ້ອງການຄວາມຊ່ວຍເຫຼືອໃນເລື່ອງໃດ ທັງນີ້ ຄູຕ້ອງກຳນົດເວລາ ແນວທາງທີ່ຊັດເຈນ ແລະ ຈົດບັນທຶກໄວ້ເພື່ອນຳມາໃຊ້ໃນວິເຄາະ ແລະ ສະຫຼຸບທັງນີ້ ການສັງເກດ ແລະ ບັນທຶກພຶດຕິກຳ ຫຼື ຄຳເວົ້າຂອງເດັກອາດເຮັດໄດ້ດັ່ງຕົວຢ່າງຕໍ່ໄປນີ້:

**(ຕົວຢ່າງ 1)**

**ແບບບັນທຶກພຶດຕິກຳເດັກແບບສຳຫຼວດລາຍການ**

ນາງ ຟ້າ  ຊັ້ນອະນຸບານປີທີ່ 2

| ລາຍການ | | ເທື່ອທີ 1 | ເທື່ອທີ 2 | ເທື່ອທີ 3 | ເທື່ອທີ 4 |
|---|---|---|---|---|---|
| | | 11 ມ.ຢ. 50 | 9 ກ.ຄ. 50 | 13 ສ.ຄ. 50 | 9 ກ.ຄ. 50 |
| ຄວາມຮູ້ກ່ຽວກັບການໃຊ້ໜັງສື | ຖືໜັງສືຖືກດ້ານ ຫົວບໍ່ກັບ | P | P | P | P |
| | ຊີ້ຊື່ເລື່ອງຂອງໜັງສືໄດ້ | O | P | P | P |
| | ພິກໜ້າໜັງສືຈາກໜ້າທຳອິດໄປໜ້າຫຼັງ | P | P | P | P |
| | ຊີ້ຄຳຂະນະທີ່ອ່ານ ຫຼື ເບິ່ງຕາມຕົວໜັງສື | O | O | P | P |
| | ຊີ້ຈຸດເລີ່ມຕົ້ນຂອງຂໍ້ຄວາມ | O | O | O | P |
| | ແລະ ອື່ນ ໆ | | | | |

1.2 ການສົນທະນາກັບເດັກ ຄູສາມາດໃຊ້ການສົນທະນາກັບເດັກໄດ້ທັງແບບລາຍບຸກຄົນ ແລະ ເປັນກຸ່ມຢ່າງສອດຄ່ອງກັບກິດຈະກຳປະຈຳວັນ ເພື່ອປະເມີນຄວາມສາມາດໃນການສະແດງຄວາມຄິດເຫັນ ພັດທະນາການດ້ານການໃຊ້ພາສາ ແລະ ອື່ນ ໆ ເຊັ່ນ ເມື່ອຄູເລົ່ານິທານໃຫ້ເດັກຟັງແລ້ວ ຄູອາດຖາມຄຳຖາມໃຫ້ເດັກສະແດງຄວາມຄິດເຫັນຈາກເລື່ອງທີ່ຟັງ ເພື່ອໃຫ້ຮູ້ຄວາມຄິດຂອງເດັກ ທັງນີ້ ຄູຄວນຈົດບັນທຶກຄຳເວົ້າຂອງເດັກໄວ້ເພື່ອການວິເຄາະ ແລະ ປັບການຈັດປະສົບການໃຫ້ເໝາະສົມຕໍ່ໄປ ໃນກໍລະນີທີ່ຕ້ອງການສົນທະນາກັບເດັກເປັນລາຍບຸກຄົນ ຄູຄວນເວົ້າລົມໃນສະພາວະທີ່ເໝາະສົມ ບໍ່ເຮັດໃຫ້ເດັກຄຽດ ຫຼື ເກີດຄວາມວິຕົກກັງວົນ

1.3 ການເກັບຕົວຢ່າງຜົນງານທີ່ສະແດງຄວາມກ້າວໜ້າຂອງເດັກ ເປັນວິທີການທີ່ຄູລວບລວມ ແລະ ຈັດລະບົບຕົວຢ່າງຜົນງານທີ່ສະແດງຄວາມກ້າວໜ້າຂອງເດັກຈາກໃບງານທີ່ເດັກສ້າງຂຶ້ນໃນກິດຈະກຳປະຈຳວັນ ຄູຄວນກຳນົດຈຸດໝາຍທີ່ຊັດເຈນໃນການເກັບລວບລວມຜົນງານ ເຊັ່ນ:  ເກັບຕົວຢ່າງຜົນງານການຕັດເຈ້ຍທີ່ສະແດງການປ່ຽນແປງພັດທະນາການດ້ານການຕັດເຈ້ຍຂອງເດັກເດືອນລະ 1ໃບງານ ແລ້ວນຳມາຈັດລວບລວມໄວ້ຢ່າງເປັນລະ

ບົບເປັນຕົ້ນ ການເກັບສະສົມຜົນງານຢ່າງຕໍ່ເນື່ອງນີ້ ຄູຕ້ອງປະເມີນວ່າຜົນງານແຕ່ລະຄັ້ງສະແດງຄວາມກ້າວໜ້າຂອງເດັກຢ່າງໃດ ບໍ່ແມ່ນການນຳມາເກັບທັງໝົດກັນໄວ້ເສຍໆ ຄູອາດໃຫ້ເດັກມີສ່ວນຮ່ວມໃນການເລືອກ ແລະຈັດເກັບຜົນງານ ຄູສາມາດນຳຜົນງານທີ່ຈັດລວບລວມໄວ້ຢ່າງເປັນລະບົບມາໃຊ້ໃນການສື່ສານກັບຜູ້ປົກຄອງໃຫ້ຮັບຮູ້ກ່ຽວກັບຄວາມກ້າວໜ້າຂອງເດັກດ້ວຍ

ວິທີການລວບລວມຂໍ້ມູນເພື່ອການປະເມີນພັດທະນາການ ແລະ ການຮຽນຮູ້ຂອງເດັກທີ່ດີຕ້ອງໃຊ້ວິທີການທີ່ຫຼາກຫຼາຍ ບໍ່ແມ່ນວິທີໃດວິທີໜຶ່ງ ໂດຍໃຫ້ຜູ້ທີ່ມີສ່ວນກ່ຽວຂ້ອງ ເຊັ່ນ ພໍ່ແມ່ ຫຼື ຄູຜູ້ຊ່ວຍມີສ່ວນຮ່ວມໃນການລວບລວມຂໍ້ມູນດ້ວຍ ເພາະວິທີການແຕ່ລະວິທີຈະມີຈຸດແຂງ ແລະ ຈຸດອ່ອນທີ່ແຕກຕ່າງກັນມີຄວາມເໝາະສົມກັບລັກສະນະຂອງຂໍ້ມູນທີ່ແຕກຕ່າງກັນ ໂດຍວິທີການທີ່ນຳສະເໜີຂ້າງຕົ້ນເປັນວິທີທີ່ຄູຕ້ອງຝຶກຝົນຈົນມີທັກສະໃນການສັງເກດເດັກ ເວົ້າລົມກັບເດັກ ແລະ ພໍ່ແມ່ຢ່າງເໝາະສົມ ທັງໝົດທັງມີຄວາມໄວຕໍ່ສິ່ງທີ່ຄວນບັນທຶກຫຼື ເກັບຕົວຢ່າງຫາກຄູມີທັກສະເຫຼົ່ານີ້ກໍຈະເຮັດໃຫ້ການປະເມີນກົງຕາມສະພາບຈິງຍິ່ງຂຶ້ນ

2. ວິເຄາະ ແລະ ຈັດເຮັດບັນທຶກຂໍ້ມູນຂອງເດັກ ຄູຄວນນຳຂໍ້ມູນທີ່ເກັບລວບລວມໄວ້ມາວິເຄາະ ແລະ ຈັດເຮັດບັນທຶກຂໍ້ມູນຂອງເດັກ ທັງໃນລັກສະນະຂອງບັນທຶກຂໍ້ມູນເດັກລາຍບຸກຄົນ ແລະ ບັນທຶກຂໍ້ມູນເດັກທັງຊັ້ນຮຽນດັ່ງນີ້:

2.1 ບັນທຶກຂໍ້ມູນເດັກລາຍບຸກຄົນ ການເຮັດບັນທຶກຂໍ້ມູນເດັກລາຍບຸກຄົນຈະຊ່ວຍໃຫ້ຄູຮູ້ຈັກຄວາມສາມາດທີ່ແທ້ຈິງຂອງເດັກ ເຮັດໃຫ້ຄູຕິດຕາມຄວາມກ້າວໜ້າຂອງເດັກໄດ້ຢ່າງຕໍ່ເນື່ອງ ອີກທັງຍັງຊ່ວຍໃຫ້ຄູປະເມີນເດັກຢ່າງຄວບຄຸມທຸກລາຍການປະເມີນ ຄູທີ່ເຮັດບັນທຶກຂໍ້ມູນເດັກເປັນລາຍບຸກຄົນຈະສາມາດຊ່ວຍສົ່ງເສີມຄວາມສາມາດຂອງເດັກຫຼືໃຫ້ຄວາມຊ່ວຍເຫຼືອເດັກໄດ້ຢ່າງເໝາະສົມ

2.2 ບັນທຶກຂໍ້ມູນເດັກທັງຊັ້ນຮຽນ ການເຮັດບັນທຶກຂໍ້ມູນເດັກທັງຊັ້ນຮຽນຊ່ວຍໃຫ້ຄູຮູ້ວ່າເດັກໃນຫ້ອງຮຽນທີ່ຮັບຜິດຊອບມີຄວາມສາມາດ ຫຼື ມີພັດທະນາການໃນແຕ່ລະດ້ານເປັນຢ່າງໃດ ສົ່ງຜົນໃຫ້ຄູສາມາດອອກແບບການຈັດປະສົບການໄດ້ເໝາະສົມກັບເດັກໃນຊັ້ນຮຽນຫຼາຍຍິ່ງຂຶ້ນ ອີກທັງຍັງສະແດງໃຫ້ເຫັນຄວາມກ້າວໜ້າຂອງເດັກທັງຊັ້ນຮຽນ ການສະຫຼຸບເຊັ່ນນີ້ຄວນເຮັດເປັນໄລຍະຢ່າງຕໍ່ເນື່ອງເພື່ອໃຫ້ສາມາດນຳມາໃຊ້ໄດ້ຢ່າງເໝາະສົມ ທັງນີ້ ການປະເມີນພັດທະນາການ ແລະ ການຮຽນຮູ້ທີ່ດີຕ້ອງປະສົມປະສານເປັນສ່ວນດຽວກັນກັບການຈັດປະສົບການ ການປະເມີນຊ່ວຍໃຫ້ຄູ ຮູ້ພັດທະນາການຂອງເດັກ ເຂົ້າໃຈເດັກ ແລະ ຮູ້ວ່າຄວນເຮັດຢ່າງໃດຈຶ່ງຈະສາມາດສົ່ງເສີມພັດທະນາການ ແລະ ການຮຽນຮູ້ຂອງເດັກໄດ້ຢ່າງເຕັມທີ່ກ່ອນໄວຮຽນຈຶ່ງຄວນສຶກສາວິທີການ ເຄື່ອງມື ແລະ ເກນການປະເມີນທີ່ເໝາະສົມກັບພັດທະນາການ ແລະ ການຮຽນຮູ້ຂອງເດັກກ່ອນໄວຮຽນວາງແຜນການປະເມີນໃຫ້ເໝາະສົມ ໃຊ້ຜົນການປະເມີນໃນການສົ່ງເສີມພັດທະນາການ ແລະ ການຮຽນຮູ້ຂອງເດັກ ການປະເມີນຈຶ່ງຖືເປັນສ່ວນໜຶ່ງຂອງເຄື່ອງມືທີ່ຊ່ວຍເຮັດໃຫ້ຄຣູສາມາດຈັດປະສົບການຢ່າງມີຄຸນນະພາບ

## 28. ແນວຄິດການປະເມີນພັດທະນາການເດັກກ່ອນໄວຮຽນ

ການປະເມີນພັດທະນາການເປັນອົງປະກອບທີ່ສຳຄັນໃນການຈັດປະສົບການ ( Mcafee ແລະ Leong, 1994) ໄດ້ສະຫຼຸບວັດຖຸປະສົງຂອງການປະເມີນພັດທະນາການເດັກກ່ອນໄວຮຽນດັ່ງນີ້

1) ການປະເມີນຜົນພັດທະນາການເດັກກ່ອນໄວຮຽນເກີດຂຶ້ນເນື່ອງຈາກຄວາມຕ້ອງການທີ່ຈະເຂົ້າໃຈພັດທະນາການ ແລະ ຄວາມກ້າວໜ້າຂອງເດັກ

2) ຂໍ້ມູນທີ່ໄດ້ຈາກການປະເມີນຜົນພັດທະນາການເດັກກ່ອນໄວຮຽນຈະມີປະໂຫຍດໃນການວາງແຜນການຮຽນການສອນ ແລະ ການຕັດສິນໃຈຕ່າງໆ ທີ່ສົ່ງຜົນຕໍ່ເດັກກ່ອນໄວຮຽນ

3) ການປະເມີນຜົນເດັກກ່ອນໄວຮຽນຈະຊ່ວຍໃຫ້ຮູ້ເຖິງເດັກ ເຊິ່ງອາດຕ້ອງການຄວາມຊ່ວຍເຫຼືອເປັນພິເສດ (Special help)

4) ການປະເມີນຜົນພັດທະນາການເດັກກ່ອນໄວຮຽນມີຈຸດປະສົງເພື່ອເກັບລວບລວມຂໍ້ມູນຕ່າງໆ ກ່ຽວກັບເດັກໂດຍມີການລາຍງານຜົນ ແລະ ສື່ສານໃຫ້ພໍ່ແມ່ ຜູ້ປົກຄອງ ແລະ ບຸກຄົນທີ່ກ່ຽວຂ້ອງຮູ້ ວິທີການປະເມີນພັດທະນາການເດັກກ່ອນໄວຮຽນຄວນໃຊ້ວິທີການປະເມີນຕາມສະພາບຈິງ ນັ້ນຄື ການປະເມີນພັດທະນາການ ເປັນລາຍບຸກຄົນຜ່ານຊີວິດປະຈຳວັນຂອງເດັກ ນັກການສຶກສາທັງ (ບຸດບົງ ຕັນຕິວົງ ແລະ ສະສິລັກ ຂະຫຍັນກິດ, 2561) ແລະ ຫຼັກສູດການສຶກສາກ່ອນໄວຮຽນ ພຸທະສັກລາດ 2560 ໃຫ້ຄວາມສຳຄັນກັບການປະເມີນພັດທະນາການຕາມສະພາບຈິງ ຕ້ອງຢູ່ເທິງພື້ນຖານຂອງຫຼັກການປະເມີນ ເຊິ່ງຖືໄດ້ວ່າເປັນທັກສະສຳຄັນຍິ່ງທີ່ຜູ້ກ່ຽວຂ້ອງໃນການປະເມີນພັດທະນາການເດັກກ່ອນໄວຮຽນຈະຕ້ອງມີຄວາມຮູ້ ຄວາມເຂົ້າໃຈ ນຳສູ່ການປະຕິບັດໄດ້ຈິນເກີດເປັນທັກສະ ນອກຈາກນີ້ຍັງນຳໄປສູ່ການສ້າງເຄື່ອງມືການປະເມີນພັດທະນາການຕາມສະພາບຈິງທີ່ເໝາະສົມກັບເດັກກ່ອນໄວຮຽນທັງນີ້ສະຫຼຸບໄດ້ວ່າ ຫຼັກການປະເມີນພັດທະນາການຕາມສະພາບຈິງ ປະກອບດ້ວຍ

1) ປະເມີນຢ່າງເປັນລວມຄວບຄຸມພັດທະນາການທຸກດ້ານ

2) ຄຳນຶງເຖິງຄວາມແຕກຕ່າງລະຫວ່າງບຸກຄົນ

3) ສະພາບການປະເມີນຕ້ອງມີລັກສະນະເຊັ່ນດຽວກັບການປະຕິບັດກິດຈະກຳປະຈຳວັນຂອງເດັກໂດຍຈັດການປະເມີນໃຫ້ເປັນສ່ວນໜຶ່ງຂອງກິດຈະກຳປົກກະຕິຕາມຕາຕະລາງກິດຈະກຳປະຈຳວັນປະເມີນພັດທະນາການຢ່າງຕໍ່ເນື່ອງ

4) ການປະເມີນຢ່າງເປັນລະບົບ ມີການປະເມີນເປັນຂັ້ນຕອນ

5) ເຄື່ອງມືປະເມີນມີຄວາມຫຼາກຫຼາຍ ສອດຄ່ອງກັບກິດຈະກຳ ຈຸດປະສົງທີ່ຈະປະເມີນ ແລະ ບໍ່ໃຊ້ແບບທົດສອບ ທັງນີ້ວິທີການປະເມີນພັດທະນາການຈະມີທັງວິທີທາງປະລິມານ ແລະ ວິທີທາງຄຸນນະພາບ ສະແດງວ່າ ເຄື່ອງມືໃນການປະເມີນພັດທະນາການຕ້ອງສະທ້ອນທັງທາງປະລິມານ ແລະທາງຄຸນນະພາບ ເຄື່ອງມືປະເມີນພັດທະນາການທາງປະລິມານ ເຊັ່ນ: ແບບກວດສອບຣາຍການ ແບບປະເມີນໂດຍໃຊ້ເກນການປະເມີນແບບ Rubric Scoring ເຄື່ອງມືປະເມີນພັດທະນາການທາງຄຸນນະພາບ ເຊັ່ນ: ແບບສຳພາດ ,ແບບສັງເກດ ,ແບບບັນທຶກຄຳເວົ້າເດັກ, ແຟ້ມສະສົມງານ .ການນີ້ ຈຶ່ງປະຕິເສດບໍ່ໄດ້ວ່າ ຄູຜູ້ສອນເປັນຜູ້ມີບົດບາດສຳຄັນຍິ່ງທີ່ຈະຕ້ອງສຶກສາ ແນວຄິດທິດສະດີທີ່ກ່ຽວຂ້ອງກັບການປະເມີນພັດທະນາການຕາມສະພາບຈິງໃນເດັກກ່ອນໄວຮຽນ ເຊິ່ງຈະຕ້ອງສອດຄ່ອງກັບກິດຈະກຳທີ່ຈັດ

ໃນການປະເມີນພັດທະນາການຂອງເດັກກ່ອນໄວຮຽນ ເມື່ອເດັກຮຽນທີ່ບ້ານ ແລະ ຜູ້ປົກຄອງຈະຕ້ອງມີສ່ວນຮ່ວມໃນການປະເມີນພັດທະນາການ ດັ່ງຈະເຫັນໄດ້ຈາກຄວາມສຳຄັນທີ່ກ່າວມາຂ້າງຕົ້ນ ເພາະໂດຍສ່ວນໃຫຍ່ພໍ່ແມ່ ຜູ້ປົກຄອງຕ້ອງການໃຫ້ມີການປະເມີນພັດທະນາການ ເນື່ອງຈາກຈະໄດ້ຮູ້ວ່າລູກຂອງຕົນໄດ້ຮຽນຮູ້ເປັນຢ່າງໃດ ມີທັກສະ ຄວາມຮູ້ຄວາມເຂົ້າໃຈຫຼາຍນ້ອຍພຽງໃດ ຈະສາມາດຊ່ວຍເຫຼືອ ສົ່ງເສີມ ພັດທະນາໃນທິດທາງໃດໄດ້ດ້ວຍເພື່ອໃຫ້ລູກໄດ້ມີພັດທະນາການທີ່ດີ ເປັນໄປຕາມໄວ ໄດ້ຮັບການພັດທະນາຢ່າງເຕັມສັກກາຍະພາບ ດັ່ງນັ້ນຄູຜູ້ສອນຈະຕ້ອງອອກແບບ ແລະ ສ້າງເຄື່ອງມືການປະເມີນໃຫ້ເໝາະສົມສອດຄ່ອງກັບກິດຈະກຳການຈັດປະສົບການ

ທີ່ໃຫ້ຜູ້ປົກຄອງຈັດກັບເດັກເມື່ອຮຽນຮູ້ທີ່ບ້ານ ວິທີການປະເມີນພັດທະນາການ ເຄື່ອງມືໃນການປະເມີນພັດທະນາການກໍຕ້ອງສອດຄ່ອງກັບກິດຈະກໍາ ການຈັດປະສົບການ ຄູຜູ້ສອນ ແລະ ພໍ່ແມ່ ຜູ້ປົກຄອງ ມີບົດບາດສໍາຄັນ ດັ່ງນີ້:

**ກ. ບົດບາດຄູຜູ້ສອນ**

ການອອກແບບເຄື່ອງມືການປະເມີນພັດທະນາການນັ້ນ ຄູຜູ້ສອນຈະຕ້ອງດໍາເນີນການອອກແບບ ແລະ ສ້າງເຄື່ອງມືການປະເມີນພັດທະນາການໃຫ້ກັບຜູ້ປົກຄອງເພື່ອນໍາໄປໃຊ້ ໂດຍສາມາດປະຕິບັດໄດ້ ດັ່ງນີ້:

1) ສຶກສາແນວຄິດ ທິດສະດີ ທີ່ກ່ຽວຂ້ອງກັບການປະເມີນພັດທະນາການ ຫຼັກການສ້າງເຄື່ອງມືການປະເມີນພັດທະນາການຕາມສະພາບຈິງ

2) ສຶກສາ ເຮັດຄວາມເຂົ້າໃຈຫຼັກສູດການສຶກສາກ່ອນໄວຮຽນ ພຸດທະສັກກະລາດ 2560 ຫຼັກສູດສະຖານສຶກສາກ່ອນໄວຮຽນຂອງໂຮງຮຽນຕົນເອງທີ່ກ່ຽວຂ້ອງກັບຫຼັກການປະເມີນພັດທະນາການ ຕົວບົ່ງຊີ້ ສະພາບທີ່ຖືກຕ້ອງຕາມຈຸດປະສົງ ແລະ ຄອບຄຸມພັດທະນາການທຸກດ້ານ

3) ວິເຄາະແຜນການຈັດປະສົບການ ເພື່ອເຮັດຄວາມເຂົ້າໃຈໃນໜ່ວຍ ຫຼື ກິດຈະກໍາທີ່ຈັດປະສົບການໃນອາທິດນັ້ນໆ ເພື່ອນໍາສູ່ການເຮັດຄວາມເຂົ້າໃຈວັດຖຸປະສົງ ກິດຈະກໍາການຈັດປະສົບການ ຕົວບົ່ງຊີ້ ຄຸນລັກສະນະທີ່ຖືຕາມຈຸດປະສົງ ເຄື່ອງມືການວັດ ແລະ ປະເມີນຜົນທີ່ສອດຄ່ອງກັນໃນທຸກອົງປະກອບຂອງແຜນ

4) ສຶກສາ ວິເຄາະຂໍ້ມູນພື້ນຖານທີ່ກ່ຽວຂ້ອງກັບຄວາມຮູ້ ຄວາມສາມາດຂອງຜູ້ປົກຄອງໃນເລື່ອງການຈັດປະສົບການ ແລະ ການປະເມີນພັດທະນາການຕາມສະພາບຈິງ ເພື່ອນໍາໄປເປັນຂໍ້ມູນພື້ນຖານໃນການອອກແບບແລະສ້າງເຄື່ອງມືການປະເມີນພັດທະນາການ

5) ອອກແບບ ແລະ ສ້າງເຄື່ອງມືການປະເມີນພັດທະນາການທີ່ສອດຄ່ອງກັບແຜນການຈັດປະສົບການ ຄອບຄຸມ 6 ກິດຈະກໍາຫຼັກ ໄດ້ແກ່: ກິດຈະກໍາເຄື່ອນໄຫວ ແລະ ຈັງຫວະ, ກິດຈະກໍາວົງມົນ ,ກິດຈະກໍາສິລະປະສ້າງສັນ, ກິດຈະກໍາເສລີ ຫຼື ຫລິ້ນຕາມມຸມ, ກິດຈະກໍາກາງແຈ້ງ ແລະ ກິດຈະກໍາເກມການສຶກສາ.

6) ກວດສອບຄຸນນະພາບຂອງເຄື່ອງມືການປະເມີນພັດທະນາການໂດຍຜູ້ຊ່ຽວຊານ ທັງນີ້ອາດເປັນຄູວິຊາການຫົວໜ້າສາຍຊັ້ນ, ສຶກສານິເທດ, ເຊິ່ງແຕ່ລະທ່ານມີຄວາມຮູ້ຄວາມສາມາດ ຄວາມຊ່ຽວຊານໃນເລື່ອງການສຶກສາກ່ອນໄວຮຽນ ການວັດຜົນປະເມີນຜົນໃນ]ະດັບກ່ອນໄວຮຽນ

7) ສື່ສານເຮັດຄວາມເຂົ້າໃຈກັບຜູ້ປົກຄອງໃນການນໍາເຄື່ອງມືປະເມີນພັດທະນາການໄປໃຊ້ກັບເດັກກ່ອນໄວຮຽນໂດຍອະທິບາຍຄວບຄູ່ກັບແຜນການຈັດປະສົບການ ຜ່ານ 6 ກິດຈະກໍາຫຼັກ ອາດເປັນຄູ່ມື ແນະນໍາແນວທາງການຈັດປະສົບການໃຫ້ກັບຜູ້ປົກຄອງ ທັງໝົດເຖິງເຄື່ອງມືປະເມີນພັດທະນາການທີ່ສອດຄ່ອງກັບແຕ່ລະກິດຈະກໍາ ເຊິ່ງຈະໄດ້ນໍາສະເໜີໃນລໍາດັບຕໍ່ໄປ

8) ນໍາຜົນການປະເມີນຈາກຜູ້ປົກຄອງມາວິເຄາະ ແປຜົນ

**ຂ. ບົດບາດຂອງຜູ້ປົກຄອງ**

1) ທໍາຄວາມເຂົ້າໃຈໃນກິດຈະກໍາຕ່າງໆ ທີ່ຕ້ອງຈັດປະສົບການທີ່ບ້ານ ຈາກຄູຜູ້ສອນກ່ອນໄວຮຽນໂດຍສຶກສາລາຍລະອຽດຂອງກິດຈະກໍາວ່າຕ້ອງຈັດກິດຈະກໍາໃດດ້ວຍ ເພື່ອນໍາສູ່ການປະເມີນພັດທະນາການ

2) ສຶກສາ ທໍາຄວາມເຂົ້າໃຈ ເຄື່ອງມືການປະເມີນພັດທະນາການທີ່ຄູຜູ້ສອນທີ່ສ້າງໄວ້ສໍາລັບໃຫ້ຜູ້ປົກຄອງປະເມີນ ທັງເຄື່ອງມືທີ່ເປັນທາງປະລິມານ ແລະ ເຄື່ອງມືທາງຄຸນນະພາບ

3) ຈັດປະສົບການໃຫ້ກັບເດັກກ່ອນໄວຮຽນຜ່ານ 6 ກິດຈະກໍາຫຼັກ ພ້ອມທັງປະເມີນພັດທະນາການຕາມເຄື່ອງມືທີ່ຄູຜູ້ສອນກ່ອນໄວຮຽນໄດ້ສ້າງຂຶ້ນເພື່ອໃຫ້ຜູ້ປົກຄອງໄດ້ນໍາໄປໃຊ້

4) ນໍາຜົນການປະເມີນສົ່ງຕໍ່ໃຫ້ຄູຜູ້ສອນ ສື່ສານທໍາຄວາມເຂົ້າໃຈກັບຄູຜູ້ສອນເພື່ອໃຫ້ຮູ້ເຖິງພັດທະນາການຄວາມກ້າວໜ້າຂອງເດັກກ່ອນໄວຮຽນເພື່ອນໍາຂໍ້ມູນມາສົ່ງເສີມ ພັດທະນາ ຫຼື ແກ້ບັນຫາເດັກຕາມຜົນການປະເມີນຕໍ່ໄປ

## 2.2 ງານວິໄຈທີ່ກ່ຽວຂ້ອງ

ທ່ານ ປທ ນາງ ລິດສະໄໝ ດວງມາລາ ພ້ອມທີມງານ( 2020:23)ໄດ້ສຶກສາຄົ້ນຄວ້າກ່ຽວກັບຫົວຂໍ້ວິໄຈ ການປະເມີນຕິດຕາມຜູ້ຈົບການສຶກສາຫຼັກສູດສ້າງຄູອະນຸບານລະດັບປະລິນຍາຕີວິທະຍາໄລຄູສາລະວັນ. ການສຶກສາໃນຄັ້ງນີ້ແມ່ນມີຈຸດປະສົງ: 1) ເພື່ອປະເມີນທັກສະແລະຄວາມສາມາດຂອງນັກສຶກສາທີ່ຈົບຫຼັກສູດສ້າງຄູອະນຸບານລະດັບປະລິນຍາຕີທີ່ວິທະຍາໄລຄູສາລະວັນ; 2) ເພື່ອສຶກສາສະຖານະພາບການຈ້າງວຽກແລະການເຮັດວຽກຂອງນັກສຶກສາທີ່ຈົບຫຼັກສູດສ້າງຄູອະນຸບານລະດັບປະລິນຍາຕີທີ່ວິທະຍາໄລຄູສາລະວັນ; 3) ເພື່ອປະເມີນຄວາມເພິ່ງພໍໃຈຂອງຜູ້ຈ້າງງານທີ່ມີຕໍ່ທັກສະແລະຄວາມສາມາດນັກສຶກສາທີ່ຈົບຫຼັກສູດສ້າງຄູອະນຸບານ ລະດັບປະລິນຍາຕີວິທະຍາໄລຄູສາລະວັນ

ກຸ່ມເປົ້າໝາຍ (target Population)ໄດ້ແກ່: ນັກສຶກສາທີ່ຈົບຫຼັກສູດສ້າງຄູອະນຸບານ ລະດັບປະລິນຍາຕີ ທີ່ວິທະຍາໄລຄູສາລະວັນ ປີ 2020 ຈຳນວນ 88 ຄົນ ແລະ ຜູ້ຈ້າງງານຕໍ່ຜູ້ຈົບການສຶກສາ ຫຼັກສູດສ້າງຄູອະນຸບານລະດັບປະລິນຍາຕີທີ່ວິທະຍາໄລຄູສາລະວັນປີ 2020 ຈຳນວນ 17 ທ່ານ. ການດຳເນີນວິໄຈຄັ້ງນີ້ໄດ້ດຳເນີນເປັນໄລຍະເວລາ 3 ເດືອນ ແລະ ໄດ້ສ້າງແບບສອບຖາມອອນລາຍແກ່ຜູ້ຈົບການສຶກສາ ຫຼັກສູດສ້າງຄູອະນຸບານ ລະດັບປະລິນຍາຕີ ຈຳນວນ 32 ຂໍ້ ແລະ ແບບສອບຄວາມເພິ່ງພໍໃຈຂອງຜູ້ຈ້າງງານຕໍ່ຜູ້ຈົບການສຶກສາ ຈຳນວນ 16 ຂໍ້ ໂດຍຮ່ວມມືກັບ ອົງການ UNESCO Bangkok, ທີມງານວິໄຈຈາກມະຫາວິທະຍາໄລບູລະພາ, ກົມສ້າງຄູ ແລະ ວິທະຍາໄລຄູທັງ 7 ແຫ່ງ.

ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ: ການຊອກຫາຄ່າຄວາມຖີ່(Frequency), ຮ້ອຍລະ (Percentage), ຄ່າສະເລ່ຍ ($\mu$), ຄ່າບ່ຽງເບນມາດຕະຖານ ($\sigma$) ແລະ ຂະໜາດຄວມສຳພັນ (Correlation) ເຊິ່ງຜົນການວິເຄາະພົບວ່າ: ຜົນການປະເມີນທັກສະ ແລະ ຄວາມສາມາດຂອງຜູ້ຈົບການສຶກສາ ທີ່ໄດ້ຮັບລະຫວ່າງສຶກສາ, ຄວາມເພິ່ງພໍໃຈຂອງຜູ້ຈົບການສຶກສາຕໍ່ປະສົບການຮຽນຮູ້

ຜູ້ຈົບການສຶກສາມີຄວາມເຫັນວ່າທັກສະ ແລະ ຄວາມສາມາດທີ່ໄດ້ຮັບໃນລະຫວ່າງສຶກສາ ກັບ ທັກສະແລະຄວາມສາມາດທີ່ໄດ້ຮັບຈາກການເຮັດວຽກ ໃນພາບລວມ ຢູ່ໃນລະດັບຫຼາຍ ເປັນຕົ້ນແມ່ນດ້ານຈັນຍາບັນທາງດ້ານວິຊາຊີບຄູ ແລະ ຮັກອາຊີບແພງເດັກ ຢູ່ໃນລະດັບຫຼາຍສຸດ ($\mu$= 4.50, $\sigma$ = 0.66) ແລະ ຈາກການເຮັດວຽກຢູ່ໃນລະດັບຫຼາຍ ($\mu$= 4.65, $\sigma$ = 0.48) ໂດຍສອດຄ່ອງຄວາມຕ້ອງການຂອງຜູ້ຈ້າງງານ ຢູ່ໃນລະດັບຫຼາຍ($\mu$= 4.59, $\sigma$ = 0.61).

ຜູ້ຈົບການສຶກສາມີຄວາມເພິ່ງພໍໃຈຫຼາຍທີ່ສຸດຕໍ່ປະສົບການການຮຽນຮູ້, ສິ່ງອຳນວຍຄວາມສະດວກ ແລະ ຕໍ່ຫຼັກສູດສ້າງຄູອະນຸບານ ໃນພາບລວມ ຢູ່ໃນລະດັບຫຼາຍເປັນຕົ້ນຄວາມເພິ່ງພໍໃຈຕໍ່ດ້ານການຮຽນຮູ້: ຄູອາຈານມີຄວາມເປັນແບບຢ່າງທີ່ດີໃນການປະພຶດ ຢູ່ໃນລະດັບຫຼາຍ ($\mu$= 4.34, $\sigma$ = 0.67), ສິ່ງອຳນວຍຄວາມສະດວກ: ຫ້ອງສະມຸດ ແລະ ເອກະສານພຽງພໍຕໍ່ການຮຽນ ( $\mu$= 4.16, $\sigma$ = 0.42),ຫຼັກສູດສ້າງຄູອະນຸບານ: ຫຼັກສູດທັນຍຸກທັນສະໄໝກັບສະພາບປັດຈຸບັນ ($\mu$= 4.08, $\sigma$ = 0.66 ) .ຄວາມເພິ່ງພໍໃຈຂອງຜູ້ຈົບການສຶກສາ ໃນການນຳຄວາມຮູ້ຈາກຫຼັກສູດໄປໃຊ້ ຢູ່ໃນລະດັບຫຼາຍ ເປັນຕົ້ນ ດ້ານຄວາມຮູ້ ແລະ ທັກສະທີ່ໄດ້ຈາກຫຼັກສູດມີປະໂຫຍດຕໍ່ວຽກງານທີ່ກຳລັງປະຕິບັດຢູ່ຫຼາຍໜ້ອຍພຽງໃດ? ໂດຍຢູ່ໃນລະດັບຫຼາຍ ($\mu$= 4.27, $\sigma$ = 1.00), ຮອງລົງມາແມ່ນຂໍ້3 ຫຼັກສູດທີ່ທ່ານຮຽນຈົບມີຄວາມສອດຄ່ອງກັບວຽກທີ່ທ່ານເຮັດຫຼາຍໜ້ອຍພຽງໃດ ( $\mu$= 4.27, $\sigma$ = 1.04). ແລະ

ຜູ້ຈ້າງງານມີຄວາມເຫັນໃນດ້ານຄວາມຮູ້, ຄວາມສາມາດຕໍ່ຜູ້ຈົບການສຶກສາ ຢູ່ໃນລະດັບຫຼາຍ ເປັນຕົ້ນແມ່ນຜູ້ຈົບການສຶກສາມີຄວາມສຳຄັນຕໍ່ໜ່ວຍງານຂອງທ່ານ ຢູ່ໃນລະດັບຫຼາຍ ( $\mu$= 4.35, $\sigma$ = 0.49).

1) ຜົນການສຶກສາສະຖານນະພາບການຈ້າງວຽກ ແລະ ການເຮັດວຽກຂອງຜູ້ຈົບການສຶກສາ ພົບວ່າຜູ້ຈົບການສຶກສາມີສະຖານະພາບເຮັດວຽກແລ້ວ ຈຳນວນ 26 ຄົນ ສ່ວນໃຫ່ຍເປັນຄູອາສາສະໝັກ ມີຈຳນວນ 12 ຄົນ ເທົ່າກັບ 46.2% ແລະ ຄູເອກະຊົນມີຈຳນວນ 9 ຄົນ ເທົ່າກັບ 34.6%, ໃນນັ້ນເຮັດວຽກປະຈຳຈຳນວນ 25 ຄົນ ສ່ວນໃຫ່ຍມີຕຳແໜ່ງເປັນຄູສອນ ເຊິ່ງເຮັດວຽກກົງກັບສາຂາທີ່ຮຽນຈົບ ໂດຍເຮັດເປັນວຽກປະຈຳ/ຈ້າງໄລຍະຍາວ ໂດຍສ່ວນໃຫ່ຍມີໄລຍະເວລາໃນການເຮັດວຽກຢູ່ໃນຊ່ວງ 9 - 7 ເດືອນ ແລະ ເມື່ອເຮັດການສຳຫຼວດວຽກທີ່ມອບໝາຍແມ່ນກົງກັບສາຂາທີ່ຮຽນມາ 100%.ເຊິ່ງໃຊ້ເວລາໃນການຊອກນ້ອຍກວ່າ 3 ເດືອນ, 3-6 ເດືອນ ໂດຍຕິດຕໍ່ວຽກກັບສະຖານສຶກສາໂດຍກົງ ແລະ ສ່ວນໃຫ່ຍແມ່ນບໍ່ໄດ້ສອບເຂົ້າ.

- ຄວາມສຳພັນລະຫວ່າງທັກສະ ແລະ ຄວາມສາມາດຂອງຜູ້ທີ່ຈົບການສຶກສາທີ່ໄດ້ຮັບໃນລະຫວ່າງຮຽນກັບ ທັກສະ ແລະ ຄວາມສາມາດທີ່ໃຊ້ໃນການເຮັດວຽກ ໃນພາບລວມມີຄວາມສຳພັນກັນລະດັບປານກາງ ເປັນຕົ້ນດ້ານຄວາມສາມາດໃນການເຮັດວຽກກັບຄົນອື່ນໄດ້, ຮູ້ຈັກອະນຸລັກວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດລາວມີຄວາມສຳພັນໃນລະດັບສູງ ( $\rho$ = 0.83); ທັກສະ ແລະ ຄວາມສາມາດຂອງຜູ້ຈ້າງງານຕ້ອງການກັບທັກສະ ແລະ ຄວາມສາມາດຂອງຜູ້ຈົບການສຶກສາໃນການເຮັດວຽກ ໃນພາບລວມມີຄວາມສຳພັນລະດັບປານກາງເປັນຕົ້ນດ້ານຈັນຍາບັນທາງດ້ານວິຊາຊີບຄູ ແລະ ຮັກອາຊີບແພງເດັກ ມີຄວາມສຳພັນຢູ່ໃນລະດັບຂ້ອນຂ້າງສູງ ($\rho$ = 0.61) ແລະ ຄວາມສຳພັນລະຫວ່າງທັກສະ ແລະ ຄວາມສາມາດຂອງຜູ້ທີ່ຈົບການສຶກສາໄດ້ຮັບລະຫວ່າງຮຽນກັບທັກສະ ແລະ ຄວາມສາມາດຂອງຜູ້ຈ້າງງານຕ້ອງການ ໃນພາບລວມ ມີຄວາມສຳພັນລະດັບກາງ ( C =0.46).

- ຄວາມເພິ່ງພໍໃຈຂອງຜູ້ຈົບການສຶກສາກັບວຽກທີ່ເຮັດ ໃນພາບລວມ ຢູ່ໃນລະດັບຫຼາຍເປັນຕົ້ນແມ່ນຄວາມກະຕືລືລົ້ນໃນການເຮັດໜ້າທີ່ຮັບຜິດຊອບພຽງໃດ? ຢູ່ໃນລະດັບຫຼາຍ ( $\mu$= 4.35, $\sigma$ = 0.56). ເຖິງແມ່ນວ່າຜູ້ຈ້າງງານຈະໃຫ້ຄຳເຫັນວ່າ: ຜູ້ຈົບການສຶກສາທີ່ມີວຽກເຮັດມີຄວາມເພິ່ງພໍໃຈຕໍ່ວຽກທີ່ໄດ້ຖືກມອບໝາຍຢູ່ໃນລະດັບຫຼາຍ ແຕ່ກໍ່ຍັງມີຜູ້ທີ່ເຮັດວຽກແລ້ວ ຈຳນວນ 8 ຄົນ ຕ້ອງການຫາວຽກໃໝ່.

2) ຜົນການປະເມີນຄວາມເພິ່ງພໍໃຈຂອງຜູ້ຈ້າງງານຕໍ່ທັກສະ ແລະ ຄວາມສາມາດຂອງຜູ້ຈົບການສຶກສາພົບວ່າ

- ຄວາມເພິ່ງພໍໃຈຂອງຈ້າງວຽກທີ່ມີຕໍ່ທັກສະແລະຄວາມສາມາດຂອງນັກສຶກສາທີ່ຈົບຫຼັກສູດສ້າງຄູອະນຸບານ ລະດັບປະລິນຍາຕີ ໂດຍພາບລວມ ຢູ່ໃນລະດັບຫຼາຍ ( $\mu$= 4.16, $\sigma$ = 0.42) ເປັນຕົ້ນດ້ານວິຊາຊີບຄູ ແລະ ຮັກອາຊີບແພງເດັກ, ຄວາມສາມາດໃນການເຮັດວຽກກັບຄົນອື່ນໄດ້, ຮູ້ຈັກອະນຸລັກວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດລາວມີຄ່າສະເລ່ຍສູງສຸດ ໂດຍຢູ່ໃນລະດັບຫຼາຍ ( $\mu$= 4.41 , $\sigma$ = 0.50).

ສີລິທອນ ບົວທອງ ( 2560: 156 )ການວັດ ແລະ ປະເມີນທັກສະການຮຽນຮູ້ໃນສັດຕະວັດທີ 21 ຕ້ອງເປັນການວັດ ແລະ ປະເມີນຜົນສະພາບທີ່ແທ້ຈິງຂອງນັກຮຽນເປັນພື້ນຖານຂອງເຫດການໃນຊີວິດຈິງຍຶດການປະຕິບັດເປັນສຳຄັນ ແລະ ສຳພັນກັບການຮຽນ - ການສອນເນັ້ນພັດທະນາການທີ່ປະກົດໃຫ້ເຫັນຜູ້ກ່ຽວຂ້ອງໃນການປະເມີນມີຫຼາຍຝ່າຍ ແລະ ເກີດຂຶ້ນໃນທຸກບໍລິບົດທັງໃນຫ້ອງຮຽນ ແລະ ນອກຫ້ອງຮຽນ ຫຼື ສະຖານທີ່ອື່ນໆ ນອກໂຮງຮຽນ ໂດຍຄູບໍ່ໄດ້ຈັດສະຖານະການຕ້ອງບູລະນາການຢູ່ໃນຂະບວນການຮຽນ ການສອນໃນຊັ້ນຮຽນຢ່າງແນບນຽນ ແລະ ເໝາະສົມ ມີການປະເມີນທັ້ງທີ່ເປັນທາງການ ແລະ ບໍ່ເປັນທາງການ ໂດຍການດຳເນີນການດັ່ງກ່າວເກີດຂຶ້ນຕະຫຼອດ

ໄລຍະເວລາຂອງຈັດການຮຽນ - ການສອນ ນັບຕັ້ງແຕ່ກ່ອນການຮຽນ - ການສອນລະຫວ່າງການຮຽນການສອນ ແລະ ຫຼັງການສອນເພື່ອໃຫ້ປະສົບຜົນສຳເລັດທັງໃນດ້ານການທຳງານແລະ ການດຳເນີນຊີວິດ ດັ່ງນັ້ນການວັດ ແລະ ປະເມີນຜົນທັກສະການຮຽນຮູ້ໃນສັດຕະວັດທີ 21 ຈະຕ້ອງເປັນການປະເມີນຜົນເຊີງຄຸນນະພາບເນັ້ນການປະຕິບັດຕົວ ຊີງ ບູລະນາການວິທີການປະເມີນ ແລະ ໃຊ້ເຄື່ອງມືວັດທີ່ຫຼາກຫຼາຍ ສ້າງ ແລະ ພັດທະນາລະບົບແຟ້ມສະສົມງານຂອງຜູ້ຮຽນນຳເທັກໂນໂລຢີມາໃຊ້ໃນການວັດ ແລະ ປະເມີນຜົນ ແລະ ນຳປະໂຫຍດຂອງຜົນສະທ້ອນຈາກການປະຕິບັດຂອງຜູ້ຮຽນມາປັບປຸງແກ້ໄຂງານ.

ອັງຄະນາ ດຸງຄະສະມິດ (2550: ບົດຄັດຫຍໍ້ ) ໄດ້ສຶກສາຄົ້ນຄ້ວາກ່ຽວກັບການພັດທະນາລະບົບການວັດ ແລະ ປະເມີນຜົນລະດັບຊັ້ນຮຽນຕາມຫຼັກສູດການສຶກສາຂັ້ນພື້ນຖານປີ 2544 ໂດຍໃຊ້ການວິໄຈເຊີງປະຕິບັດແບບມີສ່ວນຮ່ວມ: ກໍລະນີສຶກສາໂຮງຮຽນບ້ານນາສີດົງເຄັງ ຈັງຫວັດຂອນແກ່ນ ການວິໄຈຄັ້ງນີ້ມີຈຸດໝາຍເພື່ອພັດທະນາລະບົບການວັດ ແລະ ປະເມີນຜົນລະດັບຊັ້ນຮຽນຕາມຫຼັກສູດການສຶກສາຂັ້ນພື້ນຖານ ໂດຍມີຈຸດປະສົງ 4 ປະການຄື: ເພື່ອສຶກສາຂໍ້ມູນໃນການພັດທະນາສ້າງລະບົບສຶກສາປະສິດທິຜົນໃນການໃຊ້ລະບົບປະເມີນ ແລະ ປັບປຸງລະບົບ ດຳເນີນການວິໄຈໃນລັກສະນະຂອງການວິໄຈ ແລະ ພັດທະນາ ໂດຍປະຍຸກໃຊ້ວິທີວິໄຈເຊິ່ງປະຕິບັດແບບມີສ່ວນຮ່ວມ ( Participatory Action Research: PAR ) ໂດຍດຳເນີນທີ່ໂຮງຮຽນບ້ານນາສີດົງເຄັງ ຂັ້ນຕອນການວິໄຈມີ 4 ຂັ້ນຕອນຄື ຂັ້ນທີ1 ການສຶກສາຂໍ້ມູນພື້ນຖານ ຂັ້ນທີ2 ການສ້າງລະບົບການວັດ ແລະ ປະເມີນຜົນລະດັບຊັ້ນຮຽນ ຂັ້ນທີ 3 ການທົດລອງໃຊ້ລະບົບໂດຍການນຳລະບົບການວັດ ແລະ ປະເມີນຜົນລະດັບຊັ້ນຮຽນໄປສູ່ການປະຕິບັດ ຂັ້ນທີ4 ການປະເມີນ ແລະ ປັບປຸງລະບົບ ການນວັດ ແລະ ປະເມີນຜົນລະດັບຊັ້ນຮຽນໃນການດຳເນີນການແບບມີສ່ວນຮ່ວມໃນທຸກຂັ້ນຕອນ ຜົນການວິໄຈສະຫຼຸບໄດ້ດັ່ງນີ້:

1. ລະບົບການວັດ ແລະ ປະເມີນຜົນລະດັບຊັ້ນຮຽນຕາມຫຼັກສູດການສຶກສາຂັ້ນພື້ນຖານ 2544 ທີ່ພັດທະນາຂຶ້ນມີອົງປະກອບຂອງລະບົບການວິໄຈເຊີງປະຕິບັດ ປະກອບດ້ວຍລະບົບຍ່ອຍເຊິ່ງດຳເນີນການຕໍ່ເນື່ອງເປັນວົງມົນ 4 ລະບົບໄດ້ແກ່: ລະບົບວາງແຜນ ( Plan ) ລະບົບປະຕິບັດ ( Act ) ລະບົບກວດສອບ ( Observe ) ລະບົບສະທ້ອນຜົນ ( Reflect ).

2. ຜົນການໃຊ້ລະບົບໂດຍການນຳລະບົບການວັດ ແລະ ປະເມີນຜົນລະດັບຊັ້ນຮຽນໄປສູ່ການປະຕິບັດດຳເນີນການໃຊ້ປະໂຫຍດຂອງລະບົບມີຄວາມຊັດເຈນໃນທຸກຂັ້ນຕອນຕອບສະນອງທຸກຄວາມຕ້ອງການຂອງທຸກຝ່າຍ ແລະ ເຮັດໃຫ້ເກີດການພັດທະນາການສອນຂອງຄູແລະ ການຮຽນຂອງຜູ້ຮຽນ ຜົນການປະເມີນເປັນປະໂຫຍດຕໍ່ທຸກຝ່າຍໃນການຮ່ວມມືແກ້ບັນຫາ ແລະ ພັດທະນາຜູ້ຮຽນໃຫ້ດີຍິ່ງຂຶ້ນ ການປະເມີນຕ້ອງເປັນທຳໂປ່ງໃສ ແລະ ຄຳນຶງເຖິງປະໂຫຍດຂອງຜູ້ຮຽນ ມີຫຼັກການ,ມີຄວາມຮັບຜິດຊອບ,ມີຈັນຍາບັນດ້ານຄວາມຖືກຕ້ອງ. ການວັດ ແລະປະເມີນຜົນຕ້ອງສອດຄ່ອງກັບມາດຖານການສຶກສາໃຊ້ການປະເມີນຜົນເປັນສ່ວນສະໜອງການສອນແລະນຳຜົນການປະເມີນໄປໃຊ້ພັດທະນາຜູ້ຮູນ ແລະ ການສອນຂອງຄູ.

ຈິລະພອນ ມີສະຫງ່າ ພ້ອມຄະນະ ( 2558,ບົດຄັດຫຍໍ້ ) ສຶກສາຄົ້ນຄ້ວາກ່ຽວກັບສະພາບ ແລະ ບັນຫາການວັດ ແລະ ປະເມີນຜົນທັກສະຂອງຜູ້ຮຽນໃນສັດຕະວັດທີ 21 ຂອງຄູສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາພະນະຄອນສີອາຍຸດທະຍາເຂດ1ແລະ ເຂດ2 ການວິໄຈຄັ້ງນີ້ມີຈຸດປະສົງເພື່ອ 1) ເພື່ອສຶກສາສະພາບ ແລະ ບັນຫາການວັດ ແລະ ປະເມີນຜົນທັກສະຂອງຜູ້ຮຽນໃນສັດຕະວັດທີ 21 ຂອງຄູສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາ ພະນະຄອນສີອາຍຸດທະຍາເຂດ1ແລະ ເຂດ2

2) ປຽບທຽບສະພາບ ແລະ ບັນຫາການວັດ ແລະ ປະເມີນຜົນທັກສະຂອງຜູ້ຮຽນໃນສັດຕະວັດທີ 21 ຂອງຄູສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາ ພະນະຄອນສີອາຍຸດທະຍາເຂດ1 ແລະ ເຂດ2, 3) ຄວາມແຕກຕ່າງດ້ານວຸດທິ ແລະ ປະສົບການສອນ ໂດຍກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄື:ຄູສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາ ພະນະຄອນສີອາຍຸດທະຍາເຂດ1 ແລະ ເຂດ2 ຈຳນວນ 361 ຄົນ ໃຊ້ວິທີເລືອກກຸ່ມຕົວຢ່າງແບບແບ່ງຊັ້ນເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ຄື: ແບບສອບຖາມສະພາບ ແລະ ບັນຫາການວັດ ແລະ ປະເມີນຜົນທັກສະຂອງຜູ້ຮຽນໃນສັດຕະວັດທີ 21 ຂອງຄູ ການວິເຄາະຂໍ້ມູນໃຊ້ຄ່າສະຖິຕິພື້ນຖານ ແລະ ໃຊ້ການວິເຄາະຄວາມແປປວນ ຜົນການວິໄຈພົບວ່າ: 1) ສະພາບ ການວັດ ແລະ ປະເມີນຜົນທັກສະຂອງຜູ້ຮຽນໃນສັດຕະວັດທີ 21 ຂອງຄູສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາ ພະນະຄອນສີອາຍຸດທະຍາເຂດ1 ແລະ ເຂດ2 ໂດຍລວມຢູ່ໃນລະດັບການປະຕິບັດປານກາງ.

2) ບັນຫາການວັດ ແລະ ປະເມີນຜົນທັກສະຂອງຜູ້ຮຽນໃນສັດຕະວັດທີ 21 ຂອງຄູສຳນັກງານເຂດພື້ນທີ່ການສຶກສາປະຖົມສຶກສາ ພະນະຄອນສີອາຍຸດທະຍາເຂດ1ແລະ ເຂດ2ໂດຍລວມຢູ່ໃນລະດັບປານກາງ

3) ຄູທີ່ມີວຸດທິ ແລະ ປະສົບການສອນທີ່ແຕກຕ່າງກັນມີສະພາບ ແລະ ບັນຫາການວັດ ແລະ ປະເມີນຜົນທັກສະຂອງຜູ້ຮຽນ ໃນສັດຕະວັດທີ 21 ຄືກັນ.

ບຸດສະຍາ ປັກກາລະນັງ (2551: 468) ໄດ້ຄົ້ນຄ້ວາກ່ຽວກັບການພັດທະນາແບບທົດສອບວັດຜົນສຳເລັດທາງການຮຽນຕາມຫຼັກສູດແກນກາງກຸ່ມການຮຽນຮູ້ພາສາລະດັບຊັ້ນມັດທະຍົມສຶກສາປີທີ 5 ການວິໄຈມີຈຸດປະສົງມີຈຸດປະສົງໃນການວິໄຈດັ່ງນີ້ 1) ເພື່ອສ້າງແບບທົດສອບວັດຜົນສຳເລັດທາງການຮຽນຕາມຫຼັກສູດແກນກາງກຸ່ມການຮຽນຮູ້ພາສາລະດັບຊັ້ນມັດທະຍົມສຶກສາປີທີ 5 . 2) ເພື່ອກວດສອບຄຸນນະພາບຂອງແບບທົດສອບດ້ານຄວາມທ່ຽງຕົງ,ຄວາມຍາກງ່າຍ,ອຳນາດຈຳແນກ ແລະ ຄວາມເຊື່ອໝັ້ນຂອງແບບທົດສອບ ໂດຍມີວິທີດຳເນີນການວິໄຈເປັນລັກສະນະການວິໄຈພັດທະນາ( Research and Developmen ) ມີຂັ້ນຕອນການວິໄຈ 4 ຂັ້ນຕອນຄື: 1) ການວິໄຈ ( Research ) ການສຶກສາຫາຂໍ້ມູນພື້ນຖານ ແລະ ຄວາມຕ້ອງການກ່ຽວກັບການສ້າງແບບທົດສອບວັດຜົນສຳເລັດທາງການຮຽນ. 2) ການພັດທະນາ ( Developmen ) ການສ້າງແບບທົດສອບວັດຜົນສຳເລັດທາງການຮຽນ 3) ການດຳເນີນການວິໄຈ ( mplementation ) ການທົດລອງໃຊ້ແບບທົດສອບວັດຜົນສຳເລັດທາງການຮຽນ 4) ການປະເມີນຜົນ ( Evaluation ) ການປະເມີນແບບທົດສອບວັດຜົນສຳເລັດທາງການຮຽນ ກຸ່ມຕົວຢ່າງຄື: ນັກຮຽນຊັ້ນມັດທະຍົມສຶກສາປີທີ5 ຈາກຈຳນວນ 921 ຄົນ ຜົນການວິໄຈພົບວ່າ 1) ແບບທົດສອບວັດຜົນສຳເລັດທາງການຮຽນກຸ່ມການຮຽນຮູ້ພາສາໄທ ຊັ້ນມັດທະຍົມປີທີ5 ທີ່ສ້າງຂື້ນຈຳນວນ 90 ຂໍ້ ເປັນແບບທົດສອບທີ່ມີມາດຖານ ຄື: ສອດຄ່ອງກັບເນື້ອໃນມາດຖານການຮຽນຮູ້ ຕົວຊີ້ວັດ ຕາມຫຼັກສູດແກນກາງການສຶກສາຂັ້ນພື້ນຖານກຸ່ມການຮຽນຮູ້ພາສາໄທ ແລະ ສອດຄ່ອງກັບທິດສະດີການຮຽນຮູ້ຂອງບລູມ. 2) ແບບທົດສອບວັດຜົນສຳເລັດທາງການຮຽນ ກຸ່ມການຮຽນຮູ້ພາສາໄທ ຊັ້ນມັດທະຍົມປີທີ5 ທີ່ສ້າງຂື້ນມີຄຸນະພາບດັ່ງນີ້: ຄວາມທ່ຽງຕົງມີຄ່າເທົ່າກັບ 0.67 ສະແດງວ່າແບບທົດສອບມີຄວາມສອດຄ່ອງລະຫວ່າງເນື້ອໃນກັບຕົວຊີ້ວັດແບບທົດສອບສະບັບທີ1 ພົບວ່າມີຄ່າຄວາມຍາກງ່າຍຢູ່ໃນລະຫວ່າງ 0,35 – 0,66 ຄ່າອຳນາດຈຳແນກຢູ່ລະຫວ່າງ 0,30 – 0,66 ແລະ ມີຄ່າຄວາມເຊື່ອໝັ້ນເທົ່າກັບ 0,90. ແບບທດສອບສະບັບທີ2 ພົບວ່າມີຄ່າຄວາມຍາກງ່າຍຢູ່ໃນລະຫວ່າງ 0,35 – 0,63 ແລະ ຄ່າອຳນາດຈຳແນກຢູ່ລະຫວ່າງ 0,34 – 0,61 ແລະ ມີຄ່າຄວາມເຊື່ອໝັ້ນເທົ່າກັບ 0,89 ແບບທົດສອບສະບັບທີ3 ພົບວ່າມີຄ່າຄວາມຍາກງ່າຍຢູ່ໃນລະຫວ່າງ 0,26 – 0,76 ຄ່າອຳນາດຈຳແນກຢູ່ລະຫວ່າງ 0,26 – 0,57 ແລະ ມີຄ່າຄວາມເຊື່ອໝັ້ນເທົ່າກັບ 0,78.

ກິດຕິການ ສີລິສຸວັດ ( 2559:172)ໄດ້ສຶກສາຄົ້ນຄ້ວາເລື່ອງ ການພັດທະນາລະບົບການວັດ ແລະ ປະເມີນຜົນການຮຽນຮູ້ ລະດັບປະຖົມສຶກສາ ໂຮງຮຽນອະນຸບານສີປະຊານຸກູນ ໂດຍການປະເມີນເສີມພະລັງ ການວິໄຈຄັ້ງນີ້ມີຈຸດປະສົງ 1) ເພື່ອສຶກສາສະພາບການດຳເນີນງານ ແລະ ສຳຫຼວດບັນຫາການປະເມີນລະບົບການປະຕິບັດການວັດ ແລະ ປະເມີນຜົນການຮຽນຮູ້ຂອງໂຮງຮຽນອະນຸບານສຶກສາປະນຸກູນ. 2) ເພື່ອພັດທະນາລະບົບການວັດ ແລະ ປະເມີນຜົນການຮຽນຮູ້ພາຍໃນໂຮງຮຽນອະນຸບານສີປະຊານຸກູນ ໂດຍໃຊ້ການການປະເມີນເສີມພະລັງ. 3) ເພື່ອປຽບທຽບຜົນການການຮຽນຮູ້ຂອງບຸກຄະລາກອນໃນໂຮງຮຽນອະນຸບານສີປະຊານຸກູນກ່ອນ ແລະ ຫຼັງ ໂດຍໃຊ້ການປະເມີນແບບເສີມພະລັງ. 4) ເພື່ອສຶກສາຄວາມເພິ່ງພໍໃຈໃນການພັດທະນາ ລະບົບການວັດ ແລະ ປະເມີນຜົນການຮຽນຮູ້ຂອງບຸກລາກອນໃນໂຮງຮຽນອະນຸບານສີປະຊານຸກູນ ກຸ່ມເປົ້າໝາຍຜູ້ວິໄຈເລືອກໂຮງຮຽນອະນຸບານສີປະຊານຸກູນເປັນກໍລະນີສຶກສາ ໂດຍມີກຸ່ມເປົ້າໝາຍຄື 1) ຜູ້ວິໄຈຈຳນວນ 1 ຄົນ.2) ຜູ້ວິໄຈຮ່ວມຈຳນວນ 10 ຄົນ.3)ຜູ້ໃຫ້ຂໍ້ມູນ ຈຳນວນ 10 ຄົນ. ເຄື່ອງມືທີ່ໃຊ້ໃນການວິໄຈປະກອບດ້ວຍ ແບບທົດສອບຄວາມຮູ້ກ່ຽວກັບລະບົບການວັດ ແລະ ປະເມີນຜົນການຮຽນຮູ້ກ່ອນ ແລະ ຫຼັງ ການໃຊ້ການປະເມີນເສີມພະລັງ ຈຳນວນ 3 ສະບັບ ສັງເກດການປະຊຸມເຊີງປະຕິບັດການ ຜົນຂອງເຄື່ອງມືມາຫາດັດສະນີຄວາມສອດຄ່ອງ ( IC ) ຜູ້ຜູ້ວິໄຈພິຈາລະນາຄັດເລືອກຂໍ້ທີ່ມີດັດສະນີສອດຄ່ອງຕັ້ງແຕ່ 0.50 – 0.98 ແບບສຳພາດແບບມີໂຄງສ້າງ ຜົນຂອງເຄື່ອງມືມາຫາດັດສະນີຄວາມສອດຄ່ອງ ( IC ) ຜູ້ວິໄຈພິຈາລະນາເລືອກຂໍ້ຄຳຖາມທີ່ມີດັດສະນີຄວາມສອດຄ່ອງຕັ້ງແຕ່ 0.50 – 0.98 ແບບບັນທຶກການປະຊຸ່ມປະຕິບັດການຜົນຂອງເຄື່ອງມືມາຫາດັດສະນີ (IC ) ຜູ້ຜູ້ວິໄຈພິຈາລະນາຄັດເລືອກຂໍ້ຄຳຖາມທີ່ມີດັດສະນີຄວາມສອດຕ່ອງຕັ້ງແຕ່ 0.50 - 0.98 ແບບສອບຖາມຄວາມເພິ່ງພໍໃຈຄ່າອຳນາດຈຳແນກລາຍຂໍ້ຕັ້ງແຕ່ 0.23.

**ຜົນການວິໄຈພົບວ່າ**

1) ສະພາບການດຳເນີນ ແລະ ສຳຫຼວດບັນຫາການປະເມີນລະບົບການວັດ ແລະ ປະເມີນຜົນການຮຽນຮູ້ຂອງໂຮງຮຽນອະນຸບານສີປະຊານຸກູນຈາກລາຍງານການປະເມີນຕົນເອງ ( Self Study Report ) ຈາກການສັງເກດສະພາບທົ່ວໆ ຈາກການປະຕິບັດງານ ພົບບັນຫາສະຫຼຸບໄດ້ດັ່ງນີ້ຄື: 1) ຜູ້ທີ່ມີສ່ວນກ່ຽວກັບການວັດ ແລະ ປະເມີນຜົນການຮຽນຮູ້ຂາດຄວາມຮູ້ ຄວາມເຂົ້າໃຈໃນການສ້າງແບບທົດສອບທີ່ມີຄຸນນະພາບ.

2) ຈາກການພັດທະນາລະບົບການວັດ ແລະ ປະເມີນຜົນການຮຽນຮູ້ພາຍໃນໂຮງຮຽນອະນຸບານສີປະຊານຸກູນຈາກກິດຈະກຳທີ1 ແລະ ກິດຈະກຳທີ 2 ການປະເມີນຜົນການອ່ານ,ການຂຽນ ແລະ ການວັດຜົນປະເມີນຜົນການຮຽນຮູ້ຕາມກຸ່ມການຮຽນ ພົບວ່າ: ບຸກຄະລາກອນໃນໂຮງຮຽນອະນຸບານສີປະຊານຸກູນ ມີການປະເມີນການອ່ານຄິດວິເຄາະ.ຂຽນແລະ ການວັດຜົນປະເມີນຜົນການຮຽນຮູ້ຕາມກຸ່ມການຮຽນຫຼັງການໃຊ້ການປະເມີນເສີມພະລັງສູງກວ່າກ່ອນການໃຊ້ການປະເມີນເສີມພະລັງຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05.

3) ຜົນການພັດທະນາລະບົບການວັດ ແລະ ປະເມີນຜົນການຮຽນຮູ້ຂອງບຸກຄະລາກອນໃນໂຮງຮຽນອະນຸບານສີປະຊານຸກູນຫຼັງການໃຊ້ການປະເມີນເສີມພະລັງໂດຍໃຊ້ Wilcoxon Singed Rank Test ສູງກວ່າກ່ອນໃຊ້ການປະເມີນເສີມພະລັງ ໂດຍໃຊ້ Wilcoxon Singed Rank Test ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ0.05 ດປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ແລະ ຄວາມເພິ່ງພໍໃຈຂອງບຸກຄະລາກອນຕໍ່ການປະຕິບັດງານດ້ານການວັດ ແລະ ປະເມີນຜົນການຮຽນຮູ້ ໂດຍລວມຢູ່ໃນລະດັບຫຼາຍ.

ກັນຍາລັນ ຈິດຕິ ( 2559) ໄດ້ສຶກສາຄົ້ນຄ້ວາເລື່ອງການສ້າງແບບທົດສອບວິນິໄສວິຊາຄະນິດສາດ ເລື່ອງ

ຕົວປະກອບຂອງຈຳນວນນັບ ສຳລັບຊັ້ນປະຖົມສຶກສາປີທີ6 ເຂດພື້ນທີ່ການສຶກສາປະຖົມສຶກສານະຄອນນາຍົກ ການວິໄຈຄັ້ງນີ້ມີຈຸດປະສົງ ເພື່ອສ້າງແບບທົດສອບວິນິໄສວິຊາຄະນິດສາດ ເລື່ອງຕົວປະກອບຂອງຈຳນວນນັບ ສຳລັບນັກຮຽນປະຖົມສຶກສາປີທີ6 ເຂດພື້ນທີ່ການສຶກສາປະຖົມສຶກສານະຄອນນາຍົກ ແລະ ຫາຄຸນນະພາບດ້ານຄວາມກົງຕາມເນື້ອໃນ ( Content validity ) ຄວາມຍາກ (Difficulty )ອຳນາດຈຳແນກ (Discrimination) ຄວາມຕົງຕາມສະພາບ ( Concurrent validity ) ຄວາມທ່ຽງຕົງ ( Reliability ) ກຸ່ມຕົວຢ່າງໃນການວິໄຈຄັ້ງນີ້ເປັນນັກຮຽນທີ່ກຳລັງສຶກສາຢູ່ໃນຊັ້ນຮຽນປີທີ6 ເຂດພື້ນທີ່ການສຶກສາປະຖົມສຶກສານະຄອນນາຍົກ ຈຳນວນ 908 ຄົນ ເຊິ່ງໄດ້ມາຈາກການສຸ່ມແບບຫຼາຍຂັ້ນຕອນ (Multi-stage random sampling) ເຄື່ອງມືທີ່ໃຊ້ໃນການວິໄຈຄື: ແບບທົດສອບວິນິໄສວິຊາຄະນິດສາດຊະນິດເລືອກຕອບ 4 ຕົວເລືອກທີ່ສ້າງຂຶ້ນໂດຍໃຊ້ຟອມຂໍ້ສອບ (Item form) ຈຳນວນ 5 ສະບັບ ສະບັບລະ 20 ຂໍ້ ລວມ 100 ຂໍ້ ຜົນການວິໄຈປະກົດວ່າແບບທົດສອບວິນິໄສທັງ 5 ສະບັບ ຄ່າຄວາມກົງຕາມເນື້ອໃນ ມີຄ່າສະເລ່ຍຕັ້ງແຕ່ 0.80-1.00 ມີຄ່າສະເລ່ຍຄວາມຍາກຕັ້ງແຕ່ 0.54 - 0.70 ຄ່າອຳນາດຈຳແນກໃຊ້ສູດຂອງ Brennan ມີຄ່າຕັ້ງແຕ່ 0.54 – 0.86 ຄ່າຄວາມກົງຕາມສະພາບ ໃຊ້ສູດສະຫະສຳພັນຂອງ Spearman ມີຄ່າຕັ້ງແຕ່ 0.762 – 0.986 ທີ່ລະດັບໄນສຳຄັນທາງສະຖິຕິ 0.01 ສ່ວນຄ່າຄວາມທ່ຽງໃຊ້ສູດຂອງ Livingston ມີຄ່າຕັ້ງແຕ່ 0.96 – 0.97 ສຳລັບຄະແນນຈຸດຕັດຫາໂດຍວິທີຂອງ Angoff ແຕ່ລະສະບັບເທົ່າກັບ 12 ຄະແນນ ຈາກຄະແນນເຕັມສະບັບລະ 20 ຄະແນນ ຜົນການວິໄຈພົບວ່າ ນັກຮຽນມີຂໍ້ບົກຜ່ອງຫຼາຍທີ່ສຸດໃນເລື່ອງຕົວປະກອບ ແລະ ການຫາຕົວປະກອບ ການແຍນຕົວປະກອບ ແລະ ຕົວຄູນຮ່ວມນ້ອຍ.

ພິໄລພອນ ແຊມຊອຍ ( 2552) ໄດ້ສຶກສາຄົ້ນຄ້ວາເລື່ອງການພັດທະນາແບບທົດສອບວັດຄວາມສາມາດໃນການແກ້ປັນຫາທາງຄະນິດສາດຂອງນັກຮຽນປະຖົມສຶກສາປີທີ6 ພື້ນມີການສຶກສາປະທຸມທານີ ເຂດ2 ການວິໄຈຄັ້ງນີ້ມີຈຸດປະສົງ ເພື່ອພັດທະນາແບບທົດສອບວັດຄວາມສາມາດໃນການແກ້ປັນຫາທາງຄະນິດສາດຂອງນັກຮຽນປະຖົມສຶກສາປີທີ6 ພື້ນມີການສຶກສາປະທຸມທານີ ເຂດ2 ກຸ່ມເປົ້າໝາຍນັກຮຽນໂຮງຮຽນແຍ້ມສະອາດລັງສິດ ຈຳນວນ 35 ຄົນ ໄດ້ມາໂດຍວິທີເລືອກແບບເຈາະຈົງ ເຄື່ອງມືທີ່ໃຊ້ໃນການວິໄຈເປັນແບບທົດສອບວັດຄວາມສາມາດໃນການແກ້ປັນຫາທາງຄະນິດສາດ.ແບບອັດຕະໄນຈຳນວນ 5 ຂໍ້ ໃຊ້ເກນໃນການກວດສອບໃຫ້ຄະແນນແບບລວມອີງປະກອບ ແລະ ກວດສອບຄຸນນະພາບແບບທົດສອບໃນດ້ານຄວາມທ່ຽງຕົງ ( IOC) ຄ່າຄວາມຍາກ ( P ) ຄ່າອຳນາດຈຳແນກ ( D ) ແລະ ຄ່າຄວາມເຊື່ອໝັ້ນໃຊ້ສູດສຳປະສິດແອນຟາ ( a – Coeficient ) ຂອງຄອນບັກ ( Cronbach ) ສະຖິຕິໃຊ້ໃນການວິເຄາະຫາຂໍ້ມູນໄດ້ແກ່ ຄະແນນສະເລ່ຍ ແລະ ສ່ວນບ່ຽງເບນມາດຖານຜົນການສຶກສາພົບວ່າ: 1) ຄ່າຄວາມທ່ຽງຕົງເຊິ່ງພິນິດ (face Validity )ໂດຍພິຈາລະນາຄວາມສອດຄ່ອງຂອງແບບທົດສອບຄວາມສາມາດໃນການແກ້ບັນຫາທາງຄະນິດສາດ ແລະ ເກນການກວດໃຫ້ຄະແນນມີຄ່າເທົ່າກັບ 1.00, 2) ຄວາມຍາກ(P)ຂອງແບບທົດສອບຄວາມສາມາດໃນການແກ້ບັນຫາທາງຄະນິດສາດມີຄ່າຢູ່ລະຫວ່າງ 0.583-0.759 ຄ່າອຳນາດຈຳແນກ ( D ) ຂອງແບບທົດສອບວັດຄວາມສາມາດໃນການແກ້ບັນຫາທາງຄະນິດສາດມີຄ່າຢູ່ລະຫວ່າງ 0.481-0.722 ແລະ ຄ່າຄວາມເຊື່ອໝັ້ນຂອງແບບທົດສອບວັດຄວາມສາມາດໃນການແກ້ບັນຫາທາງຄະນິດສາດວິເຄາະໂດຍໃຊ້ສຳປະສິດແອນຟາ ( a - Coeficient ) ຂອງຄອນບັກ (Cronbach ) ມີຄ່າ 0.786.

ປັນຍາລັກ ສຸວັນນະຣັດ (2545 : ບົດຄັດຫຍໍ້) ໄດ້ກໍ່ການວິຈັຍເລື່ອງ ການສ້າງແບບທົດສອບວັດຄວາມສາມາດທາງຄະນິດສາດ ສຳລັບນັກຮຽນຊັ້ນປຣະຖົມສຶກສາປີທີ5 ເຊິ່ງມີຈຸດປະສົງເພື່ອສ້າງ ແລະ ພັດທະນາແບບທົດ

ສອບວັດຄວາມສາມາດທາງຄະນິດສາດ ສຳລັບນັກຮຽນຊັ້ນປະຖົມສຶກສາປີທີ5 ທັງໝົດທັງສ້າງເກນປົກກະຕິຂອງແບບທົດສອບໃນຮູບຄະແນນທີປົກກະຕິ ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈເປັນນັກຮຽນຊັ້ນປະຖົມສຶກສາປີທີ 6 ພາກຮຽນທີ 1 ປີການສຶກສາ 2544 ຂອງໂຮງຮຽນສັງກັດສຳນັກງານການປະຖົມສຶກສາແຂວງ ສົງຂາ ຈຳນວນ 1,170 ຄົນ ເຊິ່ງໄດ້ມາໂດຍການສຸ່ມແບບແບ່ງຊັ້ນໂດຍໃຊ້ຂະໜາດຂອງໂຮງຮຽນເປັນຊັ້ນ ແລະ ມີໂຮງຮຽນເປັນໜ່ວຍການສຸ່ມເຄື່ອງມືທີ່ໃຊ້ໃນການວິໄຈເປັນແບບທົດສອບວັດຄວາມສາມາດທາງຄະນິດສາດ ສຳລັບນັກຮຽນຊັ້ນປະຖົມສຶກສາປີທີ5 ຈຳນວນ 4 ດ້ານ ຄື ແບບທົດສອບວັດຄວາມສາມາດດ້ານຄວາມຮູ້, ຄວາມເຂົ້າໃຈ ຈຳນວນ 35 ຂໍ້ ແບບທົດສອບວັດຄວາມສາມາດດ້ານທັກສະການຄິດໄລ່ ຈຳນວນ 30 ຂໍ້ ແບບທົດສອບວັດຄວາມສາມາດດ້ານຂະບວນການທາງຄະນິດສາດ ຈຳນວນ 35 ຂໍ້ ແລະແບບທົດສອບວັດຄວາມສາມາດດ້ານການແກ້ໂຈດບັນຫາ ຈຳນວນ 35 ຂໍ້ ຈາກຜົນການວິໄຈ ພົບວ່າ:

1. ແບບທົດສອບວັດຄວາມສາມາດ,ດ້ານຄວາມຮູ້,ຄວາມເຂົ້າໃຈ,ມີຄ່າຄວາມຍາກຕັ້ງແຕ່ 0.33 – 0.73 ຄ່າອຳນາດຈຳແນກ ຕັ້ງແຕ່ 0.26 - 0.64 ຄ່າຄວາມເຊື່ອໝັ້ນ 0.85 ແລະ ມີຄ່າຄະແນນທີປົກກະຕິ ຕັ້ງແຕ່ T18 – T76
2. ແບບທົດສອບວັດຄວາມສາມາດດ້ານທັກສະການຄິດໄລ່ມີຄ່າຄວາມຍາກ ຕັ້ງແຕ່ 0.26 - 0.77 ຄ່າອຳນາດຈຳແນກ ຕັ້ງແຕ່ 0.26 - 0.75 ຄ່າຄວາມເຊື່ອໝັ້ນ 0.88 ແລະ ມີຄ່າຄະແນນທີປົກກະຕິ ຕັ້ງແຕ່ T26 – T76
3. ແບບທົດສອບວັດຄວາມສາມາດດ້ານຂະບວນການທາງຄນິດສາດມີຄ່າຄວາມຍາກ ຕັ້ງແຕ່ .32 - .76 ຄ່າອຳນາດຈຳແນກ ຕັ້ງແຕ່ 0.26 - 0.72 ຄ່າຄວາມເຊື່ອໝັ້ນ 0.82 ແລະ ມີຄ່າຄະແນນທີປົກກະຕິຕັ້ງແຕ່ T18 – T82
4. ແບບທົດສອບວັດຄວາມສາມາດດ້ານການແກ້ໂຈດບັນຫາມີຄ່າຄວາມຍາກ ຕັ້ງແຕ່ 0.25 - 0.75 ຄ່າອຳນາດຈຳແນກ ຕັ້ງແຕ່ 0.25 - 0.62 ຄ່າຄວາມເຊື່ອໝັ້ນ 0.80 ແລະ ມີຄ່າຄະແນນທີປົກກະຕິຕັ້ງແຕ່ T18 – T78

ບຸຍປະກອບ ຈາຍຄ້າຍ (2545: ບົດຄັດຫຍໍ້) ໄດ້ກໍ່ການວິໄຈເລື່ອງການສ້າງແບບວັດພາກປະຕິບັດສຳລັບໂປຣແກມປະມວນຜົນ ໄມໂຄຊອບເວີດ ເຊິ່ງມີຈຸດປະສົງເພື່ອ 1) ສ້າງແບບວັດພາກປະຕິບັດສຳລັບໂປແກມປະມວນຜົນໄມໂຄຊອບເວີດ 2) ເພື່ອສ້າງເກນໃນການໃຫ້ຄະແນນໃນການວັດພາກປະຕິບັດ 3) ເພື່ອຫາຄຸນນະພາບຂອງແບບວັດພາກປະຕິບັດທີ່ຜູ້ວິຈັຍສ້າງຂຶ້ນກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈເທື່ອນີ້ ເປັນນັກຮຽນຊັ້ນມັດຍົມສຶກສາປີທີ 4 ພາກຮຽນທີ1 ປີການສຶກສາ 2545 ຂອງໂຮງຮຽນສາທິດມະຫາວິທະຍາໄລສົງຂາລານະຄະລິນທອນ ຈຳນວນ 60 ຄົນ ແບ່ງອອກເປັນ 2 ກຸ່ມ ກຸ່ມລະ 30 ຄົນ ໂດຍກຸ່ມຕົວຢ່າງດັ່ງກ່າວເລືອກມາໂດຍວິທີສຸ່ມຢ່າງງ່າຍ ( Sample randomsampling ) ກຸ່ມຕົວຢ່າງກຸ່ມທີ1 ໃຊ້ທົດສອບເພື່ອຫາເວລາທີ່ນັກຮຽນໃຊ້ໃນການເຮັດແບບວັດຫາຄວາມຖືກຕ້ອງຊັດເຈນຂອງໃບງານ ສ່ວນກຸ່ມທີ 2 ໃຊ້ທົດສອບເພື່ອຫາຄ່າຄວາມເຊື່ອໝັ້ນຂອງແບບວັດ ແລະ ຄວາມເຊື່ອໝັ້ນລະຫວ່າງຜູ້ປະເມີນ 2 ຄົນເຄື່ອງມືທີ່ໃຊ້ໃນການວິໄຈເທື່ອນີ້ ຄື: ແບບວັດພາກປະຕິບັດສຳລັບໂປຣແກມປະມວນຜົນໄມໂຄຊອບເວີດ ເຊິ່ງປະກອບດ້ວຍໃບງານສຳລັບໃຫ້ນັກຮຽນປະຕິບັດ ແບບປະເມີນ ແລະ ເກນການໃຫ້ຄະແນນ ໂດຍແບບວັດດັ່ງກ່າວໄດ້ຜ່ານການປະເມີນຄຸນນະພາບຂັ້ນຕົ້ນໂດຍຜູ້ຊ່ຽວຊານ ຈຳນວນ 5 ຄົນ ເຊິ່ງມີຄ່າດັດນີຄວາມສອດຄອງລະຫວ່າງຂໍ້ປະຕິບັດກັບຈຸດປະສົງເຊີງພຶດຕິກຳ ຕັ້ງແຕ່ 0.80 – 1.00 ການວິໄຈເທື່ອນີ້ໄດ້ແບບວັດພາກປະຕິບັດ ດັ່ງນີ້:

1. ແບບວັດທີ່ສ້າງຂຶ້ນໃນການວິໄຈເທື່ອນີ້ ຄື ແບບວັດພາກປະຕິບັດສຳລັບໂປແກມປະມວນຜົນໄມໂຄ ຊອບເວີດ ມີຈຳນວນ 3 ສະບັບ ເຊິ່ງປະກອບດ້ວຍ ແບບວັດການຈັດການຂໍ້ມູນແບບວັດການສ້າງຕາຕະລາງ ແລະ ແບບວັດການເຮັດຈົດໝາຍວຽນ ຊອງຈົດໝາຍ ແລະ ທາແຜນເຈ້ຍ ແບບວັດການຈັດການຂໍ້ມູນມີ 2 ສະບັບຍ່ອຍຄື ແບບວັດການຈັດການຂໍ້ມູນ 1 ແລະ ແບບວັດການຈັດການຂໍ້ມູນ 2 ແບບວັດການເຮັດຈົດໝາຍວຽນ ຊອງຈົດໝາຍ ແລະ ທາແຜນເຈ້ຍ ມີ 3 ສະບັບຄື ແບບວັດການເຮັດຈົດໝາຍຂຽນ ແບບວັດການເຮັດຊອງຈົດໝາຍ ແລະ ແບບວັດການເຮັດແຜນເຈ້ຍ

2. ຜົນຈາກການສ້າງເກນໃນການໃຫ້ຄະແນນໃນການວັດພາກປະຕິບັດ ຜູ້ວິໄຈໄດ້ສ້າງເກນການໃຫ້ຄະແນນ ຂອງແບບວັດແຕ່ລະຂໍ້ເປັນ 4 ລະດັບ ຄື 0, 1 , 2 ແລະ 3 ຄະແນນ ຊຶ່ງການສ້າງເກນການໃຫ້ຄະແນນໄດ້ຜ່ານການ ພິຈາລະນາຂອງຜູ້ຊ່ຽວຊານ ໂດຍມີຄ່າດັດນີຄວາມສອດຄອງລະຫວ່າງຂໍ້ປະຕິບັດກັບເກນການໃຫ້ຄະແນນ ຕັ້ງແຕ່ 0.80 – 1.00 ແລະ ມີການກຳນົດເກນການຜ່ານແບບວັດແຕ່ລະສະບັບໂດຍຜູ້ຊ່ຽວຊານ ໄດ້ເກນການຜ່ານແບບ ວັດທີ່ລະດັບຮ້ອຍລະ 80

3. ການຫາຄຸນນະພາບຂອງແບບວັດພາກປະຕິບັດ ໂດຍການຫາຄ່າຄວາມເຊື່ອໝັ້ນຂອງແບບວັດ ເຊິ່ງ ຄິດໄລ່ໂດຍສູດສຳປະສິດການສະຫຼຸບອ້າງອີງ ແລະ ຫາຄ່າຄວາມເຊື່ອໝັ້ນລະຫວ່າງຜູ້ປະເມີນ 2 ຄົນຄິດໄລ່ໂດຍໃຊ້ ການປະມານຄ່າຈາກສູດສຳປະສິດທີ່ຫາຄ່າສຳພັນ ເພຍສັນ ( Pearson ProductMoment ) ຜົນຈາກການຫາຄຸນ ນະພາບຂອງແບບວັດປາກົດດັ່ງນີ້:

3.1 ການຫາຄວາມເຊື່ອໝັ້ນຂອງແບບວັດ ປາກົດດັ່ງນີ້ ແບບວັດການຈັດການຂໍ້ມູນ 1 ມີຄ່າຄວາມເຊື່ອ ໝັ້ນເທົ່າກັບ 0.92 ແບບວັດການຈັດການຂໍ້ມູນ 2 ມີຄ່າຄວາມເຊື່ອໝັ້ນເທົ່າກັບ 0.98 ແບບວັດການສ້າງຕາຕະລາງ ມີຄ່າຄວາມເຊື່ອໝັ້ນເທົ່າກັບ 0.98 ແບບວັດການເຮັດຈົດໝາຍຂຽນ ມີຄ່າຄວາມເຊື່ອໝັ້ນເທົ່າກັບ 0.95 ແບບວັດ ການເຮັດຊອງຈົດໝາຍ ມີຄ່າຄວາມເຊື່ອໝັ້ນເທົ່າກັບ 0.94 ແລະ ແບບວັດການເຮັດທາແຜນເຈ້ຍມີຄ່າຄວາມເຊື່ອ ໝັ້ນເທົ່າກັບ 0.93

3.2 ການຫາຄວາມເຊື່ອໝັ້ນລະຫວ່າງຜູ້ປະເມີນ 2 ຄົນ ປາກົດດັ່ງນີ້ ແບບວັດການຈັດການຂໍ້ມູນ 1 ມີຄ່າ ຄວາມເຊື່ອໝັ້ນເທົ່າກັບ 0.92 ແບບວັດການຈັດການຂໍ້ມູນ 2 ມີຄ່າຄວາມເຊື່ອໝັ້ນເທົ່າກັບ 0.98 ແບບວັດການ ສ້າງຕາຕະລາງ ມີຄ່າຄວາມເຊື່ອໝັ້ນເທົ່າກັບ 0.98 ແບບວັດການເຮັດຈົດໝາຍຂຽນມີຄ່າຄວາມເຊື່ອໝັ້ນເທົ່າກັບ 0.95 ແບບວັດການເຮັດຊອງຈົດໝາຍ ມີຄ່າຄວາມເຊື່ອໝັ້ນເທົ່າກັບ 0.93 ແລະ ແບບວັດການເຮັດທາແຜນເຈ້ຍ ມີ ຄ່າຄວາມເຊື່ອມັ່ນເທົ່າກັບ 0.93

ອຸທິດ ອະນຸພົນບໍລິບູນ (2543 : ບົດຄັດຫຍໍ້ ) ການວິໄຈເລື່ອງ ການສ້າງແບບທົດສອບອີງເກນວັດຜົນສຳ ເລັດທາງຄະນິດສາດຊັ້ນປະຖົມສຶກສາປີທີ6 ການສຶກສາເທື່ອນີ້ມີຈຸດໝາຍເພື່ອສ້າງແບບທົດສອບອີງເກນວັດຜົນສຳ ເລັດ ທາງຄະນິດສາດ ຊັ້ນປະຖົມສຶກສາປີທີ6 ເລື່ອງສົມການ ແລະ ການແກ້ສົມການ ກຸ່ມຕົວຢ່າງທີ່ໃຊ້ໃນການສຶກ ສາ ເທື່ອນີ້ຄືນັກຮຽນຊັ້ນປະຖົມສຶກສາປີທີ6 ປີການສຶກສາ 2543 ໂຮງຮຽນວັດສີຣິໄອສະຫວັນ ເຂດບາງພລັດ ກຸງ ເທບມະຫານະຄອນ ຈຳນວນ 30 ຄົນ ແບບທົດສອບປະກອບດ້ວຍແບບທົດສອບຍ່ອຍ 2 ສະບັບ ມີການຫາຄຸນ ນະພາບ ໂດຍການຫາຄ່າຄວາມທ່ຽງກົງທາງເນື້ອໃນລະຫວ່າງຈຸດປະສົງທາງ ພຶດຕິກຳກັບເນື້ອໃນຄວາມຮູ້ໂດຍໃຊ້ຄ່າ ດັດນີຄວາມສອດຄ່ອງ ການຕັດສິນໃຈຂອງຜູ້ຊ່ຽວຊານ ແລະ ຄ່າ ຄວາມທ່ຽງກົງລະຫວ່າງຂໍ້ສອບກັບຈຸດປະສົງເຊິ່ງ

ພຶດຕິກຳໂດຍໃຊ້ ຄ່າດັດນີຄວາມເໝາະສົມ ຕາມວິທີຂອງໂຣວິເນນລີ ແລະ ແຮມເບນຕັນ ຄ່າຄວາມຍາກງ່າຍກ່ອນສອນ ຄ່າຄວາມຍາກງ່າຍຫຼັງສອນ ຄ່າອຳນາດຈຳແນກໂດຍໃຊ້ຄ່າດັດນີຄວາມໄວ (ດັດນີ S) ຄ່າຄະແນນຈຸດຕັດໂດຍວິທີຂອງແອງກໍ ແລະ ຄ່າຄວາມເຊື່ອມັ່ນໂດຍວິທີຂອງລີວິງສຕັນ ສະຫຼຸບຜົນການສຶກສາຄົ້ນຄວ້າໄດ້ດັ່ງນີ້ ແບບທົດສອບສະບັບທີ1ປະກອບດ້ວຍເນື້ອໃນເລື່ອງຮູບແບບສົມການ ແລະ ການແກ້ສົມການ ເປັນ ແບບທົດສອບເລືອກຕອບ 4 ຕົວເລືອກຈຳນວນ 30 ຂໍ້ ຄ່າຄວາມທ່ຽງກົງລະຫວ່າງຈຸດປະສົງທາງ ພຶດຕິກຳກັບເນື້ອໃນມີຄ່າຢູ່ລະຫວ່າງ 0.67 -1.00 ຄ່າຄວາມທ່ຽງກົງລະຫວ່າງຂໍ້ສອບກັບ ຈຸດປະສົງທາງພຶດຕິກຳ ມີຄ່າຢູ່ລະຫວ່າງ 2.50 - 4.00 ຄ່າຄວາມຍາກງ່າຍກ່ອນສອນມີຄ່າຢູ່ລະຫວ່າງ 0.13 - 0.40 ຄ່າຄວາມຍາກງ່າຍຫຼັງສອນ ມີຄ່າຢູ່ລະຫວ່າງ 0.77 - 1.00 ຄ່າອຳນາດ ຈຳແນກມີຄ່າຢູ່ລະຫວ່າງ 0.43 - 0.80 ຄ່າຄະແນນຈຸດຕັດມີຄ່າເທົ່າກັບ 24 ຄະແນນ ຊຶ່ງມີຄ່າ ເທົ່າກັບຮ້ອຍລະ 80 ຂອງຄະແນນເຕັມຄ່າຄວາມເຊື່ອໝັ້ນ ມີຄ່າເທົ່າກັບ 0.88 ແບບທົດສອບສະບັບທີ 2 ປະກອບດ້ວຍເນື້ອໃນເລື່ອງ ໂຈດບັນຫາສົມການ ເປັນແບບທົດສອບແບບ ເລືອກຕອບ 4 ຕົວເລືອກ ຈຳນວນ 30 ຂໍ້ ຄ່າຄວາມທ່ຽງກົງລະຫວ່າງຈຸດປະສົງທາງງພຶດຕິກຳກັບ ເນື້ອໃນ ມີຄ່າຢູ່ລະຫວ່າງ 0.67 - 1.00 ຄ່າຄວາມທ່ຽງກົງລະຫວ່າງຂໍ້ສອບກັບຈຸດປະສົງເຊີງ ພຶດຕິກຳ ມີຄ່າຢູ່ລະຫວ່າງ 2.50 - 4.00 ຄ່າຄວາມຍາກງ່າຍກ່ອນສອນມີຄ່າຢູ່ລະຫວ່າງ0.43 - 0.74 ຄ່າຄະແນນຈຸດຕັດ ມີຄ່າເທົ່າກັບ 24 ຄະແນນ ເຊິ່ງມີຄ່າເທົ່າກັບຮ້ອຍລະ 80 ຂອງ ຄະແນນເຕັມຄ່າຄວາມເຊື່ອໝັ້ນມີຄ່າເທົ່າກັບ 0.91

ວິລະ ປະເສີດ (2538 : ບົດຄັດຫຍໍ້ ) ກໍ່ການວິໄຈເລື່ອງ ການສ້າງແບບທົດສອບອີງເກນວັດທັກສະການຄິດ ຄິດໄລ່ຊັ້ນປະຖົມສຶກສາປີທີ 6 ການສຶກສາເທື່ອນີ້ ມີຈຸດໝາຍເພື່ອສ້າງແບບທົດສອບ ອີງເກນວັດທັກສະການຄິດ ຄິດໄລ່ເລື່ອງການບວກ ການລົບ ການຄູນ ການຫານ ຈຳນວນນັບເສດສ່ວນ ແລະ ທົດນິຍົມ ໃນຊັ້ນປະຖົມສຶກສາ ປີທີ6 ຕາມຫຼັກສູດປະຖົມສຶກສາ ພຸດທະສັກກະລາດ 2521(ສະບັບ ປັບປຸງ ພ.ສ.2533) ພ້ອມທັງຫາຄຸນນະພາບ ແລະ ຄະແນນເກນ ທີ່ເໝາະສົມຂອງແບບທົດສອບກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາ ເປັນນັກຮຽນຊັ້ນປະຖົມສຶກສາປີທີ 6 ປີການສຶກສາ 2537 ຂອງ ໂຮງຮຽນໃນສັງກັດສຳນັກງານການປະຖົມສຶກສາແຂວງ ພິດສະນຸໂລກ ຈຳນວນ 247 ຄົນ ເຊິ່ງໄດ້ມາໂດຍການສຸ່ມແບບຫຼາຍຂັ້ນຕອນ ຜົນການສຶກສາໄດ້ແບບທົດສອບຈຳນວນ 15 ສະບັບໆ ລະ 10 ຂໍ້ ຊຶ່ງແບບທົດສອບທຸກສະບັບມີຄ່າຄວາມກົງທາງເນື້ອໃນເທົ່າກັບ 1.00 ຄ່າຄວາມຍາກ ລາຍຂໍ້ຢູ່ລະຫວ່າງ 0.23 ເຖິງ 0.78 ແລະ ຄ່າສະເລ່ຍ ຂອງຄ່າຄວາມຍາກ ລາຍຂໍ້ ຢູ່ລະຫວ່າງ 0.30 ເຖິງ 0.71 ຄ່າອຳນາດ ຈຳແນກລາຍຂໍ້ຢູ່ລະຫວ່າງ 0.34 ເຖິງ 0.85 ແລະ ຄ່າສະເລ່ຍຂອງ ຄ່າອຳນາດຈຳແນກ ລາຍຂໍ້ຢູ່ລະຫວ່າງ 0.60 ເຖິງ 0.69 ຄ່າຄວາມ ກົງທາງໂຄງສ້າງຢູ່ລະຫວ່າງ 0.85 ເຖິງ 1.00 ຄ່າຄວາມທ່ຽງ ຢູ່ລະຫວ່າງ 0.78 ເຖິງ 0.91 ຄະແນນເກນຢູ່ລະຫວ່າງຮ້ອຍລະ 30 ເຖິງ 80 ແບບທົດສອບທີ່ສ້າງຂຶ້ນເປັນແບບທົດສອບທີ່ມີຄຸນນະພາບສາມາດ ນຳໄປໃຊ້ວັດຜົນ ແລະ ປະເມີນຜົນ ທັກສະການຄິດຄິດໄລ່ ສຳລັບ ນັກຮຽນຊັ້ນປະຖົມສຶກສາປີທີ6 ຂອງໂຮງຮຽນໃນສັງກັດສຳນັກງານ ການປະຖົມສຶກສາ ແຂວງ ພິດສະນຸໂລກ

ສຸນພົນ ຝັ້ນສີລີ (2534 : ບົດຄັດຫຍໍ້ ) ກໍ່ການວິຈັຍເລື່ອງ ການສ້າງແບບທົດສອບອີງເກນວັດຜົນສຳເລັດວິທະຍາສາດ .1 ເລື່ອງການເຄື່ອນທີ່ ມີຈຸດໝາຍ ເພື່ອສ້າງແບບທົດສອບອີງເກນ ວັດຜົນສຳເລັດວິທະຍາສາດ .1 ເລື່ອງການເຄື່ອນທີ່ ຫາເກນທີ່ເໝາະສົມຂອງແບບທົດສອບທີ່ສ້າງຂຶ້ນ ວິທີການວິໄຈ ກຸ່ມຕົວຢ່າງ ສຸ່ມຢ່າງງ່າຍຈາກ

ນັກຮຽນຊັ້ນປີທີ1 ພາກຮຽນທີ1 ປີການສຶກສາ 2534 ວິທະຍາໄລເທັກນິກມະຫາສາລະຄາມ 280 ຄົນ ແບບທົດສອບມີ 36 ຂໍ້ ມີຄ່າອຳນາດຈຳແນກຢູ່ລະຫວ່າງ 0.15 ເຖິງ 0.61 ຄ່າຄວາມທ່ຽງກົງ ເຊີງໂຄງສ້າງຂອງແຕ່ລະຈຸດປະສົງຢູ່ລະຫວ່າງ 0.54 ເຖິງ 0.76 ທັງສະບັບເທົ່າກັບ 0.78 ແລະ ຄ່າຄວາມເຊື່ອໝັ້ນຂອງແຕ່ລະຈຸດປະສົງຢູ່ລະຫວ່າງ 0.97 ເຖິງ 1.00 ທັງສະບັບເທົ່າກັບ 0.50 ມີຄະແນນເກນທີ່ເໝາະສົມເທົ່າກັບ 17 ຄະແນນ ຫຼື ຮ້ອຍລະ 47.22 ຂອງຄະແນນເຕັມ

# ບົດທີ3

# ວິທີດຳເນີນການວິໄຈ

ການສຶກສາຄົ້ນຄວ້າໃນຄັ້ງນີ້ເປັນການວິໄຈເລື່ອງ ສຶກສາບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022-2023 ໂດຍມີຂັ້ນຕອນໃນການດຳເນີນດັ່ງນີ້:

## 3.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນ ແລະ ກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄ້ວາຄັ້ງນີ້ມີຄື:

1) ປະຊາກອນຄື: ຄູສອນໃນສາຍຄູອະນຸບານ, ຄູສອນໃນໂຮງຮຽນອະນຸບານ ເຊິ່ງມີຈຳນວນທັງໝົດ 30 ຄົນ,ຍິງ 28 ຄົນ.

2) ກຸ່ມຕົວຢ່າງ: ການເຮັດວິໄຈຄັ້ງນີ້ແມ່ນສອນໃນສາຍຄູອະນຸບານ,ຄູສອນໃນໂຮງຮຽນອະນຸບານ ວິທະຍາໄລຄູສາລະວັນ ເຊິ່ງມີທັງໝົດຈຳນວນ 28 ຄົນ,ຍິງ 27 ຄົນ.

ວິທີກຳນົດກຸ່ມຕົວຢ່າງ: ການເຮັດວິໄຈຄັ້ງນີ້ແມ່ນກຸ່ມຕົວຢ່າງທີ່ບໍ່ຄວນໜ້າຈະເປັນໄປໄດ້ ( Non-probability Sampling ) ເປັນການສຸ່ມກຸ່ມຕົວຢ່າງທີ່ບໍ່ໃຊ້ຫຼັກການຂອງຄວາມໜ້າຈະເປັນໄປໄດ້ທີ່ອາດຈະເກີດເນື່ອງຈາກເປັນການວິໄຈທີ່ສຶກສາຈາກກຸ່ມທີ່ສະເພາະເຈາະຈົງ ຫຼື ມີຄຸນລັກສະນະທີ່ສອດຄ່ອງກັບປະເດັ່ນ ຫຼື ເງື່ອນໄຂທີ່ກຳນົດໄວ້ ຫຼື ເນື່ອງຈາກສະຖານະການທີ່ແຕກຕ່າງກັນໄປ ຈຶ່ງຈຳເປັນຕ້ອງມີການສຸ່ມດ້ວຍວິທີການນີ້ໃນບາງຄັ້ງເອີ້ນວ່າການສຸ່ມປະເພດນີ້ວ່າ ການຄັດເລືອກ ( Selection ) ຈຳແນກໄດ້ດັ່ງນີ້:

ວິທີການຄັດເລືອກແບບມີຈຸດປະສົງສະເພາະເຈາະຈົງ ( Purposive Selection )ເປັນການເລືອກກຸ່ມຕົວຢ່າງທີ່ມີລັກສະນະສະເພາະເຈາະຈົງຕາມຫຼັກການຂອງເຫດຜົນໂດຍໃຫ້ມີຄວາມສອດຄ່ອງກັບບັນຫາການວິໄຈຈຸດປະສົງນັ້ນໆ ມີການວາງແຜນ ກຳນົດຂະໜາດ ກຸ່ມຕົວຢ່າງ ແລະ ການເລືອກກຸ່ມຕົວຢ່າງ ແລະ ການເລືອກກຸ່ມຕົວຢ່າງທີ່ດີ, ເປັນຕົວແທນປະສະຈາກຄວາມລຳອຽງ ແຕ່ຜົນການວິໄຈຈະບໍ່ສາມາດສະຫຼຸບອ້າງອີງໄປສູ່ປະຊາກອນໂດຍທົ່ວໄປໄດ້ຕົວຢ່າງ: ການສຶກສາວິທີການຮຽນຮ່ວມຂອງເດັກພິເສດກັບເດັກປົກກະຕິໃນສະຖາບັນການສຶກສາດັ່ງນັ້ນກຸ່ມຕົວຢ່າງທີ່ນຳມາສຶກສາຈະສຶກສາສະເພາະເຈາະຈົງໃນສະຖານບັນການສຶກສາທີ່ມີການຮຽນຮ່ວມກັບເດັກພິເສດເທົ່ານັ້ນເປັນຕົ້ນ ຫຼື ການຄັດເລືອກຜູ້ຊ່ຽວຊານໃນການໃຊ້ເທັກນິກເດນຟາຍທີ່ມີເກນພິຈາລະນາຢ່າງຊັດເຈນບໍ່ສະນັ້ນຜົນສະຫຼຸບທີ່ໄດ້ອາດຈະບໍ່ໜ້າເຊື່ອຖື.

ການກຳນົດຫາຂະໜາດກຸ່ມຕົວຢ່າງການໃຊ້ຕາຕະລາງຂອງເຄນຊີ ແລະ ມໍແກນ ( Krejcie and Morgan, 1970: 607- 610 )ໄດ້ນຳສະເໜີຕາຕະລາງການສຸ່ມຕົວຢ່າງສຳເລັດຮູບທີ່ມີປະຊາກອນຂະໜາດນ້ອຍໂດຍມີລະດັບຄວາມເຊື່ອໝັ້ນ 95 %(.95) ຫຼື ມີຄວາມຄາດເຄື່ອນທີ່ເກີດຂຶ້ນ 5 % (.05) ເຊິ່ງກຳນົດຕົວຢ່າງຄື:

| ປະຊາກອນຕົວຢ່າງ | ກຸ່ມຕົວຢ່າງ |
|---|---|
| 30 | 28 |

## 3.2 ເຄື່ອງມືທີ່ໃຊ້ໃນການດຳເນີນການວິໄຈ

ເຄື່ອງມືທີ່ໃຊ້ເຂົ້າໃນການວິເຄາະຂໍ້ມູນສຳລັບການວິໄຈຫົວຂໍ້: ສຶກສາການສ້າງແບບທົດສອບເດັກອະນຸບານ ຂອງ ຄູສອນສາຍອະນຸບານ,ນັກສຶກສາຄູອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022 - 2023.ແບບສອບຖາມ ແລະ ເຄື່ອງມືໃນການບັນທຶກພາບຄືກ້ອງຖ່າຍຮູບ.

1. ແບບສອບຖາມສຳລັບຄູສອນສາຍອະນຸບານ, ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນເຊິ່ງແບ່ງເນື້ອໃນແບບສອບຖາມເປັນ 3 ຕອນດັ່ງລາຍລະອຽດດັ່ງນີ້:

**ຕອນທີ1 ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມສອບຖາມ**

ຕອນທີໜຶ່ງຂອງແບບສອບຖາມແມ່ນສອບຖາມກ່ຽວກັບຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມໄດ້ແກ່: ເພດ,ອາຍຸ, ວຸດທິດ້ານການສຶກສາ,ປະສົບການສອນ ເປັນແບບສອບຖາມເລືອກຕອບຕາມຕົວເລືອກທີ່ເໝາະສົມກັບຄວາມເປັນຈິງທີ່ສຸດ.

**ຕອນທີ2:** ຄວາມຄິດເຫັນກ່ຽວກັບຄວາມຮູ້,ຄວາມເຂົ້າໃຈ,ຄວາມສາມາດການສ້າງແບບທົດສອບວັດຜົນການຮຽນສຳລັບຄູສອນສາຍອະນຸບານແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ເຊິ່ງການສ້າງແບບທົດສອບວັດຜົນການຮຽນລວມມີ ຈຳນວນ 4 ຂໍ້

**ຕອນທີ3:** ຄວາມຄິດເຫັນກ່ຽວກັບຄວາມຮູ້,ຄວາມສາມາດສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນສຳລັບຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ເຊິ່ງການສ້າງແບບທົດສອບສຳລັບເດັກກ່ອນໄວຮຽນລວມມີຈຳນວນ 11 ຂໍ້

## 3.3 ເກນໃນການແປຄວາມໝາຍ

ເກນໃນການແປຄວາມໝາຍການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນສຳລັບຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດ ແບ່ງເປັນ 5 ລະດັບ.

ຄະແນນລະຫ່ວາງ 5.00 ສະແດງວ່າມີຄວາມຮູ້,ຄວາມເຂົ້າໃຈຕໍ່ການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນທີ່ເໝາະສົມຫຼາຍທີ່ສຸດ

ຄະແນນລະຫ່ວາງ 4.01 – 4.99 ສະແດງວ່າມີຄວາມຮູ້,ຄວາມເຂົ້າໃຈຕໍ່ການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນເໝາະສົມຫຼາຍ

ຄະແນນລະຫ່ວາງ 3.01 – 4.00 ສະແດງວ່າມີຄວາມຮູ້,ຄວາມເຂົ້າໃຈຕໍ່ການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນເໝາະສົມປານກາງ

ຄະແນນລະຫ່ວາງ 2.01 – 3.00 ສະແດງວ່າມີຄວາມຮູ້,ຄວາມເຂົ້າໃຈຕໍ່ການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນເໝາະສົມໜ້ອຍ

ຄະແນນລະຫ່ວາງ 1.00 – 2.00 ສະແດງວ່າມີຄວາມຮູ້,ຄວາມເຂົ້າໃຈຕໍ່ການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນເໝາະສົມໜ້ອຍທີ່ສຸດ

**ຄຸນນະພາບຂອງແບບສອບຖາມ**

ຜູ້ວິໄຈໄດ້ນຳໄປທົດລອງຄຸນນະພາບເຄື່ອງມື ( Try out ) ກັບ ຄູສອນໃນສາຍອະນຸບານ ແລະ ຄູສອນອະນຸບານທີ່ເປັນກຸ່ມຕົວຢ່າງຈຳນວນ 30 ຄົນ ຈາກນັ້ນນຳມາກວດຄະແນນຕາມເກນທີ່ກຳນົດ ເພື່ອຫາອຳນາດຈຳແນກເປັນລາຍຂໍ້ໂດຍແບບສອບຖາມມີອຳນາດຈຳແນກລະຫວ່າງ 0.21-0.68 ແລະ ຫາຄ່າຄວາມເຊື່ອໝັ້ນຂອງແບບສອບຖາມໂດຍວິທີສຳປະສິດທິແອຟາ(Alpha Coeffient) ຂອງຄອນບັດ ( Cronbach) ໄດ້ຄ່າຄວາມເຊື່ອໝັ້ນໃນແຕ່ລະດ້ານຄື 0.68.

## 3.4 ວິທີລວມຂໍ້ມູນ

ຜູ້ຄົ້ນຄ້ວາມີການລວບລວມຂໍ້ມູນເພື່ອສ້າງເຄື່ອງມື ແລະ ຫາຄຸນນະພາບຂອງເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າແຕ່ລະຢ່າງດັ່ງນີ້:

**1) ເຄື່ອງມື ແລະ ຫາຄຸນນະພາບຂອງການສ້າງເຄື່ອງມື**

1. ສຶກສາທິດສະດີ,ເອກະສານ,ບົດຄວາມ,ບົດຄົ້ນຄວ້າກ່ຽວກັບວິທີການສ້າງເຄື່ອງມື (ແບບສອບຖາມ) ຂອງຄູ-ອາຈານສອນໃນວິທະຍາໄລຄູສາລະວັນ.

2. ນຳເຄື່ອງມື ( ແບບສອບຖາມ ) ຂອງຄູ-ອາຈານທີ່ສ້າງສຳເລັດຜ່ານທີ່ປຶກສາ ເພື່ອພິຈາລະນາຄວາມຖືກຕ້ອງເໝາະສົມໃນການໃຊ້ພາສາ ການສື່ຄວາມໝາຍໃຫ້ກົງປະເດັນແລ້ວນຳໄປປັບປຸງ.

3. ນຳເຄື່ອງມື (ແບບສອບຖາມ) ທີ່ປັບປຸງແລ້ວຜ່ານຄະນະຊ່ຽວຊານເພື່ອພິຈາລະນາຄວາມເໝາະສົມ ແລະ ຄວາມທ່ຽງຕົງຂອງຂໍ້ຄິດເຫັນຕ່າງໆດັ່ງນີ້:

+1 ໝາຍເຖິງ ແນ່ໃຈວ່າແບບສອບຖາມສອດຄ່ອງຕາມຈຸດປະສົງເນື້ອໃນທີ່ຕ້ອງການ

0 ໝາຍເຖິງບໍ່ແນ່ໃຈວ່າແບບສອບຖາມບໍ່ສອດຄ່ອງຕາມຈຸດປະສົງເນື້ອໃນທີ່ຕ້ອງການ

-1 ໝາຍເຖິງແນ່ໃຈວ່າແບບສອບຖາມບໍ່ສອດຄ່ອງຕາມຈຸດປະສົງເນື້ອໃນທີ່ຕ້ອງການ

4. ນຳແບບສອບຖາມມາປັບປຸງແກ້ໄຂຕາມຜູ້ຊ່ຽວຊານສະເໜີແນະ

5. ເລືອກເອົາຂໍ້ມູນທີ່ໄດ້ປັບປຸງຂອງຜູ້ຊ່ຽວຊານມາຈັດພິມ ແລະ ຮຽບຮຽງຄືນເພື່ອໃຫ້ໄດ້ແບບສອບຖາມທີ່ສົມບູນແລ້ວນຳໄປໃຊ້ກັບຄູ-ອາຈານສອນໃນສາຍອະນຸບານ-ປະຖົມເປັນກຸ່ມຕົວຢ່າງໂດຍປະຕິບັດດັ່ງນີ້:

1, ນຳແບບສອບຖາມໄປທົດລອງໃຊ້ກັບກຸ່ມຕົວຢ່າງທີ່ເປັນກຸ່ມຍ່ອຍ 3-5 ຄົນ ຫຼັງຈາກນັ້ນ ຈຶ່ງນຳແບບສອບຖາມໄປເກັບກຳຂໍ້ມູນກັບກັບກຸ່ມຕົວຢ່າງໃນຈຳນວນ 28 ຄົນ ເພື່ອໃຫ້ໄດ້ຂໍ້ມູນກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນຮູ້ຂອງເດັກກ່ອນໄວຮຽນສຳລັບຄູສອນສາຍຄູອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ

2, ເກັບລວບລວມຂໍ້ມູນພາຍຫຼັງທີ່ຄູ - ອາຈານປະກອບຕາມແບບຟອມສອບຖາມ.ເພື່ອມາສັງລວມສະພາບ ແລະ ບັນຫາການຈັດກິດຈະກຳການຮຽນ - ການສອນ,ນຳແບບສອບຖາມໄປເຮັດການເກັບກຳຂໍ້ມູນກັບນັກສຶກສາຄູອະນຸບານ.

## 3.5 ວິທີວິເຄາະຂໍ້ມູນ

ການສຶກສາຄັ້ງນີ້ມີຈຸດປະສົງ ເພື່ອສຶກສາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນສຳລັບຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກ 2022-2023.

ຂໍ້ມູນຈາກການສອບຖາມວິເຄາະຫາຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Standaard Devition) ຄ່າເປີເຊັນ ( Percentage),ໂດຍໃຊ້ຄອມພິວເຕີຊ່ວຍໃນການວິເຄາະ,ຂໍ້ມູນທີ່ໄດ້ຈາກການສົນທະນາກຸ່ມໃຊ້ການວິເຄາະທາງຄຸນນະພາບເພື່ອແປຄວາມໝາຍ, ຕີຄວາມໝາຍ ແລະ ສະຫຼຸບຄວາມໝາຍຈາກຂໍ້ມູນການສົນທະນາກຸ່ມ. ໂດຍແບ່ງຜົນການວິເຄາະຂໍ້ມູນເປັນ 3 ຂັ້ນຕອນຄື:

ຕອນທີ1: ສະເໜີຜົນການວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມສອບຖາມກ່ຽວກັບສຶກສາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນສໍາລັບຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດວິທະຍາໄລຄູສາລະວັນເຊິ່ງສະຫຼຸບອອກມາເປັນເປີເຊັນ ( % ) ຕາມຕາຕະລາງທີ1.

**ຕອນທີ2:** ສະເໜີຜົນການວິເຄາະຂໍ້ມູນສອບຖາມກ່ຽວກັບ ຄວາມຮູ້,ຄວາມເຂົ້າໃຈ,ຄວາມສາມາດການສ້າງແບບທົດສອບວັດຜົນການຮຽນໃນລາຍວິຊາສໍາລັບຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດວິທະຍາໄລຄູສາລະວັນ ສົກຮຽນ 2022-2023.

**ຕອນທີ3** : ສະເໜີຜົນການວິເຄາະຂໍ້ມູນສອບຖາມກ່ຽວກັບ ຄວາມຮູ້,ຄວາມສາມາດໃນການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກສໍາລັບຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022-2023.

## 3.6 ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ

1. ສະຖິຕິທີ່ໃຊ້ໃນການຫາຄຸນນະພາບຂອງເຄື່ອງມື

1.1 ຫາຄວາມທ່ຽງກົງ ຂອງແບບສອບຖາມໂດຍໃຊ້ສູດດັດນີຄ່າຄວາມສອດຄ້ອງ IOC

1.2 ຫາຄ່າຄວາມເຊື່ອມັ່ນຂອງແບບສອບຖາມໂດຍໃຊ້ສູດສໍາປະສິດແອນຟາຂອງຄອນບາກ ດ້ວຍໂປແກມສໍາເລັດຮູບທາງສະຖິຕິ

2. ສະຖິຕິທີ່ໃຊ້ໃນການບັນລະຍາຍຂໍ້ມູນ ໂດຍໃຊ້ ໂປແກມສໍາເລັດຮູບທາງສະຖິຕິມີດັ່ງນີ້

2.1 ຄ່າສ່ວນຮ້ອຍ (Percentage)

ສູດ $$P = \frac{f}{N} \times 100$$

ເມື່ອ $P$ ແທນ ສ່ວນຮ້ອຍ(ຮ້ອຍລະ)

$f$ ແທນ ຄວາມຖີ່ທີ່ຕ້ອງການແປງໃຫ້ເປັນຮ້ອຍລະ

$N$ ແທນ ຈໍານວນຄວາມຖີ່ທັງໝົດ

2.2 ຄ່າສະເລ່ຍ (Mean)

ສູດ $$\overline{X} = \frac{\sum X}{N}$$

ເມື່ອ $\overline{X}$ ແທນ ຄ່າສະເລ່ຍ

$\sum X$ ແທນ ຜົນລວມຄະແນນທັງໝົດໃນກຸ່ມເປົ້າໝາຍ

$N$ ແທນ ຈໍານວນນັກຮຽນ

2.3 ຄ່າບ່ຽງເບນມາດຕະຖານ (S. D)

ສູດ $$S.D.=\sqrt{\frac{N\sum X^{2}-\left(\sum X\right)^{2}}{N\left(N-1\right)}}$$

ເມື່ອ $S.D.$ ແທນ ສ່ວນບ່ຽງເບນມາດຕະຖານ

$X^{2}$ ແທນ ຄະແນນແຕ່ລະຕົວ

$N$ ແທນ ຈຳນວນຄະແນນ

$\sum$ ແທນ ຜົນລວມທັງໝົດໃນກຸ່ມເປົ້າໝາຍ

# ບົດທີ 4
# ການວິເຄາະຂໍ້ມູນ

ການສຶກສາຄົ້ນຄ້ວາເລື່ອງ ສຶກສາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022-2023.ຜູ້ວິໄຈໄດ້ສຶກສາຄົ້ນຄ້ວາດຳເນີນການວິເຄາະຂໍ້ມູນຕາມຂັ້ນຕອນດັ່ງນີ້:

## 4.1 ການແປຜົນ

- ຄວາມຮູ້,ຄວາມເຂົ້າໃຈ,ຄວາມສາມາດໃນການສ້າງແບບທົດສອບວັດຜົນການຮຽນໃນລາຍວິຊາສຳລັບຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022-2023.
- ຄວາມຮູ້,ຄວາມສາມາດໃນການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກສຳລັບຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022-2023.

## 4.2 ສັນຍາລັກ ແລະ ອັກສອນຫຍໍ້ທີ່ໃຊ້ສື່ຄວາມໝາຍໃນການວິໄຈ

$\overline{X}$ ສັນຍາລັກແທນຄະແນນສະເລ່ຍ

S.D ສັນຍາລັກແທນຄ່າຜັນປ່ຽນມາດຖານ

N ສັນຍາລັກແທນຈຳນວນຄູ-ອາຈານໃນກຸ່ມຕົວຢ່າງ

## 4.3 ຜົນການວິເຄາະຂໍ້ມູນ

**ຕອນທີ1: ສະເໜີຜົນການວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມສອບຖາມກ່ຽວກັບ**ການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022-2023..ໂດຍຈຳແນກຕາມເພດ,ອາຍຸ,ວຸດທິການສຶກສາປະສົບການໃນການສອນ ເຊິ່ງສະຫຼຸບອອກມາເປັນຄ່າສະເລ່ຍຄິດເປັນຮ້ອຍລະເປີເຊັນ (%) ຕາມຕາຕະລາງທີ1.

ຜົນການວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມສອບຖາມກ່ຽວກັບການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022-2023.. ພົບວ່າສະພາບຂອງຜູ້ຕອບແບບສອບຖາມ ໂດຍແມ່ນກຸ່ມຕົວຢ່າງຈາກພະນັກງານຄູສອນສາຍອະນຸບານ ຈຳນວນ 28 ຄົນ. ຍິງ 27 ຄົນ ຄິດເປັນຮ້ອຍລະ 100 %, ເພດຊາຍຈຳນວນ 1 ຄົນ ຄິດເປັນຮ້ອຍລະ 4% ເພດຍິງ 27 ຄົນ ຄິດເປັນຮ້ອຍລະ 96 % ແລະ ອາຍຸຕ່ຳກວ່າ 20 ປີ ມີຈຳນວນ 0 ຄົນ ຄິດເປັນຮ້ອຍລະ 0 %, ອາຍຸ 21-25 ປີ ມີຈຳນວນ 0 ຄົນ ຄິດເປັນຮ້ອຍລະ 0 %, ອາຍຸ 26– 30 ປີ ມີຈຳນວນ 2 ຄົນ ຄິດເປັນຮ້ອຍລະ 8 %, ອາຍຸ 31 ປີ ມີຈຳນວນ 23 ຄົນ ຄິດເປັນຮ້ອຍລະ 92 % ວຸດທິການສຶກສາໃນລະດັບການສຶກສາຕ່ຳກວ່າປະລິນຍາຕີ ມີຈຳນວນ 11 ຄົນ, ຄິດເປັນຮ້ອຍລະ 44 %. ລະດັບປະລິນຍາຕີ ມີຈຳນວນ 9 ຄົນ ຄິດເປັນຮ້ອຍລະ 36 % ແລະ ລະດັບການສຶກສາປະລິນຍາໂທ ມີຈຳນວນ 5 ຄົນ ຄິດເປັນຮ້ອຍລະ 20%

ແລະ ລະດັບປະລິຍາເອກ 0 ຄົນ ຄິດເປັນຮ້ອຍລະ 0 %, ແລະ ປະສົບການໃນການສອນໜ້ອຍກວ່າ 5 ປີ ຈຳນວນ 0 ຄົນ, ຄິດເປັນຮ້ອຍລະ 0 % ປະສົບການສອນ 6 – 10 ປີ ມີຈຳນວນ 3 ຄົນ ຄິດເປັນຮ້ອຍລະ 12 % ປະສົບການສອນ 11 – 15 ປີ ມີຈຳນວນ 8 ຄົນ ຄິດເປັນຮ້ອຍລະ 32 % ປະສົບການສອນ 16 – 20 ປີ ມີຈຳນວນ 9 ຄົນ ຄິດເປັນຮ້ອຍລະ 36 % ປະສົບການສອນ 21 ປີຂຶ້ນໄປ ມີຈຳນວນ 5 ຄົນ ຄິດເປັນຮ້ອຍລະ 20 %

**ຕອນທີ2 ຄວາມຮູ້,ຄວາມເຂົ້າໃຈ,ຄວາມສາມາດໃນການສ້າງແບບທົດສອບວັດຜົນການຮຽນ**

**1.** ຈາກຜົນການວິເຄາະຄູ-ອາຈານການເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນພົບວ່າ ເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນມີຜູ້ເຂົ້າຮ່ວມຈຳນວນ 25 ຄົນ ຄິດເປັນເປີເຊັນເທົ່າກັບ 100 % ພິຈາລະນາຕາມລາຍຂໍ້ແລ້ວເຫັນວ່າ ຄູ ອາຈານ ເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນ ຫຼາຍກວ່າ 3 ຄັ້ງ ມີຜູ້ເຂົ້າຮ່ວມຈຳນວນ 23 ຄົນ ໂດຍຄິດເປັນເປີເຊັນເທົ່າກັບ 92 % , ຄູ ອາຈານ ເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນ 2 ຄັ້ງ ມີຜູ້ເຂົ້າຮ່ວມຈຳນວນ 23 ຄົນຄິດເປັນເປີເຊັນເທົ່າກັບ 8 % ເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນ 1 ຄັ້ງ ມີຜູ້ເຂົ້າຮ່ວມຈຳນວນ 0 ຄົນຄິດເປັນເປີເຊັນເທົ່າກັບ 0 % ແລະ ຄູ ອາຈານ ບໍ່ເຄີຍເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນ ມີຜູ້ເຂົ້າຮ່ວມຈຳນວນ 0 ຄົນຄິດເປັນເປີເຊັນເທົ່າກັບ 0 %

**2.** ຈາກຜົນການວິເຄາະຄູ-ອາຈານໄດ້ສ້າງແບບທົດສອບເພື່ອປະເມີນຜົນການຮຽນຂອງຜູ້ຮຽນໃນແຕ່ລະປີ ພົບວ່າຄູ-ອາຈານໄດ້ສ້າງແບບທົດສອບເພື່ອປະເມີນຜົນການຮຽນຂອງຜູ້ຮຽນໃນແຕ່ລະປີ ມີຈຳນວນທັງໝົດ 25 ຄົນ ຄິດເປັນເປີເຊັນເທົ່າກັບ 100 % ເມື່ອພິຈາລະນາຕາມລາຍຂໍ້ແລ້ວເຫັນວ່າໄດ້ສ້າງແບບທົດສອບເພື່ອປະເມີນຜົນການຮຽນຂອງຜູ້ຮຽນໃນແຕ່ລະປີ ຫຼາຍກວ່າ 3 ຄັ້ງ ມີຈຳນວນ 25 ຄົນ ຄິດເປັນເປີເຊັນເທົ່າກັບ 100 %. ເມື່ອວິເຄາະຕາມລາຍຂໍ້ແລ້ວເຫັນວ່າຄູ ອາຈານໄດ້ສ້າງແບບທົດສອບເພື່ອປະເມີນຜົນການຮຽນຂອງຜູ້ຮຽນໃນແຕ່ລະປີ 3 ຄັ້ງ ມີຈຳນວນ 0 ຄົນ ຄິດເປັນເປີເຊັນເທົ່າກັບ 0 %. ຄູ ອາຈານໄດ້ສ້າງແບບທົດສອບເພື່ອປະເມີນຜົນການຮຽນຂອງຜູ້ຮຽນໃນແຕ່ລະປີ ຫຼາຍກວ່າ 2 ຄັ້ງ ມີຈຳນວນ 0 ຄົນ ຄິດເປັນເປີເຊັນເທົ່າກັບ 0 %. ຄູ ອາຈານໄດ້ສ້າງແບບທົດສອບເພື່ອປະເມີນຜົນການຮຽນຂອງຜູ້ຮຽນໃນແຕ່ລະປີ ຫຼາຍກວ່າ 1 ຄັ້ງ ມີຈຳນວນ 0 ຄົນ ຄິດເປັນເປີເຊັນເທົ່າກັບ 0 % ແລະ ຄູ ອາຈານບໍ່ເຄີຍໄດ້ສ້າງແບບທົດສອບເພື່ອປະເມີນຜົນການຮຽນຂອງຜູ້ຮຽນໃນແຕ່ລະປີ ມີຈຳນວນ 0 ຄົນ ຄິດເປັນເປີເຊັນເທົ່າກັບ 0 %

**ຕາຕະລາງ 2 :** ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານກ່ຽວກັບຄວາມຮູ້,ຄວາມເຂົ້າໃຈ ຕໍ່ການສ້າງແບບທົດສອບປະເພດຕ່າງໆ

| **ເນື້ອໃນການປະເມີນ** | $\overline{X}$ | SD | ລະດັບປະຕິບັດຈິງ | ລຳດັບທີ |
|---|---|---|---|---|
| ຈຳແນກຕາມຂະບວນການໃນການສ້າງ | 4.80 | 0.40 | ດີ | 3 |
| ຈຳແນກຕາມຈຸດມຸ້ງໝາຍໃນການໃຊ້ປະໂຫຍດ | 4.88 | 0.33 | ດີ | 2 |
| ຈຳແນກຕາມຮູບແບບຄຳຖາມ ແລະ ວິທີຕອບ | 4.00 | 00 | ປານກາງ | 5 |
| ຈຳແນກຕາມລັກສະນະການຕອບ | 5.00 | 00 | ດີຫຼາຍ | 1 |

| | | | | |
|---|---|---|---|---|
| ຈຳແນກຕາມເວລາທີ່ກຳນົດໃຫ້ຕອບ | 4.71 | 0.14 | ດີ | 4 |
| ສະເລ່ຍ | 4.67 | 0.14 | ດີ | |

ຈາກຕາຕະລາງ2: ພົບວ່າ ຄູ - ອາຈານມີຄວາມຮູ້,ຄວາມເຂົ້າໃຈ ຕໍ່ການສ້າງແບບທົດ ສອບປະເພດຕ່າງໆ ຢູ່ໃນລະດັບດີ ເຊິ່ງມີຄະແນນສະເລ່ຍເທົ່າກັບ 4,67. ເມື່ອພິຈາລະນາເປັນລາຍຂໍ້ເຫັນວ່າຂໍ້ທີ່ມີຄະແນນສະເລ່ຍສູງແມ່ນຄູ -ອາຈານມີຄວາມຮູ້,ຄວາມເຂົ້າໃຈ ຕໍ່ການສ້າງແບບທົດ ສອບໃນປະເພດຈຳແນກຕາມລັກສະນະການຕອບ ເຊິ່ງມີຄະແນນສະເລ່ຍເທົ່າກັບ 5,00 ຢູ່ໃນລະດັບດີຫຼາຍ ແລະ ຮອງລົງມາຄື ຄູ ອາຈານມີຄວາມຮູ້,ຄວາມເຂົ້າໃຈ ຕໍ່ການສ້າງແບບທົດ ສອບໃນປະເພດຈຳແນກຕາມຈຸດມຸ້ງໝາຍໃນການໃຊ້ປະໂຫຍດ ເຊິ່ງມີຄະແນນສະເລ່ຍເທົ່າກັບ 4,88 ຢູ່ໃນລະດັບດີ,ສ່ວນຄູ ອາຈານມີຄວາມຮູ້,ຄວາມເຂົ້າໃຈ ຕໍ່ການສ້າງແບບທົດ ສອບໃນປະເພດຈຳແນກຕາມຂະບວນການໃນການສ້າງ ມີຄະແນນສະເລ່ຍເທົ່າກັບ 4,80 ຢູ່ໃນລະດັບດີ ແລະ ຄູ ອາຈານມີຄວາມຮູ້,ຄວາມເຂົ້າໃຈ ຕໍ່ການສ້າງແບບທົດສອບໃນປະເພດຈຳແນກຕາມເວລາທີ່ກຳນົດໃຫ້ຕອບ ມີຄະແນນສະເລ່ຍເທົ່າກັບ 4,71 ຢູ່ໃນລະດັບດີ ແລະ ຄູ ອາຈານມີຄວາມຮູ້,ຄວາມເຂົ້າໃຈ ຕໍ່ການສ້າງແບບທົດສອບໃນປະເພດຈຳແນກຕາມຮູບແບບຄຳຖາມ ແລະ ວິທີຕອບ ມີຄະແນນສະເລ່ຍເທົ່າກັບ 4,00 ຢູ່ໃນລະດັບປານກາງ.

**ຕາຕະລາງ 3 :** ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານກ່ຽວກັບຄວາມສາມາດໃນການສ້າງແບບທົດສອບໃນແຕ່ລະປະເພດ

| **ເນື້ອໃນການປະເມີນ** | $\overline{X}$ | SD | ລະດັບປະຕິບັດຈິງ | ລຳດັບທີ |
|---|---|---|---|---|
| ຈຳແນກຕາມຂະບວນການໃນການສ້າງ | 4.52 | 1.04 | ດີ | 4 |
| ຈຳແນກຕາມຈຸດໝາຍໃນການໃຊ້ປະໂຫຍດ | 4.88 | 0.33 | ດີ | 3 |
| ຈຳແນກຕາມຮູບແບບຄຳຖາມ ແລະ ວິທີຕອບ | 4.88 | 0.33 | ດີ | 3 |
| ຈຳແນກຕາມລັກສະນະການຕອບ | 4.92 | 0.27 | ດີ | 2 |
| ຈຳແນກຕາມເວລາທີ່ກຳນົດໃຫ້ຕອບ | 5.00 | 00 | ດີຫຼາຍ | 1 |
| ສະເລ່ຍ | 4.84 | 0.27 | ດີ | |

ຈາກຕາຕະລາງ3: ພົບວ່າ ຄູ - ອາຈານມີຄວາມສາມາດໃນການສ້າງແບບທົດສອບໃນແຕ່ລະປະເພດ ຢູ່ໃນລະດັບດີ ເຊິ່ງມີຄະແນນສະເລ່ຍເທົ່າກັບ 4,84. ເມື່ອພິຈາລະນາເປັນລາຍຂໍ້ເຫັນວ່າຂໍ້ທີ່ມີຄະແນນສະເລ່ຍສູງແມ່ນ ຄູ ອາຈານມີຄວາມສາມາດໃນການສ້າງແບບທົດສອບໃນປະເພດຈຳແນກຕາມເວລາທີ່ກຳນົດໃຫ້ຕອບ ເຊິ່ງມີຄະແນນສະເລ່ຍເທົ່າກັບ 5,00 ຢູ່ໃນລະດັບດີຫຼາຍ ແລະ ຮອງລົງມາຄື:ຄູ-ອາຈານມີຄວາມສາມາດໃນການສ້າງແບບທົດສອບໃນປະເພດຈຳແນກຕາມລັກສະນະການຕອບ ມີຄະແນນສະເລ່ຍເທົ່າກັບ 4,92 ຢູ່ໃນລະດັບດີ ສ່ວນຄູ ອາຈານມີຄວາມສາມາດໃນການສ້າງແບບທົດສອບໃນປະເພດຈຳແນກຕາມຈຸດມຸ້ງໝາຍໃນການໃຊ້ປະໂຫຍດ,ຈຳແນກຕາມຮູບແບບຄຳຖາມ ແລະ ວິທີຕອບ ມີຄະແນນສະເລ່ຍເທົ່າກັບ 4,88 ຢູ່ໃນລະດັບດີ ແລະ ຄູ ອາຈານມີ

ຄວາມສາມາດໃນການສ້າງແບບທົດສອບໃນປະເພດຈຳແນກຕາມຂະບວນການໃນການສ້າງ ເຊິ່ງມີຄະແນນສະເລ່ຍເທົ່າກັບ 4,52 ຢູ່ໃນລະດັບດີ.

**ຕອນທີ3 ຄວາມຮູ້,ຄວາມສາມາດໃນການສ້າງແບບທົດສອບປະເມີນຜົນການຮຽນສຳລັບເດັກກ່ອນໄວຮຽນ**

**1. ຄູ-ອາຈານໄດ້ເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນຂອງເດັກໃນລາຍວິຊາທີ່ຮຽນ ຫຼື ເຝິກອົບຮົມ**

ຈາກຜົນການວິເຄາະການເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນຂອງເດັກໃນລາຍວິຊາທີ່ຮຽນ ຫຼື ເຝິກອົບຮົມ ພົບວ່າຄູ ອາຈານໄດ້ເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນຂອງເດັກໃນລາຍວິຊາທີ່ຮຽນ ຫຼື ເຝິກອົບຮົມມີຈຳນວນ 25 ຄົນ ຄິດເປັນເປີເຊັນເທົ່າກັບ 100 %. ເມື່ອວິເຄາະຕາມລາຍຂໍ້ແລ້ວເຫັນວ່າຄູ ອາຈານໄດ້ເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນສຳລັບເດັກກ່ອນໄວຮຽນໃນລາຍວິຊາທີ່ຮຽນ ຫຼື ເຝິກອົບຮົມຫຼາຍກວ່າ 3 ຄັ້ງ ມີຈຳນວນ 22 ຄົນ ຄິດເປັນເປີເຊັນເທົ່າກັບ 88 % ແລະ ຄູ ອາຈານໄດ້ເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນສຳລັບເດັກກ່ອນໄວຮຽນໃນລາຍວິຊາທີ່ຮຽນ ຫຼື ເຝິກອົບຮົມ 3 ຄັ້ງ ມີຈຳນວນ 3 ຄົນ ຄິດເປັນເປີເຊັນເທົ່າກັບ 12 % ຄູ ອາຈານໄດ້ເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນສຳລັບເດັກກ່ອນໄວຮຽນໃນລາຍວິຊາທີ່ຮຽນ ຫຼື ເຝິກອົບຮົມ 2 ຄັ້ງ ມີຈຳນວນ 0 ຄົນ ຄິດເປັນເປີເຊັນເທົ່າກັບ 0 %.ຄູ ອາຈານໄດ້ເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນສຳລັບເດັກກ່ອນໄວຮຽນໃນລາຍວິຊາທີ່ຮຽນ ຫຼື ເຝິກອົບຮົມ 1 ຄັ້ງ ມີຈຳນວນ 0 ຄົນ ຄິດເປັນເປີເຊັນເທົ່າກັບ 0 % ແລະ ຄູ ອາຈານບໍ່ເຄີຍ ໄດ້ເຂົ້າຮ່ວມການແນະນຳກ່ຽວກັບການສ້າງແບບທົດສອບເພື່ອປະເມີນຜົນການຮຽນສຳລັບເດັກກ່ອນໄວຮຽນໃນລາຍວິຊາທີ່ຮຽນ ຫຼື ເຝິກອົບຮົມ ມີຈຳນວນ 0 ຄົນ ຄິດເປັນເປີເຊັນເທົ່າກັບ 0 %

**2. ຄູ - ອາຈານສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກໃນແຕ່ລະປີ**

ຈາກຜົນການວິເຄາະສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກໃນແຕ່ລະປີ ພົບວ່າຄູ-ອາຈານໄດ້ສ້າງແບບທົດສອບປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນໃນແຕ່ລະປີ ມີຈຳນວນ 25 ຄົນ ຄິດເປັນເປີເຊັນເທົ່າກັບ 100 % ເມື່ອວິເຄາະຕາມລາຍຂໍ້ແລ້ວເຫັນວ່າຄູ-ອາຈານໄດ້ສ້າງແບບທົດສອບປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນໃນແຕ່ລະປີຫຼາຍກວ່າ 3 ຄັ້ງ ມີຈຳນວນ 19 ຄົນ ຄິດເປັນເປີເຊັນເທົ່າກັບ 76 %, ຄູອາຈານໄດ້ສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກໃນແຕ່ລະປີ 3 ຄັ້ງ ມີຈຳນວນ 6 ຄົນ ຄິດເປັນເປີເຊັນເທົ່າກັບ 24 %, ຄູ-ອາຈານໄດ້ສ້າງແບບທົດສອບປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນໃນແຕ່ລະປີ 2 ຄັ້ງ ມີຈຳນວນ 0 ຄົນ ຄິດເປັນເປີເຊັນເທົ່າກັບ 0 %, ຄູ-ອາຈານໄດ້ສ້າງແບບທົດສອບປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນໃນແຕ່ລະປີ 1 ຄັ້ງ ມີຈຳນວນ 0 ຄົນ ຄິດເປັນເປີເຊັນເທົ່າກັບ 0 % ແລະ ຄູ-ອາຈານບໍ່ເຄີຍໄດ້ສ້າງແບບທົດສອບປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນໃນແຕ່ລະປີ 0 ຄັ້ງ ມີຈຳນວນ 0 ຄົນ ຄິດເປັນເປີເຊັນເທົ່າກັບ 0 %

**ຕາຕະລາງ 4 : ຄ່າສະເລ່ຍ ແລະ ຄ່າພັນປ່ຽນມາດຕະຖານກ່ຽວກັບຄວາມຮູ້,ຄວາມສາມາດໃນການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກ**

| ເນື້ອໃນການປະເມີນ | $\overline{X}$ | SD | ລະດັບປະຕິບັດຈິງ | ລຳດັບທີ |
|---|---|---|---|---|
| 1.ມີຄວາມຮູ້ ຄວາມເຂົ້າໃຈຕໍ່ການສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກ | 4.72 | 0.45 | ດີ | 4 |
| 2.ສາມາດສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກທຸກກິດຈະກຳ | 3.08 | 0.277 | ດີ | 5 |
| 3.ສາມາດສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກດ້ວຍແບບຂຽນຄຳຕອບ | 4.96 | 0.20 | ດີ | 1 |
| 4.ສາມາດສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກດ້ວຍແບບປະຕິບັດຕົວຈິງ | 4.80 | 0.40 | ດີ | 2 |
| 5.ສາມາດສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກດ້ວຍແບບສົນທະນາຖາມ - ຕອບ | 4.76 | 0.43 | ດີ | 3 |
| ສະເລ່ຍ | 4.46 | 0.35 | ດີ | |

ຈາກຕາຕະລາງ4: ພົບວ່າຄວາມຮູ້,ຄວາມສາມາດໃນການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກຢູ່ໃນລະດັບດີ ມີຄະແນນສະເລ່ຍເທົ່າກັບ 4,46. ເມື່ອພິຈາລະນາເປັນລາຍຂໍ້ເຫັນວ່າຄູ ອາຈານສາມາດສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກດ້ວຍແບບຂຽນຄຳຕອບ ມີຄະແນນສະເລ່ຍເທົ່າກັບ 4.96 ຢູ່ໃນລະດັບດີສ່ວນຄູ ອາຈານສາມາດສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກດ້ວຍແບບປະຕິບັດຕົວຈິງ ມີຄະແນນສະເລ່ຍເທົ່າກັບ 4.80 ຢູ່ໃນລະດັບດີ ແລະ ຮອງລົງມາຄູ ອາຈານສາມາດສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກດ້ວຍແບບສົນທະນາຖາມ - ຕອບ ມີຄະແນນສະເລ່ຍເທົ່າກັບ 4.76 ຢູ່ໃນລະດັບດີ.ຄູ ອາຈານມີຄວາມຮູ້ ຄວາມເຂົ້າໃຈຕໍ່ການສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກ ມີຄະແນນສະເລ່ຍເທົ່າກັບ 4.72 ຢູ່ໃນລະດັບດີ ສ່ວນຄູ ອາຈານ ສາມາດສ້າງແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກທຸກກິດຈະກຳມີຄະແນນສະເລ່ຍເທົ່າກັບ 4.08 ຢູ່ໃນລະດັບດີ.

**ຕາຕະລາງ 5 :** ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານກ່ຽວກັບຄວາມສາມາດຂອງຄູໃນການສ້າງແບບທົດສອບປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນໄດ້ແຕ່ລະກິດຈະກຳ

| ເນື້ອໃນການປະເມີນ | $\overline{X}$ | SD | ລະດັບປະຕິບັດຈິງ | ລຳດັບທີ |
|---|---|---|---|---|
| ***ເຄື່ອນໄຫວຈັງຫວະ*** | | | | |

| | | | | |
|---|---|---|---|---|
| ແບບປະຕິບັດຕົວຈິງ | 2.12 | 0.33 | ໜ້ອຍ | 12 |
| ແບບຂຽນຄຳຕອບ | 4.96 | 0.20 | ດີ | 1 |
| ໃຊ້ແບບສົນທະນາຖາມ - ຕອບ | 4.92 | 0.27 | ດີ | 2 |
| ສະເລ່ຍ | 4.00 | 0.16 | ປານກາງ | |
| *ວົງມົນ* | | | | |
| ແບບປະຕິບັດຕົວຈິງ | 3.16 | 1.13 | ປານກາງ | 10 |
| ແບບຂຽນຄຳຕອບ | 4.92 | 0.27 | ດີ | 2 |
| ໃຊ້ແບບສົນທະນາຖາມ - ຕອບ | 4.08 | 0.70 | ດີ | 8 |
| ສະເລ່ຍ | 4.06 | 0.47 | ດີ | |
| *ສ້າງສັນ* | | | | |
| ແບບປະຕິບັດຕົວຈິງ | 4.72 | 0.61 | ດີ | 5 |
| ແບບຂຽນຄຳຕອບ | 4.52 | 1.08 | ດີ | 6 |
| ໃຊ້ແບບສົນທະນາຖາມ - ຕອບ | 4.20 | 0.91 | ດີ | 7 |
| ສະເລ່ຍ | 4.48 | 0.52 | ດີ | |
| *ກາງແຈ້ງ* | | | | |
| ແບບປະຕິບັດຕົວຈິງ | 2.92 | 0.27 | ໜ້ອຍ | 11 |
| ແບບຂຽນຄຳຕອບ | 4.84 | 0.37 | ດີ | 4 |
| ໃຊ້ແບບສົນທະນາຖາມ - ຕອບ | 4.88 | 0.33 | ດີ | 3 |
| ສະເລ່ຍ | 4.21 | 0.27 | ດີ | |
| *ເກມ ແລະ ຫຼິ້ນຕາມມູມ* | | | | |
| ແບບປະຕິບັດຕົວຈິງ | 4.04 | 1.17 | ດີ | 9 |
| ແບບຂຽນຄຳຕອບ | 4.84 | 0.47 | ດີ | 4 |
| ໃຊ້ແບບສົນທະນາຖາມ - ຕອບ | 4.88 | 0.44 | ດີ | 3 |
| ສະເລ່ຍ | 4.59 | 0.52 | ດີ | |
| ສະເລ່ຍ | 4.26 | 0.38 | ດີ | |

ຈາກຕາຕະລາງ5: ພົບວ່າຄວາມສາມາດຂອງຄູໃນການສ້າງແບບທົດສອບປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນໄດ້ແຕ່ລະກິດຈະກຳ ຢູ່ໃນລະດັບດີ ເຊິ່ງມີຄະແນນສະເລ່ຍເທົ່າກັບ 4,26 ຖ້າພິຈາລະນາຕາມລາຍຂໍ້ແລ້ວເຫັນວ່າຄວາມສາມາດຂອງຄູໃນການສ້າງແບບທົດສອບປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນໄດ້ແຕ່ລະກິດຈະກຳ ເກມ ແລະ ຫຼິ້ນຕາມມູມ ມີຄະແນນສະເລ່ຍເທົ່າກັບ 4,59 ຢູ່ໃນລະດັບດີ,ຮອງລົງມາຄວາມສາມາດຂອງຄູໃນການສ້າງແບບທົດສອບປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນໄດ້ແຕ່ລະກິດຈະກຳສ້າງສັນມີຄະແນນສະເລ່ຍເທົ່າກັບ 4,48 ຢູ່ໃນລະດັບດີ ສ່ວນຄວາມສາມາດຂອງຄູໃນການສ້າງແບບທົດສອບປະ

ເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນໄດ້ແຕ່ລະກິດຈະກຳກາງແຈ້ງ ມີຄະແນນສະເລ່ຍເທົ່າກັບ 4,21 ຢູ່ໃນລະດັບດີ ແລະ ຄວາມສາມາດຂອງຄູໃນການສ້າງແບບທົດສອບປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນໄດ້ແຕ່ລະກິດຈະກຳກວົງມົນ ມີຄະແນນສະເລ່ຍເທົ່າກັບ 4,06 ຢູ່ໃນລະດັບດີ ແລະຂໍ້ທີ່ມີຄະແນນສະເລ່ຍໜ້ອຍສຸດຄື ຄວາມສາມາດຂອງຄູໃນການສ້າງແບບທົດສອບປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນໄດ້ແຕ່ລະກິດຈະກຳເຄື່ອນໄຫວ ແລະ ຈັງຫວະ ມີຄະແນນສະເລ່ຍເທົ່າກັບ 4,00 ຢູ່ໃນລະດັບປານກາງ.

**ຕາຕະລາງ 6 :** ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານກ່ຽວກັບການປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນທີ່ນຳໃຊ້ໂດຍສ່ວນໃຫຍ່

| **ເນື້ອໃນການປະເມີນ** | $\overline{X}$ | SD | ລະດັບປະຕິບັດຈິງ | ລຳດັບທີ |
|---|---|---|---|---|
| ແບບສັງເກດພຶດຕິກຳ | 4.76 | 0.59 | ດີ | 3 |
| ແບບທົດສອບ | 4.84 | 0.37 | ດີ | 1 |
| ແບບສອບຖາມ | 4.80 | 0.50 | ດີ | 2 |
| ແບບສຳພາດ | 3.00 | 0.70 | ໜ້ອຍ | 4 |
| ໃຊ້ແຟ້ມສະສົມຜົນງານເດັກ | 4.76 | 0.43 | ດີ | 3 |
| ສະເລ່ຍ | 4.43 | 0.36 | ດີ | |

ຈາກຕາຕະລາງ6: ພົບວ່າການປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນທີ່ນຳໃຊ້ໂດຍສ່ວນໃຫຍ່ຄູນຳໃຊ້ ແບບສັງເກດພຶດຕິກຳແບບທົດສອບ,ແບບສອບຖາມ,ແບບສຳພາດ,ໃຊ້ແຟ້ມສະສົມຜົນງານເດັກ ຢູ່ໃນລະດັບດີ ເຊິ່ງມີຄະແນນສະເລ່ຍເທົ່າກັບ 4,43 ຖ້າພິຈາລະນາຕາມລາຍຂໍ້ແລ້ວເຫັນວ່າການປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນທີ່ນຳໃຊ້ໂດຍສ່ວນໃຫຍ່ນຳໃຊ້ແບບທົດສອບ ມີຄະແນນສະເລ່ຍເທົ່າກັບ 4,84 ເຊິ່ງຢູ່ໃນລະດັບດີ, ຮອງລົງມາຄືການປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນທີ່ນຳໃຊ້ໂດຍສ່ວນໃຫຍ່ຄູນຳໃຊ້ແບບສອບຖາມ ມີຄະແນນສະເລ່ຍເທົ່າກັບ 4,80 ເຊິ່ງຢູ່ໃນລະດັບດີ ແລະ ຖັດມາຄືການປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນທີ່ນຳໃຊ້ໂດຍສ່ວນໃຫຍ່ຄູນຳໃຊ້ແບບສັງເກດພຶດຕິກຳ ແລະ ການປະເມີນຜົນການຮຽນຮູ້ຂອງເດັກທີ່ນຳໃຊ້ໂດຍສ່ວນໃຫຍ່ຄູນຳໃຊ້ແຟ້ມສະສົມຜົນງານເດັກມີຄະແນນສະເລ່ຍເທົ່າກັບ 4,76 ເຊິ່ງຢູ່ໃນລະດັບດີ, ສ່ວນການປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນທີ່ນຳໃຊ້ໂດຍສ່ວນໃຫຍ່ຄູນຳໃຊ້ແບບສຳພາດ ມີຄະແນນສະເລ່ຍເທົ່າກັບ 3,00 ເຊິ່ງຢູ່ໃນລະດັບໜ້ອຍ.

**ຕາຕະລາງ 7 :** ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານກ່ຽວກັບແບບທົດສອບປະເມີນຜົນການຮຽນຮູ້ສຳລັບເດັກກ່ອນໄວຮຽນທີ່ສ້າງຂຶ້ນຄວນຄຳນຶງເຖິງ

| **ເນື້ອໃນການປະເມີນ** | $\overline{X}$ | SD | ລະດັບປະຕິບັດຈິງ | ລຳດັບທີ |
|---|---|---|---|---|
| ຄວາມສາມາດຂອງເດັກແຕ່ລະສົ່ວອາຍຸ | 4.80 | 0.50 | ດີ | 1 |
| ຕ້ອງມີຄວາມສຳພັນກັບເນື້ອໃນບົດຮຽນແຕ່ລະກິດຈະກຳ | 2.92 | 0.27 | ໜ້ອຍ | 2 |
| ຫຼັກສູດຊັ້ນອະນຸບານ | 2.92 | 0.27 | ໜ້ອຍ | 2 |

| | | | | |
|---|---|---|---|---|
| ສະເລ່ຍ | 3.55 | 0.30 | ປານກາງ | |

ຈາກຕາຕະລາງ7: ພົບວ່າແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກທີ່ສ້າງຂຶ້ນຄວນຄຳນຶງເຖິງຄວາມສາມາດຂອງເດັກແຕ່ລະສົ່ງອາຍຸ, ຕ້ອງມີຄວາມສຳພັນກັບເນື້ອໃນບົດຮຽນແຕ່ລະກິດຈະກຳ, ຫຼັກສູດຊັ້ນອະນຸບານ ຢູ່ໃນລະດັບປານກາງ ເຊິ່ງມີຄະແນນສະເລ່ຍເທົ່າກັບ 3,55 ຖ້າພິຈາລະນາຕາມລາຍຂໍ້ແລ້ວເຫັນວ່າການແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກທີ່ສ້າງຂຶ້ນຄວນຄຳນຶງເຖິງຄວາມສາມາດຂອງເດັກແຕ່ລະສົ່ງອາຍຸ ມີຄະແນນສະເລ່ຍເທົ່າກັບ 4,80 ຢູ່ໃນລະດັບດີ ສ່ວນວ່າການແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກທີ່ສ້າງຂຶ້ນຄວນຄຳນຶງເຖິງຄວາມສຳພັນກັບເນື້ອໃນບົດຮຽນແຕ່ລະກິດຈະກຳ, ການແບບທົດສອບປະເມີນຜົນການຮຽນຮູ້ຂອງເດັກທີ່ສ້າງຂຶ້ນຄວນຄຳນຶງເຖິງຫຼັກສູດຊັ້ນອະນຸບານ ມີຄ່າສະເລ່ຍເທົ່າກັບ 2,92 ຢູ່ໃນລະດັບໜ້ອຍ.

# ບົດທີ 5
# ສະຫຼຸບ ອະພິປາຍ ແລະ ຂໍ້ສະເໜີແນະ

ການສຶກສາຄົ້ນຄ້ວາຄັ້ງນີ້ເປັນການສຶກສາຫົວຂໍ້: **ສຶກສາບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022-2023**..ເຊິ່ງມີຈຸດປະສົງ 1) ເພື່ອສຶກສາບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022-2023.2) ເພື່ອປຽບທຽບຄວາມຄິດເຫັນໃນການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022-2023.ກຸ່ມຕົວຢ່າງໃນການເຮັດວິໄຈຄັ້ງນີ້ແມ່ນຄູສອນໃນສາຍຄູອະນຸບານ,ຄູສອນໃນໂຮງຮຽນອະນຸບານ ວິທະຍາໄລຄູສາລະວັນ ເຊິ່ງມີທັງໝົດຈຳນວນ 28 ຄົນ,ຍິງ 27 ຄົນ.ເຄື່ອງມືທີ່ໃຊ້ເປັນແບບສອບຖາມສຳລັບຄູສອນສາຍອະນຸບານ, ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ເຊິ່ງແບ່ງເນື້ອໃນແບບສອບຖາມເປັນ 3 ຕອນດັ່ງລາຍລະອຽດດັ່ງນີ້:

**ຕອນທີ1 ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມສອບຖາມກ່ຽວກັບສຶກສາບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ** 2022-2023.ລວມມີຈຳນວນ 4 **ຂໍ້**

**ຕອນທີ2: ຄວາມຄິດເຫັນກ່ຽວກັບຄວາມຮູ້,ຄວາມເຂົ້າໃຈ,ຄວາມສາມາດການສ້າງແບບທົດສອບວັດຜົນການຮຽນໃນລາຍວິຊາສຳລັບຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ເຊິ່ງການສ້າງແບບທົດສອບວັດຜົນການຮຽນ ລວມມີຈຳນວນ 4 ຂໍ້**

**ຕອນທີ3: ຄວາມຄິດເຫັນກ່ຽວກັບຄວາມຮູ້,ຄວາມສາມາດສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນສຳລັບຄູສອນສາຍອະນຸບານ,ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ** ເຊິ່ງການສ້າງແບບທົດສອບສຳລັບເດັກກ່ອນໄວຮຽນ ລວມມີຈຳນວນ 11 ຂໍ້ ຜ່ານການສຶກສາຄົ້ນຄວ້າທີມງານຜູ້ວິໄຈສາມາດສະຫຼຸບຕາມຂັ້ນຕອນໄດ້ດັ່ງນີ້:

## 5.1 ສະຫຼຸບຜົນການວິໄຈ

### ຕອນທີ1: ສະເໜີຜົນການວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມສອບຖາມ

ຜົນການວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມສອບຖາມກ່ຽວກັບບັນຫາການສ້າງແບບທົດສອບປະເມີນຜົນການຮຽນຂອງເດັກກ່ອນໄວຮຽນຂອງຄູສອນສາຍອະນຸບານ ແລະ ຄູສອນໃນໂຮງຮຽນອະນຸບານສາທິດ ວິທະຍາໄລຄູສາລະວັນ ສົກຮຽນ 2022-2023.ພົບວ່າສະພາບຂອງຜູ້ຕອບແບບສອບຖາມ ໂດຍແມ່ນກຸ່ມຕົວຢ່າງຈາກພະນັກງານຄູສອນສາຍອະນຸບານ ຈຳນວນ 28 ຄົນ. ຍິງ 27 ຄົນ ຄິດເປັນຮ້ອຍລະ 100 %, ເພດຊາຍຈຳນວນ 1 ຄົນ ຄິດເປັນຮ້ອຍລະ 4% ເພດຍິງ 27 ຄົນ ຄິດເປັນຮ້ອຍລະ 96 % ແລະ ອາຍຸຕໍ່າກວ່າ 20 ປີ ມີຈຳນວນ 0 ຄົນ ຄິດເປັນຮ້ອຍລະ 0 %, ອາຍຸ 21-25 ປີ ມີຈຳນວນ 0 ຄົນ ຄິດເປັນຮ້ອຍລະ 0 %, ອາຍຸ 26– 30

